# **ສັນຍາສຳປະທານ**

**ສຳລັບ**

**[**ໃສ່ຊື່ໂຄງການ**]**

**ທີ່ແຂວງ[______________], [______________], ສປປ ລາວ**

**ລະຫວ່າງ**

**ລັດຖະບານແຫ່ງ ສປປ ລາວ**

**[**ໃສ່ຊື່ບໍລິສັດໂຄງການ**]**

ແລະ

**[**ບໍລິສັດແມ່**]**

**[**ວັນທີ, ເດືອນ, ປີ**]**

ສາລະບານ ໜ້າ


ມາດຕາ 1 ການອະທິບາຍຄໍາສັບ........................................................................................14
1.01 ການອະທິບາຍຄໍາສັບ ........................................................................................14
1.02 ການຕີຄວາມໝາຍ ............................................................................................22
ມາດຕາ 2 ພື້ນທີໂຄງການ ແລະ ການອະນຸມັດສໍາປະທານ......................................................23
2.01 ການອະນຸມັດສໍາປະທານ......................................................................................23
2.02 ທີ່ຕັ້ງຂອງໂຄງການ..............................................................................................23
2.03 ແຜນທີ່ດິນ.......................................................................................................24
2.04 ການເຮັດຟາມທີ່ອະນຸຍາດ......................................................................................24
2.05 ບໍ່ມີສິດເປັນເຈົ້າຂອງ ............................................................................................24
ມາດຕາ 3 ໄລຍະສໍາປະທານ ......................................................................................25
3.01ໄລຍະເບື້ອງຕົ້ນ.................................................................................................25
3.02ການຕໍ່ໄລຍະເບື້ອງຕົ້ນ ........................................................................................25
ມາດຕາ 4 ການພັດທະນາໂຄງການ..................................................................................25
4.01 ຂໍ້ກໍານົດທົ່ວໄປ..................................................................................................25
4.02 ການອະນຸຍາດ..................................................................................................25
4.03ການປູກ.........................................................................................................25
4.04 ການຫຼົ້ມເຫຼວໃນການພັດທະນາ ..............................................................................26
4.05 ການພັດທະນາໂຮງງານປຸງແຕ່ງ. ............................................................................27
ມາດຕາ 5 ການສະໜອງແກ່ໂຄງການ ແລະ ການປະກອບທຶນ.................................................28
5.01. ການລົງທຶນທັງໝົດ..........................................................................................28
5.02 ທຶນຈົດທະບຽນ...............................................................................................28
5.03ການຖອກທຶນຈົດທະບຽນ ...................................................................................28
5.04 ການສະໜອງທຶນໃຫ້ໂຄງການ..................................................................................28

5.05ອັດຕາໜີ້ສິນສູງສຸດຕໍ່ມູນຄ່າສຸດທິ ....28

5.06[ການຈຳກັດການສ້າງໜີ້ສິນເພີ່ມເຕີມ. ....29

5.07[ການຈຳກັດການຈ່າຍເງິນປັນຜົນ ແລະ ດອກເບັ້ຍເງິນກູ້ຂອງຜູ້ຖືຮຸ້ນ ....29

5.08 ການລາຍງານກ່ຽວກັບການປະຕິຕາມ. ....29

ມາດຕາ 6 ການສະເໜີຄວາມເປັນຈິງ ແລະ ການຮັບປະກັນ ....29

6.01 ການສະເໜີຄວາມເປັນຈິງແລະ ການຮັບປະກັນຂອງບໍລິສັດແມ່ ແລະ ບໍລິສັດໂຄງການ. ....29

6.02 ການສະເໜີຄວາມເປັນຈິງ ແລະ ການຮັບປະກັນສືບຕໍ່ຂອງບໍລິສັດໂຄງການ ....31

6.03 ການສະເໜີຄວາມເປັນຈິງ ແລະ ການຮັບປະກັນຂອງລັດຖະບານ. ....31

ມາດຕາ 7 ສິດ ແລະ ພັນທະຂອງລັດຖະບານ ....32

7.01 ຂໍ້ກຳນົດໂດຍ ....32

7.02ການອອກ ....33

7.03 ການສຳຫຼວດຊັບພະຍາກອນທຳມະຊາດ ....33

7.04 ການກໍ່ສ້າງພື້ນຖານໂຄງລ່າງຂອງລັດຖະບານ ....34

ມາດຕາ 8 ສິດ ແລະ ພັນທະຂອງບໍລິສັດໂຄງການ ....34

8.01 ຂໍ້ກຳນົດທົ່ວໄປ ....35

8.02 ບົດວິພາກເສດຖະກິດ ແລະ ແຜນພັດທະນາ ....35

8.03 ການກໍ່ສ້າງພື້ນຖານໂຄງລ່າງ ແລະ ການນຳໃຊ້ລະບົບຊ່ວຍວຽກຂອງບໍລິສັດໂຄງການ. ....36

8.04 ສິດນຳໃຊ້ນ້ຳ ....37

8.05 ການປະກັນໄພ ....38

8.06 ການເຮັດທຸລະກຳກັບບໍລິສັດເຄືອຂ່າຍ. ....38

8.07 ການຂາຍຜະລິດຕະພັນກະສິກຳໃຫ້ບໍລິສັດເຄືອຂ່າຍ. ....39

8.08 ການນຳໃຊ້ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ຊ່ວງ ....39

8.09 ຊາວກະສິກອນ.ຊາວປູກຝັງທີ່ເຂົ້າຮ່ວມສັນຍາ/ ....39

8.10 ການຊື້ຜະລິດຕະພັນ ....40

ມາດຕາ 9 ກຳມະສິດໃນຕົ້ນໄມ້ ແລະ ວັດຖຸບໍລະດົກທາງວັດທະນະທຳ ........................................................40

9.01. ຕົ້ນໄມ້ ..........................................................................................................................40

9.02 ວັດຖຸບໍລະດົກທາງວັດທະນາທຳ ...................................................................................40

9.03ການລົງໂທດຕໍ່ການລະເມີດ. ..........................................................................................40

ມາດຕາ 10ການນຳເຂົ້າ ແລະ ການສົ່ງອອກ ເພື່ອການຜະລິດ......................................................41

10.01 ກົດໝາຍທີ່ນຳໃຊ້ໂດຍທົ່ວໄປ. ......................................................................................41

10.02ການນຳເຂົ້າສິນຄ້າ.........................................................................................................41

10.03ການຍົກເວັ້ນພາສີນຳເຂົ້າ ສຳລັບອຸປະກອນ, ສິນຄ້າໃນສາງ ແລະ ອື່ນໆ ................................41

10.04 ການຍົກເວັ້ນພາສີນຳເຂົ້າສຳລັບວັດຖຸທີ່ໄດ້ນຳເຂົ້າເກີນ ...................................................41

10.05 ແຜນນຳເຂົ້າປະຈຳປີ .......................................................................................................41

ມາດຕາ 11 ພັນທະດ້ານອາກອນ ແລະ ຄ່າທຳນຽມຕ່າງໆ.............................................................41

11.01 ເຂດທີ່ໄດ້ຮັບການສົ່ງເສີມສູງສຸດ......................................................................................41

11.02 ພາສີ ແລະ ຄ່າທຳນຽມ.....................................................................................................42

11.03 ຄ່າປັບໃໝສຳລັບການຈ່າຍຊ້ຳ ຫຼື ການຈ່າຍຕ່ຳກວ່າທີ່ຄວນ ..................................................43

11.04 ການກວດສອບບັນຊີ ແລະ ການດັດ.................................................................................43

ມາດຕາ 12 ການບັນຊີ, ບັນຊີທະນາຄານ, ການແລກປ່ຽນເງິນຕາຕ່າງປະເທດ ແລະ ການກວດສອບບັນຊີ ...............43

12.01 ການປະຕິບັດກ່ຽວກັບທຶນ. ..............................................................................................43

12.02 ມາດຕະຖານການບັນຊີ ...................................................................................................44

12.03 ການສົ່ງເງິນກັບຄືນປະເທດທີ່ອະນຸຍາດ..........................................................................44

1204. ເງິນຕາຕ່າງປະເທດ .......................................................................................................44

12.05 ການກວດສອບບັນຊີ.........................................................................................................44

ມາດຕາ 13 ບົດບັນທຶກ, ບົດລາຍງານ ແລະ ການກວດກາ.............................................................45

13.01 ການເກັບຮັກສາບັນທຶກ. ...................................................................................................45

13.02ບົດລາຍງານ .....................................................................................................................46

13.03 ການກວດສອບ..........46

ມາດຕາ 14 ການວ່າຈ້າງງານ ແລະ ການຝຶກອົບຮົມແຮງງານ..........46

14.01 ບູລິມະສິດສຳລັບຜູ້ອອກແຮງງານທ້ອງຖິ່ນ..........46

14.02 ການປະຕິບັດຕາມກົດໝາຍວ່າດ້ວຍແຮງງານ..........46

14.03 ເງື່ອນໄຂຂອງພະນັກງານຄົນລາວສຳລັການຄຸ້ມຄອງບໍລິຫານ..........47

14.04 ການຝຶກອົບຮົມ..........47

14.05 ວີຊ່າສຳລັບຜູ້ອອກແຮງງານຕ່າງປະເທດ...........47

14.06 ເງິນເດືອນ ແລະ ຄ່າຕອບແທນ..........47

14.07 ປະກັນສັງຄົມ..........48

14.08ການລາຍງານ..........48

ມາດຕາ 15ການປ້ອງກັນ, ຄວາມປອດໄພທາງດ້ານສຸຂະພາບ ແລະ ວິຊາຊີບ..........48

15.01 ມາດຕະຖານແຮງງານ...........48

15.02 ສຸຂະພາບ ແລະ ສຸຂະອະນາໄມ..........48

15.03 ຄວາມປອດດ້ານວິຊາຊີບ...........49

15.04 ຄວາມປອດໄພ. ໃນກຳລະນີທີ່..........50

15.05 ເຮືອນຢູ່ອາໄສຂອງຜູ້ອອກແຮງງານ..........50

15.06 ສິ່ງອຳນວຍຄວາມສະດວກທາງການແພດ...........50

15.07 ນ້ຳສະອາດ..........50

ມາດຕາ 16 ຊັບພະຍາກອນ ແລະການພັດທະນາຊຸມຊົນ..........50

16.01 ການພັດທະນາຊຸມຊົນ..........51

16.02 ການຄຸ້ມຄອງກອງທຶນພັດທະນາຊຸມຊົນ...........52

16.03 ການຊື້ສິນຄ້າ ແລະ ການບໍລິການໃນທ້ອງຖິ່ນ..........53

ມາດຕາ 17 ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ..........53

17.01 ຂໍ້ກຳນົດທົ່ວໄປ..........53

17.02ການປັບປຸງບົດລາຍງານກ່ຽວກັບສິ່ງແວດລ້ອມ  ແລະ ສັງຄົມ........................................................55

17.03ກອງທຶນປົກປັກຮັກສາສິ່ງແວດລ້ອມ ......................................................................................55

17.04  ການຕິດຕາມກວດກາ ແລະ ການລາຍງານດ້ວຍຕົນເອງ ...............................................................55

17.05  ການກວດກາ ແລະ ການຕິດຕາມກວດໂດຍລັດຖະບານ ...............................................................56

17.06ຄວາມຮັບຜິດຊອບດ້ານສິ່ງແວດລ້ອມ ແລະ ການລົງໂທດ ..........................................................56

17.07  ການຟື້ນຟູພື້ນທີ່ໂຄງການ ...........................................................................................................57

ມາດຕາ 18 ການມອບໝາຍສິດ ແລະ ການປ່ຽນແປງການຄວບຄຸມ ........................................................58

18.01 ການມອບໝາຍສິດ ....................................................................................................................58

18.02  ການປ່ຽນແປງການຄວບຄຸມ ........................................................................................................58

18.03 ການຫ້າມການມອບໝາຍສິດ ຫຼື ພັນທະຕໍ່ບຸກຄົນທີ່ຕ້ອງຫ້າມ .......................................................59

18.04ຄ່າການໂອນ ຫຼື ຄ່າການມອບໝາຍສິດ........................................................................................59

18.05  ຂໍ້ຫ້າມສຳລັບການຈຳນອງ..........................................................................................................59

ມາດຕາ19 ເຫດສຸດວິໄສ........................................................................................................................60

19.01 ຂອບເຂດການນຳໃຊ້.....................................................................................................................60

19.02 ການປັບປຸງພັນທະທີ່ຖືກໂຈະຄືນ ..................................................................................................60

19.03ການດັດແກ້ຕາຕະລາງເວລາ ແລະ ການຕໍ່ໄລຍສຳປະທານ...............................................................61

19.04  ການຍົກເລີກສັນຍາຍ້ອນເຫດສຸດວິໄສ ........................................................................................61

19.06 ການອະທິບາຍຄຳສັບ......................................................................................................................61

ມາດຕາ 20 ການໃຊ້ແທນຄ່າເສຍຫາຍ; ການຄ້ຳປະກັນ.................................................................................62

20.01  ການໃຊ້ແທນຄ່າເສຍຫາຍຊຶ່ງກັນ ແລະ ກັນ........................................................................................62

20.02ຄວາມຮັບຜິດຊອບຮ່ວມກັນ ............................................................................................................63

20.03 ການຮັບປະກັນຂອງບໍລິສັດແມ່......................................................................................................63

ມາດຕາ 21 ກົດໝາຍຄຸ້ມຄອງ .................................................................................................................63

21.01 ກົດໝາຍທີ່ນຳໃຊ້. ........................................................................................................................63

21.02 ການປະຕິບັດຕາມກົດໝາຍຂອງ ສປປ ລາວ. ....63
22.03 ການໄກ່ເກ່ຍແບບບັງຄັບ....64
22.04 ການສະເໜີຂໍ້ຂັດແຍ່ງຕໍ່ສານພາຍໃນຂອງ ສປປ ລາວ. ....66
22.05 ເງື່ອນໄຂຂອງການສະເໜີຄໍາຮ້ອງຟ້ອງຕໍ່ຄະນະກໍາມະການຕັດສິນຂໍ້ຂັດແຍ່ງ. ....66
22.06 ຄະນະກໍາມະການຕັດສິນຂໍ້ຂັດແຍ່ງ. ....66
22.07 ການຮ້ອງຟ້ອງອື່ນໆ. ....648
22.08 ການຕ້ານການຫຼີກລ່ຽງ....67
22.09 ຂໍ້ຂັດແຍ່ງກ່ຽວກັບບຸກຄົນໃນທ້ອງຖິ່ນ. ....67
ມາດຕາ 23ການທົບທວນ ແລະ ການຮ່ວມມືລະຫວ່າງຄູ່ສັນຍາ....67
23.01 ການຮ່ວມມື....67
23.02ການປ່ຽນແປງສະພາບເງື່ອນໄຂ....67
ມາດຕາ 24 ການຍົກເລີກສັນຍາ ....68
24.01 ການຍົກເລີກສັນຍາໂດຍບໍລິສັດໂຄງການ ....68
24.02ການຍົກເລີກສັນຍາໂດ້ຍລັດຖະບານ....69
24.03ໂອກາດສໍາລັບການແກ້ໄຂ....70
24.04 ການສະຫງວນຄ່າຊົດເຊີຍໄວ້ໃນສັນຍາ....70
24.05ຜົນສະທ້ອນຈາກການຍົກເລີກສັນຍາ....71
24.06 ການຊີ້ຂາດກ່ຽວກັບອະສັງຫາລິມະຊັບຫຼັງຈາກການຍົກເລີກສັນຍາ....71
24.07 ການຂາຍສັງຫາລິມະຊັບຫຼັງຈາກການ ....71
24.08 ການຟື້ນຟູພື້ນທີ່ໂຄງການ ແລະ ການເຄື່ອນຍ້າຍສັງຫາລິມະຊັບ....72
ມາດຕາ 25 ແຈ້ງການ....72
25.01 ແຈ້ງການ ....72
25.02 ຜົນສັກສິດຂອງແຈ້ງການ. ....725
ມາດຕາ 26 ການຮັກສາເປັນຄວາມລັບ....74

26.01 ຂໍ້ມູນທີ່ຮັກສາເປັນຄວາມລັບ ....74
26:02 ການຍົກເວັ້ນ....74
26:03 ສັນຍາ ....74
ມາດຕາ 27 ການເປີດເຜີຍ ....756
27.01 ການເປີດເຜີຍ ....753
27.02 ເວບໄຊ໌ ....75
ມາດຕາ 28 ຂໍ້ກຳນົດອື່ນໆ ....75
28.01 ການສະຫຼະສິດ....75
28.02 ພາສາ....75
28.03 ການປັບປຸງ....75
28.04 ການແຍກຂໍ້ກຳນົດ ....75
28.05 ການຈົດທະບຽນສານ....75
28.06 ການເຮັດສັນຍາ.....76
ເອກະສານຊ້ອນທ້າຍ 1 ....77
ຂໍ້ມູນບໍລິສັດໂຄງການ ແລະ ບໍລິສັດແມ່ ....77
ເອກະສານຊ້ອນທ້າຍ 2 ....78
ຫຼັກການຂອງການຄິດໄລອາກອນກຳໄລ....78
ເອກະສານຊ້ອນທ້ອນ 3 ....82
ການລາຍງານຂອງໂຄງການ ....82
ເອກະສານຊ້ອນທ້າຍ 4 ....84
ພັນທະສິ່ງແວດລ້ອມ ແລະ ສັງຄົມລວມ....84
ເອກະສານຊ້ອນທ້າຍ 5 ....85
ພັນທະການຮັບປະກັນໂດຍບໍລິສັດແມ່ [ຖ້າມີ] ....85
ເອກະສານອ້າງອີງ ກ.... ERROR! BOOKMARK NOT DEFINED.

ບົດບັນທຶກຄວາມເຂົ້າໃຈ .................................................. ERROR! BOOKMARK NOT DEFINED.

ເອກະສານອ້າງອີງ ຂ......................................................... ERROR! BOOKMARK NOT DEFINED.

ສັນຍາເຊົ່າດິນ................................................................ ERROR! BOOKMARK NOT DEFINED.

ເອກະສານອ້າງອີງ ຄ......................................................... ERROR! BOOKMARK NOT DEFINED.

ບົດວິພາກເສດຖະກິດ-ເຕັກນິກ............................................. ERROR! BOOKMARK NOT DEFINED.

ເອກະສານອ້າງອີງ ງ ......................................................... ERROR! BOOKMARK NOT DEFINED.

ຮ່າງສັນຍາເຮັດການຜະລິດກະສິກຳ......................................... ERROR! BOOKMARK NOT DEFINED.

## **ສັນຍາສຳປະທານ**

**ສັນຍາສຳປະທານສະບັບນີ້** (ຕໍ່ໄປນີ້ເອີ້ນວ່າ“**ສັນຍາ**”) ເຮັດຂຶ້ນ ທີ່ນະຄອນຫຼວງວຽງຈັນ, ສາທາລະນະລັດປະຊາທິປະໄຕປະຊາຊົນລາວ (“**ສປປ ລາວ**”), ແລະ ມີຜົນສັກສິດນັບແຕ່ວັນທີ [___________] ເປັນຕົ້ນໄປ (“**ວັນທີ່ມີຜົນສັກສິດ**”, ໂດຍ ແລະ ລະຫວ່າງ:

**ລັດຖະບານແຫ່ງ ສປປ ລາວ,**ຊຶ່ ງຕາງໜ້າໂດຍ**ກະຊວງແຜນການ ແລະ ການລົງທຶນ**, (ຕໍ່ໄປນີ້ເອີ້ນວ່າ “**ລັດຖະບານ**”)

ແລະ

[___________],ບໍລິສັດທີ່ສ້າງຕັ້ງພາຍໃຕ້ກົດໝາຍຂອງ ສປປ ລາວ ຊຶ່ງມີສຳນັກງານຕັ້ງຢູ່ [___________] ໂດຍສອດຄ່ອງກັບໃບທະບຽນສຳປະທານ ສະບັບເລກທີ [___________] ອອກໃຫ້ວັນທີ[___________] (ຕໍ່ໄປນີ້ເອີ້ນວ່າ “**ບໍລິສັດໂຄງການ**”)

(ລັດຖະບານ ແລະ ບໍລິສັດໂຄງການ ແຕ່ລະຝ່າຍເອີ້ນວ່າ “**ຄູ່ສັນຍາແຕ່ລະຝ່າຍ**” ແລະ ເອີ້ນລວມກັນວ່າ“**ຄູ່ສັນຍາ**”).

ເນື່ອງຈາກ:

(1) ລັດຖະບານ ມີຈຸດປະສົງ ສົ່ງເສີມການພັດທະນາເສດຖະກິດຂອງ ສປປ ລາວ ແລະ, ເພື່ອຕອບສະໜອງຕາມຈຸດປະສົງດັ່ງກ່າວ, ຈຶ່ງສະໜັບສະໜູນ ແລະ ສົ່ງເສີມວຽກງານກະສິກຳ ທີ່ຜະລິດວັດຖຸດິບເພື່ອສະໜອງໃຫ້ຂະແໜງອຸດສາຫະກຳປຸງແຕ່ງພາຍໃນປະເທດ, ແລະ ໃຫ້ການສະໜັບສະໜູນ ແລະ ສົ່ງເສີມການຜະລິດເປັນສິນຄ້າເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ;

(2) ລັດຖະບານ ມີຈຸດປະສົງຕ້ອງການໄດ້ຮັບຜົນປະໂຫຍດຈາກທ່າແຮງບົ່ມຊ້ອນຂອງປະເທດ, ໂດຍສະເພາະ ຈາກການນຳໃຊ້ທີ່ດິນ ແລະ ເງື່ອນໄຂທາງດ້ານທຳມະຊາດ ທີ່ເອື້ອອຳນວຍໃຫ້ແກ່ວຽກງານທາງດ້ານກະສິກຳ, ທີ່ສົ່ງເສີມການພັດທະນາທ້ອງຖິ່ນ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນລາວ, ແລະ ສົ່ງເສີມທຸລະກິດພາຍໃນປະເທດ. ນອກຈາກນັ້ນ, ລັດຖະບານ ຍັງມີຈຸດປະສົງອຳນວຍຄວາມສະດວກໃຫ້ແກ່ການຖ່າຍທອດທັກສະ, ຄວາມຮູ້ ແລະ ເຕັກໂນໂລຊີ ກ່ຽວກັບການຜະລິດກະສິກຳຂະໜາດໃຫຍ່ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງໃຫ້ແກ່ປະຊາຊົນລາວ;

(3) ບໍລິສັດໂຄງການ ມີປະສົບການ, ຄວາມຊຳນິຊຳນານທາງດ້ານວິຊາການ, ມີເຕັກນິກທີ່ທັນສະໄໝ ແລະ ແຫຼ່ງທຶນ ຢ່າງພຽງພໍ ເພື່ອນຳໃຊ້ເຂົ້າໃນການພັດທະນາ [ໃຫ້ກຳນົດລາຍລະອຽດກ່ຽວກັບລັກສະນະຂອງວຽກງານທີ່ສະເໜີ] ແລະ ມີຈຸດປະສົງທີ່ຈະຈັດຕັ້ງປະຕິບັດ [ໃຫ້ກຳນົດລາຍລະອຽດກ່ຽວກັບລັກສະນະຂອງວຽກງານທີ່ສະເໜີ] ແລະ, ຕາມທີ່ບໍລິສັດໂຄງການ ສາມາດຈະກຳນົດຄວາມເປັນໄປໄດ້ໃນອານາຄົດ, [ໃຫ້ກຳນົດລາຍລະອຽດຂອງໂຮງງານປຸງແຕ່ງ ຫຼື ໂຮງງານ

ຜະລິດສິນຄ້າໃດໜຶ່ງທີ່ຈະສ້າງໃນອະນາຄົດ], ແຕ່ລະອັນໂດຍສອດຄ່ອງກັບເນື້ອໃນ ແລະ ເງື່ອນໄຂທີ່ໄດ້ກຳນົດຢູ່ໃນສັນຍາສະບັບນີ້; ແລະ

(4) ລັດຖະບານ ແລະ ບໍລິສັດໂຄງການ ໄດ້ຮ່ວມກັນສະເໜີການພັດທະນາໂຄງການ [ໃຫ້ກຳນົດລາຍລະອຽດກ່ຽວກັບລັກສະນະຂອງວຽກງານທີ່ສະເໜີ] ຢູ່ທີ່ [___________] ເມືອງ, [___________] ແຂວງ, ສປປ ລາວ, ໂດຍສອດຄ່ອງກັບເນື້ອໃນ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້;

(5) ລັດຖະບານ ແລະ [ ], ບໍລິສັດທີ່ສ້າງຕັ້ງຂຶ້ນ ແລະ ຈົດທະບຽນພາຍໃຕ້ກົດໝາຍ [ ] ມີສຳນັກງານໃຫຍ່ຕັ້ງຢູ່: [ ] (ຕໍ່ໄປນີ້ເອີ້ນວ່າ "**ບໍລິສັດແມ່**"), ໄດ້ເຂົ້າຮ່ວມບົດບັນທຶກຄວາມເຂົ້າໃຈ ສະບັບລົງວັນທີ [ ], ກ່ຽວກັບໂຄງການ (ຕາມທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້ຕໍ່ໄປນີ້) ຊຶ່ງສຳເນົາໄດ້ຄັດຕິດເປັນເອກະສານຊ້ອນທ້າຍ ຄ ຂອງສັນຍາສະບັບນີ້ ( **"ບົດບັນທຶກຄວາມເຂົ້າໃຈ**"), ແລະ ໂດຍສອດຄ່ອງຕາມບົດບັນທຶກດັ່ງກ່າວ, ບໍລິສັດແມ່ ຈຶ່ງຕ້ອງໄດ້ມີການດຳເນີນການສຳຫຼວດທີ່ດິນ ແລະ ການກະກຽມແຜນທີ່ນຳໃຊ້ທີ່ດິນ, ແລະ ໄດ້ກະກຽມບົດວິພາກເສດຖະກິດ-ເຕັກນິກ ລວມທັງໃບຢັ້ງຢືນທາງດ້ານສິ່ງແວດລ້ອມທີ່ຮັບຮອງເອົາບົດລາຍງານກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມ ແລະໄດ້ມີການຄັດເລືອກພື້ນທີ່ສຳລັບການພັດທະນາທາງດ້ານກະສິກຳ, ຊຶ່ງເອີ້ນວ່າ "ພື້ນທີ່ໂຄງການ".

(6) ບໍລິສັດໂຄງການ ໄດ້ຖືກສ້າງຕັ້ງຂຶ້ນໂດຍຖືກຕ້ອງຕາມກົດໝາຍຢູ່ໃນ ສປປ ລາວ ເປັນບໍລິສັດຈຳກັດ ໂດຍມີບໍລິສັດແມ່ເປັນຜູ້ຖືຮຸ້ນແຕ່ພຽງຜູ້ດຽວ ໂດຍສອດຄ່ອງຕາມໃບທະບຽນສຳປະທານ ສະບັບເລກທີ່ [ ] ຊຶ່ງອອກໂດຍລັດຖະບານໃນວັນທີ່ [ ] ເພື່ອຈັດຕັ້ງປະຕິບັດໂຄງການ ແລະ ພັນທະທັງໝົດທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້.

(7) ຄຽງຄູ່ກັບການເຊັນ ແລະ ມອບສິ່ງສັນຍາພັດທະນາໂຄງການນີ້, ບໍລິສັດໂຄງການ ແລະ ລັດຖະບານໄດ້ເຊັນສັນຍາເຊົ່າທີ່ດິນ ໜຶ່ງ ຫຼື ຫຼາຍສະບັບ (ຕາມທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້) ກ່ຽວກັບພື້ນທີ່ໂຄງການ ຊຶ່ງໄດ້ຄັດຕິດເປັນເອກະສານຊ້ອນທ້າຍ ຂ ຂອງສັນຍາສະບັບນີ້.

**ສະນັ້ນ**, ໂດຍພິຈາລະນາເຖິງຜົນປະໂຫຍດທີ່ຕ່າງຝ່າຍຕ່າງຈະໄດ້ຮັບ ລະຫວ່າງ ລັດຖະບານ ແລະ ບໍລິສັດໂຄງການ ພາຍໃຕ້ສັນຍາສະບັບນີ້, ຄູ່ສັນຍາ ຈຶ່ງໄດ້ມີການຕົກລົງດັ່ງຕໍ່ໄປນີ້:

## ມາດຕາ 1 ການອະທິບາຍຄຳສັບ

### 1.01 ການອະທິບາຍຄຳສັບ

ຄຳສັບ ແລະ ປະໂຫຍກຄຳເວົ້າ ທີ່ນຳໃຊ້ຢູ່ໃນສັນຍາສະບັບນີ້ ແມ່ນມີຄວາມໝາຍຕາມທີ່ໄດ້ກຳນົດໄວ້ຢູ່ຂ້າງລຸ່ມນີ້, ເວັ້ນເສຍແຕ່ເນື້ອໃນໄດ້ກຳນົດໄວ້ເປັນຢ່າງອື່ນ:

**"ບໍລິສັດເຄືອຂ່າຍ"** ໝາຍເຖິງ ວິສາຫະກິດ, ບໍລິສັດ, ບໍລິສັດທີ່ມີຄວາມຮັບຜິດຊອບຈຳກັດ, ຄູ່ຮ່ວມທຸລະກິດ ຫຼື ນິຕິບຸກຄົນອື່ນໆ ຫຼື ບຸກຄົນທີ່ຄວບຄຸມ ຫຼື ຖືກຄວບຄຸມ ໂດຍກົງ ຫຼື ທາງອ້ອມ, ຫຼື ຢູ່ພາຍໃຕ້ການຄວບຄຸມທັງໝົດຈາກບໍລິສັດໂຄງການ ຫຼື ບໍລິສັດແມ່. ເພື່ອຈຸດປະສົງຂອງສັນຍາສະບັບນີ້, "ການຄວບຄຸມ" ໝາຍເຖິງການຄອບຄອງໂດຍກົງ ຫຼື ທາງອ້ອມ, ຈາກບຸກຄົນໜຶ່ງ ຊຶ່ງມີຮຸ້ນຫລາຍກວ່າຫ້າສິບເປີເຊັນ (50%) ຂອງຮຸ້ນ ຫຼື ສິດອຳນາດໃນການລົງຄະແນນສຽງເໜືອຄົນອື່ນ.

**"ບົດລາຍງານປະຈຳປີກ່ຽວກັບຄວາມຄືບໜ້າ"** ໝາຍເຖິງ ບົດລາຍງານປະຈຳປີທີ່ມີເນື້ອໃນຢ່າງເລິກເຊິ່ງຄົບຖ້ວນ ຊຶ່ງບໍລິສັດໂຄງການສົ່ງໃຫ້ຫ້ອງການບໍລິການຜ່ານປະຕູດຽວ ຊຶ່ງບອກລາຍລະອຽດກ່ຽວກັບ ຄວາມຄືບໜ້າຂອງໂຄງການ, ການດຳເນີນໂຄງການ, ລະດັບທຶນຂອງບໍລິສັດໂຄງການ, ການນຳເຂົ້າສິນຄ້າ, ແຮງງານຂອງບໍລິສັດໂຄງການ, ວຽກງານດ້ານສິ່ງແວດລ້ອມ ແລະ ສັງຄົມ, ການນຳໃຊ້ສິນຄ້າ ແລະ ການບໍລິການພາຍໃນ ແລະ ຂໍ້ມູນຂ່າວສານຕ່າງໆທີ່ຈຳເປັນ.

"**ແຜນພັດທະນາທີ່ໄດ້ຜ່ານການຮັບຮອງ**" ໝາຍເຖິງ ແຜນດຳເນີນທຸລະກິດທີ່ໄດ້ພັດທະນາພາຍໃຕ້ມາດຕາ 8.2 ຂອງສັນຍາສະບັບນີ້.

**"ການອະນຸຍາດ"** ເວັ້ນເສັຍແຕ່ໄດ້ມີການກຳນົດໄວ້ເປັນຢ່າງອື່ນ, ໝາຍເຖິງ ການອະນຸຍາດ, ໃບຢັ້ງຢືນ, ໃບທະບຽນ, ໃບອະນຸຍາດດຳເນີນທຸລະກິດ, ການເຫັນດີ, ການຮັບຮອງ, ມະຕິຕົກລົງ, ໃບອະນຸຍາດ, ການສະຫລະສິດ, ການປະກອບຄຳຮ້ອງ ແລະ ການຈົດທະບຽນ ໃດໜຶ່ງ ຫລື ທັງໝົດ ນຳອົງການຈັດຕັ້ງຂອງລັດ ຫຼື ກົມກອງໃດໜຶ່ງ ທີ່ຈຳເປັນສຳລັບບໍລິສັດໂຄງການ ແລະ ການດຳເນີນໂຄງການ ແລະ ໂຄງການ ພາຍໃຕ້ກົດໝາຍຂອງ ສປປ ລາວ.

**"ໃບຢັ້ງຢືນການນຳໃຊ້ທີ່ດິນ"** ໝາຍເຖິງ ເອກະສານທາງການຂອງລັດຖະບານ ທີ່ອະນຸຍາດໃຫ້ນຳໃຊ້ເນື້ອທີ່ທັງໝົດທີ່ເປັນທີ່

ດິນລັດ ຊຶ່ງຕັ້ງຢູ່ພາຍໃນພື້ນທີ່ໂຄງການທີ່ອອກໃຫ້ແກ່ບໍລິສັດໂຄງການ ເພື່ອຈຸດປະສົງຈັດຕັ້ງປະຕິບັດໂຄງການ. ໃບຢັ້ງຢືນການນຳໃຊ້ທີ່ດິນ ຈະຕ້ອງມີແຜນທີ່ການນຳໃຊ້ທີ່ດິນຄັດຕິດໂດຍມີພາບວາດຂອງທີ່ຕັ້ງ ແລະ ຂອບເຂດເນື້ອທີ່ດິນທີ່ໃຫ້ເຊົ່າ ໂດຍສອດຄ່ອງກັບສັນຍາເຊົ່າທີ່ດິນ ແລະ ມີຕາປະທັບຂອງໜ່ວຍງານລັດທີ່ກ່ຽວຂ້ອງໄວ້ເປັນຫຼັກຖານຢັ້ງຢືນຄວາມຖືກຕ້ອງຂອງສິດຜູ້ໃຫ້ເຊົ່າທີ່ດິນ ຫລື ຂອງທີ່ດິນດັ່ງກ່າວ.

**"ໄລຍະສຳປະທານ"** ໝາຍເຖິງ ໄລຍະເວລາສຳປະທານທີ່ອະນຸຍາດໃຫ້ແກ່ບໍລິສັດໂຄງການ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 3 ຂອງສັນຍາສະບັບນີ້ ຊຶ່ງໄລຍະເວລາດັ່ງກ່າວ ສາມາດຕໍ່ ຫລື ຍົກເລີກໄດ້ ໂດຍອີງຕາມຂໍ້ກຳນົດນຂອງສັນຍາສະບັບນີ້.

**" ສິດສຳປະທານ"**" ໝາຍເຖິງ ສິດທີ່ອະນຸຍາດໃຫ້ບໍລິສັດໂຄງການ ພາຍໃຕ້ສັນຍາສະບັບນີ້.

**"ຂໍ້ມູນທີ່ຮັກສາເປັນຄວາມລັບ"** ມີຄວາມໝາຍຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 29.04.

"**ສັນຍາກະສິກຳ**" ໝາຍເຖິງ ສັນຍາທີ່ເຮັດຂຶ້ນ ລະຫວ່າງ ບໍລິສັດໂຄງການ ແລະ ຊາວກະສິກອນ ຫຼື ຊາວປູກຝັງທີ່ເຂົ້າຮ່ວມສັນຍາ, ເພື່ອຊື້ພືດທີ່ປູກ ແລະ ຜົນທີ່ເກີດຈາກພືດດັ່ງກ່າວ.

"**ຊາວກະສິກອນ ຫຼື ຊາວປູກຝັງທີ່ເຂົ້າຮ່ວມສັນຍາ**" ໝາຍເຖິງ ຊາວກະສິກອນ, ບຸກຄົນ ຫຼື ບໍລິສັດກະສິກຳ ຫຼື ກຸ່ມຄົນທີ່ມີການຈັດຕັ້ງຢູ່ໃນທ້ອງຖິ່ນ, ຊຶ່ງເຂົ້າເຖິງທີ່ດິນທີ່ເໝາະສົມສຳລັບການປູກຝັງໂດຍການເປັນເຈົ້າຂອງກຳມະສິດນຳໃຊ້ທີ່ດິນເອກະຊົນ ຫຼື ທີ່ດິນຂອງລວມໝູ່, ແລະ ຊຶ່ງບໍລິສັດໂຄງການໄດ້ເຂົ້າຮ່ວມສັນຍາກະສິກຳ ເພື່ອຊື້ພືດທີ່ປູກ ແລະ ຜົນທີ່ເກີດຈາກພືດດັ່ງກ່າວ.

"**ແຜນພັດທະນາ**" ຫມາຍເຖິງ ແຜນການທີ່ຈະເປັນຈະຕ້ອງສ້າງຂຶ້ນ ແລະ ນຳສະເໜີ ໂດຍບໍລິສັດໂຄງການຕໍ່ລັດຖະບານ ພາຍໃຕ້ມາດຕາ 8.02 ຂອງສັນຍາສະບັບນີ້.

"**ວັນທີ່ສັນຍາມີຜົນສັກສິດ**" ໝາຍເຖິງ ວັນທີສັນຍາສະບັບນີ້ໄດ້ຮັບການລົງລາຍເຊັນໂດຍຄູ່ຮສັນຍາ ຕາມທີ່ປະກົດໃນໜ້າທີ່ 1

ຂອງສັນຍາສະບັບນີ້.

"**ການສິ້ນສຸດຮອບໝູນວຽນ**" ໝາຍເຖິງ ຈຸດເວລາໃດໜຶ່ງ ເມື່ອການເກັບກ່ຽວພືດທີ່ປູກຢູ່ໃນພື້ນທີ່ໃດໜຶ່ງຈະບໍ່ຖືກພິຈາລະນາໂດຍຜູ້ທີ່ເປັນເຈົ້າຂອງທີ່ມີຄວາມຮອບຄອບຄ້າຍຄືບໍລິສັດໂຄງການ ວ່າເປັນການເກັບກ່ຽວທີ່ສາມາດນຳໃຊ້ເຂົ້າໃນການຄ້າໄດ້. ການສິ້ນສຸດຮອບໝູນວຽນ ກ່ຽວກັບພືດທີ່ປູກປະຈຳປີ ຫຼື ປູກຫຼາຍລະດູການ ແມ່ນການສິ້ນສຸດຮອບໝູນວຽນມຂອງເກັບກ່ຽວພືດດັ່ງກ່າວ.

**"ກົດໝາຍວ່າດ້ວຍວິສາຫະກິດ"** ໝາຍເຖິງ ກົດໝາຍວ່າດ້ວຍວິສາຫະກິດສະບັບເລກທີ: 11/ສພຊ, 09 ພະຈິກ 2005.

**"ສິ່ງແວດລ້ອມ""** ໝາຍເຖິງ ສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ ທີ່ເກີດຂຶ້ນຕາມທຳມະຊາດ ຫຼື ຄົນສ້າງຂຶ້ນ, ໃນນີ້ລວມມີ ມະນຸດ, ສັດ ແລະ ຕົ້ນໄມ້ ແລະ ສິ່ງທີ່ຢູ່ອ້ອມຂ້າງຂອງສິ່ງດັ່ງກ່າວ, ແລະ ສາຍພົວພັນທີ່ສົ່ງຜົນກະທົບຕໍ່ກັນ ແລະ ກັນທາງດ້ານບວກ ແລະ ທາງດ້ານລົບ ຕໍ່ຊີວິດ ແລະ ການຄົງຕົວຂອງມະນຸດ, ສິ່ງທີ່ມີຊີວິດ ແລະ ທຳມະຊາດດັ່ງກ່າວ.

"**ໃບຢັ້ງຢືນດ້ານສິ່ງແວດລ້ອມ"** ເອີ້ນລວມກັນ, ໝາຍເຖິງ ໃບຢັ້ງຢືນດ້ານສິ່ງແວດລ້ອມ ສະບັບເລກທີ [ ] ຊຶ່ງໄດ້ຮັບຮອງເອົາການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ໃບຢັ້ງຢືນດ້ານສິ່ງແວດລ້ອມ ສະບັບເລກທີ [ ] ຊຶ່ງໄດ້ຮັບຮອງເອົາແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ ທີ່ອອກໃຫ້ໃນວັນທີ [ ] ໂດຍກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແກ່ [ບໍລິສັດແມ່/ບໍລິສັດໂຄງການ] ແລະ ການຕໍ່ອາຍຸຂອງໃບອະນຸຍາດດັ່ງກ່າວທີ່ຈະອອກໃຫ້ບໍລິສັດໂຄງການ.

"**ບົດລາຍງານດ້ານສິ່ງແວດລ້ອມ ແລະ ສັງຄົມ**" ເອີ້ນລວມກັນ, ໝາຍເຖິງ ບັນດາບົດລາຍງານ, ແຜນການ ແລະ ເອກະສານຕ່າງໆ ທີ່ໄດ້ກະກຽມໂດຍບໍລິສັດແມ່ ແລະ ບໍລິສັດໂຄງການ, ນຳສະເໜີ ແລະ ໄດ້ຮັບການຮັບຮອງເອົາໂດຍ ກຊສ ໃນການຈັດຕັ້ງປະຕິບັດພັນທະຂອງຄົນພາຍໃຕ້ບົດບັນທຶກຄວາມເຂົ້າໃຈ ແລະ ລວມທັງການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ [ ໃສ່ເລກທີຂອງ EIA ], ແຜນການຄຸ້ມຄອງ ແລະຕິດຕາມກວດກາສິ່ງແວດລ້ອມ [ໃສ່ເລກທີ່ແຜນການ ], ແຜນການຄຸ້ມຄອງ ແລະຕິດຕາມກວດກາສັງຄົມ [ໃສ່ເລກທີແຜນການ ], [ການປະເມີນຜົນກະທົບຕໍ່ສັງຄົມ, ແລະ ແຜນການຍົກຍ້າຍຈັດສັນປະຊາຊົນ, ແລະ/ຫຼື ແຜນພັດທະນາປະຊາຊົນບັນດາເຜົ່າ, ຫຼື ແຜນຍົກຍ້າຍແບບກະທັດຮັດ ແລະ/ຫຼື ບົດລາຍງານກ່ຽວກັບການໄດ້ທີ່ດິນແລະ ການໃຊ້ແທນຄ່າເສັຍຫາຍທີ່ດິນ[ໃສ່ເລກທີແຜນການ ], ການປັບປຸງ, ການກວດແກ້ຄືນ ຫຼື ການປັບໃຫ້ທັນສະໄໝ ເອກະສານດັ່ງກ່າວ ໂດຍສອດຄ່ອງຕາມກົດໝາຍ ແລະ ຂໍ້ກົດນົດຂອງຂໍ້ 17.02 ຂອງສັນຍາສະບັບນີ້.

“**ແຈ້ງການໃຫ້ບັງຄັບປະຕິບັດ**” ໝາຍເຖິງ ແຈ້ງການທີ່ອອກໂດຍ ກຊສ ໃຫ້ແກ່ບໍລິສັດໂຄງການ ເພື່ອໃຫ້ບໍລິສັດໂຄງການປະຕິບັດໃຫ້ຖືກຕ້ອງຕາມເງື່ອນໄຂພາຍໃຕ້ສັນຍາສະບັບນີ້, ຫຼື ໃຫ້ປະຕິບັດຕາມບາດກ້າວທີ່ຈຳເປັນເພື່ອຫຼີກລ້ຽງການລະເມີດ , ຫຼື ການລົ້ມເຫຼວໃນການປະຕິບັດສັນຍານີ້[1].

“**ກອງທຶນປົກປັກຮັກສາສິ່ງແວດລ້ອມ**” ໝາຍເຖິງ ກອງທຶນປົກປັກຮັກສາສິ່ງແວດລ້ອມໃນສປປລາວ ທີ່ສ້າງຂຶ້ນພາຍໃຕ້ດຳລັດສະບັບເລກທີ 146/ນຍ, ລົງວັນທີ 06 ມິຖຸນາ2005, ລວມທັງທຸກການປັບປຸງຕໍ່ດຳລັດດັ່ງກ່າວຫລັງຈາກນັ້ນ.

“**ພື້ນທີ່ປະເປັນເຮື້ອ**” ໝາຍເຖິງ ສະພາບພື້ນທີ່ປູກພືດພາຍໃນພື້ນທີ່ໂຄງການທີ່ຖືກປະໄວ້ໂດຍບໍ່ມີການປູກພືດໃດໆພາຍຫຼັງສິ້ນສຸດຮອບໝູນວຽນ, ເພື່ອຈຸດປະສົງຟື້ນຟູຄວາມອຸດົມສົມບູນຂອງດິນ ຊຶ່ງໄລຍະເວລາແມ່ນກຳນົດເອົາຕາມໄລຍະເວລາຂອງທີ່ປູກພືດທີ່ປູກ ແລະ ຊຶ່ງໄດ້ກຳນົດໄວ້ຢູ່ໃນບົດວິພາກເສດຖະກິດ.

**“ບົດວິພາກເສດຖະກິດ”** ໝາຍເຖິງ ການສຶກສາລະອຽດ [ໃສ່ເລກທີແຜນການ ] ທີ່ໄດ້ຍືນຕໍ່ ແລະ ຮັບຮອງໂດຍ ກະຊວງກະສິກຳ ແລະ ປ່າໄມ້ ໃນວັນທີ [ໃສ່ວັນທີໄດ້ຮັບອະນຸຍາດ] ກ່ຽວກັບລາຍລະອຽດຄວາມສາມາດທາງດ້ານການເງິນ, ເຕັກນິກວິຊາການ, ທາງເລືອກ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ແລະສັງຄົມ ຂອງໂຄງການ. ບົດວິພາກເສດຖະກິດ ໄດ້ຄັດຕິດເປັນເອກະສານຊ້ອນທ້າຍ ກ.

**“ພາຫະນະທີ່ນຳໃຊ້ໃນພາກສະໜາມ”** ໝາຍເຖິງ ພາຫະນະທີ່ນຳໃຊ້ ຫຼື ທີ່ຈະຖືກນຳໃຊ້ເຂົ້າໃນການດຳເນີນໂຄງການ ແຕ່ບໍ່ແມ່ນລົດໂດຍສານ ຫຼື ພາຫະນະທີ່ບໍ່ໄດ້ນຳໃຊ້ເຂົ້າໃນການດຳເນີນໂຄງການ.

**ເຫດສຸດວິໄສ”** ມີຄວາມໝາຍຕາມທີ່ລະບຸໄວ້ໃນມາດຕາ 21.03.

“**ການປະຕິບັດທີ່ດີທາງດ້ານອຸດສາຫະກຳ**” ຫມາຍເຖິງ ການປະຕິບັດທີ່ມີລະດັບກ່ຽວກັບທັກສະ, ຄວາມເອົາໃຈໃສ່, ຄວາມຮອບຄອບ ແລະ ການເຫັນກວ້າງມອງໄກ ທີ່ຈະນຳປະຕິບັດຢ່າງສົມເຫດສົມຜົນ ແລະ ຢ່າງເປັນປົກກະຕິ ໂດຍບຸກຄົນທີ່ມີທັກສະ ແລະ ຄວາມຊຳນິຊຳນານທີ່ເຂົ້າຮ່ວມໃນອຸດສາຫະກຳກະສິກຳ.

**ລັດຖະບານ”** ໝາຍເຖິງ ລັດຖະບານແຫ່ງ ສປປ ລາວ ຊຶ່ງລວມມີບັນດາກະຊວງ, ກົມ, ອົງການບໍລິຫານ ແລະອົງການປົກຄອງທ້ອງຖິ່ນ (ຂັ້ນ ແຂວງ, ເມືອງ ແລະ ບ້ານ).

“**ອະສັງຫາລິມະຊັບ**” ໝາຍເຖິງ ໂຄງສ້າງຂອງສິ່ງປຸກສ້າງຖາວອນ, ໂຮງງານປຸງແຕ່ງ ຫຼື ພື້ນຖານໂຄງລ່າງ ທີ່ບໍ່ສາມາດເຄື່ອນຍ້າຍໄດ້ໂດຍບໍ່ສ້າງຄວາມເສຍຫາຍຢ່າງຮ້າຍແຮງ ຕໍ່ພື້ນທີ່ໂຄງການ ຫຼື ຕໍ່ໂຄງສ້າງຂອງສິ່ງປຸກສ້າງຖາວອນຊຶ່ງຕັ້ງຢູ່ໃນພື້ນທີ່

[1] EMSP: ປາກົດວ່າແຈ້ງການໃຫ້ບັງຄັບປະຕິບັດ ຊຶ່ງນຳໃຊ້ຢູ່ໃນເນື້ອໃນຂອງສັນຍາສຳປະທານ ບໍ່ໄດ້ແນໃສ່ແຕ່ການລະເມີດ ຫຼື ການບໍ່ປະຕິບັດຕາມພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມເທົ່ານັ້ນ, ສະນັ້ນ ພວກເຮົາເຊື່ອວ່າ ກຊສ ອາດຈະບໍ່ແມ່ນອົງການທີ່ອອກແຈ້ງການໃຫ້ບັງຄັບປະຕິບັດດ້ວຍການພິຈາລະນາຂອງຕົນແຕ່ພຽງຝ່າຍດຽວ ເພື່ອປະຕິບັດສິດພາຍໃຕ້ສັນຍາສຳປະທານ.

ດັ່ງກ່າວ.

**"ການນຳເຂົ້າ"** ໝາຍເຖິງ ການນຳເຂົ້າເຄື່ອງຈັກ, ວັດຖຸອຸປະກອນ, ພາຫະນະທີ່ນຳໃຊ້ໃນສະໜາມ, ເຄື່ອງມື, ວັດຖຸດິບ ແລະ ສິນຄ້າອື່ນໆທີ່ນຳໃຊ້ໂດຍກົງຢູ່ໃນໂຄງການ.

"**ການເປັນໜີ້ສິນ**" ໃນໄລຍະເວລາປະຕິບັດໂຄງການ ແລະ ໂດຍບໍ່ມີການຊ້ຳກັນ, ໝາຍເຖິງ (i) ຄວາມຮັບຜິດຊອບຂອງບໍລິສັດໂຄງການຕໍ່ເງິນທີ່ກູ້ຢືມມາ ແລະ ພັນທະໃນການຊຳລະຄືນຂອງບໍລິສັດແມ່ ອີງຕາມຮຸ້ນສ່ວນ ຫຼື ມູນຄ່າການຄ້ຳປະກັນອື່ນໆຂອງບໍລິສັດໂຄງການ, ທີ່ມີການຄຸ້ມຄອງ ຫຼື ມີບູລິມະສິດຢູ່ເໜືອຮຸ້ນສ່ວນອື່ນໆຂອງທຶນບໍລິສັດ ອີງຕາມການຊຳລະເງິນປັນຜົນ ຫຼືການແຈກຢາຍຊັບສິນເມື່ອຂາດຄວາມຄ່ອງດ້ານການເງິນ, (ii) ຄວາມຮັບຜິດຊອບຂອງບໍລິສັດໂຄງການສຳລັບລາຄາສິນຄ້າທີ່ຊື້ມາເປັນຊັບສິນຂອງບໍລິສັດແມ່ (ບໍ່ລວມຈຳນວນເງິນທີ່ຈ່າຍໄປສຳລັບການດຳເນີນທຸລະກິດປົກກະຕິ ແຕ່ລວມເອົາຄວາມຮັບຜິດຊອບທັງໝົດທີ່ສ້າງຂຶ້ນ ຫຼື ເກີດຂຶ້ນພາຍໃຕ້ເງື່ອນໄຂການຊື້ຂາຍ ຫຼື ຕາມສັນຍາມັດຈຳທີ່ຕິດພັນກັບຊັບສິນດັ່ງກ່າວ), (iii) ຄວາມຮັບຜິດຊອບທັງໝົດທີ່ປາກົດຢູ່ໃນໃບສະຫຼຸບຊັບສິນບັດຂອງບໍລິສັດໂຄງການ ກ່ຽວກັບການເຊົ່າ ຊຶ່ງບໍລິສັດແມ່ຈຳເປັນຕ້ອງໄດ້ຮູ້ກ່ຽວກັບການໄດ້ມາຊັບສິນໃດໜຶ່ງ ແລະ ໜີ້ສິນທີ່ເກີດຂຶ້ນ , (iv) ຄວາມຮັບຜິດຊອບທັງໝົດຕໍ່ເງິນທີ່ຢືມມາໂດຍມີການຄ້ຳປະກັນຕາມກົດມາຍ ຫຼື ກ່ຽວກັບກຳມະສິດ ຫຼື ຊັບສິນຂອງບໍລິສັດໂຄງການ (ບໍ່ວ່າບໍລິສັດຈະມີໄດ້ຄວາມຮັບຜິດຊອບ ຫຼື ຈະກາຍມີຄວາມຮັບຜິດຊອບຕໍ່ໜີ້ສິນດັ່ງກ່າວ ຫຼື ບໍ່ກໍຕາມ), (v) ຄວາມຮັບຜິດຊອບຂອງບໍລິສັດໂຄງການທັງໝົດຕໍ່ໜັງສືສິນເຊື່ອ ຫຼື ບັນດາເອກະສານທາງການເງິນທີ່ມີໜ້າທີ່ຄ້າຍຄືກັນ ຊຶ່ງອອກໃຫ້ ຫຼື ຍອມຮັບ ໂດຍທະນາຄານ ແລະ ສະຖາບັນການເງິນອື່ນສຳລັບບັນຊີຂອງຕົນ ຊຶ່ງໄດ້ສະເໜີ ຫຼື ສະໜັບສະໜູນການມອບພັນທະ ຕາມທີ່ໄດ້ກຳນົດໄວ້ຢູ່ໃນ ຂໍ້ (i) ຫາຂໍ້ (iv); ແລະ (vi)) ທຸກການຄ້ຳປະກັນ ຫຼື ການໃຫ້ຄຳໝັ້ນສັນຍາທີ່ຄ້າຍຄືກັນ ຂອງບໍລິສັດແມ່ ກ່ຽວກັບຄວາມຮັບຜິດຊອບຕາມປະເພດທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ໃດຂໍ້ໜຶ່ງ ຂອງຂໍ້ (i) ຫາຂໍ້ (iv) ເທິງນີ້.

**"ດັດສະນີເງິນເຟີ້"** ໝາຍເຖິງ ດັດສະນີເງິນເຟີ້ຂອງລາຄາບໍລິໂພກສຳລັບ ສປປ ລາວ ຊຶ່ງກຳນົດໂດຍທະນາຄານແຫ່ງ ສ ປປ ລາວ ແລະ ການເພີ່ມຂຶ້ນຂອງເງິນເຟີ້ລະຫວ່າງສອງໄລຍະ ຈະຖືກກຳນົດຕາມອັດຕາສ່ວນ (ຊຶ່ງຈະບໍ່ຕ່ຳກວ່າ 1:1) ຂອງດັດສະນີເງິນເຟີ້ໃນໄລຍະຫຼັງ ກ່ອນທີ່ຈະມີດັດສະນີເງິນເຟີ້ໃນໄລຍະກ່ອນໜ້ານັ້ນ.

"**ພື້ນຖານໂຄງລ່າງ**" ໝາຍເຖິງ ທຸກສິ່ງອຳນວຍຄວາມສະດວກທີ່ປະກອບເປັນສ່ວນໜຶ່ງຂອງການດຳເນີນໂຄງການ, ລວມທັງ (ກ) ເຮືອນຢູ່ຂອງພະນັກງານ; (ຂ) ສິ່ງອຳນວຍຄວາມສະດວກດ້ານສະຫວັດດີການຂອງສາທາລະນະ (ລວມທັງສິ່ງອຳນວຍຄວາມສະດວກດ້ານການແພດ, ການສຶກສາ ແລະ ສະຖານທີ່ພັກຜ່ອນ ຖ້າມີການນຳໃຊ້); (ຄ) ສິ່ງອຳນວຍຄວາມສະດວກດ້ານໄຟຟ້າ, ນ້ຳປະປາ ແລະ ຄອງລະບາຍນ້ຳເສຍ (ລວມທັງ ສິ່ງອຳນວຍຄວາມສະດວກທີ່ພາໃຫ້ເກີດໄຟຟ້າ, ສາຍສົ່ງ ແລະ ສາຍໄຟ ແລະ/ຫຼື ເຄື່ອງໄຟຟ້າອື່ນໆ, ເຂື່ອນ, ທໍ່ນ້ຳ, ທໍ່ລະບາຍນ້ຳ, ທໍ່ສົ່ງນ້ຳ ແລະ ລະບົບລະບາຍສິ່ງເສດເຫຼືອ, ສະຖານີປໍ້ານ້ຳ ແລະ ລະບົບກຳຈັດນ້ຳເສຍ ແລະ ສິ່ງເສດເຫຼືອຈາກໂຮງງານ); (ງ) ການປຸງແຕ່ງ, ເກັບຮັກສາ ແລະ ສິ່ງອຳນວຍຄວາມສະດວກສຳລັບການສ້ອມແປງ, ເຄື່ອງກົນຈັກ, ເຄື່ອງຈັກ, ເຕົາຫຼອມແລະ/ຫຼື ສະຖານີອັດອາກາດ; (ຈ) ສິ່ງອຳນວຍຄວາມສະດວກສຳລັບການບໍລິຫານ, ຫ້ອງທົດລອງ ແລະ ການຄົ້ນຄ້ວາ; (ສ) ສິ່ງອຳນວຍຄວາມສະດວກດ້ານຂົນສົ່ງ (ລວມທັງຖະໜົນ, ຂົວ

ແລະ ສາງ ແລະ ສິ່ງອຳນວຍຄວາມສະດວກດ້ານການຍົກເຄື່ອງຂຶ້ນ ແລະ ລົງ); (ຊ) ສິ່ງອຳນວຍຄວາມສະດວກດ້ານງການສື່ສານ; ແລະ (ຍ) ທຸກສິ່ງອຳນວຍຄວາມສະດວກອື່ນໆ ທີ່ສາມາດເຄື່ອນຍ້າຍ ແລະ ບໍ່ສາມາດເຄື່ອນຍ້າຍ ແລະ ອຸປະກອນທີ່ຕິດຕັ້ງໃສ່ສິ່ງອຳນວຍຄວາມສະດວກດັ່ງກ່າວ ຊຶ່ງຖືກນຳໃຊ້ເປັນສ່ວນໜຶ່ງທີ່ສຳຄັນ ຫຼື ຖືກນຳໃຊ້ກ່ຽວກັບ ຫຼື ຕິດພັນກັບລາຍການທີ່ໄດ້ລະບຸລາຍລະອຽດໄວ້ຢູ່ໃນຂໍ້ (ກ) ຫາຂໍ້ (ຊ).

**"ມາດຕະຖານສາກົນ"** ໝາຍເຖິງ ມາດຕະຖານໃນການດູແລຮັກສາຢ່າງມືອາຊີບ, ທັກສະ, ຄວາມເອົາໃຈໃສ່, ພາກປະຕິບັດ, ການດຳເນີນງານ ແລະ ວິທີ ຊຶ່ງຖືກຍອມໂດຍການເຫັນດີເປັນເອກະພາບຂອງຜູ້ທີ່ມີສ່ວນຮ່ວມທີ່ກ່ຽວຂ້ອງ (ລວມທັງ ແຕ່ບໍ່ຈຳກັດ ລັດຖະບານ, ອຸດສາຫະກຳ, ແຮງງານ, ນັກການເງິນ, ແລະ ນັກວິຊາການ) ແລະ, ໂດຍທົ່ວໄປແມ່ນນັກວິຊາການມືອາຊີບທີ່ຖືກວ່າຈ້າງໂດຍບໍລິສັດສາກົນຊັ້ນນຳ ເພື່ອດຳເນີນວຽກງານທີ່ຄ້າຍຄືກັນ ຫຼື ໃຫ້ບໍລິການທີ່ຄ້າຍຄືກັນ ໃນເງື່ອນໄຂ ແລະ ທີ່ຕັ້ງທາງພູມສາດ ທີ່ຄ້າຍຄືກັນ. ມາດຕະຖານ ແມ່ນມາຈາກ ແລະ ຖືກກຳນົດໂດຍອີງຕາມ (i) ທຸກໆກົດໝາຍຂອງ ສປປ ລາວ , (ii) ທຸກກົດໝາຍສາກົນທີ່ຖືກນຳໃຊ້; (iii) ບົດແນະນຳຂອງທະນາຄານໂລກ, ລວມທັງ ບົດແນະນຳຂອງອົງການການເງິນສາກົນ; (iv) ຫຼັກການ EQUATOR; ແລະ (v) ພາກປະຕິບັດທີ່ດີ ຕາມທີ່ລະບຸໄວ້ຢູ່ໃນເອກະສານຊ້ອນທ້າຍ IV.

**"ກົດໝາຍວ່າດ້ວຍການການລົງທຶນ"** ໝາຍເຖິງ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ,ສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລະກົດ 2009

**"ບໍລິສັດແມ່"** ໝາຍເຖິງ [ໃສ່ຊື່ບໍລິສັດແມ່], ບໍລິສັດທີ່ສ້າງຕັ້ງຂຶ້ນ ແລະ ຈົດທະບຽນພາຍໃຕ້ກົດໝາຍ [ໃສ່ຊື່ປະເທດທີ່ຈົດທະບຽນ] ທີ່ມີສຳນັກງານຕັ້ງຢູ່ [ ໃສ່ທີ່ຢູ່ຈົດທະບຽນ ] ຫຼື ຜູ້ທີ່ໄດ້ຮັບການມອບສິດຈາກບໍລິສັດແມ່ ຊຶ່ງຫຼັງຈາກນັ້ນໄດ້ເຊັນສັນຍາຮ່ວມກັນເປັນລາຍລັກອັກສອນ ແລະ ເຫັນດີປະຕິບັດພັນທະຂອງບໍລິສັດແມ່ພາຍໃຕ້ໃນສັນຍາສະບັບນີ້.

**"ກົດໝາຍແຮງງານ"** ໝາຍເຖິງ ກົດໝາຍແຮງງານ ເລກທີ 02/ສພ, ລົງວັນທີ08 ກໍລະກົດ 2009) ແລະ ທຸກການປັບປຸງຕໍ່ກົດໝາຍດັ່ງກ່າວ.

**"ສັນຍາເຊົ່າທີ່ດິນ"** ໝາຍເຖິງ ສັນຍາສະບັບໜຶ່ງ ຫຼື ຫຼາຍສະບັບ ຊຶ່ງເຊັນໂດຍ ກົມແຜນການນຳໃຊ້ ແລະ ພັດທະນາທີ່ດິນ, ກຊສ ແລະ ບໍລິສັດໂຄງການ ຫຼື ບໍລິສັດແມ່ ຢູ່ໃນໃນແຕ່ລະພື້ນທີ່ໂຄງການ. ສັນຍາເຊົ່າທີ່ດິນຕ້ອງຕິດຄັດແຜນທີ່ນຳໃຊ້ທີ່ດິນ ແລະ ໃບອະນຸຍາດນຳໃຊ້ທີ່ດິນ ແລະ ກຳນົດຂອບເຂດທີ່ຕັ້ງ ແລະ ຂະໜາດ ຂອງພື້ນທີ່ໂຄງການ ຈະແຈ້ງ. ແຕ່ລະສຳເນົາຂອງສັນຍາເຊົ່າທີ່ດິນທີ່ນຳໃຊ້ສຳລັບພື້ນທີ່ໂຄງ ແມ່ນໄດ້ຄັດຕິດສັນຍາເປັນເອກະສານຊອ້ນທ້າຍ ຂ.

**"ແຜນທີ່ການນຳໃຊ້ທີ່ດິນ"** ໝາຍເຖິງ ແຜນທີ່ພູມີສາດຂອງພື້ນທີ່ທີ່ໄດ້ການຮັບຮອງເອົາໃນໄລຍະເວລາທີ່ໃຫ້ສິດຕາມ MOU ໂດຍ ກຊສ, ຊຶ່ງສະແດງໃຫ້ເຫັນການກຳນົດເຂດ ແລະ ການຈັດປະເພດການນຳໃຊ້ທີ່ມີຢູ່ພາຍໃນພື້ນທີ່ສຳຫຼວດ, ລວມທັງດ ແຕ່ບໍ່ຈຳກັດ, ທີ່ດິນທຸກຕອນທີ່ປະກອບເປັນພື້ນທີ່ໂຄງການ ແລະ ຕາມທີ່ໄດ້ຄັດຕິດເປັນເອກະສານຊ້ອນທ້າຍຂອງ

ໃບອະນຸຍາດນຳໃຊ້ທີ່ດິນ.

**"ກົດໝາຍຂອງ ສປປ ລາວ"** ໝາຍເຖິງ ລັດຖະທຳມະນູນຂອງ ສປປ ລາວ, ທຸກກົດໝາຍທີ່ມີຢູ່ໃນປະຈຸບັນ ຫຼື ໃນອະນາຄົດທີ່ໄດ້ຜ່ານການຮັບຮອງເອົາຢ່າງຖືກຕ້ອງໂດຍ ສະພາແຫ່ງຊາດຂອງ ສປປ ລາວ ແລະ ຖືກປະກາດໃຊ້ໂດຍປະທານປະເທດຂອງ ສປປ ລາວ, ແລະ ລະບຽບການ, ດຳລັດ, ຄຳສັ່ງ ແລະ ບົດແນະນຳ ທີ່ມີຢູໃນປະຈຸບັນ ຫຼື ໃນອະນາຄົດທີ່ວາງອອກຢ່າງຖືກຕ້ອໂດຍລັດຖະບານ.

**"ຜູ້ໃຫ້ກູ້ຢືມ"** ໝາຍເຖິງ ທະນາຄານ ຫຼື ສະຖາບັນການເງິນ ທີ່ສະໜອງທຶນໃຫ້ແກ່ບໍລິສັດໂຄງການເພື່ອການພັດທະນາ, ການກໍ່ສ້າງ ແລະ ການດຳເນີນໂຄງການ.

**"ກກປ"** ໝາຍເຖິງ ກະຊວງກະສິກຳ ແລະ ປ່າໄມ້.

"**ກຊສ**"ໝາຍເຖິງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**"MOU"** ໝາຍເຖິງ ບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ລັດຖະບານ ແລະ ບໍລິສັດແມ່, ລົງວັນທີ [____], ຊຶ່ງສຳເນົາຂອງບົດບັນທຶກໄດ້ຄັດຕິດເປັນເອກະສານຊ້ອນທ້າຍ ຄ.

**"ສັງຫາລິມະຊັບ"** ໝາຍເຖິງ ເຄື່ອງກົນຈັກ, ເຄື່ອງມື, ພາຫະນະ, ພັດສະດຸດິ,ສິນຄ້າທີ່ຕິດຕັ້ງໃສ່ ຫຼື ພື້ນຖານໂຄງລ່າງ, ພິດ ຫຼື ໂຮງງານປຸງແຕ່ງເຄື່ອງໃຊ້ສອຍຊຶ່ງສາມາດເຄື່ອນຍ້າຍໄດ້ ໂດຍບໍ່ສ້າງຄວາມເສຍຫາຍຢ່າງຮ້າຍແຮງຕໍ່ພື້ນທີ່ໂຄງການຫຼື ໂຄງສ້າງອາຄານຖາວອນ.

"**ກຜທ**" ໝາຍເຖິງ ກະຊວງແຜນການ ແລະ ການລົງທຶນ

**ມູນຄ່າສຸດທິ"** ໝາຍເຖິງ (i) ຊັບສິນທັງໝົດຂອງບໍລິສັດໂຄງການທີ່ສະແດງອອກເປັນຊັບສິງຊຶ່ງຢູ່ໃນໃບສະຫຼູບຊັບສິນບັດຂອງບໍລິສັດແມ່ໃນເວລາກະກຽມ, *ລົບ* (ii) ໜີ້ສິນທັງໝົດຂອງບໍລິສັດໂຄງການທີ່ສະແດງອອກເປັນໜີ້ສິນຢູ່ໃນໃບສະຫຼຸບຊັບສິນບັດຂອງບໍລິສັດໂຄງການໃນເວລາກະກຽມ.

**"ແຈ້ງການ"** ໝາຍເຖິງ ຄຳສັ່ງ, ການຮັບຮອງ, ປະກາດ,ການເຫັນດີ ແລະ/ຫຼື ແຈ້ງການທຸກປະເພດທີ່ຈຳເປັນ ທີ່ອະນຸຍາດ ຫຼື ກຳນົດຢ່າງຈະແຈ້ງພາຍໃຕ້ສັນຍານີ້ ລະຫວ່າງ ຄູ່ສັນຍາເປັນລາຍລັກອັກສອນ ແລະ ສົ່ງມອບໃຫ້ດ້ວຍຕົນເອງ, ໂດຍທາງໂທລະສານ, ໂດຍທາງຈົດໝາຍອີເລັກໂຕຣນິກ, ໂດຍທາງຈົດໝາຍຈົດທະບຽນ ຫຼື ໂດຍວິທີສື່ສານອື່ນໆຕາມການຕົກລົງຂອງຄູ່ສັນຍາ.

**ຫ້ອງການບໍລິການປະຕູດຽວ"** ໝາຍເຖິງ ຫ້ອງການບໍລິການປະຕູດຽວທີ່ຕັ້ງຢູ່ໃນ ກຜທ ທີ່ມີຄວາມຮັບຜິດຊອບໃນການປະສານງານ ລະຫວ່າງ ອົງການຂອງລັດທີ່ຮັບຜິດຊອບ ແລະ ບໍລິສັດໂຄງການ ແລະ ບໍລິສັດແມ່; ຫຼື ຫ້ອງການໃດໜຶ່ງທີ່ຖືກ

ແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ທີ່ຄ້າຍຄືກັນໃນເວລາຕໍ່ມາກ່ຽວກັບສັນຍາສະບັບນີ້.

**"ບຸກຄົນ"** ໝາຍເຖິງ ບຸກຄົນທໍາມະດາ ຫຼື ນິຕິບຸກຄົນ ລວມທັງ ບໍລິສັດ, ວິສາຫະກິດຮຸ້ນສ່ວນ, ບໍລິສັດຮ່ວມທຶນ ຫຼື ກຸ່ມ ບໍລິສັດ ທີ່ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍຂອງຂອບເຂດສິດອໍານາດສານໃດໜຶ່ງ.

**"ສວນປູກພືດ"** ໝາຍເຖິງ ສວນປູກພືດ ສວນປູກພືດທີ່ປູກ ແລະ ສິ່ງອໍານວຍຄວາມສະດວກທີ່ກ່ຽວຂ້ອງ (ຍົກເວັ້ນ ໂຮງງານ ປຸງແຕ່ງ) ຊຶ່ງສາມາດສ້າງຕັ້ງຂຶ້ນໂດຍບໍລິສັດໂຄງການຢູ່ພາຍໃນພື້ນທີ່ໂຄງການ.

**"ພືດທີ່ປູກ"** ໝາຍເຖິງ [ລາຍການພືດທີ່ອະນຸຍາດສໍາລັບການສໍາປະທານ] ແລະ ພືດທີ່ເກີດຈາກພືດທີ່ປູກນັ້ນ ຊຶ່ງປູກໂດຍ ບໍລິສັດໂຄງການໂດຍສອດຄ່ອງຕາມສັນຍານີ້ ຫຼື ປູກໂດຍຊາວກະສິກອນ ຫຼື ຊາວປູກຝັງ ທີ່ເຂົ້າຮ່ວມສັນຍາ ໂດຍສອດຄ່ອງ ຕາມສັນຍາກະສິກໍາທີ່ກ່ຽວຂ້ອງ.

**"ມົນລະພິດ"** ໝາຍເຖິງ ທຸກການປ່ຽນແປງ, ບໍ່ວ່າທາງກົງ ຫຼື ທາງອ້ອມ ຂອງສິ່ງແວດລ້ອມຕາມທໍາມະຊາດທີ່ກ່ຽວກັບວັດຖຸ, ຄວາມຮ້ອນ, ເຄມີ, ຊີວະ ຫຼື ວັດຖຸປະສົມກໍາມັງຕະພາບລັງສີ ຍ້ອນການຖ່າຍເທ ຫຼື ການປ່ອຍສິ່ງເສດເຫຼືອ, ຊຶ່ງສ້າງຜົນ ກະທົບ ຫຼື ຜົນສະທ້ອນທີ່ບໍ່ດີໃຫ້ແກ່ສິ່ງແວດລ້ອມ ຫຼື ຜົນກະທົບທີ່ບໍ່ດີໃຫ້ແກ່ສຸກຂະພາບ, ຄວາມປອດໄພ ຫຼື ຄວາມເປັນຢູ່ ຂອງປະຊາຊົນ, ສັດລ້ຽງ, ສັດປ່າ, ປາ ຫຼື ສັດນໍ້າ, ຕົ້ນໄມ້ ຫຼື ລະບົບນິເວດວິທະຍາ.

"**ການດໍາເນີນໂຄງການ**" ໝາຍເຖິງການປູກ, ການເອົາໃຈໃສ່, ການເກັບກ່ຽວ, ການຕັດ, ການຊອຍ ແລະ/ຫຼື ການປຸງແຕ່ງ ພືດທີ່ປູກ ເພື່ອຈຸດປະສົງທາງດ້ານການຄ້າຢູ່ໃນພື້ນທີ່ໂຄງການ, ການຂາຍ ແລະ/ຫຼື ການສົ່ງອອກຜະລິດຕະພັນ ແລະ ທຸກໆ ກິດຈະການອື່ນໆທີ່ຈະດໍາເນີນໂດຍບໍລິສັດໂຄງການ ທີ່ກ່ຽວກັບ ຫຼື ທີ່ກ່ຽວຂ້ອງກັບ ການປູກພືດ, ພືດທີ່ປູກ, ຜະລິດຕະພັນ, ຖະໜົນຫົນທາງ ຫຼື ໂຮງງານປຸງແຕ່ງ.

"**ໂຮງງານປຸງແຕ່ງ**" ໝາຍເຖິງ ໂຮງງານປຸງແຕ່ງທີ່ອາດສ້າງຂຶ້ນໂດຍບໍລິສັດໂຄງການຢູ່ໃນພື້ນທີ່ໂຄງການ ເພື່ອຈຸດປະສົງຂອງ ການປຸງແຕ່ງຜົນທີ່ໄດ້ຈາກພືດທີ່ປູກ.

"**ຜະລິດຕະພັນ**" ໝາຍເຖິງ ສ່ວນໃດສ່ວນໜຶ່ງຂອງພືດທີ່ປູກຫລັງຈາກຕັດ, ຜ່າ, ເກັບກ່ຽວ, ຊອຍ ແລະ/ຫລື ປຸງແຕ່ງແລ້ວ.

**"ບຸກຄົນຕ້ອງຫ້າມ"** ໝາຍເຖິງ ບຸກຄົນໃດໜຶ່ງ ທີ່ **(i)** ໄດ້ຖືກກໍານົດໃຫ້ເປັນເປົ້າໝາຍຂອງການລົງໂທດ ໂດຍອີງການ ສະມາຊິກໃດໜຶ່ງ ທີ່ລັດຖະບານເປັນສະມາຊິກ, ຫຼື ທີ່ລັດຖະບານໄດ້ເຂົ້າຮ່ວມເປັນສະມາຊິກຂອງສົນທິສັນຍາ ຫຼື ສັນຍາອື່ນໆ , ຫຼື **(ii)** ໄດ້ຖືກຖືກກໍານົດໂດຍລັດຖະບານໃຫ້ເປັນບຸກຄົນທີ່: (ກ) ອາດຈະສ້າງຄວາມສ່ຽງຢ່າງຮ້າຍແຮງຕໍ່ ຄວາມປອດໄພ ຂອງຊາດ, ຕໍ່ສຸກຂະພາບ ແລະ ຄວາມປອດໄພຂອງສາທາລະນະ ຫຼື ຕໍ່ສະເຖຍລະພາບທາງເສດຖະກິດ ແລະ ການເມືອງຂອງ ລັດຖະບານ, ຫຼື (ຂ) ເຂົ້າຮ່ວມໃນການສໍ້ລາດບັງຫຼວງທີ່ມີຜົນກະທົບຕໍ່ ສປປ ລາວ ຫຼື ໄດ້ລະເມີດພັນທະທາງດ້ານທຸລະກິດ ຕໍ່ ລັດຖະບານ ຫຼື ບຸກຄົນອື່ນໆຢູ່ພາຍໃນ ສປປ ລາວ.

**"ໂຄງການ"** ໝາຍເຖິງ [ໃສ່ລາຍລະອຽດກ່ຽວກັບໂຄງການ] ແລະ ກິດຈະການອື່ນໆທີ່ຈະດຳເນີນໂດຍບໍລິສັດໂຄງການ ກ່ຽວກັບ ຫຼື ກ່ຽວຂ້ອງກັບການດຳເນີນໂຄງການ.

**"ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ"** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ຮັບຜົນກະທົບຈາກໂຄງການ ໂດຍທາງກົງ ແລະ ໂດຍທາງອ້ອມ (ຫຼື ເຫັນວ່າອາດຈະໄດ້ຮັບຜົນກະທົບ) ຍ້ອນການເກນເອົາທີ່ດິນ ຫຼື ຊັບສິນອື່ນໆ ຢ່າງຖືກຕ້ອງຕາມກົດໝາຍ, ການປ່ຽນແປງປະເພດການນຳໃຊ້ທີ່ດິນ, ແລະ/ຫຼື ຜົນກະທົບຕໍ່ລະບົບນິເວດວິທະຍາ ແລະ ສິ່ງແວດລ້ອມຢູ່ໃນພື້ນທີ່ໆມີການຍົກຍ້າຍຈັດສັນຂອງພວກກ່ຽວ.

**"ພື້ນທີ່ໂຄງການ"** ໝາຍເຖິງ ຕອນດິນ ຫຼື ບັນດາຕອນດິ ທີ່ຢູ່ພາຍໃນ [ໃສ່ທີ່ຕັ້ງ] ທີ່ຈັດສັນໂດຍລັດຖະບານໃຫ້ແກ່ບໍລິສັດໂຄງການ ເພື່ອຈຸດປະສົງຂອງໂຄງການຕາມທີ່ໄດ້ກຳນົດໄວ້ການສຳຫຼວດທີ່ດິນ ແລະ ແຜນທີນຳໃຊ້ທີ່ດິນທີ່ມີການພັດທະນາ ແລະ ຖືກຮັບຮອງເອົາໃນໄລຍະເວລາທີ່ໃຫ້ສິດຕາມທີ່ໄດ້ກຳນົດໄວ້ຢູ່ໃນ MOU ແລະ ທີ່ໄດ້ກຳນົດຢ່າງຈະແຈ້ງຢູ່ໃນສັນຍາເຊົ່າດິນ ແລະ ໃບອະນຸຍາດນຳໃຊ້ທີ່ດິນ.

**"ບໍລິສັດໂຄງການ"** ໝາຍເຖິງ [ໃສ່ຊື່ບໍລິສັດ] ທີ່ຮ່ວມຕົວ ແລະ ສ້າງຕັ້ງຢູ່ໃນ ສປປ ລາວ ຊຶ່ງບໍລິສັດແມ່ເປັນຜູ້ຖືຮຸ້ນແຕ່ພຽງຜູ້ດຽວ ໂດຍສອດຄ່ອງກັບໃບທະບຽນສຳປະທານເລກທີ [ໃສ່ເລກທີ] ລົງວັນທີ [ໃສ່ວັນທີ] ເພື່ອຈຸດປະສົງພັດທະນາ, ເປັນເຈົ້າຂອງ ແລະ ດຳເນີນໂຄງການ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການລົງທຶນ.

**"ຖະໜົນ"** ໝາຍເຖິງ ທຸກຖະໜົນທີ່ຖືກກໍ່ສ້າງຂຶ້ນ ໂດຍບໍລິສັດໂຄງການຢູ່ໃນເນື້ອທີ່ໂຄງການ ຫຼື ຖະໜົນທີ່ສ້າງຂຶ້ນໂດຍບໍລິສັດໂຄງການ ເພື່ອເຂົ້າເຖິງພື້ນທີ່ໂຄງການ ຈາກຖະໜົນຫຼວງທີ່ມີຢູ່ໃນປັດຈຸບັນ.

**"ອາກອນ"** ໝາຍເຖິງ ທຸກອາກອນ, ຄ່າພາກຫຼວງ, ການເສຍອາກອນ, ຄ່າທຳນຽມ, ອັດຕາ, ການເກັບອາກອນ, ພາສີ (ລວມທັງ ພາສີຂາເຂົ້າ ແລະ ຂາອອກ), ການຫັກໄວ້ເພື່ອຈ່າຍອາກອນ ຫຼື ການຫຼຸດອາກອນ ຊຶ່ງເກັບ ຫຼື ວາງອອກ ໂດຍລັດຖະບານ ແລະ ດອກເບ້ຍ, ຄ່າປັບໄໝ, ການປັບໄໝ, ຄ່າບໍລິການ, ຄ່າທຳນຽມ ຫຼື ຈຳນວນເງິນອື່ນໆ ທີ່ກ່ຽວຂ້ອງ.

**"ກົດໝາຍອາກອນ"** ໝາຍເຖິງ ທຸກກົດໝາຍຂອງ ສປປ ລາວ ທີ່ກ່ຽວກັບອາກອນ.

**"UXOs"** ໝາຍເຖິງ ລະເບີດບໍ່ທັນແຕກ.

1.02 <u>ການຕີຄວາມໝາຍ :</u> ຢູ່ໃນສັນຍາສະບັບນີ້, ເວັ້ນເສັຍແຕ່ເນື້ອໃນໄດ້ຖືກກຳນົດໄວ້ເປັນຢ່າງອື່ນ:

(ກ) ຫົວຂໍ້ ແລະ ຂີດກ້ອງ ແມ່ນເພື່ອຄວາມສະດວກໃນການນຳໃຊ້ເທົ່ານັ້ນ ແລະ ບໍ່ມີຜົນທົບຕໍ່ການຕີຄວາມໝາຍຂອງສັນຍາສະບັບນີ້;

(ຂ) ຄຳສັບທີ່ກຳນົດເປັນຈຳນວນໜ້ອຍ ແມ່ນລວມທັງຈຳນວນຫຼາຍ;

(ຄ) ສ່ວນໃດໜຶ່ງຂອງຮູບແບບນຂອງຄຳເວົ້າ ຫຼື ໄວຍະກອນຂອງຄຳເວົ້າ ຫຼື ປະໂຫຍກ ທີ່ກຳນົດໄວ້ຢູ່ໃນສັນຍາສະບັບນີ້ແມ່ນ ມີຄວາມໝາຍທີ່ສອດຄ່ອງກັນ:

(ງ) ການຮັບປະກັນ ຫຼື ການສະເໜີຄວາມເປັນຈິງ, ການໃຫ້ຄຳໝັ້ນສັນຍາ, ການໃຊ້ແທນຄ່າເສັຍຫາຍ, ຂໍ້ຕົກລົງ ຫຼື ສັນຍາ ຊຶ່ງເປັນສ່ວນຂອງສອງຄົນ ຫຼື ຫຼາຍກວ່າສອງຄົນ ແມ່ນຜູກມັດພວກກ່ຽວຮ່ວມກັນ ຫຼື ແຍກກັນ;

(ຈ) ການອ້າງອີງໃດໜຶ່ງໃສ່ບົດບັນຍັດຂອງນິຕິກຳ ຫຼື ລະບຽບການ ຫຼື ກົດໝາຍຂອງ ສປປ ລາວ ທີ່ກຳນົດໄວ້ຢູ່ໃນສັນຍາ ສະບັບນີ້ ແມ່ນລວມເອົາທັງ ການປ່ຽນແປງ, ການປັບປຸງ, ການກວດຄືນ, ການປ່ຽນແທນ ຫຼື ການປະກາດໃຊ້ ນິຕິກຳ ນັ້ນດັ່ງກ່າວ;

ສ) ເມື່ອມີສິ່ງໃດສິ່ງໜຶ່ງຈະຕ້ອງໄດ້ເຮັດ ໃນວັນ ຫຼື ວັນທີ່ບໍ່ແມ່ນວັນທຸລະກິດ ສິ່ງດັ່ງກ່າວນັ້ນຈະຕ້ອງໄດ້ເຮັດໃນວັນ ຫຼື ວັນ ທຸລະກິດວັນຕໍ່ໄປ;

(ຊ) ທຸກການອ້າງອີງໃສ່ "ວັນ" ແມ່ນໝາຍເຖິງວັນຕາມປະຕິທິນເກຣກໍຣຽນ; ແລະ

(ຍ) ການອ້າງອີງໃສ່ ຂໍ້, ຂໍ້ຍ່ອຍ, ວັກ, ເອກະສານຊ້ອນທ້າຍ (ນອກຈາກເອກະສານຊ້ອນທ້າຍຂອງບົດບັນຍັດຂອງກົດໝາຍ) ແມ່ນເປັນການອ້າງອີງໃສ່ ຂໍ້, ຂໍ້ຍ່ອຍ, ວັກ, ເອກະສານຊ້ອນທ້າຍ (ແລ້ວແຕ່ກໍລະນີ) ຂອງ ຫຼື ສັນຍາສະບັບນີ້.

## ມາດຕາ 2 ພື້ນທີ່ໂຄງການ ແລະ ການອະນຸມັດສຳປະທານ

**2.01** ການອະນຸມັດສຳປະທານ. ລັດຖະບານ ເປັນຜູ້ອະນຸມັດສິດຜູກຂາດໃນການສຳປະທານໃຫ້ແກ່ບໍລິສັດໂຄງການ ແຕ່ພຽງຜູ້ດຽວຢູ່ໃນພື້ນທີ່ໂຄງການ ໂດຍສອດຄ່ອງຕາມເນື້ອໃນ ແລະ ເງື່ອນໄຂຂອງສັນຍາສະບັບນີ້ ຕະຫຼອດ ໄລຍະເວລາສຳປະທານ, ເວັ້ນເສັຍແຕ່ສັນຍາສະບັບນີ້ຖືກຍົກເລີກກ່ອນກຳນົດ ໂດຍສອດຄ່ອງຕາມມາດຕາ 24 ຂອງສັນຍາສະບັບນີ້.

**2.02** ທີ່ຕັ້ງຂອງໂຄງການ. ພື້ນທີ່ໂຄງການຕັ້ງຢູ່ [__________] ເມືອງ [_______] ແຂວງ [________] ແລະ ມີ ເນື້ອທີ່ທັງໝົດ [________] ຮຕ (_____________ຂຽນເປັນໜັງສື) ຕາມທີ່ກຳນົດໄວ້ຢູ່ໃນແຜນທີ່ນຳໃຊ້ທີ່ ດິນ ແລະ ໃບອະນຸຍາດນຳໃຊ້ທີ່ດິນ ຕາມທີ່ໄດ້ໃຫ້ລາຍລະອຽດຢ່າງຄົບຖ້ວນໄວ້ອີກຢູ່ໃນສັນຍາເຊົ່າທີ່ດິນ,

ແລະສາມາດຂະຫຍາຍອອກຕື່ມຕາມເຫັນດີຂອງກົມແຜນການນຳໃຊ້ ແລະ ພັດທະນາທີ່ດິນ, ກຊສ, ແລະ ລັດຖະບານ, ແລະ ໄດ້ສະແດງອອກໃຫ້ເຫັນດ້ວຍການປັບປຸງສັນຍາສະບັບນີ້, ແລະ ການເຊັນສັນຍາ ແລະ ການສົ່ງມອບສັນຍາເຊົ່າທີ່ດິນ ໜຶ່ງ ຫຼື ຫຼາຍ ສະບັບ.

**2.03** <u>ແຜນທີ່ດິນ</u>. ພື້ນເນື້ອທີ່ໂຄງການ ອາດປະກອບດ້ວຍດິນຫຼາຍຕອນ ຊຶ່ງຕ້ອງໄດ້ກຳນົດໄວ້ຢ່າງຈະແຈ້ງຢູ່ແຜນທີ່ນຳໃຊ້ທີ່ດິນ ແລະ ໃບອະນຸຍາດນຳໃຊ້ທີ່ດິນ ແລະ ສັນຍາເຊົ່າທີ່ດິນ ທີ່ຄັດຕິດເປັນເອກະສານຊ້ອນທ້າຍ ຂ.

**2.04** <u>ການເຮັດຟາມທີ່ອະນຸຍາດ</u>. ບໍລິສັດໂຄງການໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການຟາມທີ່ເປັນເອກະລາດ ຢູ່ພາຍໃນທີ່ດິນຕອນໃດຕອນໜຶ່ງຂອງພື້ນທີ່ໂຄງການ, ແຕ່ຕ້ອງໄດ້ແຈ້ງໃຫ້ [ໃສ່ຊື່ອົງການທ້ອງຖິ່ນທີ່ກ່ຽວຂ້ອງ] ຊາບໃນທັນໃດ, ແຕ່ເຖິງຢ່າງໃດກໍຕາມ, ໂດຍມີເງື່ອນໄຂວ່າ ຟາມທີ່ເປັນເອກະລາດດັ່ງກ່າວຕ້ອງ:

(ກ) ຈຳກັດກິດຈະການຟາມສະເພາະການປູກຝັງເພື່ອກຸ່ມຕົວເອງທີ່ເໝາະສົມກັບສະພາບຂອງ ສປປ ລາວ ຢູ່ໃນເນື້ອທີ່ຊຶ່ງກຳນົດໃຫ້ໂດຍບໍລິສັດໂຄງການ ແລະ ດ້ວຍວິທີທີ່ບໍ່ມີຜົນກະທົບຢ່າງຮ້າຍແຮງຕໍ່ການດຳເນີນໂຄງການ, ແລະ

ຂ) ຢູ່ພາຍໃນ ຫຼື ນຳໃຊ້ທີ່ດິນຊຶ່ງຢູ່ພາຍໃນ ພື້ນທີ່ໂຄງການ ກ່ອນ ຫຼື ໃນເວລາ ທີ່ໂຄງການເລີ່ມດຳເນີນງານ ຫຼື ຢູ່ພາຍໃນ ຫຼື ນຳໃຊ້ທີ່ດິນຊຶ່ງຢູ່ພາຍໃນ ພື້ນທີ່ໂຄງການ, ແຕ່ຖືກຍ້າຍທີ່ຕັ້ງໃໝ່ຍ້ອນວຽກງານຍົກຍ້າຍຈັດສັນທີ່ດິນກ່ຽວກັບໂຄງການ.

ບໍລິສັດໂຄງການ ສາມາດໂຈະການອະນຸຍາດດັ່ງກ່າວ ຫຼື ຖອນການອະນຸຍາດທີ່ໄດ້ໃຫ້ໄປແລ້ວນັ້ນ, ໂດຍຂຶ້ນກັບການເຫັນດີຂອງລັດຖະບານ, ຖ້າບໍລິສັດໂຄງການເຊື່ອຢ່າງສົມເຫດສົມຜົນວ່າ ກິດການຟາມທີ່ເປັນເອກະລາດນັ້ນ ອາດຈະມີການແຊກແຊງຢ່າງຮ້າຍແຮງ ຫຼື ກຳລັງແຊກແຊງຢ່າງຮ້າຍແຮງ ເຂົ້າໃນການດຳເນີນໂຄງການ ແລະ ເຂົ້າໃນການປະຕິບັດພັນທະໃດໜຶ່ງທີ່ໄດ້ກຳນົດໄວ້ພາຍໃຕ້ສັນຍາສະບັບນີ້; ຫຼື ສ້າງຄວາມສ່ຽງຕໍ່ຄວາມປອດໄພຂອງໂຄງການ, ແຕ່ເຖິງຢ່າງໃດກໍຕາມ, ໂດຍມີເງື່ອນໄຂວ່າການອະນຸຍາດດັ່ງກ່າວຈະຕ້ອງບໍ່ຖືກໂຈະ ຫຼື ຖືກຖອນຢ່າງບໍ່ສົມເຫດສົມຜົນ.

**2.05** <u>ບໍ່ມີສິດເປັນເຈົ້າຂອງ</u>. ບໍ່ມີສິ່ງໃດໃນມາດຕານີ້ ທີ່ໃຫ້ສິດແກ່ບໍລິສັດໂຄງການໃຫ້ເປັນເຈົ້າຂອງທີ່ດິນ ຫຼື ອະນຸຍາດໃຫ້ສິດຕໍ່ຊັບຄໍ້າປະກັນໃນການເປັນເຈົ້າຂອງທີ່ດິນຢູ່ພາຍໃນພື້ນທີ່ໂຄງການ. ສິດນຳໃຊ້ທີ່ດິນຂອງບໍລິສັດໂຄງການຕ້ອງຖືກຈຳ ກັດໃຫ້ເປັນສິດ ແລະ ຜົນປະໂຫຍດໃນທີ່ດິນຕາມທີ່ກຳນົດໄວ້ຢູ່ໃນສັນຍາເຊົ່າທີ່ດິນ ແລະ/ຫຼື ສິດໃນການອະນຸຍາດ, ໃບອະນຸຍາດ ຫຼື ການອະນຸຍາດຕາມທີ່ໄດ້ອະນຸມັດໃຫ້ ຫຼື ທີ່ຈະອະນຸມັດໃຫ້ ໂດຍສັນຍາສະບັບນີ້ ແລະ ໃຫ້ສິດໃນສິດຕໍ່ຊັບ ຄໍ້າປະກັນໃນສິດດັ່ງກ່າວ.

## ມາດຕາ 3 ໄລຍະສຳປະທານ

**3.01 <u>ໄລຍະເບື້ອງຕົ້ນ.</u>** ໄລຍະສຳປະທານ ເລີ້ມນັບແຕ່ວັນເຊັນສັນຍາສະບັບນີ້ເປັນຕົ້ນໄປ ແລະ ສືບຕໍ່ເປັນໄລຍະເວລາ [ບອກໄລຍະເວລາເປັນຕົວໜັງສື] (___) ປີ ("ໄລຍະເບື້ອງຕົ້ນ") ເວັ້ນເສັຍສັນຍາຖືກຍົກເລີກກ່ອນກຳນົດເວລາ ໂດຍສອດຄ່ອງຕາມມາດຕາ 24 ຂອງສັນຍາສະບັບນີ້ ("**ໄລຍະສຳປະທານ**").

**3.02 <u>ການຕໍ່ໄລຍະເບື້ອງຕົ້ນ.</u>** ໃນປີທີສາມ (ທີ 3) ກ່ອນສິ້ນສຸດໄລຍະເບື້ອງຕົ້ນ, ຖ້າມີການຮຽກຮ້ອງຈາກບໍລິສັດໂຄງການ, ຄູ່ສັນຍາຕ້ອງໄດ້ປະຊຸມກັນເພື່ອສົນທະນາ ແລະ ເຈລະຈາ ກ່ຽວກັບການຕໍ່ໄລຍະສຳປະທານ ຕາມທີ່ສາມາດອະນຸຍາດໃຫ້ໄດ້ພາຍໃຕ້ກົດໝາຍຂອງ ສປປ ລາວ, ຊຶ່ງການຕໍ່ໄລຍະສຳປະທານດັ່ງກ່າວຕ້ອງໄດ້ຮັບການຮັບຮອງເອົາໂດຍລັດຖະບານ. ຄູ່ສັນຍາເຂົ້າໃຈດີວ່າສັນຍາສະບັບນີ້ ບໍ່ໄດ້ສ້າງສິດ ຫຼື ຄາດໝາຍໃດໆສຳລັບການຕໍ່ໄລຍະເວລາໃດໆ.

## ມາດຕາ 4 ການພັດທະນາໂຄງການ

**4.01 <u>ຂໍ້ກຳນົດທົ່ວໄປ.</u>** ນອກຈາກຂໍ້ກຳນົດອື່ນໆຂອງມາດຕາ 4 ນີ້ ແລະ ຂອງສັນຍາສະບັບນີ້, ໃນການພັດທະນາໂຄງການບໍລິສັດໂຄງການຈະຕ້ອງໄດ້ປະຕິບັດຕາມທີ່ກຳນົດຕໍ່ໄປຂ້າງລຸ່ມນີ້ :

(ກ) ບໍລິສັດໂຄງການ ຕອ້ງຍື່ນຄຳຮ້ອງຕໍ່ ກກປ, ກຊສ ແລະ ອົງການອື່ນໆທີ່ກ່ຽວຂ້ອງຂອງລັດຖະບານ ເພື່ອຂໍອະນຸຍາດ ໃນການດຳເນີນການບຸກເບີກທີ່ດິນທີ່ຕ້ອງການ ໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ, ລວມທັງ ແຕ່ບໍ່ຈຳກັດ [ລະບຸການອະນຸຍາດທີ່ເປັນຂໍກະແຈສຳລັບການບຸກເບີກທີ່ດິນ].

(ຂ) ເມື່ອໄດ້ຮັບການອະນຸຍາດທີ່ຈຳເປັນແລ້ວ, ບໍລິສັດໂຄງການຕ້ອງດຳເນີນການພັດທະນາໂຄງການ ໂດຍສອດຄ່ອງກັບບົດວິພາກເສດຖະກິດ ແລະ ແຜນພັດທະນາ, ບົດລາຍງານດ້ານສິ່ງແວດລ້ອມ ແລະ ສັງຄົມ, ສັນຍາສຳປະທານສະບັບນີ້, ແລະ ກົດໝາຍຂອງ ສປປ ລາວ.

**4.02 <u>ການອະນຸຍາດ.</u>** ຕະຫຼອດໄລຍະສຳປະທານ, ບໍລິສັດໂຄງການໂດຍນຳໃຊ້ຄ່າໃຊ້ຈ່າຍຂອງຕົນເອງ ຈະຕ້ອງເຮັດຄຳຮອ້ງຂໍ ແລະ ເກັບຮັກສາ ທຸກໆການອະນຸຍາດຈຳເປັນສຳລັບການຈັດຕັ້ງປະຕິບັດໂຄງການ ແລະ ການດຳເນີນວຽກງານຂອງໂຄງການ, ຊຶ່ງຮຽກຮ້ອງໃຫ້ໄດ້ຮັບ ຫຼື ສາມາດໄດ້ຮັບໃນນາມຂອງບໍລິສັດໂຄງການ ແລະ ຈະຕ້ອງເຮັດໃຫ້ຜູ້ຮັບເໝົາຂອງຕົນ ໄດ້ຮັບ ແລະ ເກັບຮັກ ສາທຸກໆການອະນຸຍາດ ຊຶ່ງຮຽກຮ້ອງໃຫ້ໄດ້ຮັບ ຫຼື ສາມາດໄດ້ຮັບໃນນາມຂອງຜູ້ຮັບເໝົາດັ່ງກ່າວ. ການອະນຸຍາດດັ່ງກ່າວລວມມີ, ແຕ່ບໍ່ຈຳກັດ, ໃບທະບຽນສຳປະທານ, ໃບຢັ້ງຢືນດ້ານສິ່ງແວດລ້ອມ, ໃບຢັ້ງຢືນການມອບອາກອນ, ໃບຮັບຮອງເຄື່ອງໝາຍຂອງບໍລິສັດ, ແລະ ໃບຮັບຮອງການກໍ່ສ້າງ ແລະ ການບຸກເບີກທີ່ດິນ.

**4.03 <u>ການປູກ.</u>**

(ກ) ຫຼັງຈາກວັນເຊັນສັນຍາສະບັບນີ້, ບໍລິສັດໂຄງການຈະຕ້ອງຈັດຕັ້ງປະຕິບັດແຜນງານ ເພື່ອປູກພືດ ແລະ/ຫຼື ປູກພືດຄືນ ຢູ່ໃນພື້ນທີ່ໂຄງການ ຕາມໄດ້ທີ່ກຳນົດໄວ້ຢູ່ໃນບົດວິພາກເສດຖະກິດ, ໂດຍມີເງື່ອນໄຂວ່າບໍລິສັດໂຄງການຈະຕ້ອງໄດ້ປູກພືດ ແລະ/ຫຼື ປູກພືດຄືນ ໃຫ້ຖືກຕ້ອງຕາມພັນທະພັດທະນາຕໍ່າສຸດ "**ພັນທະພັດທະນາຕໍ່າສຸດ**"[2] ດັ່ງຕໍ່ໄປລຸ່ມນີ້:

(i) ໃນປີທີສອງ (ທີ 2) ຫຼັງຈາກເຊັນສັນຍາເຊົ່າດິນທີ່ກ່ຽວຂ້ອງມີຜົນສັກສິດ, ບໍ່ໃຫ້ຕໍ່າກ່ວາ [.........] ເປີເຊັນ (......%) ຂອງພື້ນທີ່ໂຄງການ ຈະຕ້ອງໄດ້ປູກພືດ ແລະ/ຫຼື ປູກພືດຄືນ ດ້ວຍພືດທີ່ສາມາດເປັນສິນຄ້າໄດ້;

(ii) ໃນປີທີ [ ] ( [ ] ) ຫຼັງຈາກເຊັນສັນຍາເຊົ່າດິນທີ່ກ່ຽວຂ້ອງມີຜົນສັກສິດ, ບໍ່ໃຫ້ຕໍ່າກ່ວາ [.........] ເປີເຊັນ (......%)ຂອງພື້ນທີ່ໂຄງການ ຈະຕ້ອງໄດ້ປູກພືດ ແລະ/ຫຼື ປູກພືດຄືນ ດ້ວຍພືດທີ່ສາມາດເປັນສິນຄ້າໄດ້;

(iii) ໃນປີທີ [ ] ( [ ]) ຫຼັງຈາກເຊັນສັນຍາເຊົ່າດິນທີ່ກ່ຽວຂ້ອງມີຜົນສັກສິດ, ບໍ່ໃຫ້ຕໍ່າກ່ວາຮ້ອຍເປີເຊັນ [.........ຮ້ອຍເປີເຊັນ] (100%) ຂອງພື້ນທີ່ໂຄງການ ຈະຕ້ອງໄດ້ປູກພືດ ແລະ/ຫຼື ປູກພືດຄືນ ດ້ວຍພືດທີ່ສາມາດເປັນສິນຄ້າໄດ້;

(ຂ) ບໍລິສັດໂຄງການ ເຫັນດີທີ່ຈະປະຕິບັດແຜນການປູກພືດຄືນ ແຕ່ຕ້ອງໄດ້ຮັບການເຫັນດີຈາກລັດຖະບານ. ບໍລິສັດໂຄງການຈະຕ້ອງເລີ່ມຕົ້ນປູກພືດຄືນຢູ່ໃນເນື້ອທີ່ຕອນດິນທີ່ກ່ຽວຂ້ອງຂອງທີ່ດິນຂອງພື້ນທີ່ໂຄງການ ພາຍໃນ [ສິບສອງ (12)] 3 ເດືອນຂອງການສິ້ນສຸດຮອບໝູນວຽນຂອງແຕ່ລະຕອນດິນທີ່ໄດ້ກຳນົດໃຫ້ ຕາມໄລຍະຂອງພື້ນທີ່ທີ່ປະເປັນເຮື້ອ ແລະ ຕາມບົດວິພາກເສດຖະກິດ ("**ພັນທະປູກພືດຄືນ**").

(ຄ) ຄູ່ສັນຍາທັງສອງຝ່າຍ ຕົກລົງວ່າ ພັນທະພັດທະນາຕໍ່າສຸດ ແລະ ພັນທະປູກພືດຄືນ ສາມາດປັບປຸງໃນແຕ່ລະໄລຍະ ໂດຍໄດ້ຮັບການເຫັນດີຈາກ ກກປ ແລະ ອົງການອື່ນໆທີ່ກ່ຽວຂ້ອງຂອງລັດຖະບານ ໂດຍພິຈາລະນາອີງຕາມປະສົບການຂອງບໍລິສັດໂຄງການໃນຕະຫຼອດໄລຍະຈັດຕັ້ງປະຕິບັດໂຄງການ ແລະ ຕາມທີ່ສະທ້ອນໃຫ້ເຫັນຢູ່ການປັບປຸງແຜນການພັດທະນາ.

**4.04 <u>ການຫຼົ້ມເຫຼວໃນການພັດທະນາ</u>**

(ກ) ໃນກໍລະນີທີ່ບໍລິສັດໂຄງການຫຼົ້ມເຫຼວໃນການນຳໃຊ້ຄວາມພະຍາຍາມຢ່າງສົມເຫດສົມຜົນ ເພື່ອພັດທະນາພື້ນທີ່ໂຄງການໂດຍສອດຄ່ອງຕາມພັນທະພັດທະນາຕໍ່າສຸດ ແລະ ພັນທະປູກພືດຄືນ, ຊຶ່ງອາດມີການປັບປຸງຕາມຂໍ້ 4.02 (ຄ), ການຫຼົ້ມເຫຼວດັ່ງກ່າວ ຈະຖືວ່າເປັນເຫດການຂອງການລະເມີດ ຕາມທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ 24.02, ແລະ ຈະເປົ້າໝາຍຊຶ່ງໄາໃຫ້ເກີດມີແຈ້ງການທີ່ກ່ຽວຂ້ອງ ແລະ ໄລຍະເວລາໃຫ້ແກ້ໄຂບັນຫາທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 24.

[2] ພັນທະພັດທະນາຕໍ່າສຸດ ຈະແຕກຕ່າງກັນ, ຂຶ້ນກັບຂະໜາດຂອງພື້ນທີໂຄງການ, ລັກສະນະຂອງພືດ ແລະ ເນື້ອທີ່ດິນຂອງພື້ນທີໂຄງການ. ພັນທະດັ່ງກ່າວຄວນອີງເອກະສານຊ້ອນທ້າຍກ່ຽວກັບການປູກພືດທີ່ບັນຈຸຢູ່ໃນບົດວິພາກເສດຖະກິດ.

(ຂ) ໃນກໍລະນີທີ່ບໍລິສັດໂຄງການຫຼົ້ມເຫຼວໃນການແກ້ໄຂບັນຫາການລະເມີດຕາມທີ່ກໍານົດໃນຂໍ້ 4.03 (ກ), ຫຼື ໃນກໍລະນີທີ່ບໍລິສັດໂຄງການແຈ້ງການໃຫ້ລັດຖະບານ ຕົນຕ້ອງການສະລະສິດການນໍາໃຊ້ຕອນດິນທີ່ບໍ່ມີການພັດທະນາ, ລັດຖະບານສາມາດພິຈາລະນາດ້ວຍການຕັດສິນໃຈຂອງຕົນເອງແຕ່ພຽງຝ່າຍດຽວ ທີ່ຄອບຄອງຄືນຕອນດິນທີ່ບໍ່ມີການພັດທະນາທີ່ຢູ່ພາຍໃນພື້ນທີ່ໂຄງການນັ້ນໂດຍບໍ່ມີການຍົກເລີກສັນຍາສະບັບນີ້. ບໍລິສັດໂຄງການ ມີພັນທະຟື້ນຟູຕອນດິນທີ່ຕົນໄດ້ສະເໜີສະລະສິດ ໂດຍສອດຄ່ອງຕາມຕາມຂັ້ນຕອນ ແລະ ເງື່ອນໄຂທີ່ກໍານົດໄວ້ຢູ່ໃນຂໍ້ 17.07 ແລະ ເອກະສານຊ້ອນທ້າຍ IV *(ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມເຊື່ອມໂຍງເຂົ້າກັນ)* ກ່ອນການສະລະສິດນໍາໃຊ້ຕອນດິນດັ່ງກ່າວ.

(ຄ) ລັດຖະບານ ມີສິດວາງໂທດໃສ່ບໍລິສັດໂຄງການ ໃນການຫຼົ້ມເຫຼວໃນການພັດທະນາພື້ນທີ່ໂຄງການ ໂດຍສອດຄ່ອງຕາມພັນທະພັດທະນາຕໍ່າສຸດ, ພ້ອມທັງ ຄ່າການໃຊ້ແທນຄ່າເສັຍຫາຍສໍາລັບເຫດການຂອງການລະເມີດພາຍໃຕ້ມາດຕາ 24 ຂອງສັນຍາສະບັບນີ້ ແລະ ຕາມກົດໝາຍຂອງ ສປປ ລາວ. ໂທດທີ່ວາງໃສ່ບໍລິສັດໂຄງການ ແມ່ນເພີ່ມເຂົ້າກັບທຸກຄ່າໃຊ້ຈ່າຍໃນການແກ້ໄຂກ່ຽວກັບການລະເມີດ, ການອານາໄມຄືນ ແລະ ການໃຊ້ແທນຄ່າເສັຍຫາຍສໍາລັບທຸກທຸກຄວາມເສຍຫາຍ ຊຶ່ງບໍລິສັດໂຄງການໄດ້ເຮັດໃຫ້ເກີດຂຶ້ນຕໍ່ຕອນດິນທີ່ບໍ່ໄດ້ຮັບການພັດທະນາ. ເພື່ອຫຼີກລ້ຽງການສົງໄສ, ຄວາມເສຍຫາຍທີ່ລັດຖະບານມີສິດວາງໃສ່ບໍລິສັດໂຄງການນັ້ນ ແມ່ນລວທັງ ຄ່າເສຍຫາຍສໍາລັບການເສຍໂອກາດ/ຄ່າປ່ອຍການຕາມທີ່ກໍານົດໄວ້ໂດຍຄູ່ສັນຍາ ຫຼື ຕາມຄໍາສັ່ງຂອງສານ ຫຼື ການຕັດສິນຂໍ້ຂັດແຍ່ງດ້ວຍກໍາມະການ.

(ງ) ເມື່ອມີການຄອບຄອງຄືນຕອນດິນໃດໜຶ່ງຂອງພື້ນທີ່ໂຄງການໂດຍລັດຖະບານຕາມຂໍ້ 4.03 (ຂ), ສັນຍາສະບັບນີ້ ແລະ ສັນຍາເຊົ່າທີ່ດິນ ຈະຕ້ອງຖືກປັບປຸງເພື່ອສະທ້ອນໃຫ້ເຫັນການປ່ຽນແປງຂະໜາດຂອງພື້ນທີ່ໂຄງການ.

(ຈ) ໃນກໍລະນີທີ່ບໍລິສັດໂຄງການບໍ່ປະຕິບັດຕາມພັນທະພັດທະນາຕໍ່າສຸດ ຫຼື ບໍ່ປູກພືດຄືນຕາມຂໍ້ 4.03 ເນື່ອງຈາກທີ່ດິນບໍ່ວ່າງຍ້ອນມີຄົນອື່ນຍັງຢູ່ອາໄສຢູ່ ຫຼື ໃນກໍລະນີມີເຫດການສຸດວິໄສ ຫຼື ມີການລະເມີດພັນທະຂອງລັດຖະບານ, ບໍລິສັດໂຄງການ ຈະບໍ່ຮັບຜິດຊອບຕໍ່ການນຊັກຊ້າ ຫຼື ການທີ່ບໍ່ໄດ້ພັດທະນາພື້ນທີ່ໂຄງການ. ບໍລິສັດໂຄງການສາມາດຮ້ອງຂໍ, ແລະ ລັດຖະບານຈະຕ້ອງບໍ່ແກ່ຍາວຢ່າງບໍ່ສົມເຫດສົມຜົນ, ຈໍານວນເວລາຢ່າງສົມເຫດສົມຜົນເພື່ອປະຕິບັດພັນທະຂອງຕົນພາຍໃຕ້ຂໍ້ດັ່ງກ່າວ ເພື່ອສະທ້ອນໃຫ້ເຫັນເວລາທີ່ຈໍາເປັນສໍາລັບແກ້ໄຂເຫດຜົນທີ່ກ່າວຂ້າງເທິງນີ້ໃນການທີ່ບໍ່ໄດ້ປະຕິບັດຕາມ.

**4.05 <u>ການພັດທະນາໂຮງງານປຸງແຕ່ງ.</u>** ເມື່ອລະດັບການຜະລິດທີ່ໄດ້ຄາດຄະເນໄວ້ຢູ່ໃນບົດວິພາກເສດຖະກິດ [ແຜນການພັດທະນາ] ແລະ ພັນທະພັດທະນາຕໍ່າສຸດໄດ້ບັນລຸເປົ້າໝາຍ, ບໍລິສັດໂຄງການ ຕ້ອງໄດ້ສ້າງໂຄງງານປຸງແຕ່ງ [ໜຶ່ງໂຮງງານ] [ຫຼາຍໂຮງງານ] ຢູ່ໃນ ຫຼື ຢູ່ນອກພື້ນທີ່ໂຄງການ ຕາມທີ່ໄດ້ກໍານົດໄວ້ຢູ່ໃນບົດວິພາກເສດຖະກິດ [ແຜນການພັດທະນາ]. ບໍລິສັດໂຄງການ ຈະຕ້ອງໄດ້ຮັບໃບອະນຸຍາດດໍາເນີນທຸລະກິດ, ໃບອະນຸຍາດ ແລະ ການອະນຸຍາດ ທີ່ຈໍາເປັນ, ລວມທັງ ແຕ່ບໍ່ຈໍາກັດ [ການສໍາເລັດ ແລະ ການຮັບຮອງເອົາບົດວິພາກເສດຖະກິດເພີ່ມເຕີມ ແລະ ແລະ ແຜນພັດທະນາ ແລະ ບົດລາຍງານດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ນໍາໃຊ້ກັບໂຮງງານປຸງແຕ່ງດັ່ງກ່າວ ຫຼື [ໂດຍສອດຄ່ອງຕາມບົດວິພາກເສດຖະກິດສໍາລັບໂຄງການ] ໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ.

**ມາດຕາ 5 ການສະໜອງແກ່ໂຄງການ ແລະ ການປະກອບທຶນ**

5.01 **ການລົງທຶນທັງໝົດ**. ບໍລິສັດໂຄງການ ຈະຕ້ອງມີການລົງທຶນທັງໝົດຢູ່ໃນມູນຄ່າໂຄງການທັງໝົດ ຢ່າງໜ້ອຍ [___________] ໂດລາສະຫະລັດ (USD) ຊຶ່ງຖືກສະໜອງດ້ວຍວິທີການເອົາ ທຶນຈົດທະບຽນ, ເງິນກູ້ຢືມຈາກ ຜູ້ໃຫ້ກູ້ຢືມ ແລະ/ຫຼື ບໍລິສັດແມ່ ແລະ ທຶນສ່ວນອື່ນໆ, ລວມທັງ ການເພີ່ມທຶນທີ່ຖອກແລ້ວ ("ທຶນທັງໝົດ").

5.02 **ທຶນຈົດທະບຽນ.** ທຶນຈົດທະບຽນຂອງບໍລິສັດໂຄງການ ເປັນເງິນສົດ ແລະ ເປັນວັດຖຸ ຕ້ອງມີ [……….] ໂດລາສະຫະລັດ (USD) (“ທຶນຈົດທະບຽນ”) ຊຶ່ງປະກອບດ້ວຍທຶນຈົດທະບຽນທີ່ເປັນເງິນສົດ[……….] ໂດລາສະຫະລັດ (USD) ແລະ ທຶນຈົດທະບຽນທີ່ເປັນວັດຖຸ, ແລະ ຕ້ອງຖືກສະໜອງໂດຍສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດ. ໃນທຸກເວລາໃນຕະຫຼອດໄລຍະສຳປະທານ, ມູນຄ່າທັງໝົດຂອງອະສັງຫາລິມະຊັບ ແລະ ສັງຫາລິມະຊັບຂອງບໍລິສັດໂຄງການ ຊຶ່ງຕ້ອງຄິດໄລ່ [ໂດຍສອດຄ່ອງມາດຕະຖານຂອງການລາຍງານການເງິນ) (IFRS) ທີ່ວາງອອກໂດຍສະພາມາດຕະຖານການບັນຊີສາກົນ (IASB)], ຈະຕ້ອງຫຼາຍກວ່າທຶນຈົດທະບຽນ.

5.03 **ການຖອກທຶນຈົດທະບຽນ**. ການລົງທຶນ ຈະຕ້ອງປະກອບດ້ວຍການລົງທຶນເບື້ອງຕົ້ນ ຢ່າງໜ້ອຍຊາວເປີເຊັນ (20 %) ຂອງທຶນຈົດທະບຽນທັງໝົດ ຊຶ່ງເທົ່າກັບ [……….] ໂດລາສະຫະລັດ (USD) ທີ່ຈະຖອກພາຍໃນເກົ້າສິບ (90) ວັນລັດຖະການ ນັບແຕ່ວັນອອກໃບທະບຽນສຳປະທານເປັນຕົ້ນໄປ, ຈຳນວນທຶນຈົດທະບຽນທີ່ເຫຼືອ ຈະຕ້ອງຈະຕ້ອງຖອກພາຍໃນສອງ (2) ປີ ນັບແຕ່ວັນທີມີການອອກໃບທະບຽນສຳປະທານເປັນຕົ້ນໄປ. ບໍລິສັດໂຄງການ ຈະຕ້ອງໄດ້ຈົດທະບຽນການຖອກທຶນຈົດທະບຽນແຕ່ລະຄັ້ງນຳທະນາຄານແຫ່ງ ສປປ ລາວ, ໄດ້ຮັບໃບຢັ້ງຢືນການນຳເຂົ້າທຶນສຳລັບຈົດທະບຽນດັ່ງກ່າວ ແລະ ຈະຕ້ອງສະໜອງໃບຢັ້ງຢືນການນຳເຂົ້າທຶນທັງໝົດດັ່ງກ່າວໃຫ້ແກ່ຫ້ອງການປະຕູດຽວ ພາຍໃນສິບ (10) ວັນລັດຖະການ ນັບແຕ່ວັນໄດ້ໃບຢັ້ງຢືນດັ່ງກ່າວເປັນຕົ້ນໄປ.

5.04 **ການສະໜອງທຶນໃຫ້ໂຄງການ.** ບໍລິສັດໂຄງການ ຈະຕ້ອງຮັບຜິດຊອບພຽງຝ່າຍດຽວສຳລັບການຮັບປະກັນການສະໜອງທຶນທີ່ຈຳເປັນສຳລັບການພັດທະນາໂຄງການ ຊຶ່ງອາດປະກອບດ້ວຍເງິນກູ້ ຫຼື ຮຸ້ນ. ລັດຖະບານ ຈະບໍ່ມີຄວາມຮັບຜິດຊອບໃນການສະໜອງທຶນໃຫ້ແກ່ບໍລິສັດຂອງໂຄງການ ຫຼື ໃຫ້ການຮັບປະກັນທາງດ້ານການເງິນໃຫ້ແກ່ບໍລິສັດຂອງໂຄງການ ຫຼື ຜູ້ໃຫ້ກູ້ຢືມໃດໜຶ່ງ. ລັດຖະບານ ຈະໃຫ້ຄວາມຮ່ວມມືຕາມຄຳຮ້ອງຂໍຢ່າງສົມເຫດສົມຜົນຂອງຜູ້ໃຫ້ກູ້ຢືມເພື່ອການປະກອບເອກະທີ່ໄດ້ມາດຕະຖານເພີ່ມເຕີມ ທີ່ກ່ຽວກັບລັດຖະບານໃນຖານະເປັນຄູ່ສັນຍານຂອງສັນຍາສະບັບນີ້ ແລະ ສັນຍາເຊົ່າທີ່ດິນ. ໃນກໍລະນີທີ່ ບໍລິສັດໂຄງການ ຕ້ອງການຢາກໄດ້ຮັບເງິນກູ້ຈາກແຫຼ່ງທີ່ຢູ່ນອກ ສປປ ລາວ, ບໍລິສັດໂຄງການຈະຕ້ອງປະຕິບັດຕາມກົດໝາຍທີ່ນຳໃຊ້ຂອງ ສປປ ລາວ ແລະ ລະບຽບການຂອງທະນາຄານແຫ່ງ ສປປ ລາວ.

5.05 **ອັດຕາໜີ້ສິນສູງສຸດຕໍ່ມູນຄ່າສຸດທິ**. ນັບແຕ່ວັນທີສັນຍາທີ່ມີຜົນສັກສິດ, ບໍລິສັດໂຄງການຕ້ອງມີອັດຕາໜີ້ສິນຕໍ່ມູນຄ່າສຸດທິເທົ່າກັບ ຫຼື ໜ້ອຍກວ່າ [2:1] (“**ອັດຕາໜີ້ສິນສູງສຸດຕໍ່ມູນຄ່າສຸດທິ**”)

**5.06** [**ການຈຳກັດການສ້າງໜີ້ສິນເພີ່ມເຕີມ.** ບໍລິສັດໂຄງການຈະຕ້ອງບໍ່ສ້າງໜີ້ສິນເພີ່ມເຕີມ ຖ້າ, ຫຼັງຈາການສ້າງໜີ້ສິນດັ່ງກ່າວ, ອັດຕາໜີ້ສິນຕໍ່ມູນຄ່າສຸດທິຂອງບໍລິສັດໂຄງການ ຈະຫຼາຍກວ່າອັດຕາໜີ້ສິນສູງສຸດຕໍ່ມູນຄ່າສຸດທິ].

**5.07** [**ການຈຳກັດການຈ່າຍເງິນປັນຜົນ ແລະ ດອກເບັ້ຍເງິນກູ້ຂອງຜູ້ຖືຮຸ້ນ.** ບໍລິສັດໂຄງການ ຈະຕ້ອງບໍ່ (ກ) ຈ່າຍເງິນປັນຜົນ ຫຼື ແບ່ງປັນເງິນປັນຜົນ, ຫຼື ໄຖ່ຄືນ, ຊື້ຄືນ, ຫຼື ໄດ້ມາເປັນມູນຄ່າ, ຮຸ້ນທີ່ເປັນຂອງຕົນ, ຫຼື (ຂ) ຈ່າຍດອກເບັ້ຍ, ຈ່າຍຄືນຕົ້ນທຶນ, ຫຼື ໄດ້ພັນທະທີ່ເປັນມູນຄ່າສຳລັບເງິນທີ່ໄດ້ກູ້ຢືມມາ ຊຶ່ງບໍລິສັດແມ່ເປັນໜີ້ບໍລິສັດສາຂາຂອງບໍລິສັດແມ່, ຊຶ່ງໃນແຕ່ລະກໍລະນີ, ຖ້າ, ຫຼັງຈາກການຊຳລະດັ່ງກ່າວ, ອັດຕາໜີ້ສິນຕໍ່ມູນຄ່າສຸດທິຂອງບໍລິສັດໂຄງການ ຈະຫຼາຍກວ່າອັດຕາໜີ້ສິນສູງສຸດຕໍ່ມູນຄ່າສຸດທິ.]

**5.08** ການລາຍງານກ່ຽວກັບການປະຕິຕາມ. ກ່ອນຈະສ້າງໜີ້ສິນເພີ່ມເຕີມໃດໜຶ່ງ, ບໍລິສັດໂຄງການຕ້ອງໄດ້ສະໜອງບົດລາຍງານການເງິນ [ທີ່ໄດ້ຜ່ານການກວດສອບ] ທີ່ໄດ້ກະກຽມໂດຍຜູ້ກວດສອບເອກະລາຍໃຫ້ຫ້ອງການບໍລິການປະຕູດຽວ ຊຶ່ງບອກລະອຽດກ່ຽວກັບການຄິດໄລ່ອັດຕາໜີ້ສິນຕໍ່ມູນຄ່າສຸດທິໃນທັນໃດ ກ່ອນຈະສ້າງໜີ້ສິນດັ່ງກ່າວ ແລະ ອັດຕາດັ່ງກ່າວຈະພາໃຫ້ເກີດຜົນໃນທັນໃດພາຍຫຼັງການສ້າງໜີ້ສິນດັ່ງກ່າວ. ໃນທັນໃດພາຍຫຼັງຕົນມີບົດລາຍງານການເງິນທີ່ໄດ້ຜ່ານການກວດສອບການກວດສອບແລ້ວ, ບໍລິສັດໂຄງການຕ້ອງລາຍງານຫ້ອງການບໍລິການປະຕູດຽວ ກ່ຽວກັບອັດຕາໜີ້ສິນຕໍ່ມູນຄ່າສຸດທິໃນທ້າຍຂອງແຕ່ລະປີການເງິນ ແລະ ຈຳນວນຂອງໜີ້ສິນທັງໝົດທີ່ສ້າງຂຶ້ນໃນຕະຫຼອດປີດັ່ງກ່າວ.

## ມາດຕາ 6 ການສະເໜີຄວາມເປັນຈິງ ແລະ ການຮັບປະກັນ

**6.01** ການສະເໜີຄວາມເປັນຈິງແລະ ການຮັບປະກັນຂອງບໍລິສັດແມ່ ແລະ ບໍລິສັດໂຄງການ. ບໍລິສັດແມ່ ແລະ ບໍລິສັດໂຄງການໍ່ສະເໜີຄວາມເປັນຈິງ ແລະ ຮັບປະກັນຕໍ່ລັດຖະບານດັ່ງຕໍ່ໄປນີ້:

(ກ) ບໍລິສັດໂຄງການ ເປັນບໍລິສັດທີ່ສ້າງຕັ້ງຂຶ້ນ ແລະ ຄົງຕົວຢູ່ຢ່າງຖືກຕ້ອງພາຍໃຕ້ກົດໝາຍຂອງ ສປປ ລາວ,

(ຂ) ບໍລິສັດໂຄງການ ມີສິດອຳນາດໃນການເຂົ້າຮ່ວມ, ປະຕິບັດ ແລະ ສົ່ງມອບ ແລະ ໄດ້ເຮັດທຸກການກະທຳທີ່ຈຳເປັນທີ່ອະນຸຍາດໃຫ້ຕົນເຂົ້າຮ່ວມ, ປະຕບັດ ແລະ ສົ່ງມອບ ສັນຍາສະບັບນີ້ ແລະ ທຸລະກຳທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້.

(ຄ) ສັນຍາສະບັບນີ້ໄດ້ຖືກອະນຸຍາດຢ່າງຖືກຕ້ອງ ດ້ວຍທຸກການທຳທີ່ຈຳເປັນຂອງບໍລິສັດຊຶ່ງເປັນສ່ວນຂອງຂອງບໍລິສັດ, ໂດຍບໍລິສັດແມ່ເປັນພະຍານ, ແລະ ສັນຍາສະບັບນີ້ເປັນພັນທະດ້ານກົດໝາຍ, ມີຜົນສັກສິດ ແລະ ຜູກມັດບໍລິສັດໂຄງການ, ມີຜົນບັງຄັບປະຕິບັດ ໂດຍສອດຄ່ອງຕາມເນື້ອໃນຂອງສັນຍາສະບັບນີ້.

(ງ) ທຸກການອະນຸຍາດ ທີ່ຈຳເປັນ ຫຼື ທີ່ຕ້ອງການ ເພື່ອເຮັດໃຫ້ບໍລິສັດສາມາດເຂົ້າຮ່ວມ, ປະຕິບັດຕາມສິດຂອງຕົນ ແລະ ປະຕິບັດຕາມພັນທະຂອງຕົນທີ່ກຳນົດໄວ້ຢູ່ໃນສັນຍາສະບັບນີ້ ແມ່ນໄດ້ຮັບມາ ຫຼື ມີຜົນສັກສິດ ແລະ ມີຜົນບັງຄັບປະຕິບັດ ແລະ ຜົນສັກສິດຢ່າງເຕັມສ່ວນ.

(ຈ) ບໍລິສັດແມ່ເປັນເຈົ້າຂອງຜົນປະໂຫຍດ 100% ຂອງຮຸ້ນທີ່ມີຢູ່ໃນຂອງບໍລິສັດໂຄງການ ແລະ ບໍລິສັດໂຄງການແມ່ນບໍ່ມີສາຂາອື່ນ.

(ສ) ເອກະສານຊ້ອນທ້າຍ I (*ຂໍ້ມູນກ່ຽວກັບບໍລິສັດແມ່ ແລະ ບໍລິສັດໂຄງການ*) ບັນຈຸ ( ຍົກເວັ້ນຕາມທີ່ໄດ້ລະບຸໄວ້ໃນນີ້) ຢູ່ໃນລາຍການທີ່ຖືກຕ້ອງ ແລະ ຄົບຖ້ວນ ຫຼື ຢູ່ໃນຕາຕະລາງທີ່ໃຫ້ລາຍລະອຽດກ່ຽວກັບ:

(i) ຜູ້ຖືຮຸ້ນຂອງບໍລິສັດແມ່;

(ii) ບໍລິສັດໃນເຄືອຂ່າຍຂອງບໍລິສັດແມ່ ທີ່ສະແດງໃຫ້ເຫັນໃນແຕ່ລະກໍລະນີເຖິງສາຍພົວພັນກັບບໍລິສັດໂຄງການ ແລະ ຂອບເຂດສິດອຳນາດດ້ານກົດໝາຍຊຶ່ງນັ້ນບໍລິສັດຖືກຈັດຕັ້ງຂຶ້ນ;

(iii) ຜູ້ອຳນວຍການ ແລະ ເຈົ້າໜ້າທີ່ອາວຸໂສຂອງບໍລິສັດໂຄງການ; ແລະ

(iv) ແຕ່ລະບຸກຄົນທີ່ເປັນຜູ້ໄດ້ຮັບຜົນປະໂຫຍດສູງສຸດ 5% ຫຼື ຫຼາຍກວ່າຂອງ (ກ) ສິດໃນການລົງຄະແນນສຽງ ຊຶ່ງຕາມປົກກະຕິແລ້ວ ໄດ້ມອບສິດອຳນາດໃຫ້ຄວບຄຸມຄະນະບໍລິຫານຂອງບໍລິສັດແມ່, ຫຼື (ຂ) ມີສິດໃນການແບ່ງປັນຜົນກຳໄລຂອງບໍລິສັດແມ່ ແລະ ໃນຕ່ອງໂສ້ທີ່ສິດດັ່ງກ່າວຖືກປະຕິບັດ.

(ຊ) ບໍ່ມີບໍລິສັດໃນເຄືອຂ່າຍ, ຜູ້ອຳນວຍການ, ເຈົ້າໜ້າທີ່ ຫຼື ບຸກຄົນອື່ນໆໃດໆ ທີ່ໄດ້ລະບຸໄວ້ຢູ່ໃນເອກະສານຊ້ອນທ້າຍ I (*ຂໍ້ມູນກ່ຽວກັບບໍລິສັດແມ່ ແລະ ບໍລິສັດໂຄງການ*) ເປັນບຸກຄົນທີ່ຕ້ອງຫ້າມ.

(ຍ) ການເຊັນສັນຍາ, ການສົ່ງມອບ ແລະ ການປະຕິບັດສັນຍາສະບັບນີ້ໂດຍບໍລິສັດໂຄງການ ຈະຕ້ອງບໍ່ (i) ເປັນການລະເມີດ, ພາໃຫ້ເກີດມີການລະເມີດໃດໜຶ່ງ ຫຼື ເປັນການລະເມີດພາຍໃຕ້ສັນຍາ ຫຼື ເອກະສານທາງດ້ານກົດໝາຍໃດໜຶ່ງທີ່ບໍລິສັດໂຄງການເປັນສັນຍາ ຊຶ່ງດ້ວຍສັນຍາດັ່ງກ່າວນັ້ນບໍລິສັດໂຄງການ ຫຼື ຊັບສິນຂອງບໍລິສັດໂຄງການຖືກຜູກມັດ ຫຼື ໄດ້ຮັບຜົນກະທົບ, (ii) ຂັດກັບ ຫຼື ພາໃຫ້ເກີດມີການລະເມີດເນື້ອໃນ, ເງື່ອນໄຂ ຫຼື ຂໍ້ກຳນົດຂອງຄຳສັ່ງ, ຄຳຕັດສິນຂອງສານ, ດຳລັດ ຫຼື ຄຳສັ່ງຂອງສານ, ກຳມະການແກ້ໄຂຂໍ້ຂັດແຍ່ງ ຫຼື ອົງການຂອງລັດຖະບານ ທີ່ນຳໃຊ້ກັບບໍລິສັດໂຄງການ ຫຼື (iii) ລະເມີດບົດບັນຍັດຂອງກົດໝາຍ ຫຼື ຫຼັກການ ຫຼື ລະບຽບອື່ນໆຂອງອົງການຂອງລັດຖະບານ ທີ່ນຳໃຊ້ກັບບໍລິສັດໂຄງການ .

(ດ) ບໍ່ມີການຮ້ອງຟ້ອງ, ການຟ້ອງຮ້ອງໃຫ້ດຳເນີນຄະດີ, ການສືບສວນ ຫຼື ການໂຈະການດຳເນີນຄະດີ ຫຼື, ຕາມທີ່ບໍລິສັດໂຄງການຮູ້, ທີ່ໄດ້ຂົ່ມຂູ່, ຕ້ານກັບ ຫຼື ຊຶ່ງມີຜົນກະທົບຕໍ່ບໍລິສັດໂຄງການ ຫຼື ຕໍ່ຊັບສິນຂອງບໍລິສັດໂຄງການ ຢູ່ໃນສານໃດໜຶ່ງ ຫຼື ຢູ່ຕໍ່ໜ້າຜູ້ໄກ່ເກ່ຍຂໍ້ຂັດແຍ່ງທຸກປະເພດ ຫຼື ຢູ່ຕໍ່ໜ້າ ຫຼື ໂດຍ ອົງການຂອງລັດຖະບານ ຊຶ່ງຮຽກເຂົ້າຮ່ວມໃນຄະດີກ່ຽວກັບສິດຂອງບໍລິສັດໂຄງການ ເພື່ອເຂົ້າຮ່ວມ ຫຼື ປະຕິບັດພັນທະຂອງຕົນພາຍໃຕ້ສັນຍາສະບັບນີ້ ຫຼື ຊຶ່ງຈະມີຜົນກະທົບເສັຍຫາຍຢ່າງຮ້າຍແຮງຕໍ່ຄວາມສາມາດຂອງບໍລິສັດໂຄງການໃນການປະຕິບັດພັນທະຂອງຕົນພາຍໃຕ້ສັນຍານີ້ ຖ້າຫາກຖືກແກ້ໄຂຕ້ານກັບບໍລິສັດໂຄງການ,.

(ຕ) ບໍລິສັດໂຄງການບໍ່ໄດ້ຖືກ ຄຳສັ່ງ, ຄຳຕັດສິນຂອງສານ, ດຳລັດ ຫຼື ຄຳສັ່ງຂອງສານ, ກຳມະການແກ້ໄຂຂໍ້ຂັດແຍ່ງ ຫຼື ອົງການລັດຖະບານ ກຳນົດໃຫ້ເປັນຜູ້ທີ່ໄດ້ມີການລະເມີດຢ່າງຮ້າຍແຮງຕໍ່ (i) ກົດໝາຍທີ່ນຳໃຊ້, ລັດຖະບັນຍັດ,

ຫຼັກການ ຫຼື ລະບຽບການທີ່ກ່ຽວກັບການປົກປ້ອງສິ່ງແວດລ້ອມຂອງອົງການລັດຖະບານ ຫຼື (ii) ສັນຍາໃດໜຶ່ງ ຊຶ່ງຕາມສັນຍາດັ່ງກ່າວນັ້ນ ບໍລິສັດໂຄງການມີສິດເຂົ້າຮ່ວມໃນການຜະລິດກະສິກໍາ ພາຍໃຕ້ກົດໝາຍຂອງອໍານາດສານໃດໜຶ່ງ.

(ຖ) ຍົກເວັ້ນແຕ່ໄດ້ມີການເປີດເຜີຍເປັນຢ່າງອື່ນເປັນລາຍລັກອັກສອນໃຫ້ແກ່ລັດຖະບານ, ທຸກເອກະສານເປັນລາຍລັກອັກສອນທີ່ສໍາຄັນທີ່ໄດ້ສະໜອງເປັນລາຍລັກອັກສອນໃຫ້ ໂດຍ ຫຼື ໃນນາມຂອງ ບໍລິສັດໂຄງການ ກ່ຽວກັບຜົນປະໂຫຍດທີ່ລັດຖະບານຈະໄດ້ຮັບຈາກໂຄງການ ແມ່ນຖືກຕ້ອງໃນທຸກດ້ານ ແລະ ບໍ່ມີຂໍ້ມູນໃດທີ່ບໍ່ໄດ້ເອົາເຂົ້າ ຫຼື ໄດ້ເອົາເຂົ້າ, ຊຶ່ງການເອົາເຂົ້າ ຫຼື ບໍ່ເອົາເຂົ້ານັ້ນ ຈະເຮັດໃຫ້ຂໍ້ມູນທີ່ສະໜອງໃຫ້ນັ້ນພາໃຫ້ມີຄວາມເຂົ້າໃຈຜິດໃນດ້ານທີ່ສໍາຄັນໃດໜຶ່ງ,ໃນແຕ່ລະກໍລະນີໃນວັນທີ່ບໍລິສັດໂຄງການໄດ້ສະໜອງຂໍ້ມູນດັ່ງກ່າວໃຫ້ລັດຖະບານ.

(ທ) ບໍລິສັດໂຄງການມີປະສົບການ, ການເງິນ, ຄວາມຊ່ຽວຊານ, ຄວາມຮູ້ເຮັດດ້ານວິຊາການ ແລະ ລະບົບທີ່ຈໍາເປັນສໍາລັບການດໍາເນີນວຽກງານຕາມທີ່ສັນຍາສະບັບນີ້ໄດ້ກໍານົດໄວ້.

**6.02** **<u>ການສະເໜີຄວາມເປັນຈິງ ແລະ ການຮັບປະກັນສືບຕໍ່ຂອງບໍລິສັດໂຄງການ.</u>** ບໍລິສັດໂຄງການ ແລະ ບໍລິສັດແມ່ ຢືນຢັນວ່າການສະເໜີຄວາມເປັນຈິງ ແລະ ການຮັບປະກັນເປັນລາຍລັກອັກສອນທີ່ຈໍາເປັນພາຍໃຕ້ຂໍ້ 6.01 ແມ່ນເປັນຄວາມຈິງ ແລະ ຖືກຕ້ອງທຸກເວລາຕະຫຼອດໄລຍະສໍາປະທານ ແລະ ໃນເວລາທີ່ມີການໂອນ, ການປ່ຽນການຄວບຄຸມ, ການໄດ້ມາ ໂດຍບຸກຄົນໃດໜຶ່ງທີ່ປະຕິບັດໜ້າຄວບຄຸມບໍລິສັດແມ່ ແລະ ບໍລິສັດໂຄງການ ໂດຍກົງ ຫຼື ໂດຍທາງອ້ອມ.

**6.03** **<u>ການສະເໜີຄວາມເປັນຈິງ ແລະ ການຮັບປະກັນຂອງລັດຖະບານ.</u>** ລັດຖະບານສະເໜີຄວາມເປັນຈິງ ແລະ ຮັບປະກັນຕໍ່ບໍລິສັດໂຄງການດັ່ງຕໍ່ໄປນີ້:

(ກ) ການເຊັນສັນຍາ, ການສົ່ງມອບ ແລະ ການປະຕິບັດສັນຍາສະບັບນີ້ ແມ່ນໄດ້ຮັບທຸກການອະນຸຍາດທີ່ຈໍາເປັນ ແລະ ເປັນພັນທະທີ່ຖືກຕ້ອງຕາມກົດໝາຍ, ມີຄຸນຄ່າດ້ານກົດໝາຍ ແລະ ຜູກມັດລັດຖະບານ.

(ຂ) ຊັບສິນ, ສິດ ຫຼື ກໍາມະສິດນຂອງບໍລິສັດໂຄງການ ຈະບໍ່ຖືກຍຶດເປັນຂອງລັດ ຫຼື ຖືກຍຶດຄືນ, ຍົກເວັ້ນແຕ່ໄດ້ມີການຈ່າຍທົດແທນຄ່າເສັຍຫາຍທີ່ຖືກຕ້ອງເປັນທໍາ, ໃນທັນໃດ ແລະ ເໝາະສົມ, ລວມທັງ:

(iv) ທຸກໆພື້ນຖານໂຄງລ່າງ ຫຼື ກໍາມະສິດອື່ນໆ, ສັງຫາລິມຊັບ ຫຼື ອະສັງຫາລິມະຊັບ ຂອງບໍລິສັດໂຄງການ, ບໍລິສັດໃນເຄືອຂ່າຍ, ແລະ ຂອງພະນັກງານຂອງບໍລິສັດ, ຕົວແທນ ຫຼື ຜູ້ຕາງໜ້າ ໃນຂອບເຂດທີ່ພົວພັນກັບ ຫຼື ມີຜົນກະທົບຕໍ່ການດໍາເນີນໂຄງການ;

(v) ຜະລິດຕະພັນທຸກຮູບແບບທີ່ມາຈາກການດໍາເນີນໂຄງການ;

(vi) ຫຸ້ນ, ຮຸ້ນ ຫຼື ຜົນປະໂຫຍດໃນການເປັນເຈົ້າຂອງ ຫຼື ເງິນກູ້ທຸກປະເພດທີ່ຖື ຫຼື ເປັນເຈົ້າຂອງ ຫຼື ອອກໂດຍ ບໍລິສັດໂຄງການ ແລະ ບໍລິສັດແມ່;

(vii) ທຸກໂຄງສ້າງ ຫຼື ການຈັດຕັ້ງທີ່ນໍາໃຊ້ໂດຍບໍລິສັດໂຄງການ ທີ່ກ່ຽວຂ້ອງກັບໂຄງການ ຫຼື ສັນຍາສະບັບນີ້;

(viii) ທຸກສິດທີ່ບໍ່ມີຕົນຕົວ, ລວມທັງຊັບສິນທາງປັນຍາ.

(ຄ) ເພື່ອໃຫ້ມີຄວາມແນ່ນອນຫຼາຍຂຶ້ນ, ມາດຕະການທີ່ບໍ່ມີການເລືອກປະຕິບັດທີ່ຖືກອອກແບບ ແລະ ນຳໃຊ້ ເພື່ອຈຸດປະສົງປົກປ້ອງສະຫວັດດີການຂອງປະຊາຊົນທີ່ຖືກຕ້ອງຕາມກົດໝາຍ, ເຊັ່ນ ສຸຂະພາບຂອງປະຊາຊົນ, ຄວາມປອດໄພດ້ານອາຫານ, ຄວາມປອດໄພ ແລະ ສິ່ງແວດລ້ອມ, ຈະບໍ່ຖືວ່າເປັນການຍຶດຄືນ (ການຊື້ແບບບັງຄັບ ຫຼື ການເວນຄືນ)ຕາມທີ່ໄດ້ກຳນົດໄວ້ຢູ່ໃນວັກ (ຂ)

(ງ) ການລະເມີດເນື້ອໃນຂອງຂໍ້ 6.03 (ຂ) ໂດຍລັດຖະບານ, ນອກຈາກສິດໃນການໃຊ້ແທນທີ່ເສັຍຫາຍອື່ນໆໃດໜຶ່ງທີ່ກຳນົດໄວ້ໂດຍກົດໝາຍຂອງ ສປປ ລາວ ຫຼື ໃນສັນຍາສະບັບນີ້ແລ້ວ, ບໍລິສັດໂຄງການມີສິດຍັງມີສິດ (i) ໄດ້ຮັບການຈ່າຍທົດແທນຄືນມູນຄ່າທີ່ເປັນທຳໃນທ້ອງຕະຫຼາດຂອງການລົງທຶນ, ຊັບສິນ ແລະ ກຳມະສິດ/ຊັບສົມບັດ ທີ່ຖືກຍຶດເປັນຂອງລັດ ຫຼື ຖືກຍຶດຄືນ ໃນທັນໃດກ່ອນທີ່ຈະມີການຖືກຍຶດເປັນຂອງລັດ ຫຼື ການຍຶດຄືນ ຫຼື (ii) ຍົກເລີກສັນຍາສະບັບນີ້ຕາມທີ່ກຳນົດໃນມາດຕາ 24.

(ຈ) ທຸກໆການກະທຳຂອງລັດຖະບານໃນການຍົກເລີກສັນຍາສະບັບນີ້ໂດຍສອດຄ່ອງຕາມມາດຕາ 24, ລວມທັງ ການຍຶດການເອົາກຳມະສິດໃນອະສັງຫາລິມະຊັບຂອງບໍລິສັດໂຄງການ ຫຼື ບໍລິສັດແມ່, ຈະບໍ່ຖືວ່າເປັນການຍຶດຄືນ ພາຍໃຕ້ສັນຍາສະບັບນີ້.

(ສ) ມາດຕານີ້ຈະບໍ່ຖືກນຳໃຊ້ຕໍ່ ການອອກໃບອະນຸຍາດແບບບັງຄັບ ທີ່ອອກໃຫ້ກ່ຽວກັບສິດໃນຊັບສິນທາງປັນຍາ ຫຼື ຕໍ່ການຖອນຄືນ, ການຈຳກັດ ຫຼື ການສ້າງສິດໃນຊັບສິນທາງປັນຍາ ໃນຂອບເຂດເມື່ອການຖອນຄືນ, ການຈຳກັດ ຫຼື ການສ້າງສິດດັ່ງກ່າວ ໄດ້ເຮັດຂຶ້ນໂດຍສອດຄ່ອງຕາມສັນຍາສາກົນທີ່ນຳໃຊ້ກ່ຽວກັບຊັບສິນທາງປັນຍາ.

(ຊ) ມາດຕະການ (ທີ່ບໍ່ມີການເລືອກປະຕິບັດ) ທີ່ນຳໃຊ້ໂດຍທົ່ວໄປ ຈະບໍ່ຖືວ່າເປັນການຍຶດຄືນການຄ້ຳປະກັນໜີ້ສິນ ຫຼື ເງິນກູ້ ທີ່ຄຸ້ມຄອງໂດຍສັນຍາສະບັບນີ້ດ້ວຍເຫດຜົນດຽວ ວ່າມາດຕະການດັ່ງກ່າວໄດ້ສ້າງຄ່າໃຊ້ຈ່າຍໃຫ້ແກ່ລູກໜີ້ ທີ່ໄດ້ເຮັດໃຫ້ເກີດມີການລະເມີດສັນຍາກ່ຽວກັບໜີ້ສິນ.

(ຍ) ມາດຕະການ (ທີ່ບໍ່ມີການເລືອກປະຕິບັດ) ທີ່ນຳໃຊ້ຂອງຄູ່ສັນຍາຝ່າຍລັດ ເພື່ອຈຸດປະສົງປົກປ້ອງສະຫວັດດີການຂອງປະຊາຊົນທີ່ຖືກຕ້ອງຕາມກົດໝາຍ, ເຊັ່ນ ສຸຂະພາບຂອງປະຊາຊົນ, ຄວາມປອດໄພດ້ານອາຫານ, ຄວາມປອດໄພ ແລະ ສິ່ງແວດລ້ອມ, ຈະບໍ່ຖືວ່າເປັນການຍຶດຄືນໂດຍກົງພາຍໃຕ້ສັນຍາສະບັບນີ້.

## ມາດຕາ 7 ສິດ ແລະ ພັນທະຂອງລັດຖະບານ

**7.01** **<u>ຂໍ້ກຳນົດໂດຍທົ່ວໄປ</u>.** ນອກຈາກສິດ ແລະ ພັນທະ ຂອງລັດຖະບານ ທີ່ໄດ້ກຳນົດໄວ້ໃນສັນຍາສະບັບນີ້ແລ້ວ, ສິດ ແລະ ພັນທະ ຂອງລັດຖະບານ ຍັງປະກອບດ້ວຍສິດ ແລະ ພັນທະດັ່ງຕໍ່ໄປນີ້:

(ກ) ອຳນວຍຄວາມສະດວກໃຫ້ແກ່ບໍລິສັດໂຄງການ ໃນການນຳເຂົ້າແນວພັນ, ເຄື່ອງກົນຈັກ, ອຸປະກອນ ແລະ ເຄື່ອງມືທີ່ຈຳເປັນສຳລັບໂຄງການ ໂດຍສອດຄ່ອງຕາມມາດຕາ 11 ຂອງສັນຍາສະບັບນີ້, ລວມທັງ ການກວດກາອຸປະກອນທີ່ໄດ້ນຳເຂົ້າດັ່ງກ່າວຕາມທີ່ກົດໝາຍໄດ້ກຳນົດໄວ້.

(ຂ) ເມື່ອການບໍລິສັດໂຄງການຮ້ອງຂໍ, ລັດຖະບານ ຕ້ອງຈັດການກ່ຽວກັບໃບອະນຸຍາດເຮັດວຽກ, ວີຊາ ແລະ ການອະນຸຍາດອື່ນໆກ່ຽວກັບການເດີນທາງອື່ນໆທີ່ຈຳເປັນສຳລັບຄົນຕ່າງປະເທດທີ່ຈະສົ່ງກັບຄືນປະເທດທີ່ຖືກວ່າຈ້າງໂດຍບໍລິສັດໂຄງການ ໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ ແລະ ຂັ້ນຕອນຂອງການກວດຄົນເຂົ້າເມືອງໃນ ສປປ ລາວ.

(ຄ) ເຂົ້າ ແລະ ອອກພື້ນທີ່ໂຄງການໂດຍບໍ່ມີການແຈ້ງລ່ວງໜ້າ ເພື່ອຈຸດປະສົງຮັບປະກັນໃຫ້ທຸກວຽກງານຖືກດຳເນີນໄດ້ໂດຍສອດຄ່ອງຕາມສັນຍາສະບັບນີ້ ແລະ ບົດບັນຍັດຂອງກົດໝາຍຂອງ ສປປ ລາວ ແລະ ເພື່ອຈຸດປະສົງຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການ ແລະ ຜົນກະທົບຂອງໂຄງການຕໍ່ປະຊາຊົນໃນທ້ອງຖິ່ນທີ່ອາໄສຢູ່ໃນພື້ນທີ່ໂຄງການ, ໂດຍມີເງື່ອນໄຂວ່າລັດຖະບານ ຈະຕ້ອງບໍ່ກໍ່ຄວາມເສຍຫາຍ ຫຼື ສ້າງຜົນກະທົບຢ່າງຮ້າຍແຮງຕໍ່ໂຄງການ.

(ງ) ອຳນວຍຄວາມສະດວກໃນການນຳໃຊ້ພື້ນຖານໂຄງລ່າງທີ່ມີຢູ່ ແລະ ອຳນວຍຄວາມສະດວກໃນການກໍ່ສ້າງພື້ນຖານໂຄງລ່າງເພີ່ມເຕີມ ຕາມທີ່ບໍລິສັດໂຄງການພິຈາລະນາແຕ່ພຽງຝ່າຍດຽວເຫັນວ່າມີຄວາມຈຳເປັນສຳລັບການຈັດຕັ້ງປະຕິບັດໂຄງການເຊັ່ນ: ຖະໜົນ,ໄຟຟ້າ, ນໍ້າປະປາ ແລະ ສິ່ງອຳນວຍຄວາມສະດວກດ້ານການສື່ສານ ແລະ ຄົມມະນາຄົມ, ແຕ່ເຖິງແນວໃດກໍຕາມ ໂດຍມີເງື່ອນໄຂວ່າ ບໍລິສັດໂຄງການຈະຕ້ອງຮັບຜິດຊອບສຳລັບຄ່າໃຊ້ຈ່າຍໃນການເຊື່ອມຕໍ່ກັນພາຍໃນລະຫວ່າງພື້ນຖານໂຄງລ່າງທີ່ມີຢູ່ໃນພື້ນທີ່ໂຄງການ, ຄ່າໃຊ້ຈ່າຍຂອງການກໍ່ສ້າງ ແລະ ຂອງພື້ນຖານໂຄງລ່າງເພີ່ມເຕີມດັ່ງກ່າວ ແລະ ສຳລັບຄ່າບໍລິການທັງໝົດທີ່ເກີດຂຶ້ນໃນການນຳໃຊ້ສິ່ງອຳນວຍຄວາມສະດວກດັ່ງກາວໂດຍໂຄງການ. ການກໍ່ສ້າງພື້ນຖານໂຄງລ່າງໃດໜຶ່ງເພີ່ມເຕີມ ທີ່ບໍ່ໄດ້ຄາດຄະເນໄວ້ຢູ່ໃນບົດວິພາກເສດຖະກິດ [ແຜນພັດທະນາ] ແລະ ບໍ່ໄດ້ຮັບການຮັບຮອງເອົາໂດຍລັດຖະບານພາຍໃຕ້ກົດໝາຍທີ່ນຳໃຊ້, ລວມທັງ ແຕ່ບໍ່ຈຳກັດ ກົດໝາຍກ່ຽວກັບການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ຈະຕ້ອງໄດ້ຮັບການຮັບຮອງເອົາໂດຍລັດຖະບານ ໂດຍສອດຄ່ອງກັບກົດໝາຍທີ່ນຳໃຊ້ຂອງ ສປປ ລາວ.

(ຈ) ປະຕິບັດສິດອື່ນໆທີ່ມອບໃຫ້ລັດຖະບານຕາມສັນຍາສະບັບນີ້ ແລະ ກົດໝາຍຂອງ ສປປ ລາວ.

**7.02** __**ການອອກ**ອະນຸຍາດ.__ ລັດຖະບານຈະຕ້ອງເຮັດໃຫ້ອົງການທີ່ກ່ຽວຂ້ອງຂອງລັດຖະບານອອກເອກະສານຫຼັກຖານຂອງການອະນຸຍາດທີ່ບໍລິສັດໂຄງການຮ້ອງຂໍ ໄວເທົ່າທີ່ປະຕິບັດໄດ້ຢ່າງສົມເຫດສົມຜົນຫຼັງຈາກການຮ້ອງຂໍທີ່ໄດ້ສະເໜີນັ້ນໄດ້ຖືກອອກໃຫ້ແຕ່ລະຄັ້ງໂດຍອົງການຂອງລັດຖະບານ. ບໍ່ມີຫຍັງໃນສັນຍານີ້ທີ່ຈະຖືກຕີຄວາມໝາຍວ່າເປັນພັນທະຂອງລັດຖະບານ ທີ່ຕ້ອງອອກການອະນຸຍາດໃດໜຶ່ງໃນກໍລະນີທີ່ບໍລິສັດໂຄງການໄດ້ມີການຫຼົ້ມເຫຼວໃນການປະຕິບັດຕາມກົດໝາຍທີ່ນຳໃຊ້ຂອງ ສປປ ລາວ ຫຼື ຂັ້ນຕອນ ຫຼື ເງື່ອນໄຂອື່ນທີ່ນຳໃຊ້ເພື່ອທີ່ຈະໄດ້ຮັບນັ້ນ.

**7.03** __**ການສຳຫຼວດຊັບພະຍາກອນທຳມະຊາດ.**__ ລັດຖະບານ ສະຫງວນສິດຜູກຂາດໃນການສຳຫຼວດຊັບພະຍາກອນນໍ້າມັນ ແລະ ບໍ່ແຮ່ຢູ່ພາຍໃນພື້ນທີ່ໂຄງການ ແລະ ມອບສິດຜູກຂາດດັ່ງກ່າວໃຫ້ບຸກຄົນອື່ນ (“**ຜູ້ໄດ້ຮັບອະນຸຍາດ**”). ຖ້າລັດຖະບານ ຫຼື ຜູ້ໄດ້ຮັບອະນຸຍາດ ມີຈຸດປະສົງຢາກສຳຫຼວດຊັບພະຍາກອນນໍ້າມັນ ຫຼື ບໍ່ແຮ່ຢູ່ໃນພື້ນທີ່ໂຄງການ, ລັດຖະບານ ຈະຕ້ອງແຈ້ງລ່ວງໜ້າໃຫ້ບໍລິສັດໂຄງຊາບຢ່າງໜ້ອຍເກົ້າສິບ (90) ວັນ, ແລະ ສິດຂອງລັດຖະບານ ຫຼື ຜູ້ໄດ້ຮັບອະນຸຍາດສຳຫຼວດ ຊັບພະຍາກອນນໍ້າມັນ ຫຼື ບໍ່ແຮ່ ຢູ່ໃນພື້ນທີ່ໂຄງການນັ້ນ ຕ້ອງປະຕິບັດຕາມເງື່ອນໄຂລຸ່ມນີ້ :

(ກ) ທຸກກິດຈະການຂອງການສຳຫຼວດທີ່ຈະດຳເນີນໂດຍລັດຖະບານ ຫຼື ຜູ້ໄດ້ຮັບອະນຸຍາດ ຈະຕ້ອງບໍ່ເປັນແຊກແຊງ ຢ່າງບໍ່ສົມເຫດສົມ ຫຼື ຢ່າງຮ້າຍແຮງ ຕໍ່ການດຳເນີນໂຄງການ ຫຼື ຕໍ່ສິດສຳປະທານທີ່ໄດ້ມອບໃຫ້ບໍລິສັດໂຄງການຕາມທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້;

(ຂ) ລັດຖະບານ ຫຼື ຜູ້ໄດ້ຮັບອະນຸຍາດ ຈະຕ້ອງເຂົ້າຮ່ວມສັນຍາເປັນລາຍລັກອັກສອນຕ່າງຫາກກັບບໍລິສັດໂຄງການ ຊຶ່ງໃນນັ້ນຕ້ອງກຳນົດສິດ ແລະ ພັນທະຂອງຄູ່ສັນຍາ ກ່ຽວກັບກິດຈະການສຳຫຼວດດັ່ງກ່າວຢູ່ພາຍໃນພື້ນທີ່ໂຄງການ;

(ຄ) ລັດຖະບານ ຈະຕ້ອງເຮັດໃຫ້ຜູ້ໄດ້ຮັບອະນຸຍາດໃຊ້ແທນຄ່າເສຍຫາຍ ແລະ ໃຊ້ຊົດເຊີຍຄືນບໍລິສັດໂຄງການ ສຳລັບທຸກຄວາມເສຍຫາຍຕໍ່ ກຳມະສິດ, ຫຼື ຊັບສິນຂອງບໍລິສັດໂຄງການ ແລະ ສຳລັບການສູນເສຍທາງເສດຖະກິດ ຫຼື ການສູນເສຍອື່ນໆ (ນອກຈາກການສູນເສຍຄຸນຄ່າທີ່ແທ້ຈິງຂອງສິດທີ່ໄດ້ຈາກການເຊົ່າ), ການຮ້ອງຟ້ອງ, ຄວາມເສຍຫາຍ, ຄວາມຮັບຜິດຊອບ, ຄ່າໃຊ້ຈ່າຍ ແລະ ການໃຊ້ຈ່າຍຂອງການຕໍ່ສູ້ຄະດີ ( ລວມທັງຄ່າທະນາຍຄວາມທີ່ສົມເຫດຜົນ ), ທີ່ເກີດຈາກ ຫຼື ກ່ຽວຂ້ອງກັບກິດຈະການສຳຫຼວດດັ່ງກ່າວທີ່ດຳເນີນໂດຍຜູ້ໄດ້ຮັບອະນຸຍາດ.

7.04 **<u>ການກໍ່ສ້າງພື້ນຖານໂຄງລ່າງຂອງລັດຖະບານ</u>.** ໂດຍຂຶ້ນກັບເງື່ອນໄຂພາຍໃຕ້ມາດຕາ 8.03, ລັດຖະບານຈະສະຫງວນ ສິດໃນການກໍ່ສ້າງຖະໜົນ, ທາງຫຼວງ, ທາງລົດໄຟ, ແລະ ສາຍໂທລະສັບ ຫຼື ສາຍອື່ນໆຂອງການສື່ສານ ແລະ ສາທາລະນຸປະໂພກອື່ນໆທີ່ຢູ່ພາຍໃນພື້ນທີ່ໂຄງການ, ແລະ ມອບສິດຜູກຂາດດັ່ງກ່າວໃຫ້ຜູ້ໄດ້ຮັບອະນຸຍາດຄົນອື່ນໆ. ຖ້າລັດຖະບານ ຫຼື ຜູ້ໄດ້ຮັບອະນຸຍາດຫາກຕ້ອງການກໍ່ສ້າງພື້ນຖານໂຄງລ່າງດັ່ງກ່າວຢູ່ພາຍໃນພື້ນທີ່ໂຄງການ, ຜູ້ກ່ຽວຈະຕ້ອງແຈ້ງໃຫ້ບໍລິສັດໂຄງການຊາບ ຢ່າງໜ້ອຍເກົ້າສິບ (90)ວັນ ກ່ອນຈະເລີ່ມກິດຈະການດັ່ງກ່າວ, ແລະ ສິດຂອງລັດຖະບານ ຫຼື ຜູ້ໄດ້ຮັບອະນຸຍາຈະຕ້ອງປະຕິບັດຕາມເງື່ອນໄຂລຸ່ມນີ້:

(ກ) ທຸກການພັດທະນາ ຫຼື ກໍ່ສ້າງພື້ນຖານໂຄງລ່າງ ທີ່ຈະດຳເນີນໂດຍລັດຖະບານ ຫຼື ຜູ້ໄດ້ຮັບອະນຸຍາດ ຈະຕ້ອງບໍ່ເປັນແຊກແຊງ ຢ່າງບໍ່ສົມເຫດສົມ ຫຼື ຢ່າງຮ້າຍແຮງ ຕໍ່ການດຳເນີນໂຄງການ ຫຼື ຕໍ່ສິດສຳປະທານທີ່ໄດ້ມອບໃຫ້ບໍລິສັດໂຄງການຕາມທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້;

(ຂ) ລັດຖະບານ ຫຼື ຜູ້ໄດ້ຮັບອະນຸຍາດ ຈະຕ້ອງເຂົ້າຮ່ວມສັນຍາເປັນລາຍລັກອັກສອນຕ່າງຫາກກັບບໍລິສັດໂຄງການ ຊຶ່ງໃນນັ້ນຕ້ອງກຳນົດສິດ ແລະ ພັນທະຂອງຄູ່ສັນຍາ ກ່ຽວກັບການພັດທະນາ ແລະ ການກໍ່ສ້າງພື້ນຖານໂຄງລ່າງດັ່ງກ່າວຢູ່ພາຍໃນພື້ນທີ່ໂຄງການ;

(ຄ) ລັດຖະບານ ຫຼື ຜູ້ໄດ້ຮັບອະນຍາດ ຈະຕ້ອງໃຊ້ແທນຄ່າເສຍຫາຍໃຫ້ແກ່ບໍລິສັດໂຄງການຢ່າງເຕັມສ່ວນ ສຳລັບທຸກຄວາມເສຍຫາຍຕໍ່ ກຳມະສິດ ຫຼື ຊັບສິນຂອງບໍລິສັດໂຄງການ ແລະ ສຳລັບການສູນເສຍທາງເສດຖະກິດ ຫຼື ການສູນເສຍອື່ນໆ, ການຮ້ອງຟ້ອງ, ຄວາມຮັບຜິດຊອບ, ແລະ ຄ່າໃຊ້ຈ່າຍ ແລະ ການໃຊ້ຈ່າຍຂອງການຕໍ່ສູ້ຄະດີ ( ລວມທັງຄ່າທະນາຍຄວາມທີ່ສົມເຫດຜົນ ), ທີ່ເກີດຈາກ ຫຼື ກ່ຽວຂ້ອງກັບກິດຈະການການສຳຫຼວດ ແລະ/ຫຼື ການຂຸດຄົ້ນບໍ່ແຮ່ ທີ່ດຳເນີນໂດຍລັດຖະບານ ຫຼື ຜູ້ໄດ້ຮັບອະນຸຍາດ.

## ມາດຕາ 8 ສິດ ແລະ ພັນທະຂອງບໍລິສັດໂຄງການ

**8.01** ***ຂໍ້ກຳນົດທົ່ວໄປ.*** ນອກຈາກສິດສຳປະທານ ແລະ ພັນທະຂອງບໍລິສັດໂຄງການ ທີ່ກຳນົດໃນສັນຍາສະບັບນີ້, ສິດສຳປະທານ ແລະ ພັນທະຂອງບໍລິສັດໂຄງການ ຈະຕ້ອງລວມທັງສິດ ແລະ ພັນທະດັ່ງຕໍ່ໄປນີ້:

(ກ) ເຂົ້າເຖິງ ແລະ ອອກຈາກ, ພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ພື້ນທີ່ໂຄງການ ເພື່ອຈຸດປະສົງຂອງການສ້າງ ແລະ ດຳເນີນໂຄງການສອດຄ່ອງຕາມສັນຍາສະບັບນີ້ ແລະ ກົດໝາຍຂອງ ສປປ ລາວ.

(ຂ) ພັດທະນາໂຄງການ ໂດຍນຳໃຊ້ຄວາມຮູ້ແລະ ຄວາມຊ່ຽວຊານດ້ານວິຊາການ, ແລະ ອຸປະກອນທີ່ຈຳເປັນເພື່ອດຳເນີນໂຄງການ.

(ຄ) ນຳໃຊ້ພື້ນຖານໂຄງລ່າງທັງໝົດທີ່ມີຢູ່, ຖະໜົນ, ໄຟຟ້າ,ນ້ຳປະປາ (ພາຍໃຕ້ມາດຕາ 8.04), ແລະ ສິ່ງອຳນວຍຄວາມສະດວກທາງດ້ານການໂທລະຄົມມະນາຄົມ ແລະ ສື່ສານ ທີ່ຈຳເປັນຕໍ່ການພັດທະນາ ແລະ ການດຳເນີນງານຂອງໂຄງການ, ແຕ່ໂດຍມີເງື່ອນໄຂວ່າ (i) ລັດຖະບານ ຈະບໍ່ມີຄວາມຮັບຜິດຊອບ ຫຼື ຮັບຜິດຊອບທາງດ້ານກົດໝາຍສຳລັບການຢຸດສະງັກຂອງການສະໜອງໄຟຟ້າໃນເວລາໃດໜຶ່ງ ຖ້າການສະງັກດັ່ງກ່າວບໍ່ໄດ້ເກີດມາຈາກມາດຕະການທີ່ວາງອອກຕໍ່ບໍລິສັດໂຄງການໂດຍລັດຖບານໂດຍເຈດຕະນາ ແລະ ດ້ວຍການຕັດສິນໃຈແຕ່ພຽງຝ່າຍດຽວຂອງລັດຖະບານ, ແລະ (ii) ບໍລິສັດໂຄງການ ຈະຕ້ອງຮັບຜິດຊອບສຳລັບຄ່າໃຊ້ຈ່າຍໃນການເຊື່ອມຕໍ່ກັນພາຍໃນລະຫວ່າງພື້ນຖານໂຄງລ່າງທີ່ມີຢູ່ໃນພື້ນທີ່ໂຄງການ ແລະ ຄ່າບໍລິການທັງໝົດທີ່ເກີດຂຶ້ນໃນການນຳໃຊ້ສິ່ງອຳນວຍຄວາມສະດວກດັ່ງກາວໂດຍໂຄງການ.

(ງ) ຝຶກອົບຮົມ, ແນະນຳ ແລະ ໃຫ້ຄວາມຮູ້ທາງວິຊາການແກ່ພະນັກງານກ່ຽວກັບການດຳເນີນໂຄງການ ແລະ ການສະໜອງພືດທີ່ປູກ ຫຼື ການສະໜອງອື່ນໆທີ່ຈຳເປັນ.

(ຈ) ໃຫ້ຄວາມຮ່ວມມືກັບລັດຖະບານ ໃນການດຳເນີນການຕິດຕາມກວດກາດ້ານຕ່າງໆງນຂອງໂຄງການ ແລະ ການກວດກາກິດຈະການຂອງໂຄງການ ແລະ ບົດບັນທຶກ ແລະ ບົດລາຍງານຂອງບໍລິສັດໂຄງການ.

(ສ) ປະຕິບັດສິດອື່ນໆທີ່ມອບໃຫ້ບໍລິສັດໂຄງການ ໂດຍສອດຄ່ອງຕາມສັນຍາສະບັບນີ້ ແລະ ກົດໝາຍຂອງ ສປປລາວ.

(ຊ) ໃຊ້ຄວາມພະຍາຍາມທີ່ດີທີ່ສຸດໃນການກໍ່ສ້າງ ແລະ ສະໜອງສິ່ງອຳນວຍຄວາມສະດວກທີ່ຈຳເປັນສຳລັບການດຳເນີນໂຄງການ ດ້ວຍຄວາມເອົາໃຈໃສ່, ຄວາມມີປະສິດທະພາບ ແລະ ຄວາມປະຢັດ ແລະ ຈັດປະຕິບັດໂຄງການດ້ວຍວິທີດຽວກັນນັ້ນ.

(ຍ) ພັດທະນາ ແລະ ດຳເນີນໂຄງການ ແລະ ພື້ນທີ່ໂຄງການ ໂດຍສອດຄ່ອງກັບກົດໝາຍຂອງ ສປປ ລາວ ກ່ຽວກັບທີ່ຕັ້ງ, ການໃຫ້ຄວາມປອດໄພ ຫຼື ການທຳລາຍລະເບີດທີ່ຍັງບໍ່ທັນແຕກ ຫຼື ວັດຖຸລະເບີດອື່ນໆ, ລວມທັງ ແຕ່ບໍ່ຈຳກັດ, ພັນທະຂອງຕົນໃນການສະໜອງທຶນສຳລັບກິດຈະການດັ່ງກ່າວ ໂດຍສອດຄອ່ງຕາມ [ໃສ່ຊື່ຂອງດຳລັດ].

**8.02** **<u>ບົດວິພາກເສດຖະກິດ ແລະ ແຜນພັດທະນາ.</u>** ບໍລິສັດໂຄງການ ຕ້ອງຈັດຕັ້ງປະຕິບັດໂຄງການ ໂດຍສອດຄ່ອງຕາມບົດວິພາກເສດຖະກິດ ຕາມທີ່ໄດ້ຖືກຮັບຮອງເອົາກ່ອນການເຊັນສັນຍາສັນຍາສະບັບນີ້. ບໍລິສັດໂຄງການ ຕ້ອງກະກຽມແຜນພັດທະນາ ໂດຍອີງຕາມຜົນຂອງບົດວິພາກເສດຖະກິດ. ແຜນພັດທະນາ ສາມາດເອົາເຂົ້າຢູ່ໃນບົດວິພາກເສດຖະກິດ ຫຼື ກະກຽມເປັນເອກະສານຕ່າງຫາກ. ບໍລິສັດໂຄງການ ຈະຕ້ອງໄດ້ຮັບການຮັບຮອງແຜນພັດທະນາເບື້ອງຕົ້ນໃນເວລາດຽວກັນກັບທີ່ບົດວິພາກເສດຖະກິດໄດ້ຮັບການຮັບຮອງເອົາ, ໂດຍມີເງື່ອນໄຂວ່າການຮັບຮອງເອົາທັງສອງນັ້ນຕ້ອງໄດ້ຮັບຮອງເອົາ ກ່ອນທີ່ສັນຍາສະບັບນີ້ຈະມີຜົນສັກສິດ. ບໍລິສັດໂຄງການ ຈະຕ້ອງໄດ້ປັບປຸງແຜນພັດທະນາໃຫ້ທັນສະພາບການຕາມເງື່ອນໄຂຕົວຈິງຂອງໂຄງການຮ້ອງ ຫຼື ໂດຍສອດຄອ່ງຕາມເອກະສານຊ້ອນທ້າຍທີ່ຄັດຕິດກັບບົດວິພາກເສດຖະກິດ. ທຸກແຜນພັດທະນາທີ່ສະເໜີໂດຍບໍລິສັດໂຄງການໃນເວລາຕໍ່ມາ ຈະຕ້ອງໄດ້ຖືກທົບທວນຄືນ ແລະ ໄດ້ຮັບການປະກອບຄຳເຫັນ, ແຕ່ບໍ່ແມ່ນເພື່ອການຮັບຮອງ ຫຼື ການດັດແກ້ໂດຍລັດຖະບານ, ຍົກເວັ້ນແຜນພັດທະນາດັ່ງກ່າວ ມີການ

ປ່ຽນແປງທີ່ສຳຄັນຕໍ່ແຜນພັດທະນາທີ່ໄດ້ເອົາເຂົ້າຢູ່ໃນບົດວິພາກເສດຖະກິດສະບັບເບື້ອງຕົ້ນ. ໃນວັນ ຫຼື ກ່ອນວັນ [ໃສ່ວັນທີ] ຂອງແຕ່ລະປີຖັດກັນຕໍ່ມາໃນຕະຫຼອດອາຍຸຂອງສັນຍາສະບັບນີ້, ບໍລິສັດໂຄງການ ຕ້ອງສະເໜີແຜນພັດທະນາໃນຮອບຫ້າ (5) ປີ. ແຜນພັດທະນາທີ່ໄດ້ຜ່ານການຮັບຮອງເອົາຈະຕ້ອງກຳນົດຕາຕະລາງເວລາຂອງການເລີ່ມການດຳເນີນງານເຂົ້າ, ລວມທັງ ວັນທີ່ໄດ້ລະບຸເນື້ອທີ່ດິນທີ່ຈະນຳໃຊ້ເພື່ອດຳເນີນການຜະລິດ. ຕາຕະລາງເວລາ ສາມາດຖືກກວດແກ້ໄດ້ໂດຍການຕົກລົງກັນລະຫ່ວາງຄູ່ສັນຍາ. ແຕ່ລະປີ, ບໍລິສັດໂຄງການຈະຕ້ອງລາຍງານກ່ຽວກັບການປະຕິບັດຕາຕະລາງເວລາດັ່ງກ່າວ. ບໍລິສັດໂຄງການ ສາມາດເຮັດການປ່ຽນແປງທີ່ສຳຄັນຕໍ່ແຜນພັດທະນາທີ່ໄດ້ຜ່ານການຮັບຮອງເອົາແລ້ວນັ້ນ, ແຕ່ຕ້ອງໄດ້ຮັບການຮັບຮອງເອົາໂດຍລັດຖະບານ. ການຫຼົ້ມເຫຼວທີ່ສຳຄັນ ແລະ ສືບຕໍ່ເລື້ອຍໆໃນການປະຕິບັດຕາມບົດວິພາກເສດຖະກິດ ແລະ ແຜນພັດທະນາທີ່ໄດ້ຜ່ານການຮັບຮອງເອົາ ຊຶ່ງອາດຈະໄດ້ຮັບການປັບປຸງແຕ່ລະໄລຍະນັ້ນ ແມ່ນເປັນການລະເມີດສັນຍາສະບັບນີ້ຢ່າງຮ້າຍແຮງຕາມຈຸດປະສົງຂອງມາດຕາ 24.

**8.03** **<u>ການກໍ່ສ້າງພື້ນຖານໂຄງລ່າງ ແລະ ການນຳໃຊ້ລະບົບຊ່ວຍວຽກຂອງບໍລິສັດໂຄງການ</u>.** ພາຍໃຕ້ເນື້ອໃນ ແລະ ເງື່ອນໄຂຂອງສັນຍາສະບັບນີ້, ໂດຍສະເພາະເງື່ອນໄຂພາຍໃຕ້<u>ຂໍ້ 15</u>, <u>ຂໍ້ 16</u> ແລະ <u>ຂໍ້ 17</u>, ແລະ ເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*) ແລະ ຕາມຄວາມເຫັນທີ່ສົມເຫດສົມຜົນຂອງບໍລິສັດໂຄງການທີ່ເຫັນວ່າມີຄວາຈຳເປັນ ແລະ ມີຄວາມຕ້ອງການສຳລັບບໍລິສັດໂຄງການ ເພື່ອດຳເນີນໂຄງການເທົ່ານັ້ນ, ບໍລິສັດໂຄງການ ຕ້ອງມີສິດ,ແຕ່ຈະຕ້ອງຢູ່ພາຍໃຕ້ ແລະ ໂດຍສອດຄ່ອງຕາມ ກົດໝາຍຂອງ ສປປ ລາວດັ່ງນີ້:

(ກ) ກໍ່ສ້າງ, ຕິດຕັ້ງ, ບຳລຸງຮັກສາ ແລະ/ຫຼື ສ້ອມແປງ ພື້ນຖານໂຄງລ່າງທີ່ຢູ່ພາຍໃນພື້ນທີ່ໂຄງການ ໂດຍນຳໃຊ້ຄ່າໃຊ້ຈ່າຍຂອງຕົນເອງ, *ແຕ່ເຖິງຢ່າງໃດກໍຕາມ, ໂດຍມີເງື່ອນໄຂວ່າ* ບໍລິສັດໂຄງການ ຈະຕ້ອງໄດ້ຮັບການຮັບຮອງເອົາຈາກລັດຖະບານເສຍກ່ອນກ່ຽວກັບ ການອອກແບບ, ທີ່ຕັ້ງ, ຂະໜາດ ແລະ ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມຈາກຖະໜົນຫົນທາງ ຫຼື ເສັ້ນທາງອື່ນໆຂອງການຂົນສົ່ງ ໂດຍສອດຄ່ອງຕາມກົດໝາຍທີ່ນຳໃຊ້ ຊຶ່ງການຮັບຮອງເອົານັ້ນຈະຕ້ອງບໍ່ຖືກຖ່ວງດຶງໄວ້ຢ່າງບໍ່ສົມເຫດສົມຜົນ. ບໍລິສັດໂຄງການ ຕ້ອງຮັບຜິດຊອບການບຳລຸງຮັກສາ ແລະ ສ້ອມແປງພື້ນຖານໂຄງລ່າງຢ່າງຕໍ່ເນື່ອງຢູ່ພາຍໃນພື້ນທີ່ໂຄງການ. ຖະໜົນທຸກເສັ້ນ, ລວມທັງ ຖະໜົນ ແລະ ທາງທີ່ຕັດຜ່ານພື້ນທີ່ໂຄງການ ຊຶ່ງປະຊາຊົນໃນທ້ອງຖິ່ນເຄີຍໃຊ້ມາກ່ອນ ຈະໄດ້ຕ້ອງເປີດໃຫ້ປະຊາຊົນນຳໃຊ້ໂດຍບໍ່ເສຍຄ່າ ເພື່ອຈຸດປະສົງທາງດ້ານການຄ້າ ແລະ ທາງດ້ານສາທາລະນະ ຕາບໃດທີ່ການນຳໃຊ້ດັ່ງກ່າວບໍ່ໄດ້ແຊກແຊງຢ່າງບໍ່ສົມເຫດສົມຜົນເຂົ້າໃນການດຳເນີນໂຄງການ, *ແຕ່ເຖິງຢ່າງໃດກໍຕາມ, ໂດຍມີເງື່ອນໄຂວ່າ* ບໍລິສັດໂຄງການສາມດອອກຂໍ້ຫ້າມທີ່ສົມເຫດສົມຜົນຜົນ ກ່ຽວກັບການນຳໃຊ້ຖະໜົນ ແລະ ທາງທີ່ຕັດຜ່ານພື້ນທີ່ໂຄງການດັ່ງກ່າວ ເພື່ອປ້ອງກັນຄວາມປອດໄພຂອງຜູ້ຊົມໃຊ້ຖະໜົນ ແລະ ທາງທີ່ຕັດຜ່ານພື້ນທີ່ໂຄງການດັ່ງກ່າວ, ຄວາມປອດໄພຂອງຊັບສິນ, ພະນັກງານ ແລະ ຜູ້ຮັບເໝົາຂອງຕົນ. ບໍລິສັດໂຄງການ ຕ້ອງຮັບປະກັນ ແລະ ຕິດຕາມກວດກາທຸກເວລາໃຫ້ກຳລັງຮັກສາຄວາມປອດໄພຈະຕ້ອງດຳເນີນດ້ວຍຕົວເອງ ໂດຍສອດຄ່ອງຕາມກົດໝາຍທີ່ນຳໃຊ້ (ລວມທັງ ທຸກກົດໝາຍທີ່ກ່ຽວກັບການກັກຕົວ ແລະ ການກັກຂັງ ແລະ ສິດທິມະນຸດ), ກົດຈັນຍາບັນສາກົນສຳລັບການດຳເນີນການໃຫ້ການບໍລິການຄວາມປອດໄພນຂອງພາກເອກະຊົນ ແລະ ຫຼັກການກ່ຽວກັບຄວາມປອດໄພ ແລະ ສິດທິມະນຸດດ້ວຍຄວາມສະໝັກໃຈ.

(ຂ) ໂດຍຢູ່ພາຍໃຕ້ເງື່ອນໄຂຂອງສິດຂອງລັດຖະບານຕໍ່ຕົ້ນໄມ້ຕາມທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ 9.01 ແລະ ໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ ກ່ຽວກັບຕົ້ນໄມ້, ປູກ, ຕັດ ແລະ ນຳໃຊ້ໄມ້ທ່ອນຢູ່ພາຍໃນພື້ນທີ່ໂຄງການໃນຂອບເຂດຈຳ

ເປັນສຳລັບການກໍ່ສ້າງ ແລະ ການບຳລຸງຮັກສາພື້ນຖານໂຄງລ່າງ ແລະ ສຳລັບການດຳເນີນວຽກງານອື່ນໆຂອງໂຄງການຢູ່ພາຍໃນພື້ນທີ່ໂຄງການ, *ແຕ່ເຖິງຢ່າງໃດກໍຕາມ, ໂດຍມີເງື່ອນໄຂວ່າ* ບໍລິສັດໂຄງການຈະຕ້ອງໄດ້ຮັບການອະນຸຍາດທີ່ຈຳເປັນ xແລະ ການຂຸດຄົ້ນ ຫຼື ການນຳໃຊ້ໄມ້ທ່ອນນັ້ນຈະຕ້ອງດຳເນີນໄປບໍ່ເພື່ອຈຸດປະສົງທາງດ້ານການຄ້າ.

(ຄ) ນຳເອົາ ແລະ ນຳໃຊ້, ຢູ່ພາຍໃນພື້ນທີ່ໂຄງການ,ພາຍໃຕ້ເງື່ອນໄຂຂອງກົດໝາຍຂອງ ສປປ ລາວ, ໂດຍບໍ່ເສຍຄ່າ ( ແຕ່ຈະຕ້ອງບໍ່ຂາຍໃຫ້ບຸກຄົນອື່ນໃດໜຶ່ງໂດຍບໍ່ໄດ້ຮັບການຮັບຮອງເປັນລາຍລັກອັກສອນຈາກ ລັດຖະບານ), ຫີນ, ຫີນຟູ, ຊາຍ, ດິນດາກ ແລະ ຫີນແຮ່ ທີ່ບໍ່ມີມູນຄ່າແຮ່ທາດທີ່ສຳຄັນທາງດ້ານການຄ້າ ນອກໄປຈາກການລວມຕົວເປັນກ້ອນ, ສິ່ງອັດຮູ ແລະ ຮອຍທ່ອນໄມ້ ແລະ ວັດຖຸກໍ່ສ້າງ ຕາມທີ່ບໍລິສັດໂຄງການເຫັນວ່າຈຳເປັນ ຫຼື ເປັນປະໂຫຍດສຳລັບການດຳເນີນໂຄງການ, *ແຕ່ເຖິງຢ່າງໃດກໍຕາມ, ໂດຍມີເງື່ອນໄຂວ່າ* ການນຳໃຊ້ດັ່ງກ່າວຈະບໍ່ໄປແຊກແຊງສິດຂອງບຸກຄົນທີ່ສາມ ຫຼື ການນຳໃຊ້ຂອງລັດຖະບານ. ກິດຈະການດັ່ງກ່າວຈະຕ້ອງບໍ່ຖືກພິຈາລະນາວ່າເປັນການຂຸດຄົ້ນບໍ່ແຮ່ ຕາມຈຸດປະສົງຂອງກົດໝາຍຂອງ ສປປ ລາວ.

**8.04 <u>ສິດນຳໃຊ້ນໍ້າ</u>.**

(ກ) ພາຍໃຕ້ການຮັບຮອງເອົາເປັນລາຍລັກອັກສອນຂອງລັດຖະບານ ແລະ ກົດໝາຍຂອງ ສປປ ລາວ ແລະ ເງື່ອນໄຂຕ່າງໆທີ່ລັດຖະບານອາດຈະວາງອອກ, ບໍລິສັດໂຄງການມີສິດເອົານໍ້າໜ້າດິນໃນປະລິມານທີ່ກຳນົດໄວ້ ອອກຈາກທາງໄຫຼຂອງນໍ້າ ແລະ ດູດເອົາ ແລະ ນຳໃຊ້ນໍ້າໃຕ້ດິນໃນປະລິມານທີ່ກຳນໄວ້ ຊຶ່ງໄດ້ທີ່ພົບຢູ່ພາຍໃນພື້ນທີ່ໂຄງການ ເພື່ອຈຸດປະສົງທີ່ເປັນປະໂຫຍດ ຫຼື ຈຳເປັນຕໍ່ການດຳເນີນໂຄງການພາຍໃຕ້ສັນຍາສະບັບນີ້ເມື່ອໄດ້ຊຳລະຄ່ານໍ້າທີ່ນຳໃຊ້ແລ້ວ, ແຕ່ເຖິງຢ່າງໃດກໍຕາມ, ໂດຍມີເງື່ອນໄຂວ່າ ບໍລິສັດໂຄງການຈະຕ້ອງບໍ່ຕັດ ທີ່ດິນ, ບ້ານ, ເມືອງ, ເຮືອນ ຫຼື ບ່ອນນໍ້າເກັບນໍ້າໄວ້ສຳລັບສັດອອກຈາກການສະໜອງນໍ້າທີ່ສົມເຫດສົມຜົນ. ເຖິງຈະມີສິ່ງໃດສິ່ງໜຶ່ງທີ່ນຂັດກັນຢູ່ໃນສັນຍາສະບັບນີ້, ບໍລິສັດໂຄງການບໍ່ສາມາດສ້າງເຂື່ອນກັນລຳນ້ຳໃດໜຶ່ງ ຫຼື ນຳໃຊ້ປະລິມານນໍ້າ ຊຶ່ງອາດຈະເປັນການແຊກແຊງເຂົ້າໃນກິດຈະການຂອງຊາວກະສິກອນ ຫຼື ຜູ້ທີ່ຢູ່ອາໃສ ທີ່ໄດ້ດຳເນີນມາແຕ່ໃນວັນເຊັນສັນຍາສະບັບນີ້. ບໍລິສັດໂຄງການຈະຕ້ອງບໍ່ແຊກແຊງສິດໃນການນຳໃຊ້ນໍ້າຂອງບຸກຄົນໃດໜຶ່ງ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ. ບໍລິສັດໂຄງການຈະຕ້ອງຮັບປະກັນວ່າການນຳໃຊ້ນໍ້າຂອງຕົນຈະບໍ່ມີທາງທີ່ຈະສ້າງຄວາມເສຍຫາຍຕໍ່ສິ່ງແວດລ້ອມ, ມົນລະພິດ ຫຼື ສ້າງອັນຕະ ລາຍອື່ນໆ; ໂດຍສະເພາະ ບໍລິສັດໂຄງການຈະຕ້ອງໄດ້ປະຕິບັດຕາມເງື່ອນໄຂພາຍໃຕ້ <u>ຂໍ້ 15</u>, <u>ຂໍ້ 16</u> ແລະ <u>ຂໍ້ 17</u>, ແລະ ເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*).

(ຂ) ບໍລິສັດໂຄງການ ຈະຕ້ອງນຳເອົາລາຍລະອຽດກ່ຽວກັບປະລິມານນໍ້າທີ່ໄດ້ນຳໃຊ້ ແລະ ທີ່ໄດ້ປ່ອຍຖິ້ມ ເຂົ້າໃນບົດລາຍງານປະຈຳປີກ່ຽວກັບຄວາມຄືບໜ້າທີ່ສົ່ງໃຫ້ການບໍລິການຜ່ານປະຕູດຽວ, ເຊັ່ນດຽວກັບກັບປະລິມານນ້ຳ ແລະ ນ້ຳທີ່ມີຢູ່ໃນ ແລະ ບໍລິເວນອ້ອມແອ້ມພື້ນທີ່ໂຄງການ, ເຊັ່ນດຽວກັນກັບຜົນກະທົບຂອງກິດຈະການຂອງໂຄງການຕໍ່ປະລິມານນໍ້າ ແລະ ນໍ້າທີ່ມີສຳລັບຊຸມຊົນຢູ່ໃນທ້ອງຖິ່ນ. ການກວດສອບປະລິມານນໍ້າ ຈະຕ້ອງຢູ່ພາຍໃຕ້ກົດໝາຍທີ່ນຳໃຊ້ ແລະ ຖືກກວດກາໂດຍບຸກຄົນທີສາມທີ່ເປັນເອກະລາດ.

(ຄ) ສິດໃນການນຳໃຊ້ນໍ້າຂອງບໍລິສັດໂຄງການ ຈະຖືກທົບທວນຄືນໂດຍລັດຖະບານໃນທຸກໆຫ້າປີ. ລັດຖະບານສະຫງວນສິດໃນການຖອນສິດໃນການນຳໃຊ້ນໍ້າຂອງບໍລິສັດໂຄງການໃນກໍລະນີພິເສດ ເຊັ່ນການຂາດແຄນນໍ້າຢ່າງກະທັນຫັນ,

ໄພນ້ຳຖ້ວມ ຫຼື ໄພແຫ້ງແລ້ງ, ເພື່ອປັບສະພາບເຂົ້າ ຫຼື ຫຼຸດຜ່ອນຜົນກະທົບຂອງການປ່ຽນແປງດິນຟ້າອາກາດ; ຫຼື ຜົນຈາກສະພາບການທີ່ບໍ່ຄາດຄະເນໄວ້.

(ງ) ລັດຖະບານ ຈະເກັບຄ່ານ້ຳໃນຈຳນວນທີ່ຄິດໄລ່ໂດຍສອດຄ່ອງຕາມກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ທີ່ມີຜົນສັກສິດຢູ່ແຕ່ລະໄລຍະ. ໃນກໍລະນີທີ່ບໍ່ມີກົດໝາຍດັ່ງກ່າວ, ຄ່ານ້ຳຈະແມ່ນ [x] ເດຊີແມັດກ້ອນ.

**8.05** **ການປະກັນໄພ.** ທຸກເວລາໃນຕະຫຼອດໄລຍະສຳປະທານ, ບໍລິສັດໂຄງການຈະຕ້ອງຮັກສາການປະກັນໄພດ້ວຍຄ່າໃຊ້ຈ່າຍຂອງຕົນເອງ ແລະ ໃຫ້ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ຊ່ວງຂອງຕົນຮັກສາການປະກັນໄພດ້ວຍຄ່າໃຊ້ຈ່າຍຂອງພວກກ່ຽວເອງ ກ່ຽວກັບສັງຫາລະມະຊັບ ແລະ ອະສັງຫາລິມະຊັບຂອງໂຄງການ ແລະ ພະນັກງານ ທີ່ຢູ່ໃນ ສປປ ລາວ, ຕໍ່ການເສຍຊີວິດ ແລະ ບາດເຈັບຈາກອຸປະຕິເຫດ ແລະ ເຫດບັງເອີນ, ຕາມປະເພດ, ເງື່ອນໄຂ ແລະ ໃນຈຳນວນ (ລວມທັງ ການຫັກອອກ, ການປະກັນໄພຮ່ວມ ແລະ ການປະກັນດ້ວຍຕົນເອງ, ຖ້າມີເງິນແຮພຽງພໍໄດ້ຖືກຮັກສາໄວ້ສຳລັບການປະກັນໄພດັ່ງກ່າວ) ທີ່ຄວນຈະຄາດຄະເນໄວ້ຢ່າງສົມເຫດສົມຜົນ ແລະ ສົມທຽບກັບບໍລິສັດສາກົນຊັ້ນນຳໜ້າຊຶ່ງດຳເນີນກິດຈະການທີ່ຄ້າຍຄືກັນໃນຂະໜາດທີ່ຄ້າຍຄືກັນ ແລະ ມີເງື່ອນໄຂ ແລະ ທີ່ຕັ້ງພູມສາດທີ່ຄ້າຍຄືກັນ. ການປະກັນໄພດັ່ງກ່າວຕ້ອງກວມເອົາການປະກັນໄພກ່ຽວກັບຄວາມຮັບຜິດຊອບຂອງບຸກຄົນທີ່ສາມຢ່າງຄົບຊຸດ, ລວມທັງການບາດເຈັບ ຫຼື ການເສຍຊີວິດຂອງພະນັກງານ ແລະ ຜູ້ຕາງໜ້າຂອງບຸກຄົນທີ່ເຂົ້າໄປໃນພື້ນທີ່ໂຄງການ. ບໍລິສັດໂຄງການຕ້ອງເອົາຂໍ້ມູນກ່ຽວກັບການປະກັນໄພດັ່ງກ່າວເຂົ້າໃນບົດລາຍງານປະຈຳປີກ່ຽວກັບຄວາມຄືບໜ້າທີ່ສົ່ງໃຫ້ການບໍລິການຜ່ານປະຕູດຽວ ແລະ ອາດຖືກຮຽກຮ້ອງໂດຍລັດຖະບານອີກເພື່ອໃຫ້ສະໜອງຫຼັກຖານຂອງການປະກັນໄພແຕ່ລະໄລຍະ. ຖ້າເວລາໃດບໍລິສັດໂຄງການມີຄວາມຫຼົ້ມເຫຼວໃນການຊື້ ແລະ ຮັກສາການປະກັນໄພໃດໜຶ່ງ ຫຼື ທັງໝົດໃຫ້ມີຜົນສັກສິດ ແລະ ຜົນບັງຄັບປະຕິບັດຢ່າງເຕັມສ່ວນຕາມທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້, ລັດຖະບານສາມາດຊື້ ແລະ ຮັກສາການປະກັນດັ່ງກ່າວດ້ວຍການຕັດສິນໃຈຂອງຕົນເອງແຕ່ພຽງຝ່າຍດຽວ ແລະ ຈຳນວນເງິນທີ່ສົມເຫດສົມຜົນທີ່ໄດ້ກໍ່ໃຫ້ເກີດຂຶ້ນໂດຍລັດຖະ ບານ ແລະ ສະນັ້ນຈຳນວນເງິນດັ່ງກ່າວຈະຕ້ອງຖືກທົດແທນຄືນໂດຍບໍລິສັດໂຄງການ.

**8.06** **ການເຮັດທຸລະກຳກັບບໍລິສັດເຄືອຂ່າຍ.**

(ກ) ການເຮັດທຸລະກຳ ລະຫວ່າງ ບໍລິສັດໂຄງການ ແລະ ບໍລິສັດເຄືອຂ່າຍ ຕ້ອງດຳເນີນຕາມເນື້ອໃນ ແລະ ຕາມເງື່ອນໄຂທີ່ຍຸຕິທຳ ແລະ ສົມຫດສົມຜົນຄືກັນກັບທີ່ໄດ້ເຮັດກັບພາກສ່ວນທີ່ບໍ່ກ່ຽວກັບຄູ່ສັນຍາທີ່ບໍ່ຄຸ້ນເຄີຍກັນ ແລະ ໂດຍສອດຄ່ອງກັບບົດແນະນຳຂອງອົງການເພື່ອການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (OECD) ກ່ຽວກັບການໂອນການກຳນົດລາຄາສຳລັບບໍລິສັດຂ້າມຊາດ ແລະ ອົງການສ່ວຍສາອາກອນ ຫຼື ບົດແນະນຳທີ່ມີເນື້ອໃນສຳຄັນທີ່ເຮັດອອກໃນເວລາຕໍ່ມາ ຫຼື ສັນຍາສາກົນ ຊຶ່ງມີຈຸດປະສົງທີ່ຄ້າຍຄືກັນທີ່ຖືກຮັບຮອງເອົາໂດຍອົງການເພື່ອການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (OECD) ຫຼື ຕາມທີ່ໄດ້ຕົກລົງກັນໄວ້ໂດຍຄູ່ສັນຍາ. ນອກຈາກນັ້ນ, ທຸລະກຳໃດໜຶ່ງກ່ຽວກັບການຂາຍພືດທີ່ປູກ ຫຼື ຜົນທີ່ມາຈາກພືດທີ່ປູກດັ່ງກ່າວ ຄວນຈະຕ້ອງດຳເນີນບົນພື້ນຖານລາຄາສາກົນທີ່ມີການແຂ່ງຂັນກັນສຳລັບຜະລິດຕະພັນດັ່ງກ່າວໃນເວລາຂາຍ.

(ຂ) ຖ້າບໍລິສັດໂຄງການຫາກເຂົ້າຮ່ວມສັນຍາກ່ຽວກັບການຂາຍ ຫຼື ການບໍລິການ ( ລວມທັງ ສັນຍາກ່ຽວກັບການດໍາເນີນງານ ແລະ ການບໍາລຸງຮັກສາ) ກັບບໍລິສັດເຄືອຂ່າຍຂອງຕົນ, ເມື່ອມີການຮ້ອງຂໍຈາກລັດຖະບານ, ບໍລິສັດໂຄການ ຕ້ອງສະໜອງເອກະສານກ່ຽວກັບການເຮັດທຸລະກໍາດັ່ງກ່າວຢືນຢັນວ່າບໍລິສັດໂຄງການໄດ້ປະຕິບັດຕາມຂໍ້ນີ້. ລັດຖະບານສາມາດຕັດສິນໃຈດ້ວຍຕົນເອງແຕ່ຝ່າຍດຽວທີ່ຈະຊອກເອົາບຸກຄົນທີສາມເພື່ອກວດສອບຂໍ້ມູນດັ່ງກ່າວ.

**8.07** **<u>ການຂາຍຜະລິດຕະພັນກະສິກໍາໃຫ້ບໍລິສັດເຄືອຂ່າຍ.</u>** ບໍລິສັດໂຄງການ ມີສິດຂາຍພືດທີ່ປູກ ແລະ ຜົນທີ່ເກີດຈາກພືດັ່ງກ່າວໃຫ້ແກ່ບຸກຄົນທີ່ບໍ່ກ່ຽວຂ້ອງກັບຄູ່ສັນຍາທີ່ຕົນເລືອກ ແລະ ໃນລາຄາທີ່ຕົນເຫັນວາເໝາະສົມ ໂດຍຄໍານຶງເຖິງພາກປະຕິບັດ ທີ່ດີ, ທັນສະໄໝ ແລະ ມີການແຂ່ງຂັນ ຕໍ່ການດໍາເນີນທຸລະກິດທີ່ດີ, ທັນສະໄໝ ແລະ ມີການແຂ່ງຂັນທາງດ້ານທຸລະກິດ, ໂດຍມີເງື່ອນໄຂວ່າລາຍລະອຽດກ່ຽວກັບການຂາຍນັ້ນ ຕ້ອງໄດ້ເອົາເຂົ້າຢູ່ໃນບົດລາຍງານກ່ຽວກັບການຂາຍທັງໝົດສົ່ງໃຫ້ລັດຖະບານ.

**8.08** **<u>ການນໍາໃຊ້ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ຊ່ວງ.</u>** ພາຍໃຕ້ຂໍ້ 17.03, ບໍລິສັດໂຄງການສາມາດວ່າຈ້າງຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ຊ່ວງ (ລວມທັງ ບໍລິສັດເຄືອຂ່າຍ) ເພື່ອດໍາເນີນການປະຕິບັດວຽກງານຂອງໂຄງການ ແລະ ປະຕິບັດຕາມພັນທະຂອງຕົນພາຍໃຕ້ສັນຍາສະບັບນີ້, *ໂດຍມີເງື່ອນໄຂວ່າ.*

(ກ) ທຸກສັນຍາລະຫວ່າງບໍລິສັດໂຄງການ ແລະ ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ຊ່ວງ ຈະຕ້ອງບັນຈຸເນື້ອໃນທີ່ເໝາະສົມ ຊຶ່ງຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ຊ່ວງຕ້ອງຮັບຮູ້ ແລະ ເຫັນດີປະຕິບັດຕາມເນື້ອໃນຂອງສັນຍາສະບັບນີ້ໃນຂອບເຂດຂອງວຽກງານທີ່ປະຕິບັດໂດຍຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ຊ່ວງ.

(ຂ) ບໍລິສັດໂຄງການຕ້ອງຮັບປະກັນວ່າ ການກວດກາ ແລະ ການຄຸ້ມຄອງຂອງຕົນຕໍ່ຜູ້ຮັບເໝົາຂອງຕົນ ແລະ ຂອງຜູ້ຮັບເໝົາຕໍ່ຜູ້ຮັບເໝົາຕໍ່ຊ່ວງຂອງພວກກ່ຽວ ແມ່ນພຽງພໍທີ່ຈະແຈ້ງໃຫ້ຕົນຊາບເມື່ອການປະຕິບັດວຽກຂອງຜູ້ຮັບເໝົາຂອງຕົນ ແລະ ຂອງຜູ້ຮັບເໝົາຕໍ່ຜູ້ຮັບເໝົາຕໍ່ຊ່ວງຂອງພວກກ່ຽວສາມາດຖືກປະຕິບັດ ຫຼື ບໍລິສັດມີຄວາມສ່ຽງທີ່ຈະລະເມີດສັນຍາສະບັບນີ້.

(ຄ) ເວັ້ນເສຍແຕ່ໄດ້ມີການບອກໄວ້ຢ່າງຈະແຈ້ງຢູ່ໃນສັນຍາສະບັບນີ້, ບໍ່ມີສິດໃດທີ່ໄດ້ມອບໃຫ້ແກ່ [ບໍລິສັດໂຄງການ/ຄູ່ສັນຍາ] ທີ່ຈະມອບຕໍ່ໃຫ້ຜູ້ຮັບເໝົາ ຫຼື ຜູ້ຮັບເໝົາຕໍ່ຊ່ວງຜູ້ໃດຜູ້ໜຶ່ງ.

**8.09** **<u>ຊາວກະສິກອນ/ຊາວປູກຝັງທີ່ເຂົ້າຮ່ວມສັນຍາ.</u>** ບໍລິສັດໂຄງການສມາດເຂົ້າຮ່ວມສັນຍາກະສິກໍາກັບຊາວກະສິກອນ/ຊາວປູກຝັງທີ່ເຂົ້າຮ່ວມສັນຍາ ເພື່ອຈຸດປະສົງຂອງການຊື້ພືດທີ່ປູກ ຫຼື ຜົນທີ່ເກີດຈາກພືດທີ່ປູກດັ່ງກ່າວ, ແຕ່ເຖິງຢ່າງໃດກໍຕາມ ໂດຍມີເງື່ອນໄຂວ່າສັນຍາກະສິກໍາດັ່ງກ່າວ ຕ້ອງອີງໃສ່ເນື້ອໃນທີ່ສໍາຄັນຂອງສັນຍາຕົວແບບຂອງສັນຍາກະສິກໍາທີ່ປາກົດຢູ່ໃນເອກະສານຊ້ອນທ້າຍ ຈ), ຕ້ອງຖືກສ້າງຂຶ້ນຢ່າງເປັນອິດສະລະດ້ວຍການເຫັນດີຂອງຊາວກະສິກອນ/ຊາວປູກຝັງທີ່ເຂົ້າຮ່ວມສັນຍາ ບົນພື້ນຖານຂອງເນື້ອໃນ, ເງື່ອນໄຂ ແລະ ລາຄາ ທີ່ເປັນທໍາໃນທ້ອງຕະຫຼາດ ແລະ ຈະຕ້ອງສອດຄ່ອງຕາມເງື່ອນໄຂຂອງກົດໝາຍຂອງ ສປປ ລາວ. ບໍລິສັດໂຄງການຕ້ອງເອົາລາຍລະອຽດກ່ຽວກັບການຈັດການລະຫວ່າງບໍລິສັດໂຄງ ການ ແລະ ຊາວກະສິກອນ/ຊາວປູກຝັງທີ່ເຂົ້າຮ່ວມສັນຍາ ເຂົ້າໃນບົດລາຍງານປະຈໍາປີກ່ຽວກັບຄວາມຄືບໜ້າທີ່ສົ່ງໃຫ້ການບໍລິການຜ່ານປະຕູດຽວ. ນອກຈາກນັ້ນ, ລັດຖະບານຈະສະຫງວນສິດໃນການກວດກາສັນຍາກະສິກໍາດັ່ງກ່າວ ແລະ ກວດກາການຈັດຕັ້ງປະຕິບັດສັນຍາດັ່ງກ່າວເພື່ອຮັບປະກັນການປະຕິບັດຕາມຂໍ້ 8.10.

**8.10** **<u>ການຊື້ຜະລິດຕະພັນ</u>**. ບໍລິສັດໂຄງການ ຈະຕ້ອງມີສິດແບບບໍ່ຜູກຂາດໃນທຸກເວລາທີ່ຈະ ຊື້, ໂດຍບໍ່ການຈຳກັດ, ພືດທີ່ປູກ ແລະ ພົນທີ່ເກີດຈາກພືດທີ່ປູກດັ່ງກ່າວ ຈາກຊາວກະສິກອນ/ຊາວປູກຝັງທີ່ເຂົ້າຮ່ວມສັນຍາ, ຊາວກະສິກອນໃນທ້ອງຖິ່ນທີ່ເປັນເອກະລາດ ແລະ ຄົນອື່ນໆຢູ່ໃນ ສປປ ລາວ, ແລະ ປຸງແຕ່ງ, ເຮັດການຕະຫຼາດ, ຂາຍ, ເຮັດທຸລະກິດ ແລະ ສົ່ງອອກ ພືດທີ່ປູກ ແລະ ພົນທີ່ເກີດຈາກພືດທີ່ປູກດັ່ງກ່າວ ໂດຍສອດຄ່ອງຕາມສັນຍາສະບັບນີ້. ລາຄາຕໍ່າສຸດທີ່ບໍລິສັດໂຄງການຈະຊື້ພືດທີ່ປູກ ແລະ ພົນທີ່ເກີດຈາກພືດທີ່ປູກດັ່ງກ່າວ ຈາກຊາວກະສິກອນ/ຊາວປູກຝັງທີ່ເຂົ້າຮ່ວມສັນຍາ, ຊາວກະສິກອນໃນທ້ອງຖິ່ນທີ່ເປັນເອກະລາດ ແລະ ຄົນອື່ນໆຢູ່ໃນ ສປປ ລາວ ຈະຕ້ອງແມ່ນລາຄາຕະຫຼາດທີ່ກຳນົດໄວ້ສຳລັບຜະລິດຕະພັນນັ້ນໃນເວລາຂາຍ ຫຼື ໃນກໍລະນີຂອງຊາວກະສິກອນ/ຊາວປູກຝັງທີ່ເຂົ້າຮ່ວມສັນຍາ. ບໍລິສັດໂຄງການຕ້ອງເອົາລາຍລະອຽດກ່ຽວກັບການເຮັດທຸລະກຳດັ່ງກ່າວ ເຂົ້າໃນບົດລາຍງານປະຈຳປີກ່ຽວກັບຄວາມຄືບໜ້າທີ່ສົ່ງໃຫ້ການບໍລິການຜ່ານປະຕູດຽວ. ນອກຈາກນັ້ນ, ລັດຖະບານສາມາດຮ້ອງຂໍເອກະສານກ່ຽວກັບການເຮັດທຸລະກຳດັ່ງກ່າວຈາກບໍລິສັດໂຄງ ການ ເພື່ອຮັບປະກັນວ່າການເຮັດທຸລະກຳດັ່ງກ່າວຖືກດຳເນີນດ້ວຍວິທີທີ່ມີຄວາມຍຸຕິທຳ ແລະ ຄວາມໂປ່ງໃສ.

### ມາດຕາ 9 ກຳມະສິດໃນຕົ້ນໄມ້ ແລະ ວັດຖຸບໍລະດົກທາງວັດທະນະທຳ

**9.02** **<u>ຕົ້ນໄມ້</u>**. ພືດພັນໄມ້ທັງໝົດທີ່ມີໃນພື້ນທີ່ໂຄງການໃນວັນເຊັນສັນຍາ ຊຶ່ງມີເສັ້ນຜ່າກາງເທົ່າກັບ ຫຼື ຫຼາຍກວ່າ 15 ຊມ ບໍ່ວ່າຈະເປັນພັນໃດກໍຕາມ ແມ່ນເປັນກຳມະສິດຂອງລັດຖະບານ. ພືດພັນໄມ້ທັງໝົດທີ່ມີໃນພື້ນທີ່ໂຄງການໃນວັນເຊັນສັນຍາ ແລະ ມີເສັ້ນຜ່າກາງເທົ່າກັບ ຫຼື ໜ້ອຍກວ່າ 15 ຊມ ບໍ່ວ່າຈະເປັນພັນໃດກໍຕາມ ແລະ ພືດທີ່ປູກທັງໝົດ (ນອກຈາກຕົ້ນໄມ້) ທີ່ປູກໂດຍບໍລິສັດໂຄງການຢູ່ໃນສວນປູກພືດ ແລະ ຜະລິດຕະພັນທີ່ໄດ້ຈາກພືດທີ່ປູກດັ່ງກ່າວ ແມ່ນເປັນກຳມະສິດຂອງບໍລິສັດໂຄງການ. ການຮັບຮອງເອົາເປັນລາຍລັກອັກສອນລ່ວງໜ້າຈາກກະຊວງກະສິກຳ ແລະ ປ່າໄມ້ ແມ່ນຈຳເປັນສຳລັບການບຸກເບີກ, ການເກັບກ່ຽວ, ການຈູດ, ການຊອຍ ຫຼື ການກຳຈັດພືດພັນໄມ້ຊຶ່ງເປັນກຳມະສິດຂອງລັດຖະບານທີ່ມີໃນພື້ນທີ່ໂຄງການ ແລະ ການຮ້ອງຂໍໃຫ້ຮັບຮອງເອົານັ້ນຈະຕ້ອງສະເໜີຜ່ານກົມສົ່ງເສີມການລົງທຶນ /IPD.

**9.02** **<u>ວັດຖຸບໍລະດົກທາງວັດທະນາທຳ</u>**. ວັດຖຸບໍລະດົກທາງວັດທະນາທຳ ແລະ ວັດຖຸໂບຮານທີ່ຖືກຄົ້ນພົບໂດຍບໍລິສັດໂຄງການ ຫຼື ໂດຍຜູ້ຕາງໜ້າຂອງຕົນໃນໄລຍະຂອງການພັດທະນາໂຄງການ ແມ່ນເປັນກຳມະສິດຂອງລັດຖະບານ. ເມື່ອມີການຄົ້ນພ ວັດຖຸດັ່ງກ່າວໂດຍລິສັດໂຄງການ, ຫ້າມແຕະຕ້ອງ, ເຄື່ອນຍ້າຍ ຫຼື ປ່ຽນແປງວັດຖຸດັ່ງກ່າວ, ແລະ ຈະຕ້ອງລາຍງານການຄົ້ນພົບນັ້ນໄປໃຫ້ອົງການປົກຄອງແຂວງທີ່ກ່ຽວຂ້ອງ ແລະ ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ຜ່ານຫ້ອງການບໍລິການປະຕູດຽວໂດຍທັນທີ.

**9.03** **<u>ການລົງໂທດຕໍ່ການລະເມີດ</u>**. ການລະເມີດໃດໜຶ່ງໂດຍບໍລິສັດໂຄງການຕໍ່ພັນທະຂອງຕົນທີ່ໄດ້ກຳນົດໃນມາດຕາ 9 ນີ້ ຈະຕ້ອງເຮັດໃຫ້ບໍລິສັດໂຄງການຖືກປັບໃໝ ແລະ ມີພັນທະຈ່າຍໃຊ້ແທນ ແລະ ຊົດເຊີຍຄ່າເສຍຫາຍທີ່ໄດ້ກໍ່ໃຫ້ເກີດຂຶ້ນໂດຍບໍລິສັດໂຄງການ ໂດຍສອດຄອ່ງຕາມກົດໝາຍຂອງ ສປປ ລາວ.

## ມາດຕາ 10 ການນຳເຂົ້າ ແລະ ການສົ່ງອອກ ເພື່ອການຜະລິດ

10.01 **<u>ກົດໝາຍທີ່ນຳໃຊ້ໂດຍທົ່ວໄປ.</u>** ພາຍໃຕ້ມາດຕານີ້, ບໍລິສັດໂຄງການຕ້ອງປະຕິບັດຢ່າງເຂັ້ມງວດຕາມຂໍ້ຈຳກັດ ແລະ ຂໍ້ຫ້າມສຳລັບການນຳເຂົ້າ ແລະ ການສົ່ງອອກ ຕາມທີ່ໄດ້ກຳນົດໄວ້ໃນຢູ່ໃນກົດໝາຍຂອງ ສປປ ລາວ.

10.02 **<u>ການນຳເຂົ້າສິນຄ້າ</u>**. ບໍລິສັດໂຄງການ ສາມາດນຳເຂົ້າສິນຄ້າໃນສາງ, ອຸປະກອນ, ເຄື່ອງຈັກ, ພາຫະນະນຳໃຊ້ໃນສະໜາມ ແລະ ວັດຖຸດິບອື່ນໆທີ່ຈຳເປັນ, ຍົກເວັ້ນນ້ຳມັນເຊື້ອໄຟ, ເພື່ອນຳໃຊ້ໂດຍກົງເຂົ້າໃນການດຳເນີນງານໂຄງການ ພາຍຫຼັງທີ່ໄດ້ຮັບການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງຂອງລັດຖະບານກ່ຽວກັບການຈ່າຍພາສີນຳເຂົ້າ ຫຼື ການຍົກເວັ້ນ ໂດຍສອດຄ່ອງຕາມກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

10.03 **<u>ການຍົກເວັ້ນພາສີນຳເຂົ້າ ສຳລັບອຸປະກອນ, ສິນຄ້າໃນສາງ ແລະ ອື່ນໆ</u>**. ສິນຄ້າໃນສາງ, ອຸປະກອນ, ເຄື່ອງຈັກ, ພາຫະນະພາກສະໜາມ ແລະ ວັດຖຸດິບອື່ນໆ ທີ່ຈຳເປັນສຳລັບການນຳໃຊ້ໂດຍກົງເຂົ້າໃນການປູກ, ການປຸງແຕ່ງ ແລະ ການສົ່ງອອກພືດທີ່ປູກ ແລະ ຜົນທີ່ເກີດຈາກພືດປູກດັ່ງກ່າວ ຈະຖືກຍົກເວັ້ນພາສີນຳເຂົ້າທັງໝົດ, ໂດຍບໍ່ລວມອາກອນມູນຄ່າເພີ່ມ, ແຕ່ໂດຍມີເງື່ອນໄຂວ່າສິນຄ້າ ແລະ ວັດຖຸດັ່ງກ່າວ ຈະຕ້ອງໄດ້ລະບຸໄວ້ໃນແຜນນຳເຂົ້າປະຈຳປີຂອງບໍລິສັດໂຄງການ ໂດຍສອດຄ່ອງຕາມຂໍ້ 10.05.

10.04 **<u>ການຍົກເວັ້ນພາສີນຳເຂົ້າສຳລັບວັດຖຸທີ່ໄດ້ນຳເຂົ້າເກີນ</u>**. ວັດຖຸໃດໜຶ່ງທີ່ໄດ້ຖືກນຳເຂົ້າໂດຍບໍລິສັດໂຄງການ ຊຶ່ງບໍ່ມີຄວາມຈຳເປັນນຳໃຊ້ໃນໂຄງການອີກຕໍ່ໄປ ສາມາດຖືກຂາຍຄືນ ຫຼື ສົ່ງອອກຄືນໂດຍບໍ່ໄດ້ຈ່າຍພາສີ, ແຕ່ບໍ່ລວມອາກອນມູນຄ່າເພີ່ມ, ແຕ່ໂດຍມີເງື່ອນໄຂວ່າຖ້າວັດຖຸດັ່ງກ່າວຫາກຖືກຂາຍຢູ່ໃນ ສປປ ລາວ, ການຂາຍຕ້ອງດັ່ງກ່າວຈະຕ້ອງໄດ້ເສຍອາກອນທີ່ນຳໃຊ້ ໂດຍສອດຄ່ອງຕາມກົດໝາຍທີ່ນຳໃຊ້ຂອງ ສປປ ລາວ.

10.05 **<u>ແຜນນຳເຂົ້າປະຈຳປີ</u>**. ບໍລິສັດໂຄງການຕ້ອງສ້າງແຜນປະຈຳປີເພື່ອການນຳເຂົ້າສິນຄ້າໃນສາງ, ອຸປະກອນ, ເຄື່ອງຈັກ, ພາຫະນະທີ່ນຳໃຊ້ໃນສະໜາມ ແລະ ວັດຖຸດິບອື່ນໆ ທີ່ຈຳເປັນເພື່ອນຳໃຊ້ເຂົ້າໃນໂຄງການ ("ແຜນນຳເຂົ້າປະຈຳປີ") ເພື່ອສົ່ງໃຫ້ຫ້ອງການບໍລິການປະຕູດຽວ ບໍ່ໃຫ້ກາຍເກົ້າສິບ (90) ວັນຫຼັງຈາກການຈັດຕັ້ງປະຕິບັດສັນຍາສະບັບນີ້ໃນໄລຍະປີທຳອິດຂອງໂຄງການ ແລະ ບໍ່ໃຫ້ກາຍວັນທີ 15 ຂອງເດືອນພະຈິກໃນແຕ່ລະປີ. ບໍລິສັດໂຄງການຕ້ອງແຈ້ງໃຫ້ລັດຖະບານຮູ້ເຖິງເຫດຜົນການຊັກຊ້າໃນການສ້າງແຜນ (ການຊັກຊ້າໃນການສ້າງແມ່ນບໍ່ກາຍຫົກສິບ (60)ວັນ). ຫຼັງຈາກນັ້ນ, ລັດຖະບານຈະຕ້ອງທົບທວນ ແລະ ຮັບຮອງລາຍການນຳເຂົ້າທີ່ສະເໜີຂຶ້ນ. ໃນກໍລະນີສຸກເສີນ, ລາຍການສິນຄ້ານຳເຂົ້າທີ່ບໍ່ນອນຢູ່ໃນແຜນນຳເຂົ້າປະຈຳປີຈະຕ້ອງສົ່ງຫ້ອງການບໍລິການປະຕູດຽວ ເພື່ອສະເໜີໃຫ້ລັດຖະບານພິຈາລະນາ ໂດຍສອດຄ່ອງຕາມກົດໝາຍທີ່ນຳໃຊ້ຂອງ ສປປ ລາວ.

## ມາດຕາ 11 ພັນທະດ້ານອາກອນ ແລະ ຄ່າທຳນຽມຕ່າງໆ

11.01 **<u>ເຂດທີ່ໄດ້ຮັບການສົ່ງເສີມສູງສຸດ.</u>** ໂຄງການ ແມ່ນໂຄງການໃນລະດັບ [1,2,3], ເຂດ [1,2,3 ] ພາຍໃຕ້ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ ແລະ ມີໄດ້ຮັບນະໂຍບາຍສົ່ງເສີມພາຍໃຕ້ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ລະບຽບການອື່ນໆທີ່ນຳໃຊ້.

**11.02 ພາສີ ແລະ ຄ່າທຳນຽມ**. ໂດຍສອດຄ່ອງຕາມສັນຍາສະບັບນີ້ ແລະ ກົດໝາຍຂອງ ສປປ ລາວ, ບໍລິສັດໂຄງການຕ້ອງຈ່າຍ ຄ່າທຳນຽມ ແລ ອາກອນ ໃຫ້ລັດຖະບານເປັນການຕອບແທນຄືນຢ່າງເຕັມສ່ວນສຳລັບສິດສຳປະທານທີ່ມີຜົນສັກສິດໃນແຕ່ລະໄລຍະໃນຂອບເຂດທີ່ບໍ່ໄດ້ລະບຸໄວ້ຢູ່ໃນມາດຕາ 10, 11 ແລະ 12 ຂອງສັນຍາດັ່ງລຸ່ມນີ້:

(ກ) <u>ຄ່າເຊົ່າທີ່ດິນ</u>: ຄ່າເຊົ່າທີ່ດິນ ຈະຕ້ອງແມ່ນຄ່າເຊົ່າທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍທີ່ນຳໃຊ້ຂອງ ສປປ ລາວ ໃນເວລາປະຕິບັດສັນຍາເຊົ່າທີ່ດິນທີ່ກ່ຽວຂ້ອງ ແລະ ຈະຕ້ອງໄດ້ກຳນົດຄ່າເຊົ່ານັ້ນໄວ້ຢູ່ໃນສັນຍາດັ່ງກ່າວ. ເວັ້ນເສຍແຕ່ໄດ້ມີການກຳນົດໄວ້ເປັນຢ່າງອື່ນຢູ່ໃນສັນຍາເຊົ່າທີ່ດິນ, ຄ່າເຊົ່າທີ່ດິນທັງໝົດຈະຕ້ອງເພີ່ມຂຶ້ນໃນວັນຄົບຮອບປີທີ 5 ແລະ ຫຼັງຈາກນັ້ນໃນວັນຄົບຮອບທຸກໆຫ້າ (5) ປີ ຢ່າງໜ້ອຍ 10% ( ສິບເປີເຊັນ ) ຂອງອັດຕາທີ່ນຳໃຊ້ ຫຼື ລະດັບທີ່ກຳນົດໄວ້ຢູ່ໃນກົດໝາຍທີ່ກ່ຽວນຂ້ອງຂອງ ສປປ ລາວ ໃນວັນຄົບຮອບ ຫຼື ຫຼາຍກວ່ານັ້ນ [ເວັ້ນເສຍແຕ່ໄດ້ອະນຸຍາດໂດຍກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ, ອັດຕາເພີ່ມຂຶ້ນດັ່ງກ່າວໃນຕະຫຼອດໄລຍະ 5 ປີຖັດໄປໃດ ຈະຕ້ອງບໍ່ເກີນ (x)%].

(ຂ) <u>ອາກອນກຳໄລ</u>: ເມື່ອໂຄງການ ແມ່ນໂຄງການໃນລະດັບ[1, 2, 3], ເຂດ [1, 2, 3 ] ພາຍໃຕ້ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ, ໂຄງການຈະໄດ້ຖືກຍົກເວັ້ນຈາກອາກອນກຳໄລເປັນໄລຍະ [ສິບ (10), ຫົກ (6), ສີ່(4), ສອງ (2), ໜຶ່ງ (1)] ປີ ນັບແຕ່ວັນທີບໍລິສັດໂຄງການເລີ່ມດຳເນີນກິດຈະການເປັນຕົ້ນໄປ. ຫຼັງຈາກໄລຍະຍົກເວັ້ນອາກອນ, ບໍລິສັດໂຄງການຕ້ອງຈ່າຍອາກອນກຳໄລໃນອັດຕາຊາວສີ່ເປີເຊັນ (24% ), ຫຼື ຈຳນວນທີ່ສູງກ່ວາທີ່ໄດ້ກຳນົດໄວ້ໂດຍກົດໝສາຍທີ່ນຳໃຊ້ນຂອງ ສປປ ລາວ, ຊຶ່ງຈະຕ້ອງຄິດໄລ່ໂດຍສອດຄ່ອງຕາມຫຼັກການທີ່ກຳນົດໃນເອກະສານຊ້ອນທ້າຍ II (*ຫຼັກການຂອງການຄິດໄລ່ອາກອນກຳໄລ*)

(ຄ) <u>ອາກອນລາຍໄດ້ສ່ວນບຸກຄົນ</u>: ບໍລິສັດໂຄງການ ຕ້ອງຫັກອາກອນລາຍໄດ້ຂອງຜູ້ອອກແຮງງານທີ່ເປັນຄົນລາວ ແລະ ຕ່າງປະເທດໄວ້ ແລະ ມອບອາກອນດັ່ງກ່າວໃຫ້ກົມສ່ວຍສາອາກອນ, ກະຊວງການເງິນ ໂດຍສອດຄ່ອງກັບກົດໝາຍທີ່ນຳໃຊ້ຂອງ ສປປ ລາວ.

(ງ) <u>ພາສີນຳເຂົ້າ ແລະ ສົ່ງອອກ</u>: ບໍລິສັດໂຄງການຕ້ອງຊຳລະພາສີນຳເຂົ້າ ແລະ ສົ່ງອອກ ໂດຍສອດຄ່ອງຕາມມາດຕາ 10 ຂອງສັນຍາສະບັບນີ້ ແລະ ຕາມກົດໝາຍຂອງ ສປປ ລາວ. ເພື່ອຫຼີກລ້ຽງຄວາມສົງໃສ, ການຍົກເວັ້ນທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 10 ນີ້ ຈະບໍ່ລວມເອົາການຍົກເວັ້ນອາກອນມູນຄ່າເພີ່ມ.

(ຈ) <u>ອາກອນເງິນປັນຜົນ ແລະ ການຊຳລະດອກເບ້ຍ</u>: ບໍລິສັດໂຄງການຕ້ອງຈ່າຍອາກອນເງິນປັນຜົນ ແລະ ການຊຳລະດອກເບ້ຍ ໂດຍສອດຄ່ອງຕາມກົດໝາຍທີ່ນຳໃຊ້ຂອງ ສປປ ລາວ, ລວມທັງ, ແຕ່ບໍ່ຈຳກັດ, ກົດໝາຍວ່າດ້ວຍສວຍສາອາກອນ. ເພື່ອຈຸດປະສົງຂອງກົດໝາຍວ່າດ້ວຍສ່ວຍສາອາກອນ, ທຸກດອກເບ້ຍທີ່ໄດ້ຈ່າຍກ່ຽວກັບໜີ້ສິນ ທີ່ໃຫ້ການສະໜັບສະໜູນ ຫຼື ທີ່ໄດ້ສະໜອງໃຫ້ ໂດຍບຸກຄົນໃດໜຶ່ງທີ່ຮ່ວມກັບ ຫຼື ກ່ຽວກັບຜູ້ຖືຮຸ້ນທີ່ກ່ຽວຂ້ອງຈະຖືວ່າເປັນດອກເບ້ຍຊຳລະໃຫ້ຜູ້ຖືຮຸ້ນ.

(ສ) <u>ຄ່າທຳນຽມຕາມລະບຽບການ</u>: ນອກຈາກອາກອນ ແລະ ຄ່າທຳນຽມ ທີ່ໄດ້ລະບຸໄວ້ໃນມາດຕານີ້, ບໍລິສັດໂຄງການຕ້ອງໄດ້ຈ່າຍຄ່າທຳນຽມທີ່ນຳໃຊ້ໂດຍທົ່ວໄປພາຍໃຕ້ກົດໝາຍຂອງ ສປປ ລາວ ກ່ຽວກັບໃບອະນຸຍາດຂັບຂີ່, ການຈົດທະບຽນທະບຽນຂອງພາຫານະ, ການຈົດທະບຽນວິສາຫະກິດ, ໃບອະນຸຍາດເຮັດວຽກ ແລະ ພັກຢູ່ອາໄສ, ການຮັບຮອງ

ເອົາເຄື່ອງໝາຍຂອງບໍລິສັດ, ແລະ ການອະນຸຍາດອື່ນໆທີ່ຄ້າຍຄືກັນ ພາຍໃຕ້ກົດໝາຍຂອງ ສປປ ລາວ, ເຊັ່ນດຽວກັນກັບຄ່າທຳນຽມ ແລະ ຄ່າໃຊ້ຈ່າຍຖືກຮ້ອງຂໍໂດຍລັດຖະບານແຕ່ລະໄລຍະໂດຍລັດຖະບານ ສຳລັບການກວດກາໂຄງການຕາມທີ່ໄດ້ລະບຸໄວ້ຢູ່ໃນເອກະສານຊ້ອນທ້າຍ IV *(ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມແບບຄົບວົງຈອນ)*.

**11.03** <u>ຄ່າປັບໃໝສຳລັບການຈ່າຍຊ້າ ຫຼື ການຈ່າຍຕ່ຳກວ່າທີ່ຄວນຈ່າຍ</u>: ໃນກໍລະນີມີການຊັກຊ້າໃນການຈ່າຍຄ່າທຳນຽມ ຫຼື ອາກອນຕາມທີ່ໄດ້ລະບຸໄວ້ໃນຂໍ້ 10.02 ( ກ ) – ( ງ ) ຂ້າງເທິງນີ້, ບໍລິສັດໂຄງການ ຕ້ອງຖືກປັບໃໝ ( 2% ) ຂອງຄ່າທຳນຽມປະຈຳປີ, ສຳລັບແຕ່ລະເດືອນທີ່ໄດ້ຈ່າຍຊ້າ. ໃນກໍລະນີທີ່ບໍລິສັດໂຄງການໄດ້ຈ່າຍອາກອນບໍ່ຄົບຕາມຈຳນວນທີ່ກຳນົດໃນສັນຍາ., ລັດຖະບານ ຕ້ອງປະເມີນດອກເບ້ຍ ແລະ ການປັບໃໝກ່ຽວກັບຄ່າທຳນຽມ ແລະ ດອກເບ້ຍທີ່ຈ່າຍບໍ່ຄົບຕາມຈຳນວນພາຍໃຕ້ເງື່ອນໄຂຂອງກົດໝາຍຂອງ ສປປ ລາວ. ຖ້າບໍລິສັດໂຄງການໄດ້ຈ່າຍຄ່າທຳນຽມ ຫຼື ອາກອນເກີນ, ບໍລິສັດມີສິດໄດ້ຮັບການໃຊ້ຄືນ ຫຼື ຄິດໄລ່ເປັນສິນເຊື່ອສຳລັບຈ່າຍອາກອນ ຫຼື ຫຼັງຈາກນັ້ນຈ່າຍໃຫ້ລັດຖະບານໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ.

**11.04** <u>ການກວດສອບບັນຊີ ແລະ ການດັດແກ້ບັນຊີ</u>: ນອກຈາກສິດອຳນາດອື່ນໆ ພາຍໃຕ້ກົດໝາຍຂອງ ສປປ ລາວ, ລັດຖະບານມີສິດກວດສອບການສົ່ງອາກອນຄືນຂອງບໍລິສັດໂຄງການແຕ່ລະຄັ້ງ ແລະ ທຸກໆອາກອນໃນໄລຍະສາມ ( 3 ) ປີນັບແຕ່ວັນຍື່ນເອກະສານເປັນຕົ້ນໄປ ແລະ ເຮັດການດັດທີ່ຈຳເປັນຢ່າງສົມເຫດສົມຜົນ ເພື່ອສະທ້ອນໃຫ້ເຫັນລາຍໄດ້ ຫຼື ໜີ້ສິນດ້ານອາກອນຂອງບໍລິສັດໂຄງການ. ບໍລິສັດໂຄງການ ຕ້ອງມີຂໍ້ມູນທີ່ຈຳເປັນໄວ້ໃຫ້ລັດຖະບານ ເພື່ອດຳເນີນການກວດສອບບັນຊີດັ່ງກ່າວ, ລວມທັງ ຂໍ້ມູນຊຶ່ງອາດຈະມີໄວ້ໂດຍບໍລິສັດເຄືອຂ່າຍ ຫຼື ບຸກຄົນກ່ຽວຂ້ອງທີ່ຢູ່ນອກ ສປປ ລາວ.

## ມາດຕາ 12 ການບັນຊີ, ບັນຊີທະນາຄານ, ການແລກປ່ຽນເງິນຕາຕ່າງປະເທດ ແລະ ການກວດສອບບັນຊີ

**12.01** <u>ການປະຕິບັດກ່ຽວກັບທຶນ.</u>

(ກ) ບໍລິສັດຂອງໂຄງການຈະຕ້ອງນຳເງິນທຶນທັງໝົດ ແລະ ທຶນຈົດທະບຽນທັງໝົດຊຶ່ງເປັນເງິນສົດ (ລວມທັງ ເງິນກູ້ຂອງບໍລິສັດໂຄງການ) ມາຝາກຢູ່ໃນບັນຊີຂອງທະນາຄານການຄ້າທີ່ສ້າງຕັ້ງ ຫຼືຈົດທະບຽນໃນສປປລາວ. ໃນການນຳໃຊ້ທຶນດັ່ງກ່າວ, ເວລາໃດກຕາມ, ບໍລິສັດໂຄງການຕ້ອງປະຕິບັດຕາມກົດໝາຍຂອງສປປ ລາວ.

(ຂ) ພາຍໃຕ້ກົດໝາຍຂອງ ສປປ ລາວ ແລະ ການອະນຸຍາດທີ່ຈຳເປັນພາຍໃຕ້ກົດໝາຍທີ່ນຳໃຊ້ຂອງ ສປປ ລາວ, ບໍລິສັດໂຄງການມີສິດສ້າງຕັ້ງ ແລະ ເປີດບັນຊີທະນາຄານຢູ່ຕ່າງປະເທດ ແລະ ໄດ້ຮັບ, ຖື ແລະ ຈ່າຍ ແລະ ຈຳໜ່າຍເງິນຕາຕ່າງປະເທດຢູ່ອອກນອກ ສປປ ລາວ, ໂດຍມີເງື່ອນໄຂວ່າບໍລິສັດໂຄງການ ຈະຕ້ອງລາຍງານທຸລະກຳຂອງບັນຊີທະນາຄານຢູ່ຕ່າງປະເທດໃຫ້ທະນາຄານແຫ່ງ ສປປ ລາວຊາບ ໂດຍສອດຄ່ອງຕາມລະບຽບຫຼັກການທີ່ທະນາຄານແຫ່ງ ສປປ ລາວກຳນົດອອກ ແຕ່ລະໄລຍະ.

**12.02** <u>ມາດຕະຖານການບັນຊີ</u>: ບໍລິສັດໂຄງການຕ້ອງເກັບຮັກສາປຶ້ມບັນຊີໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ ວ່າດ້ວຍມາດຕະຖານ ແລະ ການບັນຊີ. ນອກຈາກນັ້ນ ແລະ ໂດຍຂຶ້ນກັບການເຫັນດີຂອງ ກະຊວງການເງິນ, ບໍລິສັດໂຄງການ ຕ້ອງຮັກສາປຶ້ມບັນຊີທີ່ສອດຄ່ອງກັບມາດຕະຖານການລາຍງານການເງິນສາກົນ ທີ່ໄດ້ຖືກຮັບຮອງເອົາໂດຍສະພາບໍລິຫານມາດຕະຖານການບັນຊີສາກົນ, ແຕ່ເຖິງຢ່າງໃດກໍຕາມ ໂດຍມີເງື່ອນໄຂວ່າຈະບໍ່ມີຄວາມແຕກຕ່າງລະຫວ່າງສອງປຶ້ມບັນຊີດັ່ງກ່າວ ແລະ ທັງສອງປຶ້ມບັນຊີແມ່ນມີໄວ້ສໍາລັບການກວດສອບໂດຍສອດຄ່ອງຕາມມາດຕາ 12.06 ລຸ່ມນີ້. ບໍລິສັດໂຄງການຕ້ອງຮັກສາບັນທຶກກ່ຽວກັບການປະຕິບັດວຽກງານ ແລະ ທຸລະກິດຢູ່ໃນ ສປປ ລາວ ໄວ້ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ປັບປຸງໃຫ້ທັນສະພາບ ຕະຫຼອດເວລາ ແລະ ອະນຸຍາດໃຫ້ລັດຖະບານ ແລະ ຜູ້ກວດສອບບັນຊີທີ່ຖືກແຕ່ງຕັ້ງໂດຍລັດຖະບານກວດສອບປຶ້ມບັນຊີ ແລະ ບັນທຶກດັ່ງກ່າວເມື່ອຖືກຮຽກຮ້ອງໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ.

**12.03** <u>ການສົ່ງເງິນກັບຄືນປະເທດທີ່ອະນຸຍາດ</u>: ໂດຍຂຶ້ນກັບການຈ່າຍອາກອນ ແລະ ເງິນເດືອນພະນັກງານຕາມກົດໝາຍຂອງ ສປປ ລາວ, ບໍລິສັດໂຄງການມີສິດສົ່ງເອອກໄປນອກ ສປປ ລາວ ໃນຕະຫຼອໄລຍະສໍາປະທານ (ກ) ເງິນປັນຜົນ ແລະ ການການແບ່ງປັນອື່ນໆທີ່ໄດ້ຮັບອະນຸຍາດໃນບໍລິສັດໂຄງການໄປໃຫ້ບໍລິສັດແມ່, ແລະ (ຂ) ການຊໍາລະຄືນຕົ້ນທຶນທີ່ຄ້າງຊໍາລະ ແລະ ການຊໍາລະດອກເບ້ຍ ແລະ ຄ່າທໍານຽມ ຫຼື ຄ່າດໍາເນີນງານທີ່ຕ້ອງຈ່າຍກ່າວກັບເງິນກູ້ ຫຼື ສິນເຊື່ອທຸກປະເພດທີ່ສະໜອງໃຫ້ໂດຍຜູ້ໃຫ້ກູ້.

**1204. ເງິນຕາຕ່າງປະເທດ**

ກ.) ໂດຍຢູ່ພາຍໃຕ້ອີງຕາມກົດໝາຍຂອງ ສປປ ລາວ ແລະ ການອະນຸຍາດທີ່ຈໍາເປັນພາຍໃຕ້ກົດໝາຍທີ່ນໍາໃຊ້ຂອງ ສປປ ລາວ, ບໍລິສັດໂຄງການມີສິດ ແລະ ອໍານາດຕະຫຼອດໄລຍະສໍາປະທານທີ່ຈະໄດ້ຮັບລາຍຮັບ, ຖືເງິນສົດ ແລະ ຊັບສິນທາງການເງິນ, ແລະ ດໍາເນີນການຊໍາລະ ແລະ ຈໍາໜ່າຍເງິນຕາຕ່າງປະເທດທັງຢູ່ພາຍໃນ ແລະ ນອກ ສປປ ລາວ.

(ຂ) ບໍລິສັດຂອງໂຄງການສາມາດຊື້ ແລະ ຂາຍເງິນຕາຕ່າງປະເທດທີ່ຈໍາເປັນສໍາລັບນໍາໃຊ້ເຂົ້າໃນໂຄງ ໂດຍສອດຄ່ອງຕາມອັດຕາແລກປ່ຽນເງິນຕາຕ່າງປະເທດໂດຍທົ່ວໄປຈາກ ຫຼື ໃຫ້ຍທະນາຄານການຄ້າທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນທຸລະກິດ ໂດຍສອດຄ່ອງຂອງ ສປປ ລາວ.

(ຄ) ອັດຕາແລກປ່ຽນເງິນຕາຕ່າງປະເທດໄປເປັນເງິນກີບລາວ ຈະຕ້ອງປະຕິບັດໂດຍຜ່ານລະບົບທະນາຄານແຫ່ງ ສປປ ລາວ ໂດຍສອດຄ່ອງຕາມອັດຕາແລກປ່ຽນໃນວັນທີຊື້ຂາຍຕົວຈິງຕາມອັດຕາແລກປ່ຽນທາງການຂອງທະນາຄານການຄ້າທີ່ກ່ຽວຂ້ອງ.

**12.05** **<u>ການກວດສອບບັນຊີ</u>**

(ກ) ບໍລິສັດໂຄງການຕ້ອງກຽມປຶ້ມບັນຊີໂດຍນໍາໃຊ້ການໃຊ້ຈ່າຍຂອງຕົນເອເງິນເພື່ອໃຫ້ຖືກກວດສອບພາຍໃນ ສາມ ( 3 )ເດືອນ, ຫຼື ໄລຍະເວລາທີ່ຍາວກວ່ານັ້ນຕາມການເຫັນດີຂອງກະຊວງການເງິນ ພາຍຫຼັງການປິດປີການເງິນແຕ່ລະປີ ໂດຍບໍລິສັດກວດສອບເອກະລາດທີ່ຈົດທະບຽນໃນ ສປປ ລາວ ຊຶ່ງນໍາໃຊ້ມາດຕະຖານນຂອງການລາຍງານການເງິນສາກົນ ທີ່ໄດ້ຮັບຮອງເອົາສະພາມາດຕະຖານການບັນຊີສາກົນ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍການກວດສອບບັນຊີ.

(ຂ) ສຳເນົາປຶດສະຫຼຸບການເງິນປະຈຳປີທີ່ໄດ້ຖືກຢັ້ງຢືນຈາກນັກກວດສອບບັນຊີເອກະລາດ ແລະ ທຸກໜັງສືກ່ຽວກັບການຄຸ້ມຄອງ ຫຼື ການຕິດຕໍ່ພົວພັນທີ່ຄ້າຍຄືກັນ ຕ້ອງສົ່ງໄດ້ໃຫ້ລັດຖະບານໂດຍບໍລິສັດໂຄງການພາຍໃນໄລຍະເວລາທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍຂອງ ສປປ ລາວ ຫຼັງຈາກທີ່ບໍລິສັດໂຄງການໄດ້ຮັບແລ້ວ.

(ຄ) ລັດຖະບານມີສິດກວດສອບປຶ້ມບັນຊີດັ່ງກ່າວຕາມທີ່ໄດ້ກຳນົດໄວ້ພາຍໃຕ້ກົດໝາຍຂອງ ສປປ ລາວ, ລວມທັງໂດຍການແຕ່ງຕັ້ງຜູ້ກວດສອບບັນຊີເອກະລາດຈາກພາຍນອກ, *ແຕ່ເຖິງຢ່າງໃດກໍຕາມ ໂດຍມີເງື່ອນໄຂວ່າ* ລັດຖະບານໄດ້ສົ່ງສຳເນົາການກວດສອບນັ້ນໃຫ້ບໍລິສັດໂຄງການ ພາຍໃນສີ່ສິບຫ້າ ( 45 ) ວັນ ຫຼັງຈາກໄດ້ຮັບ.

(ງ) ເມື່ອປຶ້ມບັນຊີຂອງບໍລິສັດໂຄງການໄດ້ຜ່ານການກວດສອບແລ້ວ ແລະ ການກວດສອບບັນຊີນັ້ນໄດ້ຮັບການເຫັນດີຈາກຄູ່ຮ່ວມສັນຍາ, ປຶດສະຫຼຸບການເງິນທີ່ຜ່ານການກວດສອບແລ້ວນັ້ນຈະຖືວ່າເປັນທີ່ຍອມຮັບ ແລະ ຜົນການກວດສອບມີຜົນຜູກມັດ ແລະ ເປັນການສະຫຼຸບຜົນ, ເວັ້ນເສຍແຕ່ຄູ່ສັນນຍາຝ່າຍໃດຝ່າຍໜຶ່ງໄດ້ຊີ້ບອກເປັນທາງດ້ານກົງກັນຂ້າມ ພາຍໃນສາມ (3) ປີພາຍຫຼັງໄດ້ຮັບປຶດສະຫຼຸບດັ່ງກ່າວ, ຍົກເວັ້ນໃນກໍລະນີສໍ້ໂກງ ຫຼືການສະເໜຄວາມບໍ່ເປັນຈິງໂດຍເຈດຕະນາຂອງບໍລິສັດໂຄງການ.

## ມາດຕາ 13 ປຶດບັນທຶກ, ປຶດລາຍງານ ແລະ ການກວດກາ

**13.01** **<u>ການເກັບຮັກສາບັນທຶກ.</u>** ໂດຍອີງຕາມນະໂຍບາຍກ່ຽວກັບມາດຕະຖານການເກັບຮັກສາປຶດບັນທຶກຂອງຕົນ ແລະ ອື່ນໆຕາມປຶດບັນຍັດຂອງກົດໝາຍນຂອງສປປ ລາວ, ບໍລິສັດໂຄງການຕ້ອງເກັບຮັກສາປຶດບັນທຶກ ແລະ ປຶດລາຍງານຕໍ່ໄປລຸ່ມນີ້ ໄວ້ຢູ່ສຳນັກງານໃຫຍ່ຂອງຕົນທີ່ຢູ່ໃນ ສປປ ລາວ ຫຼື ຢູ່ຫ້ອງການບ່ອນອື່ນໆໂດຍແຈ້ງການໃຫ້ລັດຖະບານຊາບລ່ວງໜ້າກ່ອນ:

(ກ) ປຶດບັນທຶກຕົ້ນສະບັບທາງດ້ານວິທະຍາສາດ, ກະສິກຳ, ການດຳເນີນງານ, ເຕັກນິກ, ອຸດສາຫະກຳ ແລະ ການຄ້າ, ປຶດສຶກສາຄົ້ນຄວ້າ ແລະ ປຶດລາຍງານ ທີ່ບໍລິສັດໂຄງການໄດ້ຮັບ ຫຼື ໄດ້ສັງລວມກ່ຽວກັບການດຳເນີນງານຂອງຕົນພາຍໃຕ້ສັນຍາສະບັບນີ້ (ພ້ອມທັງຂໍ້ມູນພື້ນຖານທີ່ກ່ຽວຂ້ອງ); ແລະ

(ຂ) ປຶດບັນທຶກທາງການເງິນທີ່ຄົບຖ້ວນ, ຊັດເຈນ ແລະ ຢ່າງເປັນລະບົບນຂອງການເຮັດທຸລະກຳຂອງຕົນ ແລະທົ່ວໂລກທີ່ກ່ຽວກັບການດຳເນີນງານນຂອງຕົນພາຍໃຕ້ສັນຍາສະບັບນີ້, ລວມທັງ ການຂາຍຜະລິດຕະພັນໃຫ້ແກ່ລູກຄ້າຂອງບໍລິສັດໂຄງການ ຫຼື ການຂາຍຜະລິດຕະພັນໂດຍບໍລິສັດເຄືອຂ່າຍ ຊຶ່ງການຂາຍດັ່ງກ່າວຖືກນຳໃຊ້ເພື່ອຄິດໄລ່ລາຍການໃດໜຶ່ງຂອງລາຍໄດ້, ການຫັກລົບ ຫຼື ຈຳນວນເງິນອື່ນທີ່ກະທົບຕໍ່ຄວາມຮັບຜິດຊອບ

ຂອງບໍລິສັດໂຄງການ, ແລະ ປື້ມບັນຊີຫຼື ບັນທຶກທາງດ້ານການເງິນອື່ນໆກ່ຽວກັບການດໍາເນີນງານຕາມທີ່ຖືກຮຽກຮ້ອງໂດຍກົດໝາຍຂອງ ສປປ ລາວ.

**13.02** __**ບົດລາຍງານ.**__ ບໍລິສັດໂຄງການຕ້ອງສົ່ງບົດລາຍງານໃຫ້ຫ້ອງການບໍລິການປະຕູດຽວ ແລະ ອົງການທີ່ກ່ຽວຂ້ອງຂອງລັດຖະບານໃນແບບຟອມ, ທັງເປັນແບບເອກະສານ ແລະ ແບບອີເລັກໂຕຣນິກ, ລາຍລະອຽດ ແລະ ເວລາທີ່ລັດຖະບານຮຽກຮ້ອງຢ່າງສົມເຫດສົມຜົນ, ລວມທັງ ແຕ່ບໍ່ຈໍາກັດ ບົດລາຍງານປະຈໍາປີກ່ຽວກັບຄວາມຄືບໜ້າ ແລະ ບົດລາຍງານອື່ນໆຕາມທີ່ໄດ້ກໍານົດໄວ້ຢູ່ໃນເອກະສານຊ້ອນທ້າຍ III (*ຕາຕະລາງການລາຍງານຂອງໂຄງການ*) ທີ່ຄັດຕິດມານໍາ ຫຼື ຕາມການຕົກລົງຂອງຄູ່ຮ່ວມສັນຍາໃນແຕ່ລະໄລຍະ.

**13.03** __**ການກວດສອບ**__. ລັດຖະບານໂດຍຜູ້ຕາງໜ້າຂອງຕົນທີ່ໄດ້ຮັບອະນຸຍາດ ແລະ ໃນເວລາໃດໜຶ່ງທີ່ສົມເຫດສົມຜົນເມື່ອມີໄດ້ມີການແຈ້ງໃຫ້ຊາບກ່ອນຢ່າງໜ້ອຍຊາວສີ່ (24) ຊົ່ວໂມງ ສາມາດກວດກາບົດບັນທຶກຂອງບໍລິສັດໂຄງການ ຕາມທີ່ກໍານົດໄວ້ມາດຢູ່ໃນມາດຕາ 13 ແລະ ໃນຂອບເຂດທີ່ໂຄງການບໍ່ຖືກລົບກວນຢ່າງສົມເຫດສົມຜົນ. ບໍລິສັດໂຄງການຕ້ອງມີການກະກຽມຢ່າງມີເຫດຜົນເພື່ອອໍານວຍຄວາມສະດວກໃຫ້ແກ່ການກວດສອບດັ່ງກ່າວ ແລະ ຕ້ອງແຕ່ງຕັ້ງພະນັກງານຂອງຕົນທີ່ເໝາະສົມເພື່ອຊ່ວຍໃນການກວດສອບ. ໃນການກວດສອບໃດໜຶ່ງ, ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດຂອງລັດຖະບານ ໃນຕະຫຼອດໄລຍະເວລາຂອງຊົ່ວໂມງຂອງການດໍາເນີນທຸລະກິດຕາມປົກກະຕິທຸກວັນ ມີສິດເຂົ້າໄປຢ້ຽມຢາມ ແລະ ກວດກາສະໜາມວຽກງານທຸກບ່ອນ, ໂຮງຈັກ, ສິ່ງອໍານວຍຄວາມສະດວກ, ສາງ ແລະ ຫ້ອງການຂອງບໍລິສັດທີ່ປະຕິບັດວຽກງານຂອງບໍລັດໂຄງການໂດຍກົງ ຫຼື ໂດຍທາງອ້ອມພາຍໃຕ້ສັນຍາສະບັບນີ້ ແລະ ມີສິດໄປຢ້ຽມຢາມ ແລະ ສອບຖາມພະນັກງານທີ່ພົວພັນກັບວຽກງານດັ່ງກ່າວໂດຍສອດຄ່ອງຕາມກົດໝາຍທີ່ນໍາໃຊ້ຂອງ ສປປ ລາວ.

## ມາດຕາ 14 ການວ່າຈ້າງງານ ແລະ ການຝຶກອົບຮົມແຮງງານ

**14.01** __**ບູລິມະສິດສໍາລັບຜູ້ອອກແຮງງານທ້ອງຖິ່ນ**__

(ກ) ບູລິມະສິດໃນການບັນຈຸເຂົ້າວຽກ, ໂອກາດການຝຶກອົບຮົມ ແລະ ການສົ່ງເສີມ ຕ້ອງໃຫ້ແກ່ຄົນລາວທີ່ຢູ່ໃນທ້ອງຖິ່ນ, ຍົກເວັ້ນແຕ່ໃນກໍລະນີທີ່ບໍ່ມີຜູ້ສະໝັກເຂົ້າເຮັດວຽກ.

(ຂ) ພາຍໃຕ້ວັກ (ກ) ແລະ (ຂ), ບໍລິສັດໂຄງການສາມາດນໍາໃຊ້ຜູ້ອອກແຮງງານ ແລະ ຊ່ຽວຊານຕ່າງປະເທດເຂົ້າໃນການດໍາເນີນງານ ແລະ ໂຮງງານປຸງແຕ່ງຂອງໂຄງການ, ພາຍໃຕ້ຂໍ້ຈໍາກັດທີ່ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍແຮງງານ. ໃນກໍລະນີທີ່ບໍລິສັດໂຄງການເຫັນວ່າມີຄວາມຈໍາເປັນຕ້ອງນໍາເຂົ້າຜູ້ອອກແຮງງານ ແລ/ະຫຼື ຊ່ຽວຊານ ຕ່າງປະເທດ ເກີນຂໍ້ຈໍາກັດທີ່ກໍານົດຢູ່ໃນໃນກົດໝາຍວ່າດ້ວຍແຮງງານ, ບໍລິສັດຕ້ອງເຮັດຄໍາຮ້ອງຂໍຍື່ນຕໍ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມເພື່ອທົບທວນຄືນ ແລະ ຮັບຮອງເອົາ.

**14.02** __**ການປະຕິບັດຕາມກົດໝາຍວ່າດ້ວຍແຮງງານ**__. ບໍລິສັດໂຄງການຕ້ອງປະຕິບັດຢ່າງເຂັ້ມງວດຕາມກົດໝາຍວ່າດ້ວຍແຮງງານ, ໂດຍສະເພາະ ຂໍ້ກໍານົດຂອງກົດໝາຍແຮງງານກ່ຽວກັບການວ່າຈ້າງງານ, ການພັກງານ ແລະ ການປົດປ່ອຍອອກຜູ້ອອກແຮງງານຈາກວຽກງານໃນການດໍາເນີນໂຄງການ ແລະ ໂຮງງານປຸງແຕ່ງ.

**14.03** **<u>ເງື່ອນໄຂຂອງພະນັກງານຄົນລາວສຳລັການຄຸ້ມຄອງບໍລິຫານ.</u>** ບໍລິສັດໂຄງການຕ້ອງຊອກຫາພະນັກງານຄົນລາວທີ່ມີຄຸນວຸດທິສຳລັບຕຳແໜ່ງງານໃນການບໍລິຫານ ແລະ ຮັບຜິດຊອບການດຳເນີນໂຄງການ ແລະ ຕ້ອງໃຫ້ບຸລິມະສິດສຳລັບການວ່າຈ້າງງານຢູ່ໃນລະດັບການເງິນ, ການບັນຊີ, ວິຊາການ, ບໍລິຫານ, ກວດກາ ແລະ ຕຳແໜ່ງຄຸ້ມຄອງອາວຸໂສ, ແລະ ຕຳແໜ່ງງານອື່ນໆທີ່ນຳໃຊ້ທັກສະ, ແກ່ຄົນລາວທີ່ມີຄຸນວຸດທິ ເມື່ອເຂົາເຈົ້າມີໂອກາດ, ຊຶ່ງເປັນຈຸປະສົງຂອງຄູ່ສັນຍາໄວເທົ່າທີ່ຈະປະຕິບັດໄດ້ວ່າການດຳເນີນງານ ແລະ ກິດລາວຈະກຳຂອງໂຄງການບໍລິສັດພາຍໃຕ້ສັນຍານີ້ຄວນໄດ້ຮັບການຈັດຕັ້ງ ແລະ ຄຸ້ມຄອງໃນເບື້ອງຕົ້ນໂດຍພົນລະເມືອງລາວ. ໂດຍຂຶ້ນກັບວ່າມີຜູ້ສະໝັກງານທີ່ມີຄຸນວຸດທິ ແລະ ກົດໝາຍທີ່ກ່ຽວຂ້ອງຂອງ ສປປ, ຢ່າງໜ້ອຍທີ່ສຸດ ບໍລິສັດຕ້ອງຮັບປະກັນໃຫ້ມີພົນລະເມືອງ ຫຼື ຜູ້ອາໃສຢູ່ໃນປະເທດເຈົ້າພາບດຳລົງຕຳແໜງ [x] ເປີເຊັນຂອງຄະນະບໍລິຫານອາວຸໂສ, ຕຳແໜງມືອາຊີບ ແລະ ມີທັກສະສູງພາຍໃນ [x] ປີໃນວັນທີ່ສັນຍາມີຜົນສັກສິດ ແລະ ຢ່າງໜ້ອຍ [x] ເປີເຊັນຂອງຕຳແໜງດັ່ງກ່າວພາຍໃນ [x] ປີໃນວັນທີ່ສັນຍາມີຜົນສັກສິດ.

**14.04** **<u>ການຝຶກອົບຮົມ</u>**. ເພື່ອບັນລຸຕາມຈຸດປະສົງທີ່ກ່າວໄວ້ຢູ່ໃນຂໍ້ 14.03, ບໍລິສັດໂຄງການຕ້ອງຈັດຝຶກອົບຮົມໃຫ້ພົນລະເມືອງລາວເພື່ອໃຫ້ເຂົາເຈົ້າໄດ້ມີຄຸນວຸດທິສຳລັບຕຳແໜ່ງທີ່ກຳນົດໃນມາດຕານີ້ ແລະ ຕາມທີ່ການດຳເນີນວຽກງານຮຽກຮ້ອງຕ້ອງການພາຍໃຕ້ສັນຍານີ້, ບໍລິສັດໂຄງການຕ້ອງຈັດການຝຶກອົບຮົມກັບທີ່, ນຳໃຊ້ສິ່ງອຳນວຍຄວາມສະດວກໃນການຝຶກວິຊາຊີບຢູ່ໃນ ສປປ ລາວ, ແລະ ດຳເນີນມາດຕະການອື່ນໆທີ່ຈຳເປັນ ແລະ ຢ່າງສົມເຫດສົມຜົນ ເພື່ອບັນລຸເປົ້າໝາຍທີ່ກຳນົດໃນຂໍ້ 14.03 (ລວມທັງ ໂດຍຂຶ້ນກັບຄວາມຕ້ອງການໃນການດຳເນີນງານ ແລະ ເງື່ອນໄຂທາງເສດຖະກິດ, ທຶນການສຶກສາສຳລັບພະນັກງານລາວທີ່ມີຄຸນວຸດທິໄປສຶກສາຕໍ່ຢູ່ຕ່າງປະເທດ). ບໍລິສັດໂຄງການຕ້ອງສ້າງແຜນການຝຶກອົບຮົມ (ການຝຶກອົບຮົມ ແລະ ການສຶກສາ) ສຳລັບຜູ້ອອກແຮງງານລາວ, ເພື່ອຕອບສະໜອງເງື່ອນໄຂຂອງວຽກງານໃນລະດັບຕ່າງໆຂອງການວ່າຈ້າງງານເຕັມເວລາ.

**14.05** **<u>ວີຊ່າສຳລັບຜູ້ອອກແຮງງານຕ່າງປະເທດ.</u>** ບໍລິສັດໂຄງການຕ້ອງສະເໜີຄຳຮ້ອງຕໍ່ຫ້ອງການບໍລິການປະຕູດຽວ ເພື່ອຂໍວີຊ່າ, ໃບອະນຸຍາດເຮັດວຽກ ແລະ ບັດປະຈຳຕົວທີ່ຈຳເປັນສຳລັບຜູ້ອອກແຮງງານຕ່າງປະເທດຂອງໂຄງການ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍແຮງງານ ແລະ ສັນຍາສະບັບນີ້. ທຸກຄຳຮ້ອງຂໍຈາກບໍລິສັດໂຄງການ ຕ້ອງລວມເອົາຄ່າທຳນຽມ ແລະ ແບບຟອມທີ່ກ່ຽວຂ້ອງ ຊຶ່ງຂຽນຂໍ້ມູນເຂົ້າຢ່າງຄົບຖ້ວນ ແລະ ຂໍ້ມູນອື່ນໆທີ່ຮຽກຮ້ອງໂດຍອີງການວ່າຈ້າງງານ ແລະ ກວດຄົນເຂົ້າເມືອງນຂອງ ສປປ ລາວ.

**14.06** **<u>ເງິນເດືອນ ແລະ ຄ່າຕອບແທນ</u>**. ບໍລິສັດໂຄງການຕ້ອງໃຫ້ເງິນເດືອນ ແລະ ຄ່າຕອບແທນ ແກ່ຜູ້ອອກແຮງງານຂອງຕົນໂດຍສອດຄອ່ງຕາມກົດໝາຍແຮງງານຂອງ ສປປ ລາວ ແລະ ແຈ້ງການນຂອງກະຊວງແຮງງານ ແລ ະສະຫວັດດີການສັງຄົມກ່ຽວກັບເງິນເດືອນຕ່ຳສຸດທີ່ປະກາດໃຊ້ແຕ່ລະໄລຍະ.

ກະຊວງແຮງງານ ຕ້ອງຮັບປະກັນບໍ່ໃຫ້ມີການເລືອກປະຕິບັດກ່ຽວກັບເງິນເດືອນສຳລັບຜູ້ອອກແຮງງານຕ່າງປະເທດ ແລະ ຜູ້ອອກແຮງງານລາວໃນວຽກງານທີ່ຄ້າຍຄືກັນ, ແລະ ບໍ່ໃຫ້ມີການເລືອກປະຕິບັດລະຫວ່າງຜູ້ຊາຍ ແລະ ຜູ້ຍິງ.

**14.07** **<u>ປະກັນສັງຄົມ.</u>** ບໍລິສັດໂຄງການຕ້ອງຈົດທະບຽນນຳຫ້ອງການປະກັນສັງຄົມ ແລະ ປະກອບສ່ວນເຂົ້າໃນປະກັນສັງຄົມໃຫ້ຫ້ອງການປະກັນສັງຄົມຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນນາມຂອງຜູ້ອອກແຮງງານລາວທຸກຄົນ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍແຮງງານ ແລະ ລະບຽບການທີ່ກ່ຽວຂ້ອງ.

**14.08** **<u>ການລາຍງານ.</u>** ບໍລິສັດໂຄງການ ຕ້ອງສະໜອງຂໍ້ມູນກ່ຽວກັບຄວາມຄືບໜ້າຂອງການປະຕິບັດວຽກງານພາຍໃຕ້ມາດຕານີ້ໂດຍມີລາຍລະອຽດທີ່ສົມເຫດສົມຜົນຕາມທີ່ລັດຖະບານກຳນົດອອກ, ລວມທັງ ການກຳນົດອັດຕາສ່ວນຂອງກຳລັງແຮງງານຕາມຂັ້ນ, ເງິນເດືອນ, ການຈ່າຍເງິນເດືອນທັງໝົດສຳລັບຜູ້ອອກແຮງງານລາວ ແລະ ການຝຶກອົບຮົມໄວ້ໃນບົດລາຍງານປະຈຳປີກ່ຽວຄວາມຄືບໜ້າ ສົ່ງໃຫ້ຫ້ອງການບໍລິການປະຕູດຽວ ແລະ ບົດລາຍງານອື່ນໆທີ່ກ່ຽວຂ້ອງຕາມທີ່ໄດ້ກຳນົດຢູ່ໃນເອກະສານຊ້ອນທ້າຍ III (*ຕາຕະລາງການລາຍງານຂອງໂຄງການ*).

## ມາດຕາ 15

## ການປ້ອງກັນ, ຄວາມປອດໄພທາງດ້ານສຸຂະພາບ ແລະ ວິຊາຊີບ

**15.01** **<u>ມາດຕະຖານແຮງງານ.</u>**

(ກ) ບໍລິສັດໂຄງການຕ້ອງປະຕິບັດຕາມບົດບັນຍັດຂອງກົດໝາຍແຮງງານທີ່ນຳໃຊ້ຂອງ ສປປ ລາວ.

(ຂ) ບໍລິສດໂຄງການ, ບໍລິສັດເຄືອຂ່າຍ, ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ນຊ່ວງ ຕ້ອງປະຕິບັດຕາມມາດຕະຖານແຮງງານທີ່ຮັບຮູ້ໂດຍສາກົນ ກ່ຽວກັບທຸກສັນຍານຂອງອົງການຈັດຕັ້ງແຮງງານສາກົນ ຫຼື ສັນຍາສາກົນອື່ນໆ ຊຶ່ງລັດເປັນພາຄີ ຫຼື ຈະເປັນພາຄີ ແລະ ຕ້ອງເຄົາລົບສິດຂອງຜູ້ອອກແຮງງານຂອງຕົນໃນການຈັດຕັ້ງ.

(ຄ) ບໍລິສດໂຄງການ, ບໍລິສັດເຄືອຂ່າຍ, ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ນຊ່ວງ ຈະຕ້ອງບໍ່ນຳໃຊ້ແຮງງານແບບບັງຄັບ ແລະ ບໍລິສດໂຄງການ, ບໍລິສັດເຄືອຂ່າຍ, ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ນຊ່ວງ ບໍ່ນຳໃຊ້ແຮງງານເດັກ ຕາມທີ່ໄດ້ກຳນົດໄວ້ຢູ່ໃນບົດລາຍງານຂອງອົງການການເງິນສາກົນ ປີ 1998 ວ່າດ້ວຍແຮງງານບັງຄັບ ແລະ ແຮງງານເດັກທີ່ເປັນອັນຕະລາຍ.

(ງ) ບໍລິສັດໂຄງການ ຕ້ອງຮັບຮອງເອົາລະບົບຄຸ້ມຄອງສຸຂະພາບ ແລະ ຄວາມປອດໄພ ຊຶ່ງສອດຄ່ອງ ຫຼື ເກີນມາດຕະຖານ 2 ຂອງການປະຕິບັດຂອງອົງການການເງິນສາກົນ.

(ຈ) ບໍລິສັດໂຄງການ ຈະຕ້ອງບໍ່ເຂົ້າຮ່ວມ ຫຼື ສະໜັບສະໜູນການເລືອກປະຕິບັດໃນການວ່າຈ້າງ, ຄ່າຕອບແທນ, ການເຂົ້າເຖິງການຝຶກອົບຮົມ, ການຍົກເລີກສັນຍາ, ຫຼື ການໄປພັກຜ່ອນບໍານານ ບົນພື້ນຖານເຊື້ອຊາດ, ສັນຊາດ ຫຼື ຕົ້ນກຳເນີດດ້ານສັງຄົມ, ຊັ້ນວັນນະ, ການກຳເນີດ, ສາດສະໜາ, ຄວາມພິການ, ທ່າອຽງທາງເພດ, ຄວາມຮັບຜິດຊອບຄອບຄົວ, ຖານະການແຕ່ງການ, ສະມາຊິກສະຫະພັນ ຫຼື ອາຍຸ.

**15.02** **<u>ສຸຂະພາບ ແລະ ສຸຂະອະນາໄມ</u>**

(ກ) ບໍລິສັດໂຄງການ ຕ້ອງສະໜອງສິ່ງອຳນວຍຄວາມສະດວກທາງດ້ານສາທາລະນະສຸກທີ່ທັນສະໄໝ, ລວມທັງ ຫ້ອງນ້ຳທີ່ສະອາດ ແລະ ສາມາດເຂົ້າເຖິງໄດ້ໃນຈຳນວນທີ່ພຽງພໍຢູ່ໃນພື້ນທີ່ໂຄງການສຳລັບຜູ້ອອກແຮງງານ ຂອງຕົນ ໂດຍສອດຄ່ອງຕາມມາດຕະຖານ ແລະ ລະບຽບການທີ່ຍອມຮັບໄດ້ໂດຍທົ່ວໄປ ແລະ ສອດຄ່ອງຕາມ ກົດໝາຍແຮງງານ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງຂອງ ສປປ ລາວ.

(ຂ) ລັກສະນະສະເພາະເພີ່ມເຕີມຂອງສິ່ງອຳນວຍຄວາມສະດວກທາງດ້ານສຸຂະພາບ ແລະ ສຸຂະອະນາໄມທີ່ຈະສ້າງ ຂຶ້ນ, ລວມທັງ ການອອກແບບໂຄງສ້າງ, ອັດຕາຂອງການກໍ່ສ້າງ ແລະ ຈຳນວນຂອງສິ່ງອຳນວຍຄວາມສະດວກ ດັ່ງກ່າວ ຈະຕ້ອງເອົາເຂົ້າໃນບົດວິພາກເສດຖະກິດສຳລັບສ່ວນປູກຝັງ ແລະ ໂຮງານປຸງແຕ່ງ.

(ຄ) ບໍລິສັດໂຄງການ ຕ້ອງໃຫ້ການຝຶກອົບຮົມແກ່ຜູ້ອອກແຮງງານກ່ຽວກັບບັນຫາສຸຂະພາບ ແລະ ສຸຂະອະນາໄມ, ລວມທັງ ການຝຶກອົບຮົມກ່ຽວກັບການປ້ອງກັນພະຍາດ, ເຊື້ອໂຣກ ແລະ ຢາເສບຕິດ.

**15.03 <u>ຄວາມປອດດ້ານວິຊາຊີບ.</u>**

(ກ) ບໍລິສັດໂຄງການຕ້ອງຕິດຕັ້ງ ແລະ ນຳໃຊ້ອຸປະກອນຄວາມປອດໄພທີ່ທັນສະໄໝ ແລະ ຖືກຍອມຮັບໂດຍ ສາກົນ ແລະ ຕ້ອງປະຕິບັດຕາມລະບຽບການ ແລະ ການປ້ອງກັນຄວາມປອດໄພທີ່ທັນສະໄໝ ແລະ ຖືກ ຍອມຮັບໂດຍສາກົນໃນຕະຫຼອກໄລຍະຂອງໂຄງການພາຍໃຕ້ສັນຍາສະບັບນີ້ (ລວມທັງ ການຝຶກອົບຮົມໃຫ້ ຄຳແນະນຳຄວາມປອດໄພຢ່າງສະໝ່ຳສະເໝີໃຫ້ຜູ້ອອກແຮງງານຂອງຕົນ) ແລະ ໂດຍສອດຄ່ອງຕາມກົດໝາຍ ແຮງງານ ແລະຄຳແນະນຳທີ່ອອກໃຫ້ເປັນລາຍລັກອັກສອນໂດຍລັດຖະບານ ແລະ/ຫຼື ອົງການທີ່ກ່ຽວຂ້ອງຂອງ ລັດຖະບານ.

(ຂ) ອຸບປະຕິເຫດໃດໜຶ່ງ ຫຼື ອຸປະຕິເຫດທີ່ເກີດຂຶ້ນໂດຍກົງ ຫຼື ທາງອ້ອມກ່ຽວກັບກິດຈະການຂອງໂຄງການ, ໂດຍ ສະເພາະອຸປະຕິເຫດທີ່ເຮັດໃຫ້ມີການບາດເຈັບ, ພະຍາດອາຊີບ ຫຼື ການເສຍຊີວິດຂອງຜູ້ອອກແຮງງານຂອງ ບໍລິສັດໂຄງການ, ຕ້ອງໄດ້ລາຍງານໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ[3] ໄວເທົ່າທີ່ຈະໄວໄດ້ຢ່າງສົມເຫດສົມຜົນ ແລະ ໃນກໍລະນີ (i) ມີການລະເມີດທີ່ອາດມີຜົນກະທົບຢ່າງຮ້າຍແຮງ ຫຼື ຄວາມສົນໃຈຢ່າງຮີບດ່ວນຂອງລັດຖະບານ ຫຼື ອາດຖືກ ຮຽກຮ້ອງ, ພາຍໃນບໍ່ກາຍສີ່ສິບແປດ (48) ຊົ່ວໂມງຫຼັງຈາກໄດ້ຮູ້ການລະເມີດດັ່ງກ່າວ, ແລະ (ii) ໃນທຸກ ກໍລະນີອື່ນໆ ພາຍໃນເຈັດ (7) ວັນລັດຖະການທີ່ບໍລິສັດໂຄງການໄດ້ຮູ້ເຫດການດັ່ງກ່າວ. ບໍລິສັດໂຄງການ ຕ້ອງໄດ້ໃຫ້ການຊ່ວຍເຫຼືອໂດຍທັນທີ ແລະ ເໝາະສົມແກ່ຜູ້ອອກແຮງງານທີ່ໄດ້ຮັບບາດເຈັບ, ເປັນພະຍາດ ຫຼື ເສຍຊີວິດດັ່ງກ່າວ, ແລະ, ໂດຍບໍ່ມີການແຕະຕ້ອງ ຫຼື ການຈຳກັດກ່ຽວກັບບັນຫາຄວາມຮັບຜິດຊອບອື່ນໆ, ຈ່າຍຄ່າປິ່ນປົວ ແລະ ຄ່າຊາປະນະກິດສົບຕາມຄວາມເໝາະສົມ ໂດຍສອດຄ່ອງຕາມກົດໝາຍວ່າແຮງງານ. ຫຼັງ ຈາກນັ້ນ, ບໍລິສັດໂຄງການຕ້ອງປະສານກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອແກ້ໄຂການລະ

[3] EMSP: ພາຍໃຕ້ EMSP ຄຳແນະນຳກະຊວງ ກ່ຽວກັບ ESIA ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຄວນໄດ້ຮັບບົດລາຍງານກ່ຽວກັບອຸປະຕິເຫດທີ່ເກີດຂຶ້ນ ກັບຜູ້ອອກແຮງງານຂອງບໍລິສັໂຄງການເຊັ່ນດຽວກັນ.

ເນີດ ແລະ ວາງທຸກມາດຕະການທີ່ຈຳເປັນເພື່ອຫຼຸດຜ່ອນ ແລະ ບັນເທົາຄວາມເສຍຫາຍ ແລະ ກັນການລະເມີດທີ່ຈະເກີດຂຶ້ນໃນອານາຄົດ.

(ຄ) ບໍລິສັດໂຄງການຕ້ອງເອົາລາຍລະອຽດຂອງການປະຕິບັດຕາມໝວດນີ້ ແລະ ທຸກໆອຸປະຕິເຫດກ່ຽວກັບຄວາມປອດໄພດ້ານອາຊີບຈະຕ້ອງໄດ້ລາຍງານຢູ່ໃນບົດລາຍງານປະຈຳປີກ່ຽວກັບຄວາມຄືບໜ້າທີ່ສົ່ງໃຫ້ຫ້ອງການບໍລິການປະຕູດຽວ.

**15.04** [<u>**ຄວາມປອດໄພ.**</u> ໃນກໍລະນີທີ່ບໍລິສັດໂຄງການໄດ້ພິຈາລະນາໂດຍການຕັດສິນໃຈນຂອງຕົນເອງແຕ່ພຽງຝ່າຍດຽວເຫັນວ່າ ມີຄວາມຈຳເປັນເພື່ອປ້ອງກັນຄວາມປອດໄພຕໍ່ກັບຊັບສິນຂອງຕົນ ແລະ ຄວາມປອດໄພຂອງຜູ້ອອກແຮງງານ ແລະ ຜູ້ຮັບເໝົາ, ບໍລິສັດໂຄງການສາມາດ ວາງຂໍ້ຫ້າມຢ່າງສົມເຫດສົມຜົນສຳລັບຖະໜົນ ແລະ ເສັ້ນທາງ, ຕິດຕັ້ງຮົ້ວກັ້ນ, ຈ້າງພະນັກງານຮັກສາຄວາມປອດໄພ ແລະ ຕິດຕັ້ງກ້ອງວົງຈອນປິດຢູ່ພາຍໃນ ແລະ ອ້ອມເຂດແດນຂອງພື້ນທີ່ໂຄງການ.][4]

**15.05** [<u>**ເຮືອນຢູ່ອາໄສຂອງຜູ້ອອກແຮງງານ**</u>. ບໍລິສັດໂຄງການ ຕ້ອງສະໜອງເຮືອນຢູ່ອາໄສຢ່າງພຽງພໍແກ່ຜູ້ອອກແຮງງານແຕ່ລະຄົນ ແລະ ຜູ້ທີ່ຂຶ້ນກັບພວກກ່ຽວ. ເພື່ອຈຸດປະສົງຂອງວັກນີ້, ເຮືອນຢູ່ຢ່າງພຽງພໍ ຈະຕ້ອງຕີຄວາມໝາຍໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ, ແລະ ຢ່າງຕໍ່າສຸດ ໝາຍເຖິງຄວາມປອດໄພ, ທີ່ຢູ່ອາໄສທີ່ເໝາະສົມ ແລະ ປອດໄພທີ່ມີມາດຕະຖານຢ່າງສົມເຫດສົມຜົນ]

**15.06** [<u>ສິ່ງອຳນວຍຄວາມສະດວກທາງການແພດ.</u> ໃນກໍລະນີທີ່ບໍລິສັດໂຄງການໄດ້ພິຈາລະນາໂດຍການຕັດສິນໃຈນຂອງຕົນເອງແຕ່ພຽງຝ່າຍດຽວເຫັນວ່າເພື່ອຈຸດປະສົງຂອງໂຄງທີ່ຈະສະໜອງສິ່ງອຳນວຍຄວາມສະດວກທາງການແພດໃຫ້ແກ່ຜູ້ອອກແຮງງານຢູ່ໃນພື້ນທີໂຄງການ, ການກໍ່ສ້າງ ແລະ ການດຳເນີນງານສິ່ງອຳນວຍຄວາມສະດວກທາງການແພດດັ່ງກ່າວໄດ້ມາດຕະຖານສາກົນ ແລະ ສ້າງຂຶ້ນ ແລະ ດຳເນີນງານ ໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ. ການປະຕິບັດ, ການເອົາໃຈໃສ່ ແລະ ຄວາມສົນໃຈຕ້ອງບໍ່ເສຍຄ່າບໍລິການສຳລັບຜູ້ອອກແຮງງານ ແລະ ຜູ້ທີ່ຂຶ້ນກັບພວກກ່ຽວ].

**15.07** [<u>ນໍ້າສະອາດ</u>. ບໍລິສັດໂຄງການຕ້ອງຮັບປະກັນໃຫ້ຊຸມຊົນທີ່ຜູ້ອອກແຮງງານອາໄສຢູ່ ແລະ ເຮືອນຢູ່ອາໄສຂອງຜູ້ອອກແຮງງານຢູ່ພາຍໃນພື້ນທີ່ໂຄງການ ຕ້ອງໄດ້ຮັບການສະໜອງນໍ້າດື່ມທີ່ສະອາດ ແລະ ປອດໄພຢ່າງເປັນເປັນປົກກະຕິ ໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ.]

## ມາດຕາ 16 ຊັບພະຍາກອນ ແລະການພັດທະນາຊຸມຊົນ

### ສັນຍາພັດທະນາຊຸມຊົນ

[4] ຂໍນີ້ແມ່ນທາງເລືອກ ແລະ ການເອົາເຂົ້າໃນສັນຍາສະບັບນີ້ແມ່ນຂຶ້ນກັບຄວາມຕ້ອງການຂອງໂຄງການ.

(ກ) ກ່ອນຈະເລີ່ມດຳເນີນງານ, ບໍລິສັດໂຄງການຕ້ອງເຮັດສັນຍາ ໜຶ່ງ ຫຼື ຫຼາຍ ສະບັບກັບຊຸມຊົນທີ່ຢູ່ໃນ ຫຼື ອ້ອມໂຄງການ ຊຶ່ງໄດ້ຮັບຜົນກະທົບຈາກໂຄງການ. ຈຸດປະສົງຂອງສັນຍາພັດທະນາຊຸມຊົນ ແມ່ນສົ່ງເສີມການພັດທະນາແບບຍືນຍົງ ແລະ ຍົກສູງສະຫວັດດີການທົ່ວໄປ ແລະ ຄຸນນະພາບຂອງຊີວິດຂອງຜູ້ທີ່ຢູ່ອາໄສ, ເຊັ່ນດຽວກັນກັບເພື່ອຮັບຮູ້ ແລະ ນັບຖືສິດ, ປະເພນີ, ຮີດຄອງ ແລະ ສາດສະໜາຂອງຊຸມຊົນໃນທ້ອງຖິ່ນ.

(ຂ) ບໍລິສັດໂຄງການ ຕ້ອງປຶກສາຫາລືກັບລັດຖະບານ ແລະ ຊຸມຊົນເພື່ອສ້າງຂະບວນການ, ແຜນການ ແລະ ແຜນງານສຳລັບການພັດທະນາ ແລະ ການຈັດຕັ້ງປະຕິບັດສັນຍາພັດທະນາຊຸມຊົນ. ບໍລິສັດໂຄງການ ຕ້ອງຮ່ວມມືກັບລັດຖະບານ ແລະ ຊຸມຊົນກ່ຽວກັບຄວາມພະຍາຍາມຂອງຕົນໃນການເຮັດໃຫ່ແຜນການ ແລະ ແຜນງານດັ່ງກ່າວປາກົດເປັນຈິງ.

(ຄ) ການລະເມີດຢ່າງຮ້າຍແຮງຕໍ່ເນື້ອໃນຂອງສັນຍາພັດທະນາໂຄງການໂດຍບໍລິສັດໂຄງການ ຈະຖືວ່າເປັນການລະເມີດສັນຍາສະບັບນີ້, ແລະ ລັດຖະບານມີສິດຍົກເລີກສັນຍາສະບັບນີ້ເມື່ອບໍລິສັດໂຄງການເມື່ອມີການຫຼົ້ມເຫຼວຂອງບໍລິສັດໂຄງການໃນການຕິດຕາມຢ່າງເອົາໃຈໃສ່ ແລະ ຢ່າງສະໝ່ຳສະເໝີການດຳເນີນກະທຳທີ່ມີຄວາມພະຍາຍາມຢ່າງສົມເຫດສົມຜົນເພື່ອແກ້ໄຂການລະເມີດພາຍໃນຫົກສິບ (60) ວັນນັບແຕ່ວັນໄດ້ຮັບແຈ້ງການເປັນລາຍລັກອັກສອນຈາກຊຸມຊຸມກ່ຽວກັບການລະເມີດເປັນຕົ້ນໄປ.

(ງ) ທຸກສັນຍາພັດທະນາຊຸມຊົນຕ້ອງຢູ່ພາຍໃຕ້ກົດໝາຍທີ່ນຳໃຊ້ ແລະ ຕ້ອງ:

(i) ເວົ້າເຖິງໂອກາດຂອງການພັດທະນາທີ່ນຳສະເໜີໂດຍບໍລິສັດໂຄງການມີຫຍັງແດ່ ແລະ ຊຸມຊົນໃນທ້ອງຖິ່ນຈະໄດ້ຮັບຜົນປະໂຫຍດແນວໃດ;

(ii) ລະບຸຈຳນວນເງິນທີ່ບໍລິສັດໂຄງການຈະຈ່າຍເຂົ້າກອງທຶນພັດທະນາຊຸມຊົນ, ກອງທຶນສຳລັບການພັດທະນາທ້ອງຖິ່ນຈະຖືກນຳໃຊ້ຈ່າຍແນວໃດ ແລະ ພັນທະໃນການລາຍງານຂອງຊຸມຊົນສະແດງໃຫ້ເຫັນວ່າກອງທຶນຖືກໃຊ້ຈ່າຍແນວໃດ;

(ຈ) ບໍລິສັດໂຄງການຕ້ອງເຮັດບົດລາຍງານປະຈຳປີກ່ຽວກັບການຈັດຕັ້ງປະຕິບັດສັນຍາພັດທະນາຊຸມຊົນ;

(ສ) ທຸກຂໍ້ຂັດແຍ່ງ, ຂໍ້ໂຕ້ຖຽງ ຫຼື ການຮ້ອງຟ້ອງ ທີ່ເກີດຂຶ້ນພາຍໃຕ້, ກ່ຽວກັບ ຫຼື ກ່ຽວຂອ້ງກັບ ສັນຍາພັດທະນາຊຸມຊົນ ຈະຕ້ອງຖືກແກ້ໄຂ ໂດຍສອດຄ່ອງຕາມວິທີການດຳເນີນທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 22 (ການແກ້ໄຂຂໍ້ຂັດແຍ່ງ) ຂອງສັນຍາສະບັບນີ້.

**16.01** **<u>ການພັດທະນາຊຸມຊົນ.</u>** ຈຸດປະສົງຂອງຄູ່ສັນຍາແມ່ນໃຫ້ໂຄງການຖືກດຳເນີນໄປດ້ວຍວິທີທີ່ສອດຄ່ອງກັບຄວາມສາມາດພັດທະນາເສດຖະກິດ ແລະ ສັງຄົມໄດ້ຢ່າງຕໍ່ເນື່ອງ ຂອງຊຸມຊົນທີ່ຕັ້ງຢູ່ໃນພື້ນທີ່ໂຄງການ, ຫຼື ທີ່ໄດ້ສ້າງຂຶ້ນ ຫຼື ທີ່ອາດຈະສ້າງຂຶ້ນ ຊຶ່ງເປັນຜົນມາຈາກໂຄງການດ້ວຍວິທີດັ່ງຕໍ່ໄປນີ້:

(ກ) ເມື່ອມີການຮ້ອງຂໍ, ບໍລິສັດໂຄງການຕ້ອງຊ່ວຍເຫຼືອ ແລະ ໃຫ້ຄຳປຶກສາແກ່ລັດຖະບານໃນການວາງແຜນການສຳລັບພື້ນຖານໂຄງລ່າງ ແລະ ການພັດທະນາທ້ອງຖິ່ນ (ລວມທັງ ການກໍ່ສ້າງສິ່ງອຳນວຍຄວາມສະດວກ,

ໂຮງຮຽນ ແລະ ສິ່ງອຳນວຍສະດວກທາງດ້ານສາທາລະນະສຸກ) ຊຶ່ງຄູ່ສັນຍາເຫັນວ່າເປັນປະໂຫຍດຕໍ່ໂຄງການ, ຕໍ່ອຸດສາຫະກຳທີ່ມີຢູ່ໃນປັດຈຸບັນ ແລະ ໃນອານາຄົດ ແລະ ກິດຈະການຢູ່ໃນພື້ນທີ່ໃກ້ຄຽງກັບພື້ນທີ່ໂຄງການ. ຫຼັງຈາກນັ້ນ, ບໍລິສັດໂຄງການຕ້ອງມີຄວາມຈິງໃຈໃນການຮ່ວມມືກັບລັດຖະບານໃນຄວາມພະຍາຍາມເຮັດໃຫ້ແຜນການ ແລະ ແຜນງານດັ່ງກ່າວປາກົດເປັນຈິງ.

(ຂ) ບໍ່ມີສິ່ງໃດໃນມາດຕານີ້ທີ່ບັງຄັບບໍລິສັດໂຄງການໃຫ້ມີການໃຊ້ຈ່າຍຢ່າງຫຼວງຫຼາຍ ຫຼື ໃຫ້ມີຄ່າໃຊ້ຈ່າຍຢ່າງຫຼວງຫຼາຍເກີນຈຳນວນເງິນທີ່ໄດ້ກຳນົດ ຫຼື ເກີດຂຶ້ນໃນການດຳເນີນທຸລະກິດຕາມປົກກະຕິປຂອງບໍລິສັດ ໂດຍສອດຄອງຕາມເນື້ອໃນ ແລະ ເງື່ອນໄຂຂອງສັນຍາສະບັບນີ້ ແລະ ສັນຍາພັດທະນາຊຸມຊົນ.

(ຄ) ບໍລິສັດໂຄງການຕ້ອງປະກອບສ່ວນເຂົ້າໃນກອງທຶນພັດທະນາຂອງບ້ານທີ່ຢູ່ອ້ອມຂ້າງພື້ນທີ່ໂຄງການ ແລະ/ຫຼື ບ້ານທີ່ໄດ້ຮັບຜົນໂດຍກົງຈາກໂຄງການຍ້ອນການຢູ່ໃກ້ກັບໂຄງການອຕາມທີ່ກຳນົດໃນແຜນການທີ່ນຳໃຊ້ທີ່ດິນ ແລະ ຕາມການຕົກລົງລະຫວ່າງຄູ່ສັນຍາ ແລະ ໂດຍສອດຄ່ອງຕາມບົດລາຍງານດ້ານສິ່ງແວດລ້ອມ ແລະ ສັງຄົມ ("ກອງທຶນພັດທະນາຊຸມຊົນ").

**16.02 <u>ການຄຸ້ມຄອງກອງທຶນພັດທະນາຊຸມຊົນ.</u>**

(ກ) ບໍລິສັດໂຄງການ ຕ້ອງປະກອບສ່ວນເພີ່ມເຂົ້າໃນກອງທຶນພັດທະນາຊຸມຊົນໃນແຕ່ລະທ້າຍປີ ເປັນຈຳນວນ (_________) ໂດລາສະຫະລັດຕໍ່ເຮັກຕາຂອງພື້ນທີ່ໂຄງການໃນໄລຍະເວລາຂອງສັນຍານີ້ເພື່ອໃຫ້ຈຳນວນຂັ້ນຕໍ່າສຸດສາມາດເພີ່ມຂຶ້ນໄດ້ໃນແຕ່ລະປີຕາມອັດຕາສ່ວນຂອງການເພີ່ມຂຶ້ນໃນດັດສະນີເງິນເຟີ້.

(ຂ) ກອງທຶນພັດທະນາຊຸມຊົນ ຈະຕ້ອງຝາກເຂົ້າບັນຊີເງິນຝາກທີ່ມີດອກເບ້ຍ ໃນສະຖາບັນການເງິນທີ່ຈົດລະບຽນໃນລາວ ທີ່ສ້າງຕັ້ງຂຶ້ນສະເພາະເພື່ອຮັກສາເງິນທີ່ປະກອບສ່ວນດັ່ງກ່າວ.

(ຄ) ກອງທຶນພັດທະນາຊຸມຊົນຕ້ອງຖືກບໍລິຫານໂດຍທີມງານຄຸ້ມຄອງ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກບັນດາບ້ານທີ່ໄດ້ຖືກຄັດເລືອກ ແລະ ບັນດາເມືອງທີ່ບັນດາບ້ານດັ່ງກ່າວຕັ້ງຢູ່ ແລະ ບໍລິສັດໂຄງການ. ທີມງານຄຸ້ມຄອງກອງທຶນ ຕ້ອງພັດທະນາງົບປະມານປະຈຳປີ ໂດຍມີການປຶກສາກັບລັດຖະບານ ແລະ ບໍລິສັດໂຄງການ ຫຼື ຕາມເງື່ອນໄຂທີ່ກົດໝາຍຂອງ ສປປ ລາວ ກຳນົດໄວ້.

(ງ) ທຶນຈາກບັນຊີ ຊຶ່ງແຍກອອກຕ່າງຫາກສາມາດເບີກຈ່າຍໄດ້ແຕ່ (i) ສຳລັບການໃຫ້ການບໍລິການໂດຍກົງ ແລະ ການປັບປຸງພື້ນຖານໂຄງລ່າງຂອງຊຸມຊົນ ແລະ ບໍ່ສະໜອງທຶນໃຫ້ແກ່ແຜນງານຂອງວຽກງານທົ່ວໄປຂອງຫ້ອງການ ຫຼື ພະນັກງານບໍລິຫານ, ແລະ (ii) ເພື່ອເປັນຜົນປະໂຫຍດຂອງບັນດາບ້ານທີ່ໄດ້ກຳນົດໄວ້. ການປະກອບສ່ວນຈາກບໍລິສັດໂຄງການຈະຖືກຫັກຄ່າອາກອນ.

(ຈ) ບໍລິສັດໂຄງການ ຕ້ອງລາຍງານການປະກອບສ່ວນແກ່ກອງທຶນພັດທະນາຊຸມຊົນ ແລະ ທຸກການແກ້ໄຂຂອງທີມງານຄຸ້ມຄອງກອງທຶນ ໃຫ້ ກຊສ ຫຼື ບັນດາກິດຈະການທີ່ໄດ້ຮັບການສະໜອງທຶນຈາກກອງທຶນພັດທະນາ

ຊຸມ ຊົນ ແລະ ເອົາຂໍ້ມູນດັ່ງກ່າວເຂົ້າໃນບົດລາຍງານປະຈຳປີກ່ຽວກັບຄວາມຄືບໜ້າທີ່ສົ່ງໃຫ້ຫ້ອງການບໍລິການປະຕູດຽວ.

**16.03 <u>ການຊື້ສິນຄ້າ ແລະ ການບໍລິການໃນທ້ອງຖິ່ນ</u>**

(ກ) ເມື່ອມີການຊື້ສິນຄ້າ ແລະ ການບໍລິການກ່ຽວກັບໂຄງການ, ບໍລິສັດໂຄງການຈະຕ້ອງໃຫ້ບຸລິມະສິດຕໍ່ສິນຄ້າທີ່ຜະລິດໃນ ສປປ ລາວ ໂດຍຄົນລາວ, ການບໍລິການທີ່ສະໜອງໃຫ້ໂດຍຄົນລາວທີ່ຢູ່ໃນ ສປປ ລາວ, ແລະ/ຫຼື ນິຕິບຸກຄົນທີ່ສ້າງຕັ້ງ ຫຼື ປະກອບຂຶ້ນຢູ່ໃນ ສປປ ລາວ ແລະ ສ່ວນຫຼາຍເປັນເຈົ້າຂອງໂດຍຄົນລາວ, *ແຕ່ເຖິງຢ່າງໃດກໍຕາມ, ໂດຍມີເງື່ອນໄຂວ່າ* ສິນຄ້າ ແລະ ການບໍລິການດັ່ງກ່າວ ຢ່າງໜ້ອຍຈະຕ້ອງມີຄຸນນະພາບເທົ່າທຽມກັນກັບສິນຄ້າ ແລະ ການບໍລິການຈາກບຸກຄົນ/ນິຕິບຸກຄົນທີ່ຢູ່ນອກສປປລາວ ຫຼື ບຸກຄົນ/ນິຕິບຸກຄົນຊຶ່ງສ່ວນຫຼາຍບໍ່ແມ່ນຄົນລາວເປັນເຈົ້າຂອງ ໂດຍຄຳນຶ່ງເຖິງລາຄາ, ຄຸນນະພາບ, ມາດຕະຖານຄວາມປອດໄພ, ການບໍລິການ, ປະລິມານ, ການສົ່ງມອບ, ການມີສິນຄ້າ ແລະ ອື່ນໆ.

(ຂ) ນອກຈາກນັ້ນ, ບໍລິສັດໂຄງການເຫັນດີວ່າຢູ່ໃນແຕ່ລະສັນຍາ ຫຼື ຄຳສັ່ງວຽກ ຕ້ອງໄດ້ບັນຈຸເອົາເງື່ອນໄຂທີ່ຕົນຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 16.03 ນີ້ ແລະ ຕ້ອງໃຫ້ຜູ້ຮັບເໝົາຕໍ່ຊ່ວງຂອງຕົນປະຕິບັດຕາມເງື່ອນໄຂດັ່ງກ່າວ ຽວກັບທຸກກິດຈະການທີ່ດຳເນີນໂດຍບຸກຄົນ/ນິຕິບຸກຄົນທີ່ຢູ່ໃນ ສປປ ລາວ (ຜູ້ຮັບ ເ ໝົາຕໍ່ຊ່ວງພວກກ່ຽວ) ໃນນາມບໍລິສັດໂຄງການ.

(ຄ) ໃນການຈັດຊື້, ບໍລິສັດໂຄງການຕ້ອງໃຊ້ຄວາມພະຍາຍາມຂອງຕົນດ້ວຍຄວາມຈິງໃຈ ຫາໂອກາດໃຫ້ຄົນລາວໄດ້ເຂົ້າຮ່ວມການແຂ່ງຂັນ. ໃນການຈັດໂຄງສ້າງຂອງການຈັດຊື້ຈັດຂອງຕົນ, ບໍລິສັດໂຄງການ ແລະ ຜູ້ຮັບເໝົາຕໍ່ຊ່ວງ ຕ້ອງວາງທຸກມາດຕະການຢ່າງສົມເຫດສົມຜົນ ເພື່ອຮັບປະກັນໃຫ້ຄົນລາວສາມາດເຂົ້າແຂ່ງຂັນໄດ້ຢ່າງສົມເຫດສົມຜົນໃນການສະໜອງສິນຄ້າ ແລະ ການບໍລິການໃຫ້ແກ່ບໍລິສັດໂຄງການ ແລະ ຜູ້ຮັບເໝົາຕໍ່ຊ່ວງຂອງຕົນ.

(ງ) ບໍລິສັດໂຄງການຕ້ອງເອົາລາຍລະອຽດກ່ຽວກັບກິດຈະການທີ່ໄດ້ດຳເນີນພາຍໃຕ້ຂໍ້ 16.03 ນີ້ ເຂົ້າໃນບົດລາຍງານປະຈຳປີກ່ຽວກັຄວາມຄືບໜ້າທີ່ສົ່ງໃຫ້ຫ້ອງການບໍລິການປະຕູດຽວ, ແລະ ຈະຕ້ອງເອົາຂໍ້ມູນກ່ຽວກັບມູນຄ່າຂອງສິນຄ້າ ແລະ ການບໍລິການທີ່ໄດ້ຈາກຄົນລາວທີ່ຢູ່ໃນ ສປປ ລາວ ຫຼື ຜະລິດໂດຍຄົນລາວຢູ່ໃນ ສປປ ລາວ.

## ມາດຕາ 17 ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ

**17.01 <u>ຂໍ້ກຳນົດທົ່ວໄປ</u>**

(ກ) ໃນທຸກເວລາບໍລິສັດໂຄງການ ຕ້ອງປະຕິບັດຕາມ ແລະ ຈັດຕັ້ງປະຕິບັດ ໂຄງການ ໂດຍສອດຄ່ອງຕາມ (i) ບົດລາຍງານກ່ຽວກັບສິ່ງແວດລ້ອມ ແລະສັງຄົມ ແລະ ໃບຢັ້ງຢືນດ້ານງສິ່ງແວດລ້ອມ, (ii) ພັນທະຂອງບໍລິສັດໂຄງການຕາມທີ່ດ້ກໍານົດໄວ້ຢູ່ໃນສັນຍາສະບັບນີ້ ແລະ ເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*) ແລະ (iii) ກົດໝາຍທີ່ນໍາໃຊ້ງຂອງ ສປປ ລາວ ແລະ ມາດຕະຖານສາກົນ.

(ຂ) ບໍລິສັດໂຄງການ ຕ້ອງປະຕິດຕາມ ແລະ ປະຕິບັດມາດຕະຖານ ແລະ ພາການປະຕິບັດຕົວຈິງຂອງສາກົນທີ່ກ່ຽວກັບເງື່ອນງດ້ານສຸຂະພາບ, ຄວາມປອດໄພ, ສິ່ງແວດລ້ອມ ແລະ ສັງຄົມ ໂດຍສອດຄ່ອງຕາມພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມແບບຄົບວົງຈອນ ທີ່ໄດ້ກໍານົດອອກໂດຍລັດຖະບານ ແລະ ມີຜົນບັງຄັບປະຕິບັດ ແລະ ຜົນສັກສິດ ແລະ ນໍາໃຊ້ໂດຍທົ່ວໄປຢູ່ໃນ ສປປ ລາວ ຊຶ່ງເປັນເງື່ອນໄຂ ແລະ ພັນທະທີ່ຖືກເອົາເຂົ້າຢູ່ໃນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ໄດ້ກໍານົດໄວ້ຢູ່ໃນເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*).

(ຄ) ໃນທຸກເວລາ, ບໍລິສັດໂງກຄານ ຕ້ອງວາງມາດຕະການປ້ອງກັນຢ່າງສົມເຫດສົມຜົນ ເພື່ອປົກປັກຮັກສາສິ່ງແວດລ້ອມ ທັງຢູ່ໃນ ຫຼື ນອກພື້ນທີ່ໂຄງການຕາມຄວາມເໝາະສົມ ແລະ ເພື່ອຈໍາກັດຄວາມເສຍຫາຍ ແລະ ຜົນເສຍຫາຍຕໍ່ປະຊາຊົນ, ທໍາມະຊາດ ແລ ະຊັບສົມບັດ ທີ່ເກີດຈາກມົນລະພິດ, ການປົນເປື້ອນ, ສຽງ ແລະ ຜົນກະທົບເສຍຫາຍຈາກການກໍ່ສ້າງ, ການດໍາເນີນງານ ແລະ ການບໍາລຸງຮັກສາໂຄງການ.

(ງ) ໃນທຸກເວລາ, ບໍລິສັດໂຄງການ ຕ້ອງຈັດຕັ້ງປະຕິບັດໂຄງການໂດຍສອດຄ່ອງຕາມມາດຕະການກ່ຽວກັບການຍົກຍ້າຍ ແລະ ການໃຊ້ແທນຄ່າເສຍຫາຍທີ່ໄດ້ກໍານົດໄວ້ຢູ່ໃນບົດລາຍງານກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມ , ກົດໝາຍຂອງ ສປປ ລາວ ແລະ ເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*).

(ຈ) ໃນທຸກເວລາ, ບໍລິສັດໂຄງການ ຕ້ອງຖືວ່າມີຄວາມຮູ້ຢ່າງຮອບດ້ານກ່ຽວກັບເງື່ອນໄຂທາງດ້ານກົດໝາຍທີ່ກ່ຽວ ຂ້ອງກັບສິ່ງແວດລ້ອມ ແລະ ສັງຄົມ, ລວມທັງ ກົດໝາຍທີ່ນໍາໃຊ້ຂອງ ສປປ ລາວ ແລະ ມາດຕະຖານສາກົນ.

(ສ) ໃນທຸກເວລາ, ບໍລິສັດໂຄງການ ຕ້ອງຄຸ້ມຄອງ ແລະ ມີຄວາມຮັບຜິດຊອບຕໍ່ການແກ້ໄຂ ແລະ ການກໍາຈັດທີ່ເໝາະສົມສໍາລັບສິ່ງເສດເຫຼືອ ແລະ ຜະລິດຕະພັນເສດເຫຼືອທັງໝົດທີ່ເກີດຈາກພື້ນທີ່ໂຄງການ ແລະ ເພື່ອເຮັດສິ່ງດັ່ງກ່າວ,ບໍລິສັດຕ້ອງປະຕິບັດຕາມເງື່ອນໄຂທັງໝົດທາງດ້ານສິ່ງແວດລ້ອມຕາມທີ່ກໍານົດໃນມາດຕານີ້ ແລະ ໃນເອກະສານຊ້ອນທ້າຍ IV .

(ຊ) ບໍລິສັດໂຄງການ ຕ້ອງເກັບກຳ, ຮັກສາ ແລະ ມີຂໍ້ມູນໄວ້ສຳລັບໃຫ້ລັດຖະບານກວດກາ ທຸກຂໍ້ມູນກ່ຽວກັບດ້ານສິ່ງແວດລ້ອມ ແລະ ສັງຄົມ, ການປະຕິບັດຕາມ, ການລະເມີດ, ຄຳຮ້ອງຟ້ອງຈາກພາກສ່ວນອື່ນ, ການຮ້ອງທຸກ, ການແກ້ໄຂ ແລະ ການຈ່າຍໂດຍ ແລະ ໃນນາມຂອງບໍລິສັດໂຄງການ ໂດຍສອດຄ່ອງຕາມກົດໝາຍທີ່ນຳໃຊ້ຂອງ ສປປ ລາວ, ສັນຍາສະບັບນີ້ ແລະ ເອກະສານຊ້ອນທ້າຍ IV.

- **ການຄຸ້ມຄອງດິນ**

ບໍລິສັດໂຄງການ ຕ້ອງປະຕິບັດຕາມທຸກໆກົດໝາຍທີ່ນຳໃຊ້ຂອງ ສປປ ລາວ ທີ່ນຳໃຊ້ຕໍ່ຊັບພະຍາກອນດິນ. ບໍລິສັດໂຄງການ ເຫັນດີຮັກສາປະລິມານ ແລະ ຄຸນນະພາບ, ແລະ ຄຸ້ມຄອງຜົນກະທົບເສຍຫາຍຄວາມເຄັມ, ການປົນເປື້ອນສານພິດ ແລະ ລະດັບຂອງສານ/ທາດອາຫານ. ໃນແຕ່ລະ [ສາມ] [ຫ້າ] ປີ, ບໍລິສັດໂຄງການ ຕ້ອງຕິດຕາມ ແລະ ລາຍງານກ່ຽວກັບດັດສະນີຂອງຄຸນນະພາບດິນ (ການປົນເປື້ອນສານພິດຂອງດິນ, ຈຳນວນໄຕຣເຈນ, ຈຳນວນຟົດສະຟໍຣັດສົມ, ຈຳນວນໂປຕັດຊຽມ, ຄວາມເປັນສີ່, pH, ຄວາມໜາແໜ້ນ, ຄວາມເລິກຂອງດິນ) ແລະ ຮັບປະກັນບໍ່ໃຫ້ຊັບພະຍາກອນດິນຖືກທຳລາຍດ້ວຍການເຊາະເຈື່ອນ ຫຼື ການເສື່ອມລົງດ້ວຍວິທີອື່ນໆ.

- **ການຄຸ້ມຄອງສານເຄມີ**

ການດຳເນີນໂຄງການ ຕ້ອງໃຫ້ສອດຄ່ອງກັບທຸກກົດໝາຍທີ່ນຳໃຊ້ຂອງ ສປປ ລາວ ກ່ຽວກັບການຄຸ້ມຄອງ, ການຂົນສົ່ງ, ການເກັບມ້ຽນ ແລະ ການນຳໃຊ້ສານເຄມີທີ່ນຳໃຊ້ເຂົ້າໃນການດຳເນີນງານ (ລວມທັງ ຝຸ່ນຊີວະພາບ, ຢາຂ້າເຊື້ອ, ຢາຂ້າແມງໄມ້ ແລະ ຢາຂ້າຫຍ້າ). ສິ່ງດັ່ງກ່າວລວມທັງ, ເມື່ອນຳໃຊ້, ກົດໝາຍ ແລະ ລະບຽບການຄຸ້ມຄອງຄວາມປອດໄພຂອງຜູ້ອອກແຮງງານ ແລະ ສຸກຂະພາບຂອງຄົນ, ເຊັ່ນດຽວກັນກັບການປົກປັກຮັກສາສິ່ງແວດລ້ອມ. ຜູ້ດຳເນີນທຸລະກິດ ຕ້ອງຮັບປະກັນບຸກຄົນທີ່ເຮັດວຽກກັບສານເຄມີໃຫ້ໄດ້ຮັບການຝຶກອົບຮົມ ແລະ ການຢັ້ງຢືນ (ເມື່ອນຳໃຊ້) ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ສານເຄມີ. ນອກຈາກນັ້ນ, ຜູ້ດຳເນີນທຸລະກິດ ຈະຕ້ອງປະຕິບັດຕາມຄູ່ມືປະຕິບັດ ແລະ ຄຳແນະນຳຂອງຜູ້ຜະລິດສານເຄມີ ກ່ຽວກັບປະລິມານນຳໃຊ້, ການປະສົມເຈືອປົນ, ການນຳໃຊ້ ແລະ ວັນໝົດກຳນົດໃຊ້. ທຸກອຸປະຕິເຫດ ແລະ ການຮົ່ວໄຫຼ ຈະຕ້ອງໄດ້ລາຍງານໃນທັນທີໃຫ້ແກ່ອົງການທີ່ກ່ຽວຂ້ອງ, ແລະ ເອົາເຂົ້າໃນການລາຍງານຂອງບໍລິສັດໂຄງການ.

**17.02** <u>**ການປັບປຸງບົດລາຍງານກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມໃຫ້ທັນກັບສະພາບ.**</u> ຕາມເງື່ອນໄຂພາຍໃຕ້ກົດໝາຍຂອງ ສປປ ລາວ ແລະ ໃບຢັ້ງຢືນດ້ານສິ່ງແວດລ້ອມ, ບໍລິສັດໂຄງການ ຕ້ອງປັບປຸງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມໃຫ້ທັນສະພາບ ເພື່ອໃຫ້ຄຳອະທິບາຍກ່ຽວກັບການປ່ຽນແປງໃດໜຶ່ງຂອງສະພາບສິ່ງແວດລ້ອມ ແລະ ສັງຄົມຢູ່ໃນພື້ນທີ່ໂຄງການ.

**17.03** <u>**ກອງທຶນປົກປັກຮັກສາສິ່ງແວດລ້ອມ.**</u> ບໍລິສັດໂຄງການ ຕ້ອງປະກອບສ່ວນຈຳນວນເງິນ (________) ໂດລາສະຫະລັດ (<u>ຈຳນວນເງິນ</u>ເປັນຕົວໜັງສື) ໃນແຕ່ລະທ້າຍປີ ເຂົ້າໃນກອງທຶນປົກປັກຮັກສາສິ່ງແວດລ້ອມທີ່ຄຸ້ມຄອງໂດຍລັດຖະບານ ແລະ ຕ້ອງເອົາລາຍລະອຽດກ່ຽວກັບການຈ່າຍເງິນດັ່ງກ່າວເຂົ້າໃນບົດລາຍງານປະຈຳປີກ່ຽວກັບຄວາມຄືບໜ້າທີ່ສົ່ງໃຫ້ຫ້ອງການບໍລິການປະຕູດຽວ. ການປະກອບສ່ວນດັ່ງກ່າວໂດຍບໍລິສັດໂຄງການ ຈະຖືກຫັກອາກອນ.

**17.04** <u>**ການຕິດຕາມກວດກາ ແລະ ການລາຍງານດ້ວຍຕົນເອງ.**</u>

(ກ) ບໍລິສັດໂຄງການ ຕ້ອງດໍາເນີນການຕິດຕາມກວດກາ ແລະ ລາຍງານຢ່າງຕໍ່ເນື່ອງ, ຕັ້ງໜ້າ ແລະ ຄົບຖ້ວນ ກ່ຽວກັບທຸກກິດຈະການທີ່ຕິດພັນກັບການປະຕິບັດຂອງບໍລິສັດໂຄງການຕາມພັນທະທາງສັງຄົມ ແລະ ສິ່ງແວດລ້ອມທີ່ກໍານົດໄວ້ຢູ່ໃນສັນຍານີ້, ບົດລາຍງານກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມ ແລະ ໃບຢັ້ງຢືນດ້ານສິ່ງແວດລ້ອມ ໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ ແລະ ເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*).

(ຂ) ບໍລິສດໂຄງການ ຕ້ອງລາຍງານ ກຊທສ ກ່ຽວກັບການຈັດຕັ້ງປະຕບັດບັດລາຍງານກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມໃນແຕ່ລະ [ເດືອນ/ສາມເດືອນ] ໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ, ໃບຢັ້ງຢືນດ້ານສິ່ງແວດລ້ອມ, ສັນຍາສະບັບນີ້ ແລະ ເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*), ແລະ ຍັງຈະຕ້ອງໄດ້ເອົາຂໍ້ມູນສິ່ງແວດລ້ອມ ແລະ ສັງຄົມທີ່ກ່ຽວຂ້ອງ ເຂົ້າໃນບົດລາຍງານປະຈໍາປີກ່ຽວກັບຄວາມຄືບໜ້າທີ່ສົ່ງໃຫ້ຫ້ອງການບໍລິການປະຕູດຽວ.

**17.05** <u>ການກວດກາ ແລະ ການຕິດຕາມກວດໂດຍລັດຖະບານ.</u>

(ກ) ລັດຖະບານມີສິດຕິດຕາມກວດກາ ແລະ ດໍາເນີນການກວດກາພື້ນທີ່ໂຄງການໄດ້ທຸກເວລາ, ໂດຍມີ ຫຼື ບໍ່ມີການແຈ້ງໃຫ້ຊາບກ່ອນ, ເພື່ອຮັບປະກັນການປະຕິບັດຕາມມາດຕາ 17 ນີ້ ໂດຍບໍລິສັດໂຄງການ, ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ຊ່ວງຂອງບໍລິສັດໂຄງການ.

(ຂ) ຖ້າລັດຖະບານພົບເຫັນການລະເມີດດ້ານສິ່ງແວດລ້ອມ, ຄວາມລົ້ມເຫຼວໃນການກະທໍາ ຫຼື ການລະເມີດມາດຕາ 17 ນີ້, ຫຼື ການຫຼົ້ມເຫຼວໃນການລາຍງານການລະເມີດ, ຄວາມລົ້ມເຫຼວໃນການກະທໍາ ຫຼື ການລະເມີດ ໂດຍບໍລິສັດໂຄງການ, ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຕໍ່ຊ່ວງຂອງບໍລິສັດໂຄງການພາຍໃຕ້ ມາດຕາ 17 ນີ້ ຫຼື ເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*), ລັດຖະບານສາມາດວາງໂທດປັບ ໃໝໃສ່ບໍລິສັດໂຄງການ ຕື່ມໃສ່ຄ່າຊົດເຊີຍອື່ນໆພາຍໃຕ້ສັນຍານີ້ ໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ ແລະ ເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*).

(ຄ) ລັດຖະບານສະຫງວນສິດໃນການຕິດຕາມກວດກາ ແລະ ກວດກາ ບັນຫາກ່ຽວກັບສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ/ຫຼື ຄວາມປອດໄພ ຕາມທີ່ລັດຖະບານເຫັນວ່າມີຄວາມຈໍາເປັນ, ດ້ວຍການໃຊ້ຈ່າຍຂອງບໍລິສັດໂຄງການ, ລວມທັງ ການກວດກາທີ່ໄດ້ກໍານົດໄວ້ຢູ່ວັກ 17.05 (ກ) ໂດຍນໍາໃຊ້ເຈົ້າໜ້າທີ່ຂອງ ກຊສ, ທີ່ປຶກສາ ຫຼື ຊ່ຽວຊານ, ຫຼື ການປະສົມປະສານຂອງບຸກຄົນດັ່ງກ່າວ. *ແຕ່ເຖິງຢ່າງໃດກໍຕາມ, ໂດຍມີເງື່ອນໄຂວ່າ* ຄ່າໃຊ້ຈ່າຍໃນການຕິດຕາມກວດກາ ແລະ ການກວດກາຂອງລັດຖະບານ ໂດຍສະເພາະກ່ຽວກັບໂຄງການ ແລະ ກິດຈະການຂອງບໍລິສັດໂຄງການ ຈະຕ້ອງບໍ່ເກີນຄ່າໃຊ້ຈ່າຍທີ່ຈໍາເປັນເພື່ອຮັບປະກັນການປະຕິບັດຂອງບໍລິສັດໂຄງການຕາມສັນຍານີ້ ແລະ ກົດໝາຍຂອງ ສປປ ລາວ.

**17.06** <u>ຄວາມຮັບຜິດຊອບດ້ານສິ່ງແວດລ້ອມ ແລະ ການລົງໂທດ.</u> ບໍລິສັດໂຄງການ ຈະຕ້ອງຮັບຜິດຊອບ ແລະ ມີພັນທະຮັບຜິດຊອບຕໍ່ພັນທະດ້ານສິ່ງແວດລ້ອມ, ການຟ້ອງຮ້ອງຂອງບຸກຄົນທີ່ສາມ ແລະ ຄ່າໃຊ້ຈ່າຍໃນການຟື້ນຟູທີ່ເກີດຈາກ

ການລະເມີດ, ການຝ່າຝືນ ຫຼື ການກະທຳ ຫຼື ການເມີນເສີຍ, ບໍ່ວ່າຈະມີ ຫຼື ບໍ່ມີການລະເມີດກົດໝາຍທີ່ນຳໃຊ້ ຫຼື ສັນຍາສະບັບນີ້ກໍຕາມ, ໂດຍບໍລິສັດໂຄງການ ຫຼື ຜູ້ຮັບເໝົາຂອງຕົນ ຫຼື ຜູ້ຮັບເໝົາຕໍ່ຊ່ວງ. ບໍລິສັດໂຄງການຕ້ອງຮັບຜິດຊອບ ແລະ ໃຊ້ແທນຄ່າເສຍຫາຍໃຫ້ແກ່ລັດຖະບານ ແລະ ບຸກຄົນທີ່ໄດ້ຮັບຜົນກະທົບຈາກໂຄງການ ຕໍ່ທຸກຄວາມຮັບຜິດຊອບ, ຄວາມເສຍຫາຍ, ການສູນເສຍ, ການໃຊ້ຈ່າຍ ແລະ ການຟ້ອງຮ້ອງຈາກມົນລະພິດທີ່ເກີດຈາກການກໍ່ສ້າງ, ການດໍາເນີນງານ ແລະ ການບໍາລຸງຮັກສາຂອງໂຄງການ, ຍົກເວັ້ນເມື່ອຄວາມຮັບຜິດຊອບ, ຄວາມເສຍຫາຍ, ການສູນເສຍ, ການໃຊ້ຈ່າຍ ຫຼື ການຟ້ອງຮ້ອງນັ້ນບໍ່ໄດ້ເກີດຈາກໂຄງການ ຫຼື ບໍລິສັດໂຄງການ. ນອກຈາກຄວາມຮັບຜິດຊອບດ້ານສິ່ງແວດລ້ອມແລ້ວ, ລັດຖະບານສາມາດບັງຄັບປະຕິບັດໂທດເພີ່ມຕໍ່ບໍລິສັດໂຄງການໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ ແລະ ເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*), ແລະ/ຫຼື ສາມາດຍົກເລີກສັນຍານີ້ໂດຍສອດຄ່ອງຕາມມາດຕາ 24.

ເມື່ອບໍລິສັດໂຄງການ ບໍ່ສາມາດປະຕິບັດພັນທະໃດໜຶ່ງພາຍໃຕ້ມາດຕານີ້ຍ້ອນເຫດຜົນໃດໜຶ່ງ, ບໍລິສັດແມ່ຈະຕ້ອງໄດ້ຮັບຜິດຊອບແທນບໍລິສັດໂຄງການ. ພັນທະດັ່ງກ່າວ ແມ່ນບໍ່ແຕະຕ້ອງເຖິງການຮ້ອງຂໍທາງດ້ານກົດໝາຍຕໍ່ບໍລິສັດແມ່ໂດຍທາງກົງ ຫຼື ໂດຍທາງອ້ອມ.

**17.07 <u>ການຟື້ນຟູພື້ນທີ່ໂຄງການ</u>**

(ກ) ບໍລິສັດໂຄງການ ຈະຕ້ອງຮັບຜິດຊອບ ແລະ ດໍາເນີນການກ່ຽວກັບການປິດໂຄງການ ແລະ ການປ້ອງແປງ, ການຟື້ນຟູ ແລະ ການອານາໄມສິ່ງແວດລ້ອມຂອງພື້ນທີ່ໂຄງການ, ລວມທັງການສ້າງ **"ແຜນການຟື້ນຟູ"** ແລະ **"ກອງທຶນຟື້ນຟູ"** ໂດຍສອດຄ່ອງຕາມພັນທະ ແລະ ຂັ້ນຕອນທີ່ກໍານົດໄວ້ຢູ່ໃນເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ*). ບໍລິສັດໂຄງການ ຕ້ອງ ເອົາລາຍລະອຽດກ່ຽວກັບເງິນທີ່ສະສົມທີ່ມີຢູ່ໃນກອງທຶນຟື້ນຟູ ເຂົ້າໃນບົດລາຍງານປະຈໍາປີກ່ຽວກັບຄວາມຄືບໜ້າທີ່ສົ່ງໃຫ້ຫ້ອງການບໍລິການປະຕູດຽວ.

(ຂ) ເມື່ອໄດ້ມີການຮັບຮອງເອົາແຜນຟື້ນຟູແລ້ວ, ບໍລິສັດໂຄງການຕ້ອງໃຫ້ການຄໍ້າປະກັນທາງສິ່ງແວດລ້ອມເປັນຈໍານວນເງິນ [ ] ໂດລາສະຫະລັດ (ຈໍານວນເງິນເປັນຕົວໜັງສື) ເພື່ອຮັບປະກັນການການປະຕິບັດວຽກງານຟື້ນຟູ ຊຶ່ງຝາກໄວ້ໃນບັນຊີເງິນຝາກທີ່ມີດອກເບ້ຍ ແລະ ການລົງລາຍເຊັນຮ່ວມກັນ ນໍາສະຖາບັນການເງິນທີ່ຈົດທະບຽນໃນລາວ ທີ່ໄດ້ສ້າງຕັ້ງຂຶ້ນໄວ້ໂດຍສະເພາະເພື່ອຮັກສາເງິນທີ່ປະກອບສ່ວນດັ່ງກ່າວ ຊຶ່ງການນໍາໃຊ້ເງິນດັ່ງກ່າວ ຈະຕ້ອງມີລາຍເຊັນຂອງຜູ້ຕາງໜ້າທີ່ໄດ້ຮັບແຕ່ງຕັ້ງຈາກລັດຖະບານ ແລະ ລາຍເຊັນຂອງຜູ້ອໍານວຍການບໍລິສັດໂຄງການ ຫຼື ບຸກຄົນອື່ນຊຶ່ງຢູ່ພາຍໃຕ້ການຄວບຄຸມຂອງບໍລິສັດໂຄງການທີ່ຖືກແຕ່ງຕັ້ງ. ເມື່ອສໍາເລັດວຽກງານຟື້ນຟູຊຶ່ງເປັນທີ່ເພິ່ງພໍໃຈຂອງ ກຊສ ແລ້ວ, ຈໍານວນເງິນຄໍ້າປະກັນດ້ານສິ່ງແວດລ້ອມທັງໝົດ ຈະຖືກສົ່ງຄືນໃຫ້ບໍລິສັດໂຄງການ. ໃນກໍລະນີທີ່ບໍລິສັດໂຄງການຫຼົ້ມເຫຼວໃນການຈັດຕັ້ງປະຕິບັດແຜນຟື້ນຟູພາຍໃຕ້ກອບເວລາທີ່ກໍານົດໄວ້ ແລະ ເປັນທີ່ເພິ່ງພໍໃຈຂອງ ກຊສ , ເງິນຄໍ້າປະກັນດ້ານທາງສິ່ງແວດລ້ອມຈະຖືກຮັບເຂົ້າງົບປະມານຂອງລັດ ແລະ ຖືກນໍາໃຊ້ເພື່ອການຟື້ນຟູພື້ນທີ່ໂຄງການ.

## ມາດຕາ 18 ການມອບໝາຍສິດ ແລະ ການປ່ຽນແປງການຄວບຄຸມ

**18.01 ການມອບໝາຍສິດ**

(ກ) ສັນຍາສະບັບນີ້ບໍ່ສາມາດໂອນ ຫຼື ມອບໝາຍສິດໃຫ້ແກ່ບຸກຄົນອື່ນ (ລວມທັງ ເພື່ອຈຸດປະສົງຊອກເງິນກູ້ ຫຼື ຮຸ້ນ, ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ), ໂດຍບໍ່ມີການເຫັນດີເປັນລາຍລັກອັກສອນລ່ວງໜ້າຈາກລັດຖະບານ, ຊຶ່ງການເຫັນດີນັ້ນະຕ້ອງບໍ່ຖືກລະງັບໄວ້ຢ່າງບໍ່ສົມເຫດສົມຜົນ.

(ຂ) ບໍ່ມີການມອບໝາຍສິດ ແລະ ພັນທະ ໃດໜຶ່ງ ຫຼື ທັງໝົດ ຂອງບໍລິສັດໂຄງການພາຍໃຕ້ສັນຍາສະບັບນີ້ ທີ່ຈະເຮັດ ແລະ ຈະມີຜົນສັກສິດໄດ້ ເມື່ອລັດຖະບານກຳນົດວ່າຜູ້ໄດ້ຮັບມອບສິດຂາດຄວາມສາມາດທາງດ້ານວິຊາການ, ການເງິນ ແລະ ການຄຸ້ມຄອງເພື່ອປະຕິບັດພັນທະທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້.

(ຄ) ການເຫັນດີທີ່ໃຫ້ໂດຍລັດຖະບານໃນການໂອນ ຫຼື ມອບໝາຍສິດຕາມທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ຈະບໍ່ເຮັດໃຫ້ບໍລິສັດໂຄງການຫຼຸດພົ້ນຈາກພັນທະໃດໜຶ່ງພາຍໃຕ້ສັນຍາສະບັບນີ້, ຍົກເວັ້ນແຕ່ຜູ້ໄດ່ຮັບມອບສິດໄດ້ເຫັນດີເປັນລາຍລັກອັກສອນທີ່ຈະຮັບເອົາສິດ ແລະ ພັນທະທັງໝົດຕາມທີ່ໄດ້ລະບຸໄວ້ຢູ່ໃນສັນຍາສະບັບນີ້. ເພື່ອຫຼີກລ່ຽງຄວາມສົງໄສ, ບໍລິສັດໂຄງການ ຍັງຄົງມີຄວາມຮັບຜິດຊອບຕໍ່ທຸກຄວາມເສຍຫາຍ ຫຼື ໜີ້ສິນທີ່ເກີດຂຶ້ນກ່ອນວັນທີ່ມີການມອບສິດ.

(ງ) ນອກຈາກນັ້ນ, ບຸກຄົນທີສາມຄວນຈະຖືກຮຽກຮ້ອງໃຫ້ມີການເຫັນດີເປັນລາຍລັກອັກສອນ ເພື່ອປະຕິບັດທຸກພັນທະຂອງບໍລິສັດໂຄງການພາຍໃຕ້ສັນຍາສະບັບນີ້ກ່ອນການໂອນ/ມອບໝາຍສິດໃດໜຶ່ງຈະມີຜົນສັກສິດ.

(ຈ) ບໍລິສັດໂຄງການ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ລັດຖະບານຊາບລ່ວງໜ້າ ຢ່າງໜ້ອຍສາມສິບ (30) ວັນ ໂດຍຜ່ານຫ້ອງການບໍລິການປະຕູດຽວ ກ່ອນການໂອນສິດ/ມອບໝາຍສິດທີ່ຕ້ອງການດັ່ງກ່າວ.

**18.02 ການປ່ຽນແປງການຄວບຄຸມ**

(ກ) ການປ່ຽນແປງການຄວບຄຸມຂອງບໍລິສັດໂຄງການຕາມບໍລສັດແມ່ ຕ້ອງໄດ້ຮັບການເຫັນດີເປັນລາຍລັກອັກສອນເສຍກ່ອນຈາກລັດຖະບານ, ຊຶ່ງການເຫັນດີນັ້ນຈະຕ້ອງບໍ່ຖືກໂຈະໄວ້ໂດຍບໍ່ສົມເຫດສົມຜົນ. ບໍລິສັດໂຄງການຕ້ອງແຈ້ງເປັນລາຍລັກອັກສອນໃຫ້ໃຫ້ລັດຖະບານຊາບລ່ວງໜ້າ ຢ່າງໜ້ອຍສາມສິບ (30) ວັນ ໂດຍຜ່ານຫ້ອງການບໍລິການປະຕູດຽວ ກ່ອນການປ່ຽນແປງການຄວບຄຸມທີ່ຕ້ອງການດັ່ງກ່າວ.

(ຂ) ບຸກຄົນໃດທີ່ຕ້ອງການຄວບຄຸມບໍລິສັດໂຄງການຈາກບໍລິສັດ ຕ້ອງຮັບຜິດຊອບການປະຕິບັດບສິດ ແລະ ພັນທະທັງໝົດທີ່ເກີດຂຶ້ນກ່ອນການປ່ຽນແປງດັ່ງກ່າວ ແລະ ຕ້ອງຊີ້ນຳບໍລິສັດໂຄງການໃນນາມເປັນຜູ້ຖືຮຸ້ນຂອງຕົນໃຫ້ປະຕິບັດ ແລະ ປະຕິບັດຕາມພັນທະ, ຄຳໝັ້ນສັນຍາ ແລະ ການສະເໜີຄວາມເປັນຈິງທັງໝົດ ຕາມທີ່ໄດ້ກຳນົດໄວ້ພາຍໃຕ້ສັນຍານີ້ທຸກເວລາຈົນກວ່າຈະສິ້ນສຸດໄລຍະສຳປະທານ.

(ຄ) ບໍ່ມີການປ່ຽນແປງການຄວບຄຸມສິດ ຫຼື ພັນທະ ໃດໜຶ່ງ ຫຼື ທັງໝົດ ຂອງບໍລິສັດໂຄງການພາຍໃຕ້ສັນຍາສະບັບນີ້ ທີ່ຈະເຮັດ ແລະ ຈະມີຜົນສັກສິດໄດ້ ເມື່ອລັດຖະບານກໍານົດວ່າຜູ້ໄດ້ຮັບມອບສິດຂາດຄວາມສາມາດທາງດ້ານວິຊາການ, ການເງິນ ແລະ ການຄຸ້ມຄອງເພື່ອປະຕິບັດພັນທະທີ່ໄດ້ກໍານົດໄວ້ຢູ່ໃນສັນຍາສະບັບນີ້.

**18.03** **<u>ການຫ້າມການມອບໝາຍສິດ ຫຼື ພັນທະຕໍ່ບຸກຄົນທີ່ຕ້ອງຫ້າມ</u>**. ບໍ່ມີກໍລະນີໃດທີ່ສັນຍາສະບັບນີ້ຈະຖືກມອບໝາຍສິດ ຫຼື ໂອນໃຫ້ບຸກຄົນທີ່ຕ້ອງຫ້າມ ຫຼື ບຸກຄົນທີ່ເປັນເຈົ້າຂອງ ຫຼື ຄວບຄຸມໂດຍບຸກຄົນທີ່ຕ້ອງຫ້າມໂດຍທາງກົງ ຫຼື ໂດຍທາງອ້ອມ.

**18.04** **<u>ຄ່າການໂອນ ຫຼື ຄ່າການມອບໝາຍສິດ.</u>** ລັດຖະບານສາມາດຮ້ອງຂໍໃຫ້ບໍລິສັດໂຄງການຈ່າຍຄ່າການໂອນ ຫຼື ຄ່າການມອບໝາຍສັນຍາສະບັບນີ້ (ນອກຈາກເມື່ອໂອນ ຫຼື ການມອບໝາຍນັ້ນທີ່ເປັນສ່ວນໜຶ່ງຂອງການຊວດຈໍາ) ("ຄ່າການໂອນ"). ຄ່າການໂອນຈະຕ້ອງຄິດໄລ່ [ຕໍ່ເຮັກຕາຂອງພື້ນທີ່ໂຄງການ] ແລະ ຕ້ອງຈ່າຍເຂົ້າງົບປະມານຂອງລັດ.

## 18.05 <u>ຂໍ້ຫ້າມສໍາລັບການຈໍານອງ</u>

(ກ) ໂດຍໄດ້ຮັບການຮັບຮອງຂອງລັດຖະບານ, ບໍລິສັດໂຄງການສາມາດຈໍານອງ, ຄໍ້າປະກັນ ຫຼື ສ້າງພັນທະອື່ນໆ (ລວມກັນເອີ້ນວ່າ "**ການຈໍານອງ**) ຜົນປະໂຫຍດຂອງຕົນພາຍໃຕ້ສັນຍານີ້ ແລະ ທີ່ສໍາຄັນແມ່ນພື້ນທີ່ທັງໝົດ, ໂຄງລ່າງພື້ນຖານ ແລະ ກໍາມະສິດອື່ນໆ (ລວມທັງ ຊັບສິນທາງປັນຍາ, ອຸປະກອນ) ທີ່ຈໍາເປັນສໍາລັບການດໍາເນີນງານໂຄງການ ("**ຊັບສິນຈໍານອງ**") ເພື່ອສະໜອງທຶນໃຫ້ຄ່າໃຊ້ຈ່າຍສ່ວນໃດສ່ວນໜຶ່ງຂອງການສ້າງ ແລະ ດໍາເນີນງານໂຄງການ.

(ຂ) ບໍ່ມີກໍລະນີໃດທີ່ບໍລິສັດໂຄງການ ຈະສາມາດເອົາຜົນປະໂຫຍດໃນຕົ້ນໄມ້, ລວມທັງພືດທີ່ປູກທີ່ຢູ່ພາຍໃນພື້ນທີ່ໂຄງການ, ໄປຈໍານອງ, ຄໍ້າປະກັນ ຫຼື ສ້າງພັນທະໄດ້.

(ຄ) ທຸກການຕົກລົງລະຫວ່າງບໍລິສັດໂຄງການ ແລະ ຜູ້ຖືການຈໍານອງ ຈະຕ້ອງປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

(ງ) ຜູ້ຖືການຈໍານອງ ຕ້ອງຕົກລົງເປັນລາຍລັກອັກສອນກັບລັດຖະບານ ເພື່ອໂອນທຸກຂໍ້ຫ້າມທີ່ໄດ້ກໍານົດໄວ້ຢູ່ໃນມາດຕາ 18 ແລະ ຂໍ້ຫ້າມສະເພາະກ່ຽວກັບໂອນໃຫ້ແກ່ບຸກຄົນທີ່ຕ້ອງຫ້າມ.

(ຈ) ການຍົກເລີກການຈໍາຈອງ ຫຼື ການປະຕິບັດການຊົດເຊີຍພາຍໃຕ້ການຈໍານອງຈະຕ້ອງເປັນຜົນຈາກ ການໂອນສິດຂອງບໍລິສັດໂຄງການພາຍໃຕ້ສັນຍາສະບັບນີ້ ແລະ ຊັບສິນທີ່ຊວດຈໍາກັບບຸກຄົນໃດໜຶ່ງທີ່ຕອບສະໜອງທຸກເງື່ອນໄຂສໍາລັບຜູ້ໄດ້ຮັບມອບໝາຍສິດຕາມມາດຕາ 18.

(ສ) ບໍລິສັດໂຄງການຈະຕ້ອງເອົາລາຍລະອຽດຂອງການຈໍານອງ ແລະ ການຈ່າຍເງິນກູ້ ຫຼື ຮຸ້ນເຂົ້າໃນບົດລາຍງານປະຈໍາປີກ່ຽວກັບຄວາມຄືບໜ້າທີ່ສົ່ງໃຫ້ຫ້ອງການບໍລິການປະຕູດຽວ.

## ມາດຕາ19 ເຫດສຸດວິໄສ

**19.01** <u>ຂອບເຂດການນຳໃຊ້</u>

(ກ) ທຸກຄວາມຫຼົ້ມເຫຼວຂອງຄູ່ສັນຍາຝ່າຍໃດຝ່າຍໜຶ່ງໃນການປະຕິບັດພັນທະພາຍໃຕ້ສັນຍາສະບັບນີ້, ນອກຈາກພັນທະໃນການຊຳລະເງິນ, ຈະຕ້ອງບໍ່ຖືວ່າເປັນການລະເມີດສັນຍາ, ການບໍ່ຈັດຕັ້ງປະຕິບັດຕາມພັນທະ ຫຼື ຂໍ້ບົກພ່ອງຖ້າຫາກຄວາມລົ້ມເຫຼວດັ່ງກ່າວເກີດຈາກເຫດສຸດວິໄສຕາມທີ່ກຳນົດໃນຂໍ້19.05 ຊຶ່ງຝ່າຍທີ່ໄດ້ຮັບຜົນກະທົບໄດ້ໃຊ້ຄວາມພະຍາຍາມທັງໝົດໃນການແກ້ໄຂບັນຫາດັ່ງກ່າວ.

(ຂ) ຄູ່ສັນຍາຝ່າຍທີ່ຄວາມສາມາດໃນການປະຕິບັດພັນທະຂອງຕົນໄດ້ຮັບຜົນກະທົບຈາກເຫດສຸດວິໄສ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຄູ່ສັນຍາອີກຝ່າຍໜຶ່ງຊາບໃນທັນໃດ ໂດຍບອກສາເຫດ ແລະ ຜົນກະທົບຂອງເຫດສຸດວິໄສຕໍ່ຄູ່ສັນຍາດັ່ງກ່າວ ແລະ ຕໍ່ໂຄງການ. ພາຍໃນສິບຫ້າ (15) ວັນຫຼັງຈາກວັນທີ່ລັດຖະບານໄດ້ຮັບການແຈ້ງໃຫ້ຊາບ, ຄູ່ສັນຍາທັງສອງຝ່າຍຕ້ອງປະຊຸມປຶກສາຫາລືກັນກ່ຽວກັບວິທີແກ້ໄຂ ຫຼື ຫຼຸດຜ່ອນຜົນກະທົບຈາກເຫດສຸດວິໄສດັ່ງກ່າວ ແລະ ແຕ່ຄູ່ສັນຍາແຕ່ລະຝ່າຍຕ້ອງພະຍາຍາມເຮັດທຸກກະທຳ ແລະ ທຸກສິ່ງທຸກຢ່າງຢ່າງສົມເຫດສົມຜົນພາຍໃຕ້ສິດອຳນາດຂອງຕົນເພື່ອແກ້ໄຂສາເຫດດັ່ງກ່າວ.

(ຄ) ຄູ່ສັນຍາຝ່າຍທີ່ທີ່ພັນທະຂອງຕົນໄດ້ຮັບຜົນກະທົບຈາກເຫດສຸດວິໄສ ຈະຕ້ອງມີສິດໃນໂຈະການປະຕິບັດພັນທະທີ່ຖືກກະທົບພາຍໃຕ້ສັນຍານີ້ (ນອກຈາກພັນທະໃນການຊຳລະເງິນເມື່ອຮອດກຳນົດເວລາຊຳລະ) ໃນຂອບເຂດທີ່ຕົນບໍ່ສາມາດປະຕິບັດພັນທະຂອງຍ້ອນເຫດສຸດວິໄສ ຫຼື ຜົນກະທົບຂອງເຫດສຸດວິໄສ, ແຕ່ໂດຍມີເງື່ອນໄຂວ່າ ພັນທະດັ່ງກ່າວຈະຖືກໂຈະພຽງແຕ່ໃນຂອບເຂດເວລາ ແລະ ຍາວເທົ່າທີ່ພັນທະດັ່ງກ່າວໄດ້ຮັບຜົນກະທົບຢ່າງຮ້າຍແຮງດ້ວຍເຫດສຸດວິໄສເທົ່ານັ້ນ.

(ງ) ຄູ່ສັນຍາຝ່າຍທີ່ພັນທະຂອງຕົນໄດ້ຮັບຜົນກະທົບຈາກເຫດສຸດວິໄສ ຈະຕ້ອງນຳໃຊ້ທຸກຄວາມພະຍາຍາມຢ່າງສົມເຫດສົມຜົນ ໂດຍການນຳໃຊ້ຄ່າໃຊ້ຈ່າຍຕົນເອງ ເພື່ອ (ກ) ຫຼຸດຜ່ອນ ໄລຍະ, ຄວາມໜັກໜ່ວງ ແລະ ຜົນກະທົບ ຫຼື ເຫດສຸດວິໄສທີ່ກ່ຽວຂ້ອງ, (ຂ) ແກ້ໄຂຄວາມບໍ່ສາມາດຂອງຕົນເພື່ອປະຕິບັດພັນທະຂອງຕົນທີ່ໄດ້ຮັບຜົນກະທົບ, (ຄ) ສືບຕໍ່ປະຕິບັດພັນທະນຂອງຕົນທີໄດ້ຮັບຜົນກະທົບພາຍໃຕ້ສັນຍານີ້ໃຫ້ໄວເທົ່າທີ່ຈະໄວໄດ້.

(ຈ) ຄູ່ສັນຍາແຕ່ລະຝ່າຍຈະຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດທີ່ໄດ້ເກີດຂຶ້ນ ຊຶ່ງເປັນຜົນມາຈາກເຫດສຸດວິໄສທີ່ໄດ້ສົ່ງຜົນກະທົບຕໍ່ພັນທະຂອງຕົນພາຍໃຕ້ສັນຍານີ້.

**19.02** **<u>ການປັບປຸງພັນທະທີ່ຖືກໂຈະຄືນ</u>**. ຖ້າເຫດສຸດວິໄສທີ່ໄດ້ຖືກແຈ້ງໃຫ້ຊາບພາຍໃຕ້ ຂໍ້<u>19.01</u>ສິ້ນສຸດລົງ, ແຕ່ລະຝ່າຍຂອງຄູສັນຍາງມີສິດສົ່ງແຈ້ງການໄປໃຫ້ຄູ່ສັນຍາອີກຝ່າຍໜຶ່ງຊາບ ໂດຍແຈ້ງໃຫ້ຊາບວ່າເຫດສຸດວິໄສດັ່ງກ່າວນັ້ນໄດ້ສິ້ນສຸດລົງແລ້ວ ແລະ ພັນທະຂອງຄູ່ສັນຍາ, ຖ້າຖືກໂຈະຕາມ<u>ຂໍ້19.01,</u> ຈະຕ້ອງຖືກປັບປຸງຄືນໃຫ້ມີຜົນບັງຄັບປະຕິບັດ ແລ ະມີຜົນສັກສິດຢາງເຕັມສ່ວນ. ໃນກໍລະນີທີ່ຄູ່ສັນຍາຝ່າຍໄດ້ຮັບແຈ້ງການບໍ່ເຫັນດີວ່າເຫດສຸດວິໄສນັ້ນໄດ້ສິ້ນສຸດລົງ, ຄູ່ສັນຍາທັງ

ສອງຝ່າຍຕ້ອງມີປະຕິບດຕາມຂັ້ນຕອນຂອງການແກ້ໄຂຂໍ້ຂັດແຍ່ງຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 22 ຂອງສັນຍາສະບັບນີ້.

**19.03** **<u>ການດັດແກ້ຕາຕະລາງເວລາ ແລະ ການຕໍ່ໄລຍສຳປະທານ.</u>** ໂດຍມີເງື່ອນໄຂວ່າຖ້າຄູ່ສັນຍາຝ່າຍທີ່ອ້າງວ່າໄດ້ຮັບຜົນກະທົບຈາກເຫດສຸດວິໄສຫາກໄດ້ປະຕິບັດຕາມຂັ້ນຕອນຂອງການແຈ້ງພາຍໃຕ້ຂໍ້ນີ້, ໄລຍະສຳປະທານຈະຕ້ອງໄດ້ຮັບການຕໍ່ເວລາຢ່າງຄວາມເໝາະສົມໄປອີກເປັນໄລຍະເວລາທີ່ພຽງພໍສຳລັບໃຫ້ຄູ່ສັນຍາຝ່າຍທີ່ອ້າງວ່າໄດ້ຮັບຜົນກະທົບຈາກເຫດສຸດວິໄສກັບຄືນເຂົ້າສູ່ສະພາບເດີມ ຄືກັນກັບວ່າເຫດສຸດວິໄສດັ່ງກ່າວບໍ່ໄດ້ເກີດຂຶ້ນ.

**19.04** **<u>ການຍົກເລີກສັນຍາຍ້ອນເຫດສຸດວິໄສ</u>** ຖ້າວ່າສະພາບຂອງເຫດສຸດວິໄສສືບຕໍ່ເປັນໄລຍະເວລາສາມຮ້ອຍຫົກສິບຫ້າ (365) ວັນຕິດຕໍ່ກັນ ແລະ ໃນແຕ່ກໍລະນີໄດ້ກີດກັນການດຳເນີນງານໂຄງການ ຫຼື ການສົ່ງອອກ ຫຼື ການຂາຍຜະລິດຕະພັນຢູ່ໃນພື້ນທີ່ໂຄງການທັງໝົດ ຫຼື ຢູ່ໃນສ່ວນໃດໜຶ່ງທີ່ສຳຄັນຂອງພື້ນທີ່ໂຄງການ (ໃນແຕ່ກໍລະນີເອີ້ນວ່າ "**ເຫດສຸດວິໄສຕໍ່ເນື່ອງ**"), ຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ມີສິດຍົກເລີກສັນຍາສະບັບນີ້. ຄູ່ສັນຍາຝ່າຍທີ່ຍົກເລີກຕ້ອງແຈ້ງໃຫ້ອີກຄູ່ສັນຍາຝ່າຍຊາບບໍ່ເກີນຫົກສິບ (60) ວັນກ່ອນການຍົກເລີກສັນຍາດັ່ງກ່າວ ແລະ ການຍົກສັນຍາດັ່ງກ່າວ ຈະບໍ່ມີພັນທະ ຫຼື ຄ່າໃຊ້ຈ່າຍເພີ່ມ, ຍົກເວັ້ນແຕ່ພັນທະສະສົມກ່ອນການຍົກເລີກສັນຍາ, ລວມທັງ ພັນທະຈ່າຍຈຳນວນເງິນສະສົມກ່ອນການຍົກເລີກສັນຍາ.

**19.05** ໃນກໍລະນີປິດ ຫຼື ຢຸດການດຳເນີນໂຄງການຊົ່ວຄາວ, ບໍລິສັດໂຄງການຕ້ອງ,ຕໍ່ການປະຕິບັດພັນທະໃດໜຶ່ງ ຫຼື ທັງໝົດຕາມທີ່ໄດ້ກຳນົດໄວ້ພາຍໃຕ້ຂໍ້ 15, ຂໍ້ 16 ແລະ ຂໍ້ 17, ເຊັ່ນດຽວກັນກັບໃນເອກະສານຊ້ອນທ້າຍ IV (ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ). ຖ້າສັນຍາສະບັບນີ້ຫາກຖືກຍົກເລີກຍ້ອນເຫດສຸດວິໄສຕໍ່ເນື່ອງ ແລະ ຫຼັງຈາກໄດ້ຮັບການຮັບຮອງຂອງລັດຖະບານແລ້ວ, ບໍລິສັດໂຄງການຈຳເປັນຕ້ອງປະຕິບັດແຜນການຟື້ນຟູ ແລະ ດັດແກ້ຈຳນວນເງິນ [ຄ້ຳປະກັນການຟື້ນຟູ] ທີ່ກຳນົດໄວ້ພາຍໃຕ້ສັນຍາສະບັບນີ້.

**19.06** **<u>ການອະທິບາຍຄຳສັບ.</u>** ຄຳສັບ "*ເຫດສຸດວິໄສ*" ຕາມທີ່ໃຊ້ໃນສັນຍາສະບັບນີ້ ໝາຍເຖິງ (i) ສົງຄາມ, ການຮຸກຮານ, ການປະຕິວັດ, ສົງຄາມກາງເມືອງ, ການກໍ່ການຮ້າຍ, (ii) ຂໍ້ຫ້າມທາງດ້ານການຄ້າ ແລະ ທຸລະກິດ ທີ່ວາງໃສ່ ດ້ວຍສິດອຳນາດລັດ, , ການຂ້ວາມບາດ, ການປິດການເຂົ້າອອກ ຫຼື ການກໍ່ວິນາດສະກຳ, (iii) ອັກຄີໄພ, ການລະເບີດ, ການບໍ່ສາມາດມີໄດ້ ຫຼື ການແຊກແຊງເຂົ້າໃນວິທີປົກກະຕິຂອງການຂົນສົ່ງຜະລິດຕະພັນທີ່, ແຜ່ນດິນໄຫວ ຫຼື ໄພທຳມະຊາດອື່ນໆ (ນອກຈາກການປ່ຽນແປງສະພາບອາກາດຕາມປົກກະຕິ, ເຊັ່ນ ນ້ຳຖ້ວມຕາມລະດູການ), ພະຍາດລະບາດ ຫຼື ເຫດສຸກເສີນດ້ານສາທາລະນາສຸກ, ການລະບາດຂອງພະຍາດ, ແຕ່ເຖິງຢ່າງໃດກໍຕາມ ໂດຍມີເງື່ອນໄຂວ່າສາເຫດໃດໜຶ່ງດັ່ງກ່າວ ແມ່ນຢູ່ເໜືອການຄວບຄຸມຢ່າງສົມເຫດສົມຜົນ ຫຼື ຊຶ່ງເກີດຂຶ້ນບໍ່ແມ່ນຍ້ອນຄວາມຜິດ ຫຼື ການບໍ່ລະມັດລະວັງຂອງຄູ່ສັນຍາຝ່າຍທີ່ຮຽກຮ້ອງສິດຂອງຕົນ ຂໍ້19.01 ຊຶ່ງເປັນຜົນມາຈາກເຫດສຸດວິໄສ ແລະ ບໍ່ສາມາດຫຼີກລ້ຽງ ຫຼື ແກ້ໄຂໄດ້ໂດຍຄູ່ສັນຍາຝ່າຍດັ່ງກ່າວ ດ້ວຍການປະຕິບັດການສືບສວນ ຫຼື ການເອົາໃຈໃສ່ຢ່າງສົມເຫດສົມຜົນ.

## ມາດຕາ 20 ການໃຊ້ແທນຄ່າເສຍຫາຍ; ການຄ້ຳປະກັນ

20.01 **<u>ການໃຊ້ແທນຄ່າເສຍຫາຍຊຶ່ງກັນ ແລະ ກັນ.</u>** ຄູ່ສັນຍາແຕ່ລະຝ່າຍ ຕ້ອງໃຊ້ແທນຄ່າເສຍຫາຍ ແລະ ຕ້ອງເຮັດໃຫ້ຄູ່ສັນຍາອີກຝ່າຍໜຶ່ງ, ຜູ້ອອກແຮງງານ ແລະ ບໍລິສັດເຄືອຂ່າຍຂອງພວກກ່ຽວ, ແລະ ໃນກໍລະນີຂອງບໍລິສັດໂຄງການນີ້ແມ່ນບໍລິສັດແມ່, ຫຼຸດພົ້ນຈາກຄວາມເສຍຫາຍຈາກ:

(ກ) ການຮ້ອງຟ້ອງ ແລະ ຮັບຜິດຊອບຕໍ່ບຸກຄົນທີສາມ, ຄວາມເສຍຫາຍ ແລະ ການສູນເສຍ ທີ່ຄູ່ສັນຍາອີກຝ່າຍໜຶ່ງໄດ້ຮັບເນື່ອງຈາກການລະເມີດສັນຍາຂອງຄູ່ສັນຍາຝ່າຍທີ່ຕ້ອງໃຊ້ແທນຄ່າເສຍຫາຍ ລວມທັງທຸກ ຄ່າໃຊ້ຈ່າຍ, ການໃຊ້ຈ່າຍ, ການສູນເສຍ ແລະ ຄວາມເສຍຫາຍເນື່ອງຈາກການລະເມີດສັນຍາສະບັບນີ້ໂດຍຄູ່ສັນຍາຝ່າຍທີ່ຕ້ອງໃຊ້ແທນຄ່າເສຍຫາຍ ແລະ ຄວາມຫຼົ້ມເຫຼວຂອງຄູ່ສັນຍາຝ່າຍທີ່ຕ້ອງໃຊ້ແທນຄ່າເສຍຫາຍໃນການປະຕິ ບັດພັນທະ ຫຼື ຄຳໝັ້ນສັນຍາທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້.

(ຂ) ການຮ້ອງຟ້ອງ, ຄວາມເສຍຫາຍ, ການສູນເສຍ ແລະ ຄວາມຮັບຜິດຊອບຕໍ່ການເສຍຊີວິດ ຫຼື ການບາດເຈັບຂອງບຸກຄົນ ຫຼື ຄວາມເສຍຫາຍຕໍ່ຊັບສິນໃດໜຶ່ງທີ່ຢູ່ໃນ ສປປ ລາວ ເນື່ອງຈາກການກະທຳທີ່ບໍ່ຖືກຕ້ອງໂດຍເຈດຕະນາ ຫຼື ການບໍ່ລະມັດລະວັງຢ່າງຮ້າຍແຮງຂອງຄູ່ສັນຍາອີກຝ່າຍໜຶ່ງ.

ຄ) *ການອະທິບາຍຄຳສັບ.* ເພື່ອຈຸດປະສົງຂອງມາດຕາ 20, ປະໂຫຍກຄຳເວົ້າ ***"ການກະທຳທີ່ບໍ່ຖືກຕ້ອງໂດຍເຈດຕະນາ ຫຼື ການບໍ່ລະມັດລະວັງຢ່າງຮ້າຍແຮງ"*** ໝາຍເຖິງ ການກະທຳໂດຍເຈດຕະນາ ຫຼື ໂດຍປະໝາດຂອງຄູ່ສັນຍາຝ່າຍໃດຝ່າຍໜຶ່ງ (ຫຼື ໃນກໍລະນີຂອງລັດຖະບານ, ໝາຍເຖິງ ບຸກຄົນທີ່ວ່າໜ້າທີ່ໃນນາມລັດຖະບານ ແລະ ຕາມການຊີ້ນຳໂດຍກົງຂອງລັດຖະບານ, ແລະ ໃນກໍລະນີຂອງບໍລິສັດໂຄງການ ແລະ ບໍລິສັດແມ່, ໝາຍເຖິງ ຜູ້ອອກແຮງງານ, ຕົວແທນ ຫຼື ບໍລິສັດເຄືຂ່າຍຂອງບໍລິສັດໂຄງການ ແລະ ບໍລິສັດແມ່) ທີ່ກ່ຽວຂ້ອງກັບສັນຍາສະບັບນີ້ ທີ່ເປັນຜົນສະທ້ອນທີ່ເປັນອັນຕະລາຍ, ສາມາດຄາດຄະເນ ແລະ ຫຼີກລ້ຽງໄດ້, ແຕ່ບໍ່ກວມເອົາການບໍ່ລະມັດລະວັງ ຫຼື ຄວາມຜິດພາດທຳມະດາເລັກນ້ອຍ ຫຼື ຄວາມຜິດພາດຂອງການຕັດສິນທີ່ຄູ່ສັນຍາຝ່າຍໃດຝ່າຍໜຶ່ງໄດ້ເຮັດຂຶ້ນດ້ວຍຄວາມຈິງໃຈໃນການປະຕິບັດສິດອຳນາດ ຫຼື ການພິຈານາດ້ວຍຕົນເອງແຕ່ພຽງຝ່າຍດຽວທີ່ໄດ້ກຳນົດໄວ້ຢູໃນສັນຍາສະບັບນີ້.

ຖ້າຄູ່ສັນຍາຝ່າຍໃດຝ່າຍໜຶ່ງມີສິດທີ່ຈະໄດ້ຮັບການໃຊ້ແທນຄ່າເສຍຫາຍ ຕາມມາດຕາ 20 ຂອງສັນຍາສະບັບນີ້, ຄູ່ສັນຍາຝ່າຍທີ່ຕ້ອງໃຊ້ແທນຄ່າເສຍຫາຍ ຈະຕ້ອງຈ່າຍຄ່າໃຊ້ແທນຄວາມເສຍຫາຍໃຫ້ອີກຄູ່ສັນຍາອີກຝ່າຍໜຶ່ງ ພາຍໃນສີ່ສິບຫ້າ (45) ວັນນັບຈາກວັນໄດ້ຮັບແຈ້ງການເປັນລາຍລັກອັກສອນຈາກຄູ່ສັນຍາຝ່າຍທີ່ຮຽກຮ້ອງຄ່າເສຍຫາຍ ໂດຍບອກເຖິງຄວາມຈິງທີ່ພາໃຫ້ເກີດມີການຮ້ອງຟ້ອງຄູ່ສັນຍາຝ່າຍດັ່ງກ່າວໃຫ້ໃຊ້ແທນຄ່າເສຍຫາຍ ແລະ ຈຳນວນເງິນນຂອງການຮ້ອຟ້ອງດັ່ງກ່າວ, ລວມທັງຄ່າບໍລິການທາງດ້ານກົດໝາຍທີ່ກໍ່ໃຫ້ເກີດຂຶ້ນໂດຍຄູ່ສັນຍາດັ່ງກ່າວຈາກການຮ້ອງຟ້ອງ.

**20.02** **<u>ຄວາມຮັບຜິດຊອບຮ່ວມກັນ</u>** ໃນກໍລະນີທີ່ຄວາມຮັບຜິດຊອບ, ການສູນເສຍ, ການເສຍຫາຍ, ການໃຊ້ຈ່າຍ ຫຼື ການຮ້ອງຟ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ໄດ້ເກີດຈາກການກະທຳ ຫຼື ການເມີຍເສີຍພ້ອມກັນຂອງຄູ່ສັນຍາ, ຄູ່ສັນຍາແຕ່ລະຝ່າຍຈະຕ້ອງມີຄວາມຮັບຜິດຊອບຕໍ່ຄູ່ສັນຍາອີກຝ່າຍໜຶ່ງພຽງແຕ່ສ່ວນຂອງຕົນທີ່ກ່ຽວກັບລະດັບຂອງຄວາມຮັບຜິດຊອບສຳລັບຄວາມຮັບຜິດຊອບ, ການສູນເສຍ, ການເສຍຫາຍ, ການໃຊ້ຈ່າຍ ຫຼື ການຮ້ອງຟ້ອງ ທີ່ໄດ້ເກີດນຂຶ້ນຈາກການກະທຳ ຫຼື ການເມີຍເສີຍພ້ອມກັນຂອງຄູ່ສັນຍາ.

**20.03** **<u>ການຮັບປະກັນຂອງບໍລິສັດແມ່.</u>** ດ້ວຍສັນຍາສະບັບນີ້, ບໍລິສັດແມ່ຕ້ອງຮັບປະກັນໂດຍບໍ່ມີເງື່ອນໄຂຕໍ່ການປະຕິບັດພັນທະຢ່າງທັນການ ແລະ ຢ່າງເຕັມສ່ວນ ໂດຍບໍລິສັດໂຄງການຕາມທີ່ໄດ້ກຳນົດໄວ້ຢູ່ໃນເອກະສານຊ້ອນທ້າຍ V (*ພັນທະທີ່ມີການຄໍ້າປະກັນ*) ຂອງສັນຍາສະບັບນີ້.

## ມາດຕາ 21 ກົດໝາຍຄຸ້ມຄອງ

**21.01** **<u>ກົດໝາຍທີ່ນຳໃຊ້.</u>** ສັນຍາສະບັບນີ້ ຖືກຄຸ້ມຄອງໂດຍ ແລະ ຕີຄວາມໝາຍຕາມ ກົດໝາຍຂອງ ສປປ ລາວ.

**21.02** **<u>ການປະຕິບັດຕາມກົດໝາຍຂອງ ສປປ ລາວ.</u>** ບໍລິສັດໂຄງການຕ້ອງປະຕິບັດຕາມກົດໝາຍຂອງ ສປປ ລາວທີ່ມີຜົນສັກສິດໃນແຕ່ລະໄລຍະ.

## ມາດຕາ 22 ການແກ້ໄຂຂໍ້ຂັດແຍ່ງ

**22.01** **<u>ການແກ້ໄຂຂໍ້ຂັດແຍ່ງແບບເພື່ອນມິດ.</u>** ເມື່ອມີຂໍ້ຂັດແຍ່ງ, ຂໍ້ໂຕ້ຖຽງ ຫຼື ການຮ້ອງຟ້ອງອທີ່ເກີດຂຶ້ນຈາກ ຫຼື ກ່ຽວຂ້ອງກັບສັນຍາສະບັບນີ້ ລວມທັງ ຂໍ້ຂັດແຍ່ງກ່ຽວກັບການຄົງຕົວ, ການຕີຄວາມໝາຍ, ການມີຄຸນຄ່າດ້ານກົດໝາຍ, ການຍົກເລີກສັນຍາ ຫຼື ການກະທຳ ຫຼື ການເມີຍເສີຍຂອງຄູ່ສັນຍາຝ່າຍໃດຝ່າຍໜຶ່ງທີ່ອ້າງໄດ້ມີການລະເມີດສັນຍາສະບັບນີ້ ຊຶ່ງຕໍ່ໄປນີ້ເອີ້ນວ່າ "**ຂໍ້ຂັດແຍ່ງ**", ຂໍ້ຂັດແຍ່ງດັ່ງກ່າວຈະຕ້ອງຖືກແກ້ໄຂແບບເພື່ອນມິດເທົ່າທີ່ສາມາດເປັນໄປໄດ້ ດ້ວຍການເຈລະຈາ ກ່ອນທີ່ຈະມີການສະເໜີໃຫ້ມີການໄກ່ເກ່ຍຕາມມາດຕາ 22.03.

**22.02** **<u>ຜູ້ຊ່ຽວຊານເອກະລາດ</u>**. ສຳລັບບັນຫາກ່ຽວກັບຂໍ້ຂັດແຍ່ງທີ່ມີລັກສະນະເຕັກນິກ, ຄູ່ສັນຍາສາມາດຕົກລົງກັນຊອກຫາວິທີຕົກລົງແກ້ໄຂບັນຫາໃນຂໍ້ຂັດແຍ່ງແບບເປັນເອກະລາດ, ລວມທັງ ດ້ວຍວິທີຕາມຂັ້ນຕອນດັ່ງຕໍ່ໄປນີ້:

(ກ) ຄູ່ສັນຍາສາມາດຕົກລົງກັນສະເໜີຂໍ້ຂັດແຍ່ງ ຫຼື ຂໍ້ໂຕຖຽງກ່ຽວກັບບັນຫາເຕັກນິກໂດຍສະເພາະ ໃຫ້ຜູ້ຊ່ຽວຊານເອກະລາດເປັນຜູ້ແກ້ໄຂ;

(ຂ) ຄູ່ສັນຍາແຕ່ລະຝ່າຍມີເວລາສິບວັນ ຫຼັງຈາກໄດ້ຄັດເລືອກເອົາຜູ້ຊ່ຽວຊານເອກະລາດ ທີ່ຈະສະເໜີຈຸດຢືນຂອງຕົນເປັນລາຍລັກອັກສອນໄປໃຫ້ຜູ້ຊ່ຽວຊານເອກະລາດ;

(ຄ) ຄູ່ສັນຍາຕ້ອງຕົກລົງວ່າຕົນມີຄວາມຕ້ອງຢາກສະເໜີເຫດຜົນຂໍ້ອ້າງຫຍັງເພີ່ມຢູ່ໃນກອງປະຊຸມເພື່ອຖະແຫຼງທາງປາກເປົ່າ ຫຼື ບໍ. ຜູ້ຊ່ຽວຊານເອກະລາດສາມາດເປີດກອງປະຊຸມເພື່ອຖະແຫຼງທາງປາກເປົ່າດັ່ງກ່າວເຊັ່ນດຽວກັນ;

(ງ) ຄຳຕົກລົງຂອງຜູ້ຊ່ຽວຊານເອກະລາດ ຈະຕ້ອງອອກພາຍໃນ 30 (ສາມສິບ) ວັນຫຼັງຈາກມີເຫດຜົນຂໍ້ອ້າງຄົບຖ້ວນຕາມທີ່ໄດ້ກຳນົດໄວ້ເທິງນີ້ເຫດຜົນຂໍ້ອ້າງ.

(ຈ) ນອກຈາກນັ້ນທີ່ໄດ້ກຳນົດໄວ້ອີກເທິງນີ້ແລ້ວ, ຜູ້ຊ່ຽວຊານເອກະລາດ ຈະຕ້ອງມີການກະທຳດັ່ງຕໍ່ໄປລຸ່ມນີ້:

(i) ຜູ້ຊ່ຽວຊານເອກະລາດ ຕ້ອງເຮັດວຽກເປັນຊ່ຽວຊານເອກະລາດ ແລະ ບໍ່ເຮັດວຽກເປັນຜູ້ໄກ່ເກ່ຍ;

(ii) ລາຍການຂໍ້ຂັດແຍ່ງຕ້ອງໄດ້ແຈ້ງໃຫ້ຜູ້ຊ່ຽວຊານເອກະລາດເປັນລາຍລັກອັກສອນໂດຍຄູ່ສັນຍາພາຍໃນສິບ (10) ວັນຫຼັງຈາກການແຕ່ງຕັ້ງຊ່ຽວຊານເອກະລາດ;

(iii) ຜູ້ຊ່ຽວຊານເອກະລາດ ຕ້ອງຕົກລົງກ່ຽວກັບຂັ້ນຕອນທີ່ຈະດຳເນີນການຕົກລົງແກ້ໄຂຂໍ້ຂັດແຍ່ງ;

(iv) ຂໍ້ຕົກລົງແກ້ໄຂຂໍ້ຂັດແຍ່ງໂດຍຜູ້ຊ່ຽວຊານເອກະລາດ ຈະຕ້ອງເປັນຄັ້ງສຸດທ້າຍ ແລະ ຜູກມັດຄູ່ສັນຍາ; ແລະ

(v) ຄ່າໃຊ້ຈ່າຍຂອງການຕົກລົງແກ້ໄຂຂໍ້ຂັດແຍ່ງ, ລວມທັງ ຄ່ານຳໃຊ້ຜູ້ຊ່ຽວຊານເອກະລາດ ແລະ ການໃຊ້ຈ່າຍຈະໄດ້ຮັບຜິດຊອບເທົ່າກັນລະຫວ່າງຄູ່ສັນຍາທັງທັງສອງຝ່າຍ.

## 22.03 ການໄກ່ເກ່ຍແບບບັງຄັບ

(ກ) ເມື່ອຂໍ້ຂັດແຍ່ງບໍ່ສາມາດແກ້ໄຂໄດ້ຕາມມາດຕາ 22.01 ແລະ ມາດຕາ 22.02, ຄູ່ສັນຍາຝ່າຍທີ່ມີຈຸດປະສົງຢາກສະເໜີລິເລີ່ມການດຳເນີນແກ້ໄຂຂໍ້ຂັດແຍ່ງ ຈະຕ້ອງເລີ່ມຂັ້ນຕອນຂອງການໄກ່ເກ່ຍ ໂດຍສົ່ງແຈ້ງການກ່ຽວກັບການໄກ່ເກ່ຍໄປໃຫ້ຄູ່ສັນຍາອີກຝ່າຍໜຶ່ງເປັນລາຍລັກອັກສອນ;

(ຂ) ຜູ້ໄກ່ເກ່ຍ ຕ້ອງຖືກແຕ່ງຕັ້ງໂດຍການເຫັນດີຊຶ່ງກັນ ແລະ ກັນຂອງຄູ່ສັນຍາທັງສອງຝ່າຍພາຍໃນ 10 ວັນນັບແຕ່ຄູ່ສັນຍາຝ່າຍທີ່ບໍ່ເປັນຜູ້ລິເລີ່ມສະເໜີການໄກ່ເກ່ຍໄດ້ຮັບແຈ້ງການກ່ຽວກັບການໄກ່ເກ່ຍເປັນຕົ້ນໄປ. ຖ້າຫາກບໍ່ສາມາດໄດ້ຮັບການເຫັນດີດັ່ງກ່າວ, ຜູ້ໄກ່ເກ່ຍຈະຖືກແຕ່ງຕັ້ງໂດຍ [ . ];

(ຄ) ຜູ້ໄກ່ເກ່ຍຈະຕ້ອງຊ່ວຍຄູ່ສັນຍາໃຫ້ບັນລຸການຕົກລົງຊຶ່ງກັນ ແລະ ກັນ ດ້ວຍວິທີບໍ່ເຂົ້າຂ້າງອອກຂາ ແລະ ແບບໂປ່ງໃສ;

(ງ) ພາຍໃນ 10 ວັນຫຼັງຈາກໄດ້ມີການແຕ່ງຕັ້ງຜູ້ໄກ່ເກ່ຍ, ຄູ່ສັນຍາທີ່ໄດ້ຮ້ອງຂໍໃຫ້ມີການດຳເນີນການໄກ່ເກ່ຍຕ້ອງສະເໜີລາຍລະອຽດຂອງບັນຫາເປັນລາຍລັກອັກສອນໃຫ້ແກ່ຜູ້ໄກ່ເກ່ຍ ແລະ ຄູ່ສັນຍາອີກຝ່າຍໜຶ່ງຂອງຂໍ້ຂັດແຍ່ງ. ພາຍໃນ 20 ວັນຫຼັງຈາກໄດ້ຮັບການສະເໜີດັ່ງກ່າວ, ຄູ່ສັນຍາອີກຝ່າຍໜຶ່ງສາມາດໃຫ້ຄຳເຫັນຂອງຕົນເປັນລາຍລັກອັກສອນຕໍ່ລາຍລະອຽດຂອງບັນຫາ. ຄູ່ສັນຍາແຕ່ລະຝ່າຍສາມາດເອົາຂໍ້ມູນໃດໜຶ່ງທີ່ຕົນເຫັນວ່າມີສ່ວນກ່ຽວຂ້ອງ ເຂົ້າໃນລາຍລະອຽດ ຫຼື ຄຳເຫັນຂອງຕົນ;

(ຈ) ຜູ້ໄກ່ເກ່ຍສາມາດຕົກລົງວິທີທີ່ເໝາະສົມທີ່ສຸດໃນການໃຫ້ການອະທິບາຍຈະແຈ້ງຕໍ່ບັນຫາທີ່ກ່ຽວຂ້ອງ. ໂດຍສະເພາະ, ຜູ້ໄກ່ເກ່ຍສາມາດຈັດກອງປະຊຸມລະຫວ່າງຄູ່ສັນຍາ, ປຶກສາຫາລືກັບຄູ່ສັນຍາຮ່ວມກັນ ຫຼື ເປັນລາຍບຸກຄົນ, ຊອກຫາຄວາມຊ່ວຍເຫຼືອ ຫຼື ປຶກສາຫາລືນຳຜູ້ທີ່ມີສ່ວນຮ່ວມ ແລະ ຜູ້ຊ່ຽວຊານເອກະລາດທີ່ຖືກຄັດເລືອກໂດຍຄູ່ສັນຍາຕາມມາດຕາ 22.02 ແລະ ໃຫ້ການສະໜັບສະໜູນເພີ່ມເຕີມຕາມການຮ້ອງຂໍຂອງຄູ່ສັນຍາ. ເຖິງຢ່າງໃດກໍຕາມ, ກ່ອນຈະຊອກຫາຄວາມຊ່ວຍເຫຼືອ ຫຼື ປຶກສາຫາລືນຳຜູ້ທີ່ມີສ່ວນຮ່ວມ ແລະ ຜູ້ຊ່ຽວຊານເອກະລາດນັ້ນ, ຜູ້ໄກ່ເກ່ຍຕ້ອງໄດ້ປຶກສາຫາລືກັບຄູ່ສັນຍາເສຍກ່ອນ;

(ສ) ຜູ້ໄກ່ເກ່ຍສາມາດໃຫ້ຄຳເຫັນ ແລະ ສະເໜີການແກ້ໄຂເພື່ອພິຈາລະນາໂດຍຄູ່ສັນຍາ ຊຶ່ງອາດຈະຮັບເອົາ ຫຼື ປະຕິເສດການແກ້ໄຂທີ່ສະເໜີນັ້ນ ຫຼື ອາດຈະເຫັນດີກັບການແກ້ໄຂທີ່ແຕກຕ່າງກັນ;

(ຊ) ຂັ້ນຕອນຂອງການແກ້ໄຂຈະຕ້ອງດຳເນີນຢູ່ໃນ ສປປ ລາວ ຕາມການເຫັນດີຊຶ່ງກັນ ແລະ ກັນລະຫວ່າງຄູ່ສັນຍາ;

(ຍ) ຄູ່ສັນຍາຕ້ອງໃຊ້ຄວາມພະຍາຍາມບັນລຸການແກ້ໄຂທີ່ໄດ້ຮັບການເຫັນດີຊຶ່ງກັນ ແລະ ກັນພາຍໃນ 60 ວັນນັບແຕ່ວັນແຕ່ງຕັ້ງຜູ້ໄກ່ເກ່ຍເປັນຕົ້ນໄປ. ເມື່ອມີການໂຈະການເຫັນດີຄັ້ງສຸດທ້າຍ, ຄູ່ສັນຍາສາມາພິຈາລະນາການແກ້ໄຂທີ່ສາມາດເປັນໄປໄດ້ຊົ່ວຄາວ;

(ດ) ການແກ້ໄຂທີ່ເຫັນດີຊຶ່ງກັນ ແລະ ກັນ ຈະຕ້ອງເຮັດໃຫ້ສາທາລະນະຮູ້ໄດ້. ແຕ່ຢ່າງໃດກໍຕາມ, ເອກະສານສ່ວນທີ່ເປີດເຜີຍໃຫ້ສາທາລະນະຮູ້ນັ້ນອາດຈະບໍ່ບັນຈຸຂໍ້ມູນໃດໜຶ່ງ ຊຶ່ງຄູ່ສັນຍາກຳນົດວ່າເປັນຂໍ້ມູນທີ່ຮັກສາເປັນຄວາມລັບກ

(ຕ) ການດຳເນີນການແກ້ໄຂ ຈະສິ້ນສຸດລົງ:

(i) ດ້ວຍການຮັບຮອງເອົາການແກ້ໄຂທີ່ໄດ້ເຫັນດີຊຶ່ງກັນ ແລະ ກັນໂດຍຄູ່ສັນຍາ, ໃນວັນທີ່ໄດ້ມີການຮັບຮອງເອົາ;

(ii) ດ້ວຍການແຈ້ງເປັນລາຍລັກອັກສອນຂອງຜູ້ໄກ່ເກ່ຍຫຼັງຈາກການປຶກສາຫາລືນຳຄູ່ສັນຍາວ່າຄວາມະພາຍາຍາມໃນການໄກ່ເກ່ຍຕໍ່ໄປອີກຈະບໍ່ເປັນປະໂຫຍດຫຍັງ; ຫຼື

(iii) ດ້ວຍແຈ້ງການເປັນລາຍລັກອັກສອນຂອງຄູ່ສັນຍາຝ່າຍໃດຝ່າຍໜຶ່ງຖ້າຂໍ້ຂັດແຍ່ງຫາກບໍ່ສາມາດແກ້ໄຂໄດ້ພາຍໃນ 120 ວັນແຕ່ວັນໄດ້ສະເໜີໃຫ້ມີການໄກ່ເກ່ຍເປັນຕົ້ນໄປ.

(ຖ) ເມື່ອການແກ້ໄຂໄດ້ຮັບການເຫັນດີ, ຄູ່ສັນຍາແຕ່ລະຝ່າຍຕ້ອງມີການກະທຳທີ່ຈຳເປັນ ເພື່ອປະຕິບັດການແກ້ໄຂທີ່ໄດ້ເຫັນດີນຳກັນນັ້ນພາຍໃນຂອບເຂດເວລາທີ່ໄດ້ຕົກລົງໄວ້;

(ທ) ຄູ່ສັນຍາທີຕ້ອງປະຕິບັດ ຈະຕ້ອງແຈ້ງໃຫ້ຄູ່ສັນຍາອີກຝ່າຍໜຶ່ງເປັນລາຍລັກອັກສອນ ກ່ຽວກັບບາດກ້າວ ຫຼືການກະທຳທີ່ໄດ້ເຮັດເພື່ອການແກ້ໄຂທີ່ໄດ້ເຫັນດີນຳກັນ;

(ນ) ຜູ້ໄກ່ເກ່ຍ ຈະຕ້ອງເຮັດຮ່າງບົດລາຍງານກ່ຽວກັບຄວາມຈິງອອກໃຫ້ຄູ່ສັນຍາເປັນລາຍລັກອັກສອນ ໂດຍການສະຫຼຸບຫຍໍ້ກ່ຽວກັບ (1) ບັນຫາທີ່ເປັນບັນຫາໃນການດຳເນີນການແກ້ໄຂ; (2) ຂັ້ນຕອນທີ່ໄດ້ດຳເນີນ; ແລະ (3) ການແກ້ໄຂທີ່ໄດ້ຮັບການຕົກລົງເຫັນດີນຳກັນຊຶ່ງເປັນຜົນທີ່ໄດ້ຮັບຄັ້ງສຸດທ້າຍຂອງຂັ້ນຕອນດັ່ງກ່າວ, ລວມທັງ ການແກ້ໄຂທີ່ຊົ່ວຄາວທີ່ສາມາດເປັນໄປໄດ້. ຜູ້ໄກ່ເກ່ຍຈະຕ້ອງໃຫ້ເວລາແກ່ຄູ່ສັນຍາ 15 ວັນລັດຖະການເພື່ອໃຫ້ຄູ່ສັນຍາໃຫ້ຄຳເຫັນຕໍ່ຮ່າງບົດລາຍງານ. ຫຼັງຈາກໄດ້ພິຈາລະນາຄຳເຫັນຂອງຄູ່ສັນຍາທີ່ໄດ້ສະເໜີໃຫ້ພາຍໃນກຳນົດເວລານັ້ນແລ້ວ, ຜູ້ໄກ່ເກ່ຍ ຕ້ອງໄດ້ສະເໜີບົດລາຍງານກ່ຽວກັບຄວາມຈິງນັ້ນໃຫ້ຄູ່ສັນຍາພາຍໃນ 15 ວັນ. ບົດລາຍງານກ່ຽວກັບຄວາມຈິງ ຈະຕ້ອງບໍ່ມີການຕີຄວາມໝາຍໃດໜຶ່ງຂອງສັນຍາສະບັບນີ້;

(ບ) ຄູ່ສັນຍາທີ່ຂັດແຍ່ງກັນ ຈະຕ້ອງບໍ່ເຊື່ອ ຫຼື ນຳໃຊ້ເປັນຫຼັກຖານຢູ່ໃນຂັ້ນຕອນໃດໆຂອງການແກ້ໄຂຂໍ້ຂັດແຍ່ງ ແລະ ອີງການວິນິໄສຈະຕ້ອງບໍ່ນຳໄປພິຈາລະນາ:

(i) ຈຸດຢືນຂອງຄູ່ສັນຍາຝ່າຍໃດຝ່າຍໜຶ່ງທີ່ຢູ່ໃນໄລຍະຂັ້ນຕອນຂອງການໄກ່ເກ່ຍ;

(ii) ຄວາມຈິງທີ່ຄູ່ສນຍາຝ່າຍໃດຝ່າຍໜຶ່ງໄດ້ຊີ້ບອກຈຸດປະສົງຂອງຕົນທີ່ຈະຍອມຮັບການແກ້ໄຂຕໍ່ບັນຫາທີ່ເປັນເປົ້າໝາຍຂອງການໄກ່ເກ່ຍ;

(iii) ຄຳເຫັນທີໄດ້ໃຫ້ ຫຼື ຄຳສະເໜີຂອງຜູ້ໄກ່ເກ່ຍ.

(ປ) ເວັ້ນເສຍແຕ່ຄູ່ສັນຍາໄດ້ຕົກລົງໄວ້ເປັນຢ່າງອື່ນ ແລະ ໂດຍບໍ່ແຕະຕ້ອງມາດຕາ 23.03 (i), ທຸກບາດກ້າວຂອງການໄກ່ເກ່ຍ, ລວມທັງ ຄຳເຫັນ ແລະ ການແກ້ໄຂທີ່ສະເໜີ, ຈະຖືວ່າເກັບຮັກສາເປັນຄວາມລັບ. ແຕ່ເຖິງຢ່າງໃດກໍຕາມ, ຄູ້ສັນຍາຝ່າຍໃດຝ່າຍໜຶ່ງສາມາດເປີດເຜີຍຕໍ່ສາທາລະນະວ່າໄດ້ມີການໄກ່ເກ່ຍ;

(ຜ) ທຸກຂອບເຂດເວລາທີ່ກຳນົດໄວ້ຢູ່ໃນມາດຕາ 22.03 (ການໄກ່ເກ່ຍ) ສາມາດປ່ຽນແປງໄດ້ຕາມການເຫັນດີນຳກັນລະຫວ່າງຄູ່ສັນຍາທີ່ຂັດແຍ່ງກັນ;

(ຝ) ຄູ່ສັນຍາແຕ່ລະຝ່າຍຈະຕ້ອງຮັບຜິດຊອບການໃຊ້ຈ່າຍຂອງຕົນຈາກການເຂົ້າຮ່ວມໃນການດຳເນີນການໄກ່ເກ່ຍ;

(ຜ) ຄູ່ສັນຍາຈະຕ້ອງແບ່ງກັນຮັບຜິດຊອບການໃຊ້ຈ່າຍຮ່ວມກັນ ແລະ ເທົ່າກັນ ທຸກຄ່າໃຊ້ຈ່າຍທີ່ເກີດຈາກບັນຫາການຈັດຕັ້ງ, ລວມທັງ ຄ່າຕອບແທນ ແລະ ການໃຊ້ຈ່າຍຂອງຜູ້ໄກ່ເກ່ຍ.

**22.04 ການສະເໜີຂໍ້ຂັດແຍ່ງຕໍ່ສານພາຍໃນຂອງ ສປປ ລາວ**. ຖ້າຂໍ້ຂັດແຍ່ງບໍ່ສາມາດແກ້ໄຂໄດ້ດ້ວຍການໄກ່ເກ່ຍ ໂດຍສອດຄ່ອງຕາມມາດຕາ 22.03, ຄູ່ສັນຍາຝ່າຍໃດຝ່າຍໜຶ່ງສາມາດສະເໜີຂໍ້ຂັດແຍ່ງຕໍ່ສານພາຍໃນຂອງ ສປປ ລາວ ເພື່ອແກ້ໄຂຂໍ້ຂັດແຍ່ງ.

**22.05 ເງື່ອນໄຂຂອງການສະເໜີຄຳຮ້ອງຟ້ອງຕໍ່ຄະນະກຳມະການຕັດສິນຂໍ້ຂັດແຍ່ງ**. ຖ້າບໍ່ມີການແກ້ໄຂທາງລະບົບສານຢ່າງສົມເຫດສົມຜົນທີ່ສາມາດໃຫ້ການແກ້ໄຂຂໍ້ຂັດແຍ່ງທີ່ມີປະສິດທິຜົນ ຫຼື ຄູ່ສັນຍາໄດ້ຕົກລົງໄວ້ຢ່າງຈະແຈ້ງເປັນລາຍລັກອັກສອນກ່ຽວກັບການແກ້ໄຂດັ່ງກ່າວ, ຄູ່ສັນຍາຝ່າຍໃດຝ່າຍໜຶ່ງສາມາດສະເໜີນຂໍ້ຂັດແຍ່ງຕໍ່ຄະນະກຳມະການຕັດສິນໂດຍສອດຄ່ອງຕາມມາດຕາ 22.06, ໂດຍມີເງື່ອນໄຂວ່າ:

(ກ) ຄູ່ສັນຍາທີ່ສະເໜີໄດ້ໃຫ້ການສະລະສິດໃດໜຶ່ງຢ່າງຈະແຈ້ງ ແລະ ຢ່າງເດັດຂາດເພື່ອດຳເນີນ ແລະ/ຫຼື ສືບຕໍ່ການຮ້ອງຟ້ອງກ່ຽວກັບຂໍ້ຂັດແຍ່ງໃນນາມຄູ່ສັນຍາ ແລະ ບໍລິສັດເຄືອຂ່າຍຂອງຕົນ, ກ່ອນການປະຊຸມອື່ນໆໃດໜຶ່ງເພື່ອແກ້ໄຂຂໍ້ຂັດແຍ່ງ; ແລະ

(ຂ) ບໍ່ເກີນສາມປີທີ່ຜ່ານໄປນັບແຕ່ວັນທີ່ຄູ່ສັນຍາໄດ້ຮູ້ຂໍ້ຂັດແຍ່ງຄັ້ງທຳອິດ ຫຼື ຄວນຈະຮູ້ຂໍ້ຂັດແຍ່ງຄັ້ງທຳອິດ ແລະຮູ້ວ່າຄູ່ສັນຍາໄດ້ກໍ່ການສູນເສຍ ຫຼື ຄວາມເສຍຫາຍ, ຫຼື ໜຶ່ງປີນັບແຕ່ການສະຫຼຸບການດຳເນີນຄະດີຂອງສານທີ່ໄດ້ລິເລີ່ມຢູ່ໃນສານພາຍໃນຂອງ ສປປ ລາວ.

**22.06 ຄະນະກຳມະການຕັດສິນຂໍ້ຂັດແຍ່ງ**. ພາຍໃຕ້ມາດຕາ 22.05, ຄູ່ສັນຍາຝ່າຍໃດຝ່າຍໜຶ່ງສາມາດສະເໜີຂໍ້ຂັດແຍ່ງຕໍ່ຄະນະກຳມະການຕັດສິນຂໍ້ຂັດແຍ່ງທີ່ມີຜົນຜູກມັດ ຊຶ່ງດຳເນີນໂດຍຄະນະກຳມະການຕັດສິນຂໍ້ຂັດແຍ່ງຊຶ່ງປະກອບດ້ວຍສາມຄົນ **[**ພາຍໃຕ້ລະບຽບການ ຂອງຄະນະກຳມະການຂອງສະຫະປະຊາຊາດກ່ຽວກັບຄະນະກຳມະການຕັດສິນກົດໝາຍການຄ້າລະຫວ່າງປະເທດ ທີ່ມີຜົນສັກສິດຢູ່ໃນເວລາທີ່ໄດ້ມີການເລີ່ມການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການ ("ລະບຽບການຂອງ **UNCITRAL"]** ແລະ ຄຸ້ມຄອງ **[**ໂດຍສູນຄະນະກຳມະການຕັດສິນຂໍ້ຂັດແຍ່ງຂອງປະເທດສິງກະໂປ. ສະຖານທີ່ຂອງຄະນະກຳມະການຕັດສິນຂໍ້ຂັດແຍ່ງ ແມ່ນປະເທດສິງກະໂປ ແລະ ການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການຈະຖືກດຳເນີນເປັນພາສາອັງກິດ.**]** **[**ໂດຍອີງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສປປ ລາວ. ສະຖານທີ່ຂອງຄະນະກຳມະການຕັດສິນຂໍ້ຂັດແຍ່ງ ແມ່ນ ສປປ ລາວ ແລະ ການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການຈະຖືກດຳເນີນເປັນ (ພາສາອັງກິດ.**]**.

**22.07 ການຮ້ອງຟ້ອງອື່ນໆ**. ສານຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການສ້າງຕັ້ງຂຶ້ນພາຍໃຕ້ມາດຕາ 22.06 (*ຄະນະກຳມະການຕັດສິນຂໍ້ຂັດແຍ່ງ*) ຈະຕ້ອງຈະຕ້ອງປະຕິເສດການຟ້ອງໂດຍຄູ່ສັນຍາທີ່ໄດ້ສະເໜີຄຳຮ້ອງຟ້ອງມາກ່ອນແລ້ວໃຫ້:

(ກ) ສານພາຍໃນຂອງ ສປປ ລາວ ກ່ຽວກັບຂໍ້ຂັດແຍ່ງດຽວກັນ; ແລະ ຄຳພິພາກສາ, ຄຳຕັດສິນຂໍ້ຂັດແຍ່ງ ຫຼື ຄຳຕັດສິນຂອງສານທີ່ໄດ້ອອກຕໍ່ການຮ້ອງຟ້ອງກ່ອນໜ້ານັ້ນໂດຍສານພາຍໃນຂອງ ສປປ ລາວ. ວັກຍ່ອຍຂໍ້ນີ້ຈະບໍ່ຖືກນຳໃຊ້ສຳລັບຜູ້ຮ້ອງຟ້ອງຄຳຍື່ນຄຳຮ້ອງຟ້ອງຕໍ່ສານພາຍໃນຂອງ ສປປ ລາວ ເພື່ອຂໍຄຳສັ່ງຊົ່ວຄາວຂອງສານ ຫຼື ການປົວແປງທີ່ຕ້ອງປະກາດອອກ, ຫຼື

(ຂ) ສານລະຫວ່າງຊາດອື່ນໆຕາມການຕົກລົງ, ສັນຍາ ຫຼື ກົດໝາຍ ທີ່ກ່ຽວກັບຂໍ້ຂັດແຍ່ງດຽວກັນ, ເວັ້ນເສຍແຕ່ຜູ້ຮ້ອງຟ້ອງໄດ້ຖອນຄຳຮ້ອງຟ້ອງດັ່ງກ່າວກ່ອນຄຳຕັດສິນຄັ້ງສຸດທ້າຍຈະຖືກວາງອອກຕໍ່ການຮ້ອງຟ້ອງດັ່ງກ່າວ.

**22.08 ການຕ້ານການຫຼີກລ່ຽງ.**

(ກ) ເພື່ອໃຫ້ມີຄວາມແນ່ນອນຫຼາຍຂຶ້ນ, ສານຈະຕ້ອງປະຕິເສດສິດອຳນາດສານບ່ອນທີ່ຂໍ້ຂັດແຍ່ງໄດ້ເກີດຂຶ້ນ, ຫຼື ສາມາດຄາດຄະເນໄດ້ບົນພື້ນຖານຂອງຄວາມສາມາດເປັນໄປໄດ້ໃນລະດັບສູງ, ໃນເວລາທີ່ຄູ່ສັນຍາຝ່າຍທີ່ຍື່ນຄຳຮ້ອງຟ້ອງໄດ້ຮັບການເປັນເຈົ້າຂອງ ຫຼື ການຄວບຄຸມໂຄງການ ແລະ ບົນພື້ນຖານຂອງຄວາມຈິງໃນຄະດີ ສານເຫັນວ່າຄູ່ສັນຍາຝ່າຍທີ່ຍື່ນຄຳຮ້ອງຟ້ອງໄດ້ຮັບການເປັນເຈົ້າຂອງ ຫຼື ການຄວບຄຸມໂຄງການເພື່ອຈຸດປະສົງຕົ້ນຕໍຂອງການຍື່ນຄຳຮ້ອງຟ້ອງພາຍໃຕ້ມາດຕາ 22 (ການແກ້ໄຂຂໍ້ຂັດແຍ່ງ). ຄວາມສາມາດເປັນໄປທີ່ຈະປະຕິເສດສິດອຳນາດສານໃນກໍລະນີດັ່ງກ່າວຈະບໍ່ແຕະຕ້ອງເຖິງການຄັດຄ້ານສິດອຳນາດສານອື່ນຊຶ່ງສາມາດພິຈາລະນາໂດຍສານ;

(ຂ) ຄູ່ສັນຍາຂອງສັນຍາສະບັບນີ້ສະລະສິດໃດໜຶ່ງທີ່ເກີດຈາກເອກະສານກົດໝາຍອື່ນໆໃດໜຶ່ງ ໂດຍບໍ່ມີເງື່ອນໄຂ ແລະ ເປັນຄັ້ງສຸດທ້າຍ, ລວມທັງ ສົນທິສັນຍາ ແລະ ສັນຍາສາກົນ ຊຶ່ງໄດ້ກຳນົດການແກ້ໄຂໂດຍຄະນະກຳມະການຕັດສິນໄຂຂໍ້ຂັດແຍ່ງເພື່ອປະຕິບັດສິດດັ່ງກ່າວກ່ຽວກັບບັນຫາທີ່ຂໍ້ກຳນົດນີ້ກວມເອົາ.

**22.09 ຂໍ້ຂັດແຍ່ງກ່ຽວກັບບຸກຄົນໃນທ້ອງຖິ່ນ.** ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນ ຫຼື ທີ່ກ່ຽວຂ້ອງກັບໂຄງການ ແລະ/ຫຼື ການຈັດຕັ້ງປະຕິບັດສັນຍາສະບັບນີ້ລະຫວ່າງບໍລິສັດໂຄງການ ແລະ ບຸກຄົນທີ່ໄດ້ຮັບຜົນກະທົບຈາກໂຄງການ, ບ້ານ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການໂດຍທາງກົງ ຫຼື ໂດຍທາງອ້ອມ, ຈະຕ້ອງຖືກແກ້ໄຂໂດຍສອດຄ່ອງຕາມເນື້ອໃນ ແລະ ເງື່ອນໄຂຂອງບົດລາຍງານກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມ, ເອກະສານຊ້ອນທ້າຍ IV (ພັນທະດ້ານສິ່ງແວດລ້ອມ ແລະສັງຄົມ ແບບຄົບວົງຈອນ), ກົດໝາຍທີ່ນຳໃຊ້ຂອງ ສປປ ລາວ ແລະ ວິທີດຳເນີນການແກ້ໄຂຂໍ້ຂັດແຍ່ງທີ່ມີຢູ່ພາຍໃຕ້ກົດໝາຍຂອງ ສປປ ລາວ.

### ມາດຕາ 23 ການທົບທວນ ແລະ ການຮ່ວມມືລະຫວ່າງຄູ່ສັນຍາ

**23.01 <u>ການຮ່ວມມື.</u>** ຄູ່ສັນຍາຕ້ອງຮ່ວມມືກັນທຸກເວລາເພື່ອອຳນວຍຄວາມສະດວກໃຫ້ການດຳເນີນງານໂຄງການໄດ້ຖືກປະຕິບັດໄປຢ່າງມີປະສິດຕິພາບ ແລະ ຢ່າງປະຢັດ ເພື່ອຜົນປະໂຫຍດຂອງສອງຝ່າຍ. ຄູ່ສັນຍາແຕ່ລະຝ່າຍສາມາດຮ້ອງຂໍປຶກສາຫາລືກັບຄູ່ສັນຍາອີກຝ່າຍໜຶ່ງໄດ້ທຸກເວລາ ກ່ຽວກັບທຸກບັນຫາທີ່ມີຜົນກະທົບຕໍ່ສິດ ແລະ ພັນທະຂອງຄູ່ສັນຍາທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບນີ້ ຫຼື ກ່ຽວກັບຄວາມຄືບໜ້າຂອງໂຄງການ. ຄູ່ຮສັນຍາຕ້ອງປະຊຸມເພື່ອທົບທວນບັນຫາທີ່ເກີດຂຶ້ນໂດຍໄວ ຫຼັງຈາກການຮ້ອງຂໍດັ່ງກ່າວເປັນເຫດຜົນທີ່ໃຫ້ຄວາມສະດວກສຳລັບຄູ່ສັນຍາທັງສອງຝ່າຍ. ພາຍ ຫຼັງການປຶກສາຫາລື, ຄູ່ສັນຍາຕ້ອງປະຕິບັດຕາມສິ່ງທີ່ໄດ້ຕົກລົງເຫັນດີນຳກັນເພື່ອແກ້ໄຂບັນຫາ.

**23.02 <u>ການປ່ຽນແປງສະພາບເງື່ອນໄຂ</u>**

(ກ) ໃນກໍລະນີທີ່ມີການປ່ຽນແປງສະພາບເງື່ອນໄຂຈາກສະພາບເງື່ອນໄຂທີ່ມີຢູ່ໃນເວລາທີ່ສັນຍາມີຜົນສັກສິດ ຫຼື ໃນວັນທີ່ໄດ້ທົບທວນຄືນສັນຍາຄັ້ງຫຼ້າສຸດຕາມ<u>ຂໍ້ 23.02</u> ນີ້, ຄູ່ສັນຍາຝ່າຍໃດຝ່າຍໜຶ່ງຕາມການຮຽກຮ້ອງຂອງຄູ່ສັນຍາອີກ ຝ່າຍໜຶ່ງ ຕ້ອງຮ່ວມກັນປຶກສາຫາລືກ່ຽວກັບຂໍ້ຕົກລົງຂອງສັນຍາສະບັບນີ້ທີ່ກ່ຽວຂ້ອງໂດຍກົງກັບການປ່ຽນແປງເງື່ອນໄຂ. ຄູ່ສັນຍາຝ່າຍທີ່ເຫັນວ່າມີການປ່ຽນແປງສະພາບເງື່ອນໄຂຕ້ອງສະໜອງຂໍ້ມູນທີ່ສົມເຫດສົມຜົນໃຫ້ຄູ່ສັນຍາອີກຝ່າຍໜຶ່ງກ່ຽວກັບການປ່ຽນແປງດັ່ງກ່າວ. ຄູ່ສັນຍາທັງສອງຝ່າຍຕ້ອງປະຊຸມກັນເພື່ອທົບທວນຄືນບັນຫາທີ່ເກີດຂຶ້ນໂດຍໄວທີ່ສຸດຈາກການຮ້ອງຂໍດັ່ງກ່າວເປັນເຫດຜົນທີ່ໃຫ້ຄວາມສະດວກ ສໍາລັບຄູ່ສັນຍາທັງສອງຝ່າຍ.

(ຂ) ໃນກໍລະນີທີ່ເຫັນວ່າການປ່ຽນແປງສະພາບເງື່ອນໄຂໄດ້ເກີດ, ຄູ່ສັນຍາຕ້ອງປັບປຸງ ຫຼື ຍົກເລີກສັນຍາສະບັບນີ້ຕາມທີ່ຄູ່ສັນຍາເຫັນວ່າມີຄວາມຈໍາເປັນ, ແຕ່ໂດຍມີເງື່ອນໄຂວ່າ ການຍົກເລີກດັ່ງກ່າວຈະບໍ່ເຮັດໃຫ້ຄູ່ສັນຍາຝ່າຍໃດຝ່າຍໜຶ່ງຫຼຸດພົ້ນຈາກຄວາມຮັບຜິດຊອບພາຍໃຕ້ສັນຍາສະບັບນີ້ທີ່ໄດ້ສະສົມກ່ອນການປັບປຸງ ຫຼື ການຍົກເລີກສັນຍາ, ເວັ້ນເສຍແຕ່ໄດ້ມີການຕົກລົງໄວ້ເປັນຢ່າງອື່ນ ຫຼື ໄດ້ມີການສະລະສິດໂດຍຄູ່ສັນຍາອີກຝ່າຍໜຶ່ງ.

(ຄ) ເພື່ອຈຸດປະສົງຂອງໝວດນີ້, "**ການປ່ຽນແປງສະພາບເງື່ອນໄຂ**" ໝາຍເຖິງ ການປ່ຽນແປງສະພາບທາງເສດຖະກິດ (ໃສ່ຂະແໜງການສະເພາະຂອງໂຄງການເຊັ່ນ: ຢາງພາລາ) ຂອງອຸດສາຫະກໍາການປູກພືດໃນທົ່ວໂລກ ຫຼື ໃນ ສປປ ລາວ, ຫຼື ການປ່ຽນແປງສະພາບເງື່ອນໄຂທາງເສດຖະກິດ, ການເມືອງ ຫຼື ສັງຄົມ ທີ່ເກີດຢູ່ໃນ ສປປ ລາວ ໂດຍສະເພາະ ຫຼື ເກີດຢູ່ບ່ອນໃດໜຶ່ງຂອງໂລກ ທີ່ສົ່ງຜົນຕໍ່ການປ່ຽນແປງຕົ້ນຕໍ ແລະ ສໍາຄັນຂອງເງື່ອນໄຂ, ການສົມມຸດຖານ ແລະ ພື້ນຖານ ທີ່ຄູ່ສັນຍາໄດ້ອີງໃສ່ໃນເວລາທີ່ພວກກ່ຽວໄດ້ເຂົ້າຮ່ວມສັນຍາສະບັບນີ້ (ຫຼື ໃນເວລາຕໍ່ມາທີ່ມີການທົບທວນຄືນຕາມໝວດນີ້) ຊຶ່ງຄວາມດຸ່ນດ່ຽງໂດຍທົ່ວໄປຂອງຮຸ້ນ ແລະ ຜົນປະໂຫຍດທີ່ໄດ້ຄາດຄະເນຢ່າງສົມເຫດສົມຜົນໂດຍຄູ່ສັນຍາສອງຝ່າຍ ບໍ່ສາມາດຈະບັນລຸໄດ້ຕາມເນື້ອໃນທີ່ຈະຕ້ອງປະຕິບັດ.

### ມາດຕາ 24 ການຍົກເລີກສັນຍາ

ສັນຍາສະບັບນີ້ ຈະຖືກຍົກເລີກໃນເວລາສິ້ນສຸດໄລຍະສໍາປະທານ ຫຼື ສາມາດຖືກຍົກເລີກກ່ອນກໍານົດໂດຍການຕົກລົງຊຶ່ງກັນ ແລະ ກັນຂອງຄູ່ສັນຍາທັງສອງຝ່າຍ ຫຼື ເມື່ອເຫດການຂອງການລະເມີດສັນຍາໄດ້ເກີດຂຶ້ນ ("ເຫດການຂອງການລະເມີດສັນຍາ" ໝາຍເຖິງ ເຫດການທີ່ເກີດຂຶ້ນພາຍໃຕ້ຂໍ້ 24.01 (ຄ), 24.02 (ຄ), (ງ), (ຈ) ຫຼື (ສ) ທີ່ໄດ້ກໍານົດໃນນີ້), ຫຼື ທີ່ໄດ້ກໍານົດໃນມາດຕານີ້.

**24.01** **<u>ການຍົກເລີກສັນຍາໂດຍບໍລິສັດໂຄງການ.</u>** ເຖິງຈະມີນຂໍ້ກໍານົດອື່ນໆໃດໜຶ່ງຂອງສັນຍາສະບັບນີ້ແລ້ວກໍຕາມ, ບໍລິສັດໂຄງການມີສິດຍົກເລີກສັນຍາສະບັບນີ້ດັ່ງລຸ່ມນີ້:

(ກ) ຕາມຂໍ້ກໍານົດຂອງຂໍ້ 19.01; ຫຼື

(ຂ) ຕາມຂໍ້ກໍານົດຂອງຂໍ້ 23.02; ຫຼື

(ຄ) ລັດຖະບານມີການຫຼົ້ມເຫຼວໃນການປະຕິບັດຕາມພັນທະທີ່ສຳຄັນພາຍໃຕ້ສັນຍາສະບັບນີ້ ຢ່າງຮ້າຍແຮງ ແລະ ມີການແກ່ຍາວ ແລະ ການຫຼົ້ມເຫຼວນີ້ກໍ່ຍັງສືບຕໍ່.

ທຸກການຍົກເລີກດັ່ງກ່າວ ແມ່ນຢູ່ພາຍໃຕ້ພັນທະຂອງບໍລິສັດໂຄງການພາຍໃຕ້ສັນຍານີ້ ຊຶ່ງໄດ້ເພີ່ມນຂຶ້ນກ່ອນວັນຍົກເລີກສັນຍາ.

**24.02** __ການຍົກເລີກສັນຍາໂດຍລັດຖະບານ.__ ລັດຖະບານມີສິດຍົກເລີກສັນຍານີ້ ຖ້າກໍລະນີຕໍ່ໄປລຸ່ມນີ້ເກີດຂຶ້ນ ແລະ ສືບຕໍ່:

(ກ) ຕາມຂໍ້ກຳນົດຂອງຂໍ້ 19.01; ຫຼື

ຂ) ຕາມຂໍ້ກຳນົດຂອງຂໍ້ 23.02; ຫຼື

(ຄ) ບໍລິສັດຫລົ້ມເຫຼວໃນການປະຕິບັດຕາມພັນທະທີ່ສຳຄັນພາຍໃຕ້ສັນຍານີ້ຢ່າງຮ້າຍແຮງ ແລະ ມີການແກ່ຍາວ; ຫຼື

(ງ) ທຸກໆການສະເໜີຄວາມເປັນຈິງທີ່ໃຫ້ໂດຍ ຫຼື ໃນນາມບໍລິສັດໂຄງການພາຍໃຕ້ສັນຍານີ້ ບໍ່ເປັນຄວາມຈິງໃນທຸກດ້ານທີ່ສຳຄັນທີ່ໄດ້ເຮັດ ຫຼື ຄວນຈະໄດ້ເຮັດ, ຫຼື ບໍລິສັດໂຄງການໄດ້ລະເມີດການຮັບປະກັນພາຍໃຕ້ຂໍ້ກຳນົດຂອງສັນຍາສະບັບນີ້, ແລະ ກໍລະນີໄດ້ມີຜົນກະທົບເສຍຫາຍ ແລະ ສຳຄັນຕໍ່ຄວາມສາມາດຂອງລັດຖະບານໃນການປະຕິບັດພັນທະຂອງຕົນ ຫຼື ໃນການປະຕິບັດສິດຂອງຕົນພາຍໃຕ້ສັນຍາສະບັບນີ້;

(ຈ) ບໍລິສັດໂຄງການ (i) ໄດ້ເຮັດການມອບໝາຍສິດໃນຊັບສິນທັງໝົດ ຫຼື ສ່ວນທີ່ສຳຄັນທັງໝົດຂອງຕົນ ດ້ວຍຄວາມສະໝັກໃຈ ເພື່ອຜົນປະໂຫຍດຂອງເຈົ້າໜີ້ໂດຍບໍ່ມີການຮັບຮອງເສຍກ່ອນຈາກລັດຖະບານນອກ ຈາກການມອບໝາຍທີ່ເຮັດຂຶ້ນເພື່ອຄ້ຳປະກັນໜີ້ສິນທີ່ເກີດຂຶ້ນຈາກການດຳເນີນທຸລະກິດຕາມປົກກະຕິ, (ii) ຍື່ນໃບຄຳຮ້ອງຕໍ່ສານໃນການແຕ່ງຕັ້ງຜູ້ໄດ້ຮັບມອບໝາຍ ຫຼື ຜູ້ຄຸ້ມຄອງຊັບສິນທັງໝົດ ຫຼື ສ່ວນທີ່ສຳຄັນຂອງບໍລິສັດໂຄງການ, (iii) ເລີ່ມການດຳເນີນຄະດີກ່ຽວກັບການລົ້ມລະລາຍ ຫຼື ການບໍ່ສາມາດຊຳລະໜີ້ສິນພາຍໃຕ້ກົດ ໝາຍທີ່ຜົນສັກສິດໃນປັດຈຸບັນ ຫຼື ພາຍຫຼັງ ໃນຂອບເຂດສິດອຳນາດສານຂອງການສ້າງຕັ້ງບໍລິສັດ, ຫຼື ຖ້າມີການຍື່ນຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍ ຫຼື ການດຳເນີນຄະດີໄດ້ເລີ່ມຂຶ້ນຕໍ່ຕົນ, ຊຶ່ງບອກການຮັບຮອງເອົາ, ການເຫັນດີກັບ ຫຼື ການຍິນຍອມໃນ, ຫຼື ບໍ່ໄດ້ຮັບການປະຕິເສດການດຳເນີນຄະດີດັ່ງກ່າວພາຍໃນເກົ້າສິບ (90) ວັນນັບແຕ່ວັນເລີ່ມຕົ້ນຂອງການດຳເນີນຄະດີເປັນຕົ້ນໄປ ຫຼື (iv) ຖ້າມີຄຳສັ່ງແຕ່ງຕັ້ງຜູ້ໄດ້ມອບໝາຍສິດ ຫຼື ຜູ້ຄຸ້ມຄອງຊັບສິນ ຫຼື ວິນິໄສບໍລິສັດໂຄງການໃຫ້ລົ້ມລະລາຍ ຫຼື ບໍ່ສາມາດຊຳລະໜີ້ ຫຼື ຮັບຮອງເອົາການຍື່ນຄຳຮ້ອງຟ້ອງໃນການດຳເນີນຄະດີດັ່ງກ່າວ, ບໍ່ໄດ້ດຳເນີນບາດກ້າວກ່ຽວກັບການຊັດມ້ຽນຄຳສັ່ງດັ່ງກ່າວ ຫຼື ປະຕິເສດການດຳເນີນຄະດີດັ່ງກ່າວພາຍໃນເກົ້າສິບ (90) ວັນນັບແຕ່ວັນອອກຄຳສັ່ງດັ່ງກ່າວ ຫຼື ຄຳຮ້ອງຟ້ອງໄດ້ສົ່ງໄປໃຫ້ບໍລິສັດໂຄງການ; ຫຼື

(ສ) ບໍລິສັດໂຄງການຢຸດຕິການຜະລິດທາງດ້ານການຄ້າເປັນໄລຍະເວລາເກີນສາມຮ້ອຍຫົກສິບຫ້າ (365) ວັນຕິດຕໍ່ກັນ, ເວັ້ນເສຍແຕ່ (i) ລັດຖະບານໃຫ້ການເຫັນດີກັບການຢຸດຕິດັ່ງກ່າວ, (ii) ເປັນຜົນຈາກເຫດສຸດວິໄສ ຫຼື (iii) ເປັນການກະທຳເພື່ອການປ້ອງກັນ ຫຼື ການລະເມີດຢ່າງຮ້າຍແຮງຂອງລັດຖະບານຕໍ່ພັນທະຂອງຕົນພາຍໃຕ້ສັນຍາສະບັບນີ້.

**24.03 <u>ໂອກາດສຳລັບການແກ້ໄຂ</u>**

ກ) ໃນກໍລະນີທີ່ອ້າງວ່າໄດ້ມີເຫດການຂອງການລະເມີດສັນຍາ, ກ່ອນຈະມີດການກະທຳໃດໆອີກນັ້ນ, ຄູ່ສັນຍາຝ່າຍທີ່ບໍ່ມີການລະເມີດສັນຍ ຕ້ອງແຈ້ງໃຫ້ຄູ່ສັນຍາຝ່າຍທີ່ໄດ້ມີການລະເມີດສັນຍາຊາບ ກ່ຽວກັບການທີ່ຕົນອ້າງວ່າໄດ້ມີເຫດ ການຂອງການລະເມີດສັນຍາໄດ້ເກີດຂຶ້ນ ແລະ ຄຳເຫັນຂອງຄູ່ສັນຍາຝ່າຍດັ່ງກ່າວຕໍ່ບັນຫາດັ່ງກ່າວ, ແລະ ຕ້ອງໃຫ້ໂອກາດທີ່ມີຄວາມຍຸຕິທຳໃຫ້ແກ່ຄູ່ສັນຍາຝ່າຍທີ່ໄດ້ມີການລະເມີດສັນຍາໄດ້ປຶກສາຫາລືກັບຄູ່ສັນຍາຝ່າຍທີ່ບໍ່ໄດ້ມີການລະເມີດສັນຍາ ເພື່ອແກ້ໄຂບັນຫາ.

ຂ) ຫຼັງຈາກນັ້ນ, ຄູ່ສັນຍາຝ່າຍທີ່ໄດ້ມີການລະເມີດສັນຍາຕ້ອງແກ້ໄຂການລະເມີດສັນຍາພາຍໃນເກົ້າສິບ (90) ວັນ (ຫຼື ໄລຍະເວລາເພີ່ມເຕີມທີ່ສົມເຫດສົມຜົນຖ້າຫາກການລະເມີດດັ່ງກ່າວບໍ່ສາມາດແກ້ໄຂໄດ້ພາຍໃນເກົ້າສິບ (90) ວັນ). ໃນໄລຍະເວລາ 90 ວັນດັ່ງກ່າວ ຈະຕ້ອງໄດ້ຂະຫຍາຍຕໍ່ໃຫ້ຍາວເທົ່າທີ່ຄູ່ສັນຍາຝ່າຍທີ່ໄດ້ມີການລະເມີດສັນຍາ ຈະສືບຕໍ່ມີການກະທຳດ້ວຍຄວາມເອົາໃຈໃສ່ທີ່ຈຳເປັນສຳລັບການແກ້ໄຂເຫດການຂອງການລະເມີດສັນຍາທີ່ເກີດຂຶ້ນ. ຖ້າເຫດການຂອງການລະເມີດສັນຍາດັ່ງກ່າວບໍ່ສາມາດແກ້ໄຂໄດ້ພາຍໃນກຳນົດເວລາດັ່ງກ່າວ, ສັນຍາສະບັບນີ້ຈະຕ້ອງຖືກຍົກເລີກ. *ແຕ່ເຖິງຢ່າງໃດກໍຕາມ*, ຖ້າຫາກການລະເມີດດັ່ງກ່າວບໍ່ສາມາດແກ້ໄຂພາຍໃນເກົ້າສິບ (90) ວັນຢ່າງສົມເຫດສົມຜົນ, ແຕ່ສາມາດແກ້ໄຂໄດ້ດ້ວຍການກະທຳທີ່ສົມເຫດສົມຜົນຂອງຄູ່ສັນຍາຝ່າຍທີ່ໄດ້ມີການລະເມີດສັນຍາ, ແລະ ຄູ່ສັນຍາຝ່າຍທີ່ໄດ້ມີການລະເມີດສັນຍາໄດ້ດຳເນີນບາດກ້າວທີ່ຈຳເປັນເພື່ອແກ້ໄຂການຫຼົ້ມເຫຼວດັ່ງກ່າວໃນໄລຍະເວລາ 90 ວັນດັ່ງກ່າວ, ໄລຍະເວລາ 90 ວັນດັ່ງກ່າວ ຈະຕ້ອງໄດ້ຂະຫຍາຍຕໍ່ໃຫ້ຍາວເທົ່າທີ່ຄູ່ສັນຍາຝ່າຍທີ່ໄດ້ມີການລະເມີດສັນຍາ ຈະສືບຕໍ່ມີການກະທຳດ້ວຍຄວາມເອົາໃຈໃສ່ທີ່ຈຳເປັນສຳລັບການແກ້ໄຂເຫດການຂອງການລະເມີດສັນຍາ ແລະ ຈະຕ້ອງເຮັດໃຫ້ສຳເລັດ ພາຍໃນສິບສອງ (12) ເດືອນຫຼັງຈາກໄດ້ຮັບແຈ້ງການ. ໃນກໍລະນີທີ່ຄູ່ສັນຍາຝ່າຍທີ່ໄດ້ມີການລະເມີດສັນຍາຢຸດຕິຄວາມພະຍາຍາມທີ່ສືບຕໍ່ເຫດການຂອງການລະເມີດສັນຍາດັ່ງກ່າວ ແລະ ບໍ່ສືບຕໍ່ຄວາມພະຍາຍາມດ້ວຍຄວາມເອົາໃຈໃສ່ພາຍໃນຫົກສິບ (60) ວັນພາຍຫຼັງໄດ້ຮັບແຈ້ງການຄູ່ສັນຍາຝ່າຍທີ່ບໍ່ໄດ້ມີການລະເມີດສັນຍາເປັນຕົ້ນໄປ, ສັນຍານີ້ຈະຕ້ອງຖືກຍົກເລີກ.

**24.04 <u>ການສະຫງວນຄ່າຊົດເຊີຍໄວ້ໃນສັນຍາ</u>**. ສິດໃນການຍົກເລີກທີ່ໄດ້ກຳນົດຢູ່ໃນມາດຕາ 24 ນີ້ ແມ່ນເປັນການເພີ່ມເຕີມເຂົ້າອີກ ແລະ ບໍ່ແມ່ນການຖອນສິດ, ສິດທີ່ຈະໄດ້ຮັບຄ່າຊົດເຊີຍຈາກຄວາມເສຍຫາຍ ຊຶ່ງແຕ່ລະຝ່າຍຂອງຄູ່ສັນຍາສາມາດມີພາຍໃຕ້ຂໍ້ກຳນົດໃດໜຶ່ງຂອງຂອງສັນຍາສະບັບນີ້ ຫຼື ຕາມກົດໝາຍທີ່ນຳໃຊ້ຂອງ ສປປ ລາວ ຈາກການລະເມີດສັນຍາໂດຍຄູ່ສັນຍາອີກຝ່າຍໜຶ່ງ, ລວມທັງ, ແຕ່ບໍ່ຈຳກັດສິດຂອງລັດຖະບານໃນການອອກແຈ້ງການບັງຄັບປະຕິບັດ , ການໂຈະ ຫຼື ຖອນໃບອະນຸຍາດດຳເນີນງານສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ, ວາງໂທດປັບໄໝ, ເລີ່ມການຮ້ອງຟ້ອງໃຫ້ດຳເນີນຄະດີອາຍາ, ລິງວິໄນ ແລ/ະຫຼື ຍື່ນຄຳຮ້ອງຟ້ອງຮຽກເອົາຄ່າເສຍຫາຍ ຫຼື ຄ່າສູນເສຍໂອກາດຈາກບໍລິສັດໂຄງການ.

### 24.05 ຜົນສະທ້ອນຈາກການຍົກເລີກສັນຍາ

(ກ) ເມື່ອມີການຍົກເລີກສັນຍາສະບັບນີ້, ຄູ່ສັນຍາແຕ່ລະຝ່າຍຈະໝົດສິດ ຫຼື ພັນທະ ຕໍ່ຄູ່ສັນຍາອີກຝ່າຍໜຶ່ງພາຍໃຕ້ສັນຍານີ້ ພາຍໃຕ້ເງື່ອນໄຂ: 1) ພັນທະໃນການຊໍາລະເມື່ອຄົບກໍານົດ, ແລະ 2) ພັນທະໃນການຊໍາລະທີ່ເກີດຂຶ້ນລວມທັງ, ແຕ່ບໍ່ຈໍາກັດ ພັນທະໃນການຊໍາລະຄ່າເສຍຫາຍ ຫຼື ຄ່າຊົດເຊີຍທັງໝົດທີ່ເກີດຂຶ້ນກ່ອນການຍົກເລີກສັນຍາ ແລະ ພັນທະທີ່ຍັງຄ້າງປະຕິບັດຕາມວັນທີ່ໄດ້ກໍານົດໄວ້.

(ຂ) ການຍົກເລີກສັນຍານີ້ຈະສົ່ງຜົນແບບອັດຕະໂນມັດໃຫ້ມີການຍົກເລີກສິດຂອງບໍລິສັດໂຄງການທັນທີ່ພາຍໃຕ້ສັນຍາເຊົ່າທີ່ດິນ.

(ຄ) ການຍົກເລີກສັນຍາ ຈະຕ້ອງບໍ່ມີຜົນກະທົບຕໍ່ສິດ ຫຼື ພັນທະ ກ່ຽວນກັບຂໍ້ກໍານົດຂອງການແກ້ໄຂຂໍ້ຂັດແຍ່ງ, ການໂອນຊັບສິນຂອງໂຄງການ, ການຟື້ນຟູ ແລະ ປົວແປງຄືນພື້ນທີ່ໂຄງການ, ຫຼື ຂໍ້ກໍານົດອື່ນໆຂອງສັນຍາສະບັບນີ້ ຊຶ່ງໄດ້ກໍານົດໄວ້ຢ່າງຈະແຈ້ງ ແລະ ໄປໃນຕົວທີ່ຕອ້ງດໍາເນີນຕໍ່ພາຍຫຼັງການຍົກເລີກສັນຍາສະບັບນີ້.

### 24.06 ການຊື້ຂາດກ່ຽວກັບອະສັງຫາລິມະຊັບຫຼັງຈາກການຍົກເລີກສັນຍາ

ກ) ພາຍໃຕ້ຂໍ້ 24.08, ເມື່ອມີການຍົກເລີກສັນຍາສະບັບນີ້, ອະສັງຫາລິມະຊັບຖາວອນທັງໝົດຂອງບໍລິສັດໂຄງການທີ່ຢູ່ໃນພື້ນທີ່ໂຄງການ ຊຶ່ງບໍ່ແມ່ນຊັບສິນຂອງລັດຖະບານ ຈະຕ້ອງກາຍເປັນຊັບສິນຂອງລັດຖະບານໂດຍບໍ່ມີການຈ່າຍຄ່າໃດໆ.

(ຂ) ໃນກໍລະນີຂອງການຍົກເລີກສັນຍາໂດຍບໍລິສັດໂຄງການຍ້ອນການລະເມີດຂອງລັດຖະບານພາຍໃຕ້ຂໍ້ 24.01 (ຄ), ມູນຄ່າຕະຫຼາດທີ່ຍຸຕິທໍາຂອງການລົງທຶນຂອງບໍລິສັດໂຄງການ ລວມທັງ ອະສັງຫາລິມະຊັບ (ຕີມູນຄ່າທັນທີກ່ອນທີ່ຈະສົ່ງແຈ້ງການຂອງບໍລິສັດໂຄງການໃຫ້ລັດຖະບານຊາບຕາມຂໍ້ 24.01) ຈະຕ້ອງໄດ້ນໍາພິຈາລະນາໃນການກໍານົດຈໍານວນເງິນທີ່ຈະຕ້ອງໄດ້ຊໍາລະກ່ຽວກັບການການຍົກເລີກສັນຍາ.

(ຄ) ຄູ່ສັນຍາຈະຕ້ອງຮ່ວມກັນກໍານົດມູນຄ່າຕະຫຼາດທີ່ຍຸຕິທໍາ, *ແຕ່ເຖິງຢ່າງໃດກໍຕາມ, ໂດຍມີເງື່ອນໄຂວ່າ* ຖ້າມູນຄ່າດັ່ງກ່າວບໍ່ສາມາດຕົກລົງກັນໄດ້ພາຍໃນສາມສິບ (30) ວັນນັບວັນຍົກເລີກສັນຍາເປັນຕົ້ນໄປ, ຄູ່ສັນຍາຝ່າຍໃດຝ່າຍໜຶ່ງສາມາດແຈ້ງເຈດຈໍານົງຂອງຕົນໃຫ້ນໍາສະເໜີບັນຫາຕໍ່ຜູ້ຊ່ຽວຊານເອກະລາດໃນການຕີລາຄາເພື່ອກໍານົດມູນຄ່າ. ຜູ້ຊ່ຽວຊານເອກະລາດໃນການຕີລາຄາດັ່ງກ່າວ ຕ້ອງຖືກແຕ່ງຕັ້ງໂດຍການເຫັນດີນໍາກັນຂອງຄູ່ສັນຍາ ແລະ ມີຄວາມຮູ້ ແລະ ປະສົບການກ່ຽວກັບອຸດສາຫະກໍາທີ່ກ່ຽວຂ້ອງ.

### 24.07 ການຂາຍສັງຫາລິມະຊັບຫຼັງຈາກການຍົກເລີກສັນຍາ

(ກ) ພາຍຫຼັງການຍົກເລີກສັນຍາສະບັບນີ້, ອະສັງຫາລິມະຊັບຂອງບໍລິສັດໂຄງການທີ່ຢູ່ໃນພື້ນທີ່ໂຄງການ ຊຶ່ງບໍລິສັດູໂຄງການຕ້ອງການຂອງນັກລົງທຶນທີ່ຈະຂາຍ, ລັດຖະບານຕ້ອງມີສິດໃນທາງເລືອກຊື້ຊັບສິນດັ່ງກ່າວກ່ອນໝູ່ຕາມມູນຄ່າຕະຫຼາດທີ່ຍຸຕິທຳ.

(ຂ) ຖ້າລັດຖະບານບໍ່ນຳໃຊ້ສິດໃນທາງເລືອກຊັບສິນກ່ອນໝູ່ນັ້ນພາຍໃນເກົ້າສິບ (90) ວັນຫຼັງຈາກໄດ້ຮັບແຈ້ງໃຫ້ຊາບໂດຍບໍລິສັດໂຄງການກ່ຽວກັບຈຸດປະສົງຂອງຕົນທີ່ຕ້ອງການຂາຍຊັບສິນດັ່ງກ່າວ, ບໍລິສັດໂຄງການສາມາດຂາຍຊັບສິນດັ່ງກ່າວໃຫ້ບຸກຄົນອື່ນໃດໜຶ່ງ, ລວມທັງລັດຖະບານ ຫຼື ບໍລິສັດເຄືອຂ່າຍໃນລາຄາຕາມທີ່ຕົນສາມາດຮັບໄດ້ ຫຼື ເອົາຊັບສິນດັ່ງກ່າວອອກຈາກ ສປປ ລາວ.

(ຄ) ເງິນທີ່ໄດ້ຈາກການຂາຍໃດໜຶ່ງ ຈະຖືກສະສົມເຂົ້າບໍລິສັດໂຄງການ ແລະ ເປັນເປົ້າໝາຍຂອງການຈ່າຍອາກອນ ຫຼື ພາສີທີ່ຕ້ອງຈ່າຍພາຍໃຕ້ກົດໝາຍຂອ ສປປ ລາວ.

(ງ) ຖ້າລັດຖະບານຊື້ຊັບສິນໃດໜຶ່ງດັ່ງກ່າວ, ລັດຖະບານຕ້ອງຊຳລະລາຄາຊື້ບໍ່ໃຫ້ເກີນຫົກສິບ (60) ວັນຫຼັງຈາກວັນທີ່ລາຄາດັ່ງກ່າວໄດ້ຖືກຕົກລົງ ຫຼື ກຳນົດ, ເວັ້ນເສຍແຕ່ຄູ່ສັນຍາທັງສອງຝ່າຍໄດ້ຕົກລົງເປັນຢ່າງອື່ນ.

**24.08** **<u>ການຟື້ນຟູພື້ນທີ່ໂຄງການ ແລະ ການເຄື່ອນຍ້າຍສັງຫາລິມະຊັບ.</u>** ບໍລິສັດໂຄງການຕ້ອງດຳເນີນທຸກບາດກ້າວທີ່ຈຳເປັນເພື່ອຮັບປະກັນໃຫ້ພື້ນທີ່ໂຄງການໄດ້ຮັບການຟື້ນຟູ ແລ ະປົວແປງຢ່າງເຕັມສ່ວນຕາມສັນຍາສະບັບນີ້, ຂັ້ນຕອນ ແລະ ພັນທະທີ່ໄດ້ກຳນົດໄວ້ຢູ່ໃນເອກະສານຊ້ອນທ້າຍ IV (*ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມແບບຄົບວົງຈອນ)* ແລະ ກົດໝາຍຂອງ ສປປ ລາວ.

## ມາດຕາ 25 ແຈ້ງການ

**25.01** **<u>ແຈ້ງການ</u>.** ທຸກແຈ້ງການ ຄຳຮ້ອງ ແລະ ການຕິດຕໍ່ພົວພັນທີ່ຈຳເປັນ ຫຼື ອະນຸຍາດພາຍໃຕ້ສັນຍາສະບັບນີ້ຈະຕ້ອງເຮັດເປັນລາຍລັກອັກສອນ, ເປັນ [ພາສາອັງກິດ,ລາວ], ແລະ ສົ່ງໄປຕາມທີ່ຢູ່ຂອງຄູ່ສັນຍາຕາມທີ່ກຳນົດລຸ່ມນີ້ ໂດຍການສົ່ງດ້ວຍບຸກຄົນ, ຈົດໝາຍຈົດທະບຽນຜ່ານທາງໄປສະນີ, ແຟັກ (ພ້ອມສຳເນົາຈົດໝາຍ) ຫຼື ອີເມລ໌ (ພ້ອມດ້ວຍສຳເນົາ) :

ລັດຖະບານ: ກະຊວງແຜນການແລະການລົງທຶນ
ກົມສົ່ງເສີມການລົງທຶນ, ຖະໜົນສຸພານຸວົງ
ນະຄອນຫຼວງວຽງຈັນ 01001, ສປປລາວ
ໂທ: (85621) 216663 , 217005
ແຟັກ: (85621) 215491

ອີເມວ: fimc@laotel.com
ຫ້ອງການປະຕູດຽວ
ກະຊວງແຜນການແລະການລົງທຶນ
ກົມສົ່ງເສີມການລົງທຶນ, ຖະໜົນສຸພານຸວົງ
ນະຄອນຫຼວງວຽງຈັນ 01001, ສປປລາວ

ກະຊວງກະສິກຳແລະປ່າໄມ້
ກົມແຜນການ
ໂທ: (85621) 415358,
ແຟັກ: (85621) 412343

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກົມຈັດສັນ ແລະ ພັດທະນາທີ່ດິນ
ຖະໜົນເຈົ້າອານຸ,
ໂທ: (85621) 900987
ແຟັກ: (85621) 223485

ບໍລິສັດໂຄງການ:

[………]

**<u>25.02 ຜົນສັກສິດຂອງແຈ້ງການ.</u>** ທຸກແຈ້ງການ, ຄຳຮ້ອງຟ້ອງ, ຄຳຮ້ອງຂໍ, ຄຳຮ້ອງ ຫຼື ການສື່ສານພົວພັນອື່ນໆ ທີ່ກຳນົດໄວ້ຢູ່ໃນມາດຕານີ້, ຖ້າສົ່ງໃຫ້ດ້ວຍຕົນເອງ, ຈະມີຜົນສັກສິດໃນເວລາສົ່ງ, ແລະ ຖ້າສົ່ງທາງຈົດໝາຍຜ່ານທາງໄປ, ຈະມີຜົນສັກສິດສິບສີ່ (14) ວັນນັບແຕ່ວັນຝາກທາງໄປສະນີ. ຄູ່ສັນຍາຝ່າຍໃດຝ່າຍໜຶ່ງສາມາດປ່ຽນທີ່ຢູ່ທີ່ຈະຮັບແຈ້ງການ ໂດຍການແຈ້ງເປັນລາຍລັກອັກສອນໃຫ້ອີກຄູ່ສັນຍາອີກຝ່າຍໜຶ່ງ ແລະ ຫ້ອງການບໍລິການປະຕູດຽວ.

## ມາດຕາ 26 ການຮັກສາເປັນຄວາມລັບ

**26.01** **ຂໍ້ມູນທີ່ຮັກສາເປັນຄວາມລັບ**. ທຸກຂໍ້ມູນຂ່າວສານ ແລະ ເອກະສານກ່ຽວກັບໂຄງການທີ່ບໍ່ມີໄວ້ບໍລິການສາທາລະນະ, ເປີດເຜີຍໃຫ້ຄູ່ສັນຍາອີກຝ່າຍໜຶ່ງ ຈະຖືວ່າເປັນ "**ຂໍ້ມູນທີ່ຮັກສາເປັນຄວາມລັບ**", ລວມທັງ (i) ທຸກຂໍ້ມູນ ແລະ ເອກະສານເປັນລາຍລັກອັກສອນທີ່ສະໜອງໃຫ້ຄູ່ສັນຍາອີກຝ່າຍໜຶ່ງ ຊຶ່ງມີຄໍາວ່າ "ຮັກສາເປັນຄວາມລັບ", "ສ່ວນບຸກຄົນ" ບອກໄວ້ຢ່າງຈະແຈ້ງ ຫຼື ມີການລະບຸທີ່ຄ້າຍຄືກັນ, ແລະ (ii) ທຸກຂໍ້ມູນທາງປາກເປົ່າຂອງຄູ່ສັນຍນຝ່າຍທີ່ເປີດເຜີຍທີ່ໄດ້ກໍານົດໃນເວລາເປີດເຜີຍວ່າ ເປັນຂໍ້ມູນທີ່ຮັກສາເປັນຄວາມລັບ ຫຼື ຂໍ້ມູນສ່ວນບຸກຄົນ. ຂໍ້ມູນທີ່ຮັກສາເປັນຄວາມລັບຈະຕ້ອງບໍ່ເອົາບັນຈຸເຂົ້າໃນສັນຍາສະບັບນີ້.

**26:02** **ການຍົກເວັ້ນ.** ຄູ່ສັນຍາຕ້ອງເກັບຂໍ້ມູນທີ່ຮັກສາເປັນຄວາມລັບ, ຍົກເວັ້ນໃນນຂອບເນຂດທີ່ຂໍ້ມູນດັ່ງກ່າວ: (i) ໄດ້ກາຍເປັນຂໍ້ມູນທີ່ເປີດເຜີຍຕໍ່ສາທາລະນະນອກຈາກດ້ວຍການການລະເມີດພັນທະເກັບຮັກສາເປັນຄວາມລັບ ໂດຍຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ຫຼື ຊຶ່ງອາດໄດ້ມາຍ້ອນການເອົາໃຈໃສ່ຢ່າງສົມເຫດສົມຈາກແຫຼ່ງອື່ນທີ່ບໍ່ແມ່ນຈາກບໍລິສັດໂຄງການ, (ii) ອາດຖືກຮຽກຮ້ອງເອົາເພື່ອທົບທວນໂດຍຜູ້ໃຫ້ກູ້ຢືມຫຼື ບໍລິສັດແມ່ໃນໂຄງການ ແລະ ທີ່ປຶກສາທາງການເງິນ, ວິຊາການ ແລະ ກົດໝາຍ, ຫຼື (iii)) ຖືກກໍານົດໄວ້ໂດຍກົດໝາຍຂອງ ສປປ ລາວ ຫຼື ກົດໝາຍອື່ນໆທີ່ນໍາໃຊ້ ແລະ ລະບຽບການທີ່ໃຫ້ເປີດເຜີຍຕໍ່ບຸກຄົນຊຶ່ງໄດ້ຮັບອະນຸຍາດໂດຍກົດໝາຍຂອງ ສປປ ລາວ ໃຫ້ໄດ້ຮັບຂໍ້ມູນດັ່ງກ່າວ ຫຼື ຕາມຄໍາສັ່ງຂອງສານ, ອົງການບໍລິຫານ ຫຼື ຄະນະກໍາມະການຕັດສິນຂໍ້ຂໍ້ຂັດແຍ່ງ, ຫຼື (iv) ອາດຖືກຮຽກຮ້ອງເອົາຈາກອົງການຈັດຕັ້ງຂອງລັດຖະບານຫຼື ພະນັກງານຂອງອົງການດັ່ງກ່າວເພື່ອຈຸດປະສົງເຮັດອົງການຈັດຕັ້ງຂອງລັດຖະບານດັ່ງກ່າວສາມາດປະຕິບັດພັນທະຂອງຕົນທີ່ກ່ຽວຂ້ອງກັບໂຄງການ ຕາມທີ່ໄດ້ກໍານົດໄວ້ພາຍໃຕ້ສັນຍາສະບັບນີ້, ຫຼື (v) ຊຶ່ງຖືກພິມເຜີຍແຜ່ຕາມກົດໝາຍທີ່ນໍາໃຊ້ຂອງ ສປປ ລາວ, ແລະ (vi) ຊຶ່ງໄດ້ຕົກລົງລະຫວ່າງຄູ່ສັນຍາ.

**26:03** **ສັນຍາ**. ສັນຍາສະບັບນີ້ຕ້ອງເຜີຍແຜ່ໃຫ້ສາທາລະນະ, ຍົກເວັ້ນໃນກໍລະນີຂໍ້ມູນສ່ວນບຸກຄົນ ຫຼື ຄວາມລັບທາງທຸລະກິດທີ່ບໍ່ສາມາດເປີດເຜີຍ ແລະ ຖືກກໍານົດໃຫ້ມີສິດໃນການປົກປ້ອງການຮັກສາເປັນຄວາມລັບໂດຍລັດຖະບານ. ໃນກໍລະນີທີ່ຂໍ້ມູນສ່ວນບຸກຄົນຖືກໂຈະ, ສໍາເນົາຂອງສັນຍາສະບັບນີ້ຈະຕ້ອງເຮັດໃຫ້ເປີດເຜີຍຕໍ່ສາທາລະນະ ໂດຍຄວາມລັບທາງທຸລະກິດ ຫຼື ຂໍ້ມູນສ່ວນບຸກຄົນຈະຕ້ອງໄດ້ປັບປຸງຄືນ.

## ມາດຕາ 27 ການເປີດເຜີຍ

**27.01** **ການເປີດເຜີຍ.** ສັນຍາສະບັບນີ້ ແລະ ເອກະສານທີ່ຈະຕ້ອງນໍາສະເໜີພາຍໃຕ້ມາດຕາ 7, 8, 13, 14, 15, 16, 17 ແລະ ເອກະສານຊ້ອນທ້າຍ, ໂດຍຄູ່ສັນຍາໃນປັດຈຸບັນ ແລະ ໃນເວລາຜ່ານມາ, ແມ່ນເອກະສານທີ່ເປີດເຜີຍ, ຍົກເວັ້ນແຕ່ຂໍ້ມູນທີ່ມີຄວາມລະອຽດອ່ອນອີຫຼີທາງດ້ານການຄ້າທີ່ບັນຈຸຢູ່ໃນແຜນດໍາເນີນທຸລະກິດທີ່ໄດ້ຮັບການຮັບຮອງເອົາແລ້ວຊຶ່ງອາດຈະໄດ້ປັບປຸງຄືນ. ເອກະສານດັ່ງກ່າວແມ່ນເປີດໃຫ້ສໍາລັບການກວດກາໂດຍບໍ່ການເສຍຄ່າ ໂດຍສະມາຊິກຂອງສາທາລະນະໃນບ່ອນທີ່ສາມາດເຂົ້າເຖິງໄດ້ງ່າຍ ໃນຮູບແບບ ແລະ ພາສາທີ່ສະມາຊິກດັ່ງກ່າວສາມາດເຂົ້າໃຈ. ສໍາເນົາທີ່ພິມອອກຂອງແຕ່ລະເອກະສານດັ່ງກ່າວ ທັງ

ເປັນພາສາລາວ ແລະ ພາສາອັງກິດ ຈະຕ້ອງໃຫ້ສາມາດເຂົ້າເຖິງໄດ້ຢູ່ [ໃສ່ບ່ອນ] ໂດຍໃຫ້ມີສຳເນົາທາງເອເລັກໂຕຣນິກຂອງເອກະສານດັ່ງກ່າວທັງເປັນພາສາລາວ ແລະ ພາສາອັງກິດໄວ້ຢູ່ໃນເວບໄຊ໌ຂອງບໍລິສັດໂຄງການ [ໃສ່ທີ່ຢູ່ເວບໄຊ໌ຂອງຜູ້ລົງທຶນ].

**27.02** **<u>ເວບໄຊ໌</u>**. ທຸກບົດລາຍງານ ທີ່ຮຽກຮ້ອງໃຫ້ນຳສະເໜີໂດຍບໍລິສັດໂຄງການຕາມທີ່ໄດ້ກຳນົດໄວ້ຢູ່ໃນເອກະສານຊ້ອນທ້າຍ III ເຊັ່ນດຽວກັນກັບບົດລາຍງານປະຈຳປີອື່ນໆທີ່ສະເໜີໂດຍບໍລິສັດໂຄງການຕໍ່ລັດຖະບານ ໂດຍສອດຄ່ອງຕາມສັນຍາສະບັບນີ້, ຈະຕ້ອງເຮັດເປີດເຜີຍ ແລະ ມີໄວ້ຢູ່ໃນເວບໄຊ໌ຂອງບໍລິສັດໂຄງການ [ໃສ່ທີ່ຢູ່ເວບໄຊ໌ຂອງຜູ້ລົງທຶນ].

## ມາດຕາ 28 ຂໍ້ກຳນົດອື່ນໆ

**28.01** **<u>ການສະຫຼະສິດ</u>**. ທຸກການສະຫຼະສິດຈະຕ້ອງເປັນລາຍລັກອັກສອນ ແລະ ປະຕິບັດໂດຍລັດຖະບານຕໍ່ຜູ້ທີ່ການສະຫຼະສິດນັ້ນຈະຖືກບັງຄັບປະຕິບັດ. ຄວາມຫລົ້ມເຫຼວຂອງຄູ່ສັນຍາຝ່າຍໃດຝ່າຍໜຶ່ງໃນການບັງຄັບປະຕິບັດຂໍ້ກຳນົດໃດໜຶ່ງຂອງສັນຍາສະບັບນີ້ໃນເວລາໃດກໍຕາມ ຈະບໍ່ຖືກຕີຄວາມໝາຍ ວ່າເປັນການສະຫຼະສິດໃນການລະເມີດຂໍ້ກຳນົດດັ່ງກ່າວ ຫຼື ຂໍ້ກຳນົດອື່ນໆຂອງສັນຍາສະບັບນີ້ ຫຼື ເປັນການສະຫຼະສິດໃນການລະເມີດຂໍ້ກຳນົດໃດໜຶ່ງ ຫຼື ຂໍ້ກຳນົດອື່ນໆຂອງສັນຍາສະບັບນີ້.

**28.02** **<u>ພາສາ.</u>** ສັນຍາສະບັບນີ້ເຮັດເປັນຫຼາຍສະບັບ ທັງເປັນພາສາອັງກິດ ແລະ ພາສາລາວ ຊຶ່ງມີນ້ຳໜັກເທົ່າທຽມກັນ. ໃນກໍລະນີທີ່ການຂັດກັນ ລະຫວ່າງ ສະບັບພາສາອັງກິດ ແລະ ສະບັບພາສາລາວ, ສະບັບພາສາອັງກິດຈະຖືກນຳໃຊ້.

**28.03** **<u>ການປັບປຸງ.</u>** ສັນຍາສະບັບນີ້ບໍ່ສາມາດດັດແກ້ ຫຼື ປັບປຸງໄດ້, ຍົກເວັ້ນມີການຕົກລົງເຫັນດີເປັນລາຍລັກອັກສອນທີ່ເຮັດຂຶ້ນຢ່າງຖືກຕ້ອງໂດຍແຕ່ລະຝ່າຍຂອງຄູ່ສັນຍາ.

**28.04** **<u>ການແຍກຂໍ້ກຳນົດ</u>**. ຖ້າຫາກຂໍ້ກຳນົດໃດໜຶ່ງຂອງສັນຍາສະບັບນີ້ຖືກຖືວ່າບໍ່ຖືກຕ້ອງຕາມກົດໝາຍ ຫຼື ໃຊ້ບໍ່ໄດ້ພາຍໃຕ້ກົດໝາຍຂອງ ສປປ ລາວ ທີ່ນຳໃຊ້ ແລະ ມີຜົນສັກສິດ ໃນປະຈຸບັນ ຫຼື ໃນອານາຄົດ ໃນຕະຫຼອດໄລຍະສຳປະທານ, ຂໍ້ກຳນົດດັ່ງກ່າວ ຈະຕ້ອງຖືກແຍກອອກຢ່າງເຕັມສ່ວນ ແລະ ສັນຍາຈະຖືກຕີຄວາມໝາຍວ່າ ຂໍ້ກຳນົດທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ໃຊ້ບໍ່ໄດ້ດັ່ງກ່າວເປັນພຽງສ່ວນໜຶ່ງຂອງສັນຍາສະບັບນີ້ ແລະ ສັນຍາສະບັບນີ້ຈະຍັງມີຜົນສັກສິດ ແລະ ບັງຄັບປະຕິບັດຢ່າງເຕັມສ່ວນ ແລະ ຈະບໍ່ມີຜົນກະທົບໂດຍຂໍ້ກຳນົດທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ໃຊ້ບໍ່ໄດ້ ຫຼື ໂດຍການແຍກຂໍ້ກຳນົດອອກຈາກສັນຍາ; ແຕ່ໂດຍມີເງື່ອນໄຂວ່າ ໃນທຸກກໍລະນີດັ່ງກ່າວ, ຄູ່ສັນຍາຈະຕ້ອງເຂົ້າປຶກສາຫາລືຮ່ວມກັນດ້ວຍຄວາມຈິງໃຈເພື່ອປັບປຸງສັນຍາສຳສະບັບນີ້ຕາມຄວາມເໝາະສົມ.

**28.05** **<u>ການຈົດທະບຽນສານ.</u>** ໂດຍໄວເທົ່າທີ່ຈະເຮັດໄດ້ (ໃນທຸກກໍລະນີໂດຍທີ່ບໍ່ເກີນສາມສິບ (30) ວັນນັບແຕ່ວັນທີ່ສັນຍາມີຜົນສັກສິດ) [ລັດຖະບານ ຫຼື ບໍລິສັດໂຄງການ] ຕ້ອງໄດ້ຈົດທະບຽນສານສຳເນົາຕົ້ນສະບັບຂອງສັນຍາສະບັບນຳຫ້ອງການທະບຽນ

ສານຂອງລາວ ເພື່ອໃຫ້ເປັນຫຼັກຖານໂດຍຫ້ອງການທີ່ກ່ຽວຂ້ອງ ຫຼື ປະທັບຕາທາງການຂອງຫ້ອງການດັ່ງກ່າວໃສ່ສັນຍາສະບັບນີ້. ບໍລິສັດໂຄງການຕ້ອງເປັນຜູ້ຮັບຜິດຊອບຄ່າຈົດທະບຽນສານທີ່ຕ້ອງຈ່າຍສໍາລັບການຈົດທະບຽນສານສັນຍາສະບັບນີ້.

**28.06** **ການເຮັດສັນຍາ.** ສັນຍາສະບັບນີ້ເຮັດເປັນແປດ (8) ສະບັບ, ສາມ (3) ສະບັບມອບໃຫ້ແກ່ແຕ່ລະຝ່າຍ, ໜຶ່ງສະບັບຮັກສາໄວ້ກັບອໍານາດການປົກຄອງແຂວງ/ເມືອງທີ່ກ່ຽວຂອ້ງ ແລະ ໜຶ່ງສະບັບຮັກສາໄວ້ນໍາຫ້ອງການທະບຽນສານຂອງລາວ. ສໍາເນົາແຕ່ລະສະບັບມີເນື້ອໃນ, ຄວາມສໍາຄັນດ້ານກົດໝາຍ ແລະ ພັນທະຜູກມັດອັນດຽວກັນ.

*ສ່ວນທີ່ຍັງເຫຼືອຂອງໜ້ານີ້ຖືກປະເປົ່າຫວ່າງໄດ້ໂດຍເຈດຕະນາ*

***ເພື່ອເປັນຫຼັກຖານພະຍານ****, ຄູ່ສັນຍາທັງສອງຝ່າຍໄດ້ເຊັນ****ສັນຍາສະບັບນີ້**** ໃຫ້ຖືກປະຕິບັດຢ່າງຖືກຕ້ອງໃນວັນທີ່ປາກົດຢູ່ບ່ອນການເລີ່ມຕົ້ນຂອງສັນຍາສະບັບນີ້.*

**ລັດຖະບານແຫ່ງ ສປປ ລາວ:**

ໂດຍ:

**ບໍລິສັດໂຄງການ:**

ໂດຍ:

ຊື່:

ຕຳແໜ່ງ:

ກະຊວງແຜນການ ແລະ ການລົງທຶນ

ຊື່:

ຕຳແໜ່ງ: ຜູ້ອຳນວຍການບໍລິສັດ

**<u>ບໍລິສັດໂຄງການ:</u>**

ໂດຍ:

ຊື່:

ຕຳແໜ່ງ:

ກະຊວງກະສິກຳ ແລະ ປ່າໄມ້

ໂດຍ:

ຊື່:

ຕຳແໜ່ງ: ຜູ້ອຳນວຍການບໍລິສັດ

**<u>ພະຍານ</u>**

**<u>ພະຍານ</u>**

**ເອກະສານຊ້ອນທ້າຍ I**

**ຂໍ້ມູນບໍລິສັດໂຄງການ ແລະ ບໍລິສັດແມ່**

1. ຜູ້ຖືຮຸ້ນຂອງບໍສັດແມ່:

   [ໃສ່ຊື່, ປະເທດທີ່ຈົດທະບຽນ, ທີ່ຢູ່ຈົດທະບຽນ]

2. ບໍລິສັດເຄືອຂ່າຍຂອງບໍລິສັດແມ່ທີ່ສະແດງໃຫ້ເຫັນ, ໃນແຕ່ກໍລະນີ, ສາຍພົວພັນກັບບໍລິສັດໂຄງການ ແລະ ຂອບເຂດສິດອຳນາດສານປ່ອນທີບໍລິສັດໄດ້ສ້າງຕັ້ງຂຶ້ນ.
3. [ໃສ່ຊື່, ປະເທດທີ່ລົງທະບຽນ/ຖືສັນຊາດ, ທີ່ຢູ່, ສາຍພົວພັນກັບບໍລິສັດໂຄງການ]
4. ອຳນວຍການ ແລະ ເຈົ້າໜ້າທີ່ອາວຸໂສຂອງບໍລິສັດໂຄງການ

   [ໃສ່ຊື່, ຕຳແໜ່ງສັນຊາດ ແລະທີ່ຢູ່]
5. ແຕ່ລະບຸກຄົນທີ່ເປັນຜູ້ໄດ້ຮັບຜົນປະໂຫຍດ 5% ຫຼື ມີ (ກ) ສິດລົງຄະແນນສຽງໃນການຄວບຄຸມການຄຸ້ມຄອງຂອງບໍລິສັດແມ່ ຫຼື (ຂ) ສິດແບ່ງປັນຜົນກຳໄລຂອງລິສັດແມ່ ແລະ ຕ່ອງໂສ້ງທີ່ສິດດັ່ງກ່າວໄດ້ຮັບງການປະຕິບັດ.

   [ໃສ່ຊື່,ຕຳແໜ່ງ, ເປີເຊັນຂອງຮຸ້ນໃນບໍລິສັດແມ່, ສິດແບ່ງປັນຜົນກຳໄລໃນບໍລິສັດແມ່, ສັນຊາດ, ທີ່ຢູ່]

**ເອກະສານຊ້ອນທ້າຍ II**

**ຫຼັກການຂອງການຄິດໄລອາກອນກຳໄລ**

ລັດຖະບານສະຫງວນສິດໃນການບປຸງໃຫ້ທັນສະພາບ/ອັບເດດ ຫຼື ປັບປຸງຫຼັກການດັ່ງກ່າວໃນແຕ່ລະໄລຍະ ຕະຫຼອດໄລຍະສຳປະທານໂດຍສອດຄ່ອງງຕາມກົດໝາຍນຂອງ ສປປ ລາວ.

1. "**ປີ**" (ສຳລັບສັນຍາອື່ນໆໃດໜຶ່ງທີ່ເຮັດໂດຍຄູ່ສັນຍາ) ໝາຍເຖິງ ນັບແຕ່ວັນທີ 1 ມັງກອນ ຮອດ ວັນທີ 31 ທັນວາ ລວມທັງໄລຍະເວລາຂອງສັນຍາ ແລະ ນັບແຕ່ວັນທີ 1 ມັງກອນ ຈົນເຖິງວັນຍົກເລີກສັນຍາສຳລັບປີປະຕິທິ ຫຼື ສ່ວນໜຶ່ງຂອງປີປະຕິທິນປີທີ່ສັນຍາສະບັບນີ້ສິ້ນສຸດ.
2. "**ຜະລິດຕະພັນ**" ໝາຍເຖິງ ທຸກສ່ວນຂອງພືດທີ່ປູກ (ຕາມທີ່ໄດ້ກຳນົດໄວ້ຢູ່ໃນສັນຍາສະບັບສະບັບນີ້) ພາຍຫຼັງການຕັດ, ການຜ່າ, ການເກັບກ່ຽວ, ການຊອຍ ແລະ/ຫຼື ການປຸງແຕ່ງ.
3. "**ການໃຊ້ຈ່າຍໃນການດຳເນີນງານ**" ໂດຍສະເພາະໃນປີ ໝາຍເຖິງ ການໃຊ້ຈ່າຍທັງໝົດຂອງບໍລິສັດໂຄງການທີ່ໄດ້ເຮັດສຳລັບການດຳເນີນວຽກງານຂອງບໍລິສັດໂຄງການ ຊຶ່ງສາມາດຫັກອອກຈາກລາຍຮັບຂອງປີນັ້ນ. ການໃຊ້ຈ່າຍທັງໝົດຕ້ອງລວມເອົາລາຍການດັ່ງຕໍ່ໄປລຸ່ມນີ້ ຊຶ່ງກ່ຽວຂ້ອງກັບການດຳເນີນວຽກງາໂດຍກົງຂອງບໍລິສັດໂຄງການ:

(ກ) ທຸກການໃຊ້ຈ່າຍກ່ຽວກັບການຈັດຊື້ວັດຖຸ, ອຸປະກອນ ແລະ ເຄື່ອງມືກົນຈັກ ຊຶ່ງນຳໃຊ້ເຂົ້າໃນກິດຈະການຂອງບໍລິສັດໂຄງການ.

(ຂ) ທຸກການໃຊ້ຈ່າຍກ່ຽວກັບແຮງງານ ແລະ ການໃຫ້ບໍລິການຕາມສັນຍາທີ່ໄດ້ເຮັດສຳລັບກິດຈະການຂອງບໍລິສັດໂຄງການ.

(ຄ) ທຸກການໃຊ້ຈ່າຍຄ່າປະກັນໄພ (ເຮັດໃນປະເທດ ແລະ ໃນຕ່າງປະເທດ) ສຳລັບຊັບສິນທີ່ມີຕົວຕົນ, ລາຍການຂອງຊັບສິນ, ທຸລະກິດ ແລະ ສຳລັບການຢຸດສະງັກຂອງການດຳເນີນງານ ແລະ ການທວງເອົາຊັບສິນໂດຍພາກໃນເງື່ອນໄຂທີ່ຄ່າທຳນຽມທີ່ຕ້ອງຈ່າຍໃຫ້ສາຂາຂອງບໍລິສັດໂຄງການບໍ່ເກີນຄ່າທຳນຽມທີ່ໄດ້ສະເໜີໂດຍບຸກຄົນທີ່ສາມສຳລັບການດຳເນີນທຸລະກິດສົມທຽບ.

(ງ) ທຸກການໃຊ້ຈ່າຍກ່ຽວກັບຄວາມເສຍຫາຍ ຫຼື ການສູນເສຍໃນກໍລະນີທີ່ຄວາມເສຍຫາຍ ຫຼື ການສູນເສຍດັ່ງກ່າວບໍ່ໄດ້ຖືກຊົດເຊີຍຢ່າງຄົບຖ້ວຍຈາກການປະກັນໄພ ຫຼື ແຫຼ່ງອື່ນໆ

.

(ຈ) ທຸກການຊຳລະທີ່ຈ່າຍໂດຂບໍລິສັດໂຄງການສຳລັບຄ່າພາກຫຼວງຂອງການນຳໃຊ້ຊັບພະຍາກອນ ແລະ ດອກເບ້ຍທະນາຄານ ແລະ ການຊຳລະອື່ນໆ ລວມທັງການຊຳລະໃຫ້ສາຂາຂອງບໍລິສັດໂຄງການກ່ຽວກັບໃບຢັ້ງຢືນການຈົດທະບຽນ, ການອອກແບບ ແລະ ຂໍ້ມູນເຕັກນິກ. ຈຳນວນເງິນທີ່ຕ້ອງຊຳລະຈະຕ້ອງບໍ່ສູງກ່ວາຈຳນວນເງິນທີ່ຊຳລະໃຫ້ພາກສ່ວນອື່ນທີ່ບໍ່ຢູ່ໃນກຸ່ມຂອງບໍລິສັດໂຄງ ການສຳລັບການດຳເນີນທຸລະກິດສົມທຽບ.

(ສ) ທຸກການສູນເສຍທີ່ເກີດຈາກເຕັກໂນໂລຊີທີ່ພົ້ນສະໄໝ ແລະ ຫຼ້າສະໄໝ, ການລັກ, ຫຼື ການທຳລາຍ ເອກະສານສິນຄ້າໃນສາງ.

(ຊ) ທຸກການຊຳລະຄ່າເຊົ່າ ເຊັ່ນ: ອຸປະກອນ, ຕົ້ນໄມ້, ທີ່ດິນ ແລະ ສະຖານທີ່.

(ຍ) ທຸກການຊຳລະຄ່າທີ່ດິນ, ອາກອນທີ່ດິນ ແລະ ສິ່ງປຸກສ້າງ, ຄ່າພາກຫຼວງຂອງການນຳໃຊ້ຊັບພະຍາກອນທີ່ຕ້ອງຊຳລະໃຫ້ລັດຖະບານ, ອາກອນມູນຄ່າເພີ່ມ, ອາກອນສິ່ງຄ້າຟຸ່ມເຟືອຍ, ຄ່າພາສີ, ອາກອນການໂອນ, ອາກອນລາຍໄດ້ສ່ວນບຸກຄົນຂອງຜູ້ອອກແຮງງານບໍລິສັດຈ່າຍໃຫ້ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 7 (ກ) ແລະ (ຂ) ຂອງເອກະສານຊ້ອນທ້າຍນີ້, ພາສີນຳເຂົ້າ ແລະ ຄ່າທຳນຽມອື່ນໆທີ່ຕ້ອງຊຳລະໂດຍສອດຄ່ອງຕາມສັນຍາສຳປະທານສະບັບນີ້, ພ້ອມທັງການຍົກເວັ້ນອາກອນລາຍໄດ້.

(ດ) ການໃຊ້ຈ່າຍໃນການຂົນຂຶ້ນ ແລະ ຂົນລົງສິນຄ້າ, ການຫຸ້ມຫໍ່, ການເກັບມ້ຽນ, ການເຄື່ອນຍ້າຍ ແລະການຂົນສົ່ງ.

(ຕ) ຄ່າໃຊ້ຈ່າຍໃນການບຳລຸງຮັກສາ, ສ້ອມແປງ ແລະ ການຟື້ນຟູ.

(ຖ) ການຫັກໄວ້ຕາມທີ່ອະນຸຍາດໃນມາດຕາ 4-9 ລຸ່ມນີ້.

4. "**ການຫັກຄ່າເສື່ອມຄຸນ**" ໃນປີໃດໜຶ່ງ ໝາຍເຖິງ ການຫັກຈຳນວນເງິນຈາກລາຍຮັບເພື່ອນຳໃຊ້ເຂົ້າໃນການປ່ຽນຊັບສິນ, ທີ່ສາມາດຫັກຄ່າທົດແທນຕາມການຄິດໄລ່ທີ່ອີງໃສ່ກົດໝາຍຂອງ ສປປ ລາວ. ຊັບສິນທີ່ສາມາດຫັກຄ່າເສື່ອມຄຸນໄດ້ ປະກອບດ້ວຍຊັບສິນທີ່ມີຕົວຕົນຊຶ່ງມີອາຍຸການນຳໃຊ້ເກີນສິບສອງ (12) ເດືອນ ເຊັ່ນ: ສິ່ງປຸກສ້າງ, ເຄື່ອງກົນຈັກ, ອຸປະກອນ, ອຸປະກອນລາກແກ່, ຂົວ, ອາຄານທີ່ກຳລັງກໍ່ສ້າງ ແລະ ຊັບສິນທີ່ມີຕົວຕົນອື່ນໆ ຊຶ່ງສາມາດຫັກຄ່າເສື່ອມຄຸນໄດ້ພາຍໃຕ້ຫຼັກການການບັນຊີທີ່ສາມາດຍອມຮັບໄດ້ໂດຍທົ່ວໄປຂອງ ສປປ ລາວ ພ້ອມທັງໂຄງລ່າງພື້ນຖານຂອງບໍລິສັດໂຄງການ ເພື່ອຈຸດປະສົງນຳໃຊ້ຂອງລັດ ເຊັ່ນ: ຫົນທາງ, ໂຮງຮຽນ, ໂຮງໝໍ ລວມທັງອຸປະກອນທີ່ກ່ຽວຂ້ອງກັບຊັບສິນດັ່ງກ່າວ.

5. "**ການຫັກຄ່າຫຼຸ້ຍຫ້ຽນ**" ໃນປີໃດໜຶ່ງ ໝາຍເຖິງ ການຫັກຈຳນວນເງິນຈາກລາຍຮັບເພື່ອນຳໃຊ້ເຂົ້າໃນການປ່ຽນຊັບສິນທີ່ສາມາດຊຳລະຄືນ. ການຄິດໄລ່ແມ່ນເຮັດໂດຍສອດຄ່ອງຕາມກົດໝາຍວ່າດ້ວຍອາກອນ. ຊັບສິນທີ່ສາມາດຫັກຄ່າຫຼຸ້ຍຫ້ຽນໄດ້ມີ: (ກ) ໃບຢັ້ງຢືນການຈົດທະບຽນ, ສິດທິພິເສດ, ໃບຢັ້ງຢືນສຳປະທານ, ໃບອະນຸຍາດດຳເນີນທຸລະກິດ, ການເຊົ່າທີ່ດິນ ແລະ ຊັບສິນທີ່ມີຕົວຕົນ ຊຶ່ງສາມາດສະໜອງໃຫ້ໄດ້ພາຍໃຕ້ຫຼັກການການບັນຊີທີ່ສາມາດເປັນທີ່ຍອມຮັບໄດ້ໂດຍທົ່ວໄປ, (ຂ) ທຸກການໃຊ້ຈ່າຍທີ່ເກີດຂຶ້ນກ່ອນການເລີ່ມຕົ້ນຂອງໄລຍະດຳເນີນງານ ລວມທັງຄ່າໃຊ້ຈ່າຍໃນການໄດ້ຮັບສິດທິສຳຫຼວດທີ່ດິນ ຫຼື ໃນການເກັບກຳຂໍ້ມູນໃນບົດວິພາກເສດຖະກິດ-ເຕັກນິກ ແລະ ບົດລາຍງານກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມ , (ຄ) ໂຄງສ້າງທີ່ນຳໃຊ້ເພື່ອ

ຈຸດປະສົງທາງດ້ານອຸດສາຫະກຳ, ເຄື່ອງກົນຈັກ, ບັນໃດເລື່ອນ, ພາຫານະບຸກເບີກພື້ນທີ່ ແລະ ຂົນສົ່ງໃນການປູກ, ອຸປະກອນ ຫຼື ເຄື່ອງມື, ອຸປະກອນຫ້ອງການ ແລະ ຊັບສິນທີ່ມີຕົວຕົນອື່ນໆຊຶ່ງສາມາດສະໜອງໃຫ້ໄດ້ພາຍໃຕ້ຫຼັກການການບັນຊີທີ່ສາມາດເປັນທີ່ຍອມຮັບໄດ້ໂດຍທົ່ວໄປ.

6. "**ຄ່າໃຊ້ຈ່າຍທີ່ເກີດຂຶ້ນກ່ອນການດຳເນີນການຜະລິດ**" ທີ່ໄດ້ຖືກຊຳລະໂດຍຜູ້ຖືຮຸ້ນ ຫຼື ໂດຍບໍລິສັດໂຄງການ ແລ ະກ່ຽວຂ້ອງໂດຍກົງກັບກິດຈະການຂອງບໍລິສັດໂຄງການ ຊຶ່ງອາດສະສົມຂຶ້ນໃນບັນຊີຂອງບໍລິສັດໂຄງການເພື່ອເປັນລາຍການທີ່ສາມາດນຳມາຫັກອາກອນ. ການໃຊ້ຈ່າຍທີ່ເກີດກ່ອນການຜະລິດ ຕ້ອງໄດ້ຮັບການກວດສອບໂດຍຜູ້ກວດສອບເອກະລາດ ແລະ ຕ້ອງໄດ້ຮັບການຮັບຮອງຈາກກົມສ່ວຍສາອາກອນເພາະເປັນກໍລະນີພິເສດ.

7. "**ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຂາຍ ແລະການຄຸ້ມຄອງ**" ໃນສິບສອງ (12) ເດືອນທີ່ອາດສາມາດຫັກຄ່າຈາກລາຍຮັບ ລວມທັງແຕ່ບໍ່ຈຳກັດ ຄ່າໃຊ້ຈ່າຍໃນການການຄຸ້ມຄອງ, ທຸກຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ສະໜອງໃຫ້ຢູ່ຕ່າງປະເທດ, ເງິນເດືອນຂອງຄະນະບໍລິຫານ, ຄ່າໃຊ້ຈ່າຍໃນການຕິດຕໍ່ພົວພັນ, ຄ່າທຳນຽມ, ຄ່າໂຄສະນາ ແລະ ຄ່າໃຊ້ຈ່າຍໃນການຂາຍ, ການໃຊ້ຈ່າຍໃນການພົວພັນກັບພາກລັດ, ການໃຊ້ຈ່າຍຂອງຫ້ອງການ, ການໃຊ້ຈ່າຍການຕະຫຼາດ (ແຕ່ບໍ່ແມ່ນການວິໃຈຜະລິດຕະພັນທີ່ບໍ່ກ່ຽວຂ້ອງ), ຄ່າບໍລິການດ້ານກົດໝາຍ, ຄ່າກວດສອບ ແລະ ຄ່າອື່ນໆໃນການກະກຽມວຽກ (ລວມທັງຄ່າໃຊ້ຈ່າຍຂອງສາຂາບໍລິສັດໂຄງການທາໄດ້ເຮັດສຳລັບວຽກງານພາຍໃນຂອບເຂດທີ່ການໃຊ້ຈ່າຍດັ່ງກ່າວສະທ້ອນໃຫ້ເຫັນຄ່າທຳນຽມຕົວຈິງຂອງການບໍລິການເກີດຂຶ້ນໃນປີດັ່ງກ່າວ. ໃນທຳນອງດຽວກັນ, ລາຍການດັ່ງກ່າວຈະຕ້ອງນຳເຂົ້າຢູ່ໃນຄ່າໃຊ້ຈ່າຍຂອງການຂາຍ, ການໃຊ້ຈ່າຍທົ່ວໄປ ແລະ ການໃຊ້ຈ່າຍສຳລັບການບໍລິຫານຂອງບໍລິສັດໂຄງການ ເຊັ່ນ: ກ) ຄ່າແຮງງານ, ເງິນເດືອນ ແລະ ຄ່າຊົດເຊີຍລວມທັງຄ່າແຮງງານຂອງກຳມະກອນ, ຄ່າແຮງງານຂອງຜູ້ອອກແຮງງານ ຊຶ່ງຖືກວ່າຈ້າງ ຫຼື ເປັນພະນັກງານຕາມສັນຍາຂອງບໍລິສັດໂຄງການ ຫຼືຂອງບໍລິສັດເຄືອຂ່າຍຂອງບໍລິສັດໂຄງການ ທີ່ກ່ຽວຂ້ອງກັບກິດຈະການຂອງບໍລິສັດໂຄງການ ແລະ ທີ່ໄດ້ຮັບມອບໝາຍໃຫ້ເຮັດວຽກໃຫ້ບໍລິສັດໂຄງການແບບຊົ່ວຄາວ, ເປັນຊົ່ວໂມງ ຫຼື ຖາວອນ. ທຸກການໃຊ້ຈ່າຍຂອງບໍລິສັດໂຄງການສຳລັບການເບິ່ງແຍ່ງສຸຂະພາບ, ປະໂຫຍດຈາກການລາພັກ, ແຜນງານປະຢັດເງິນ ແລະ ນະໂຍບາຍສົ່ງເສີມອື່ນໆຕ້ອງຖືກຈຳກັດ ແລຈະຕ້ອງບໍ່ສູງເກີນຄ່າໃຊ້ຈ່າຍທີ່ພາກສ່ວນທີ່ບໍ່ແມ່ນບໍລິສັດເຄືອຂ່າຍຂອງບໍລິສັດໂຄງການເກັບສຳລັບການໃຫ້ບໍລິການດັ່ງກ່າວ.

8. "**ຄ່າໃຊ້ຈ່າຍໃນການເດີນທາງ**" ຈະຖືກຫັກອອກໃນຈຳນວນສູງສຸດ 0.6% ຂອງລາຍຮັບປະຈຳປີ.

9. "**ການບໍລິຈາກ**" ຈະຖືກຫັກໄດ້ບໍ່ເກີນ 0.3% ຂອງລາຍຮັບປະຈຳປີ.

10. "**ຄ່າໃຊ້ຈ່າຍດອກເບ້ຍ**" ທີ່ຕ້ອງຊຳລະ ຫຼື ເກີດຂຶ້ນໃນປີຈາກເງິນກູ້. ອັດຕາສ່ວນຂອງທຶນເງິນກູ້ຕໍ່ຮຸ້ນຈະຕ້ອງບໍ່ເກີນ 75:25 ແລ ະອັດຕາດອກເບ້ຍຂອງທຶນເງິນກູ້ຈະຕ້ອງບໍ່ສູງກາຍອັດຕາຕະຫຼາດທີ່ນຳໃຊ້ໃນເວລາຢືມ.

11. "**ການຂາດທຶນ**" ໃນປີໜຶ່ງ ໝາຍເຖິງ ຈຳນວນເງິນທັງໝົດຂອງຄ່າໃຊ້ຈ່າຍ ແລະ ການໃຊ້ຈ່າຍ ທີ່ສາມາດຫັກໄດ້ ສູງກວ່າ ລາຍຮັບທັງໝົດ. ໃນກໍລະນີທີ່ມີການຂາດທຶນໃນປີ, ການຂາດທຶນນັ້ນຈະຖືກຍົກມາໃສ່ປີຕໍ່ມາ ແລະ ການຂາດທຶນທີ່ຜ່ານມາຈະ ຖືກຫັກຈາກລາຍຮັບສຸດທິທີ່ໄດ້ໃນປີຕໍ່ມາ.

12. "**ລາຍຮັບທັງໝົດ**" ໝາຍເຖິງ:

ກ) ລາຍຮັບທັງໝົດທີ່ໄດ້ຮັບ ຫຼື ທີ່ເກີດຈາກການຂາຍຜະລິດຕະພັນ

ຂ) ທຶນທັງໝົດທີ່ຕ້ອງຮັບ.

ຄ) ລາຍຮັບອື່ນໆຈາກການປະກອບການ ຫຼື ທີ່ໄດ້ຮັບ ແລະ ຊຶ່ງບໍ່ຖືກຈັດປະເພດຕາມຂ້າງເທິງ.

13. "**ລາຍຮັບທີ່ນຳມາຫັກອາກອນໄດ້**" ໃນປີ ໝາຍເຖິງ ລາຍຮັບທີ່ເກີດຂຶ້ນໃນປີ ພາຍຫຼັງການຫັກຄ່າໃຊ້ຈ່າຍທັງໝົດ, ຄ່າທຳ ນຽມ ແລະ ການຊຳລະທັງໝົດ ລວມທັງລາຍການທີ່ກຳນົດຂ້າງເທິງນັບແຕ່ມາດຕາ 2-9 ທີ່ສາມາດເປັນຄ່າໃຊ້ຈ່າຍທີ່ນຳມາຫັກໄດ້ ພາຍໃຕ້ສັນຍາສະບັບນີ້.

## ເອກະສານຊ້ອນທ້າຍ III

## ການລາຍງານຂອງໂຄງການ

| ຊື່ບົດລາຍງານ | ບ່ອນສົ່ງບົດລາຍງານ | ໄລຍະເວລາຂອງການລາຍງານ |
|---|---|---|
| ບົດລາຍງານການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ | ກອງປະເມີນກະທົບທາງສິ່ງແວດລ້ອມ ແລະ ສັງຄົມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສັງຄົມ | 3 ເດືອນ, 6 ເດືອນ, 12 ເດືອນ |
| ບົດລາຍງານຄວາມຄືບໜ້າການປູກ | ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ | 6 ເດືອນ, 12 ເດືອນ |
| ບົດລາຍງານດ້ານແຮງງານປະຈຳປີ | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 12 ເດືອນ |
| ແຜນນຳເຂົ້າປະຈຳປີ | ກົມພາສີ, ກະຊວງການເງິນ | 12 ເດືອນ |
| ບົດລາຍງານຄວາມຄືບໜ້າໂຄງການກາງປີ | ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ | 6 ເດືອນ |
| ບົດລາຍງານຄວາມຄືບໜ້າປະຈຳປີ | ຫ້ອງການປະຕູດຽວ, ກະຊວງແຜນການ ແລະ ການລົງທຶນ | 12 ເດືອນ |

# ເອກະສານຊ້ອນທ້າຍ IV

## ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມແບບຄົບວົງຈອນ

# ເອກະສານຊ້ອນທ້າຍ V

## ພັນທະການຮັບປະກັນໂດຍບໍລິສັດແມ່ [ຖ້ານຳໃຊ້][5]

[5] ອີງຕາມໂຄງຮ່າງຂອງບໍລິສັດແມ່ ແລະ ສາຍສຳພັນກັບບໍລິສັດໂຄງການ, ລັດຖະບານອາດຈະຮຽກຮ້ອງໃຫ້ບໍລິສັດແມ່ຮັບປະກັນການຈັດຕັ້ງປະຕິບັດພັນທະສະເພາະທີ່ກຳນົດໃນສັນຍາສະບັບນີ້ເຊັ່ນວ່າ: ການນຳທຶນຈັດທະບຽນເຂົ້າມາດ ພັນທະທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ການຮັກສາທຶນໃນລະດັບໃດໜຶ່ງທີ່ແນ່ນອນ ແລະ ອື່ນໆ.